ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ

# ບົດສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາການສຶກສາ ແລະ ກິລາ 5 ປີຄັ້ງທີ VI (2006-2010)

# ແລະ

# ແຜນພັດທະນາການສຶກສາ ແລະ ກິລາ 5 ປີຄັ້ງທີ VII (2011-2015)

ກັນຍາ 2011

# ຄຳນຳ

ແຜນພັດທະນາຂະແໜງການສຶກສາ ແລະ ກິລາ ຄັ້ງທີ VII (2011-2015) ນີ້ ໄດ້ສ້າງຂຶ້ນບົນພື້ນຖານຂອງ ເອກະສານມະຕິກອງປະຊຸມໃຫຍ່ຄັ້ງທີ່ IX ຂອງພັກປະຊາຊົນປະຕິວັດລາວ; ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ່ VII (2011-2015); ວິໄສທັດ ຍຸດທະສາດການສຶກສາແຕ່ປີ 2001-2020; ແຜນຍຸດທະສາດການປະຕິຮູບລະບົບການສຶກສາແຫ່ງຊາດ (2006-2015); ຂອບພັດທະນາຂະແໜງການສຶກສາ (2009-2015) ແລະ ຜົນຂອງການປະເມີນການຈັດຕັ້ງປະຕິບັດຍຸດທະສາດການປະຕິຮູບລະບົບການສຶກສາແຫ່ງຊາດ ໄລຍະທີ I (2006-2010). ນອກຈາກນັ້ນຍັງໄດ້ອີງໃສ່ຜົນສຳເລັດ ແລະ ບົດຮຽນທີ່ຖອດຖອນໄດ້ຈາກ ການຈັດການແຂ່ງຂັນມະຫາກຳ ກິລາ ຊີເກມຄັ້ງທີ 25, ປີ 2009 ເຊິ່ງແມ່ນ ສປປ ລາວ ໄດ້ຮັບກຽດເປັນເຈົ້າພາບ.

ຈຸດປະສົງຂອງແຜນພັດທະນາການສຶກສາ ແລະ ກິລານີ້ ແມ່ນເພື່ອເຮັດໃຫ້ບັນດາແນວທາງນະໂຍບາຍ ແລະ ຍຸດທະສາດຂອງລັດຖະບານ ກໍຄືຂອງບັນດາຜູ້ໃຫ້ທຶນ ທີ່ຈະສະໜອງການສຶກສາ ແລະ ກິລາທີ່ມີຄຸນະພາບໃຫ້ທົ່ວເຖິງໂດຍສັງລວມເຂົ້າເປັນແຜນແຫ່ງຊາດອັນໜຶ່ງອັນດຽວສຳລັບການພັດທະນາການສຶກສາ ແລະ ກິລາກາຍຍະກຳແຫ່ງຊາດ. ແຜນດັ່ງກ່າວນີ້ ຍັງໄດ້ກຳນົດຂອບເຂດ ແລະ ຂົງເຂດບູລິມະສິດເພື່ອເຮັດໃຫ້ທຸກໆອົງການຈັດຕັ້ງຂອງລັດຖະບານ, ຄູ່ຮ່ວມພັດທະນາ ແລະ ພາກເອກະຊົນໄດ້ເຮັດວຽກຮ່ວມກັນຢ່າງມີປະສິດທິພາບ ເພື່ອໃຫ້ບັນລຸໄດ້ການສະໜອງການສຶກສາ ແລະ ກິລາກາຍຍະກຳທີ່ມີຄຸນະພາບສູງສຳລັບຄົນລາວທຸກຄົນ ໂດຍສະເພາະຢູ່ເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ.

ໃນປຶ້ມເຫຼັ້ມນີ້ປະກອບມີ 2 ເອກະສານຄື ເອກະສານທີໜຶ່ງແມ່ນເວົ້າເຖິງຜົນສຳເລັດ ແລະ ແຜນພັດທະນາສະເພາະຂະແໜງການສຶກສາ, ສ່ວນເອກະສານທີສອງແມ່ນບົດສະຫຼຸບ ແລະ ແຜນການເຄື່ອນໄຫວວຽກງານກິລາກາຍຍະກຳແຫ່ງຊາດ.

ວຽກງານສຶກສາປະກອບມີ 4 ພາກຄື:

ພາກທີ I: ແມ່ນພາກສະຫຼຸບສະພາບການຈັດຕັ້ງ ປະຕິບັດແຜນພັດທະນາການສຶກສາ 5 ປີ ຄັ້ງທີ VI (2006-2010) ທີ່ຜ່ານມາ ໂດຍໄດ້ສັງລວມເອົາບັນດາຜົນສຳເລັດ ແລະ ບັນດາຈຸດອ່ອນ ແລະ ຂໍ້ຄົງຄ້າງໃນການຈັດຕັ້ງປະຕິບັດຕາມ 3 ແຜນງານຄື: 1) ແຜນງານ ຂະຫຍາຍໂອກາດການເຂົ້າຮຽນຢ່າງທົ່ວເຖິງ; 2) ແຜນງານປັບປຸງຄຸນະພາບ ແລະ ຄວາມສອດຄ່ອງ ແລະ 3) ແຜນງານການບໍລິຫານ ແລະ ຄຸ້ມຄອງການສຶກສາ. ນອກນັ້ນຍັງໄດ້ຍົກໃຫ້ເຫັນບັນຫາ, ສິ່ງທ້າທາຍ ແລະ ບາງຂໍ້ແນະນຳໃນການແກ້ໄຂບັນຫາຕ່າງໆ.

ພາກທີ II: ແມ່ນການກຳນົດແຜນພັດທະນາການສຶກສາໄລຍະ 5 ປີ ຄັ້ງທີ VII (2011-2015) ຊຶ່ງໄດ້ສັງລວມເອົາບັນດານະໂຍບາຍ ແລະ ທິດທາງລວມຂອງແຜນພັດທະນາການສຶກສາ ພ້ອມທັງໄດ້ກຳນົດຈຸດໝາຍລວມຂອງແຕ່ລະຂະແໜງການຍ່ອຍຢ່າງລະອຽດ. ໜຶ່ງໃນຈຳນວນບັນດາຈຸດປະສົງຕົ້ນຕໍຂອງແຜນພັດທະນາການສຶກສາ 5 ປີ ຄັ້ງທີ VII ນີ້ ແມ່ນເພື່ອບັນລຸເປົ້າໝາຍສະຫັດສະວັດດ້ານການ

ພັດທະນາທີ 2 ແລະ ທີ 3 ແລະ 6 ເປົ້າໝາຍຂອງແຜນງານແຫ່ງຊາດການສຶກສາເພື່ອທຸກຄົນໃນປີ 2015. ການຈັດຕັ້ງປະຕິບັດແຜນການໃນ 5 ປີຕໍ່ໜ້າແມ່ນຈະໄດ້ປະຕິບັດຕາມ 3 ແຜນງານ,19 ນະໂຍບາຍ ແລະ 96 ຍຸດທະສາດ; ພ້ອມກັນນັ້ນຈະຕ້ອງໄດ້ຈັດຕັ້ງປະຕິບັດກົນໄກການປັບປຸງຍຸດທະສາດການວາງແຜນ ແລະ ການຄຸ້ມຄອງວຽກງານການເງິນຊຶ່ງມີ 3 ນະໂຍບາຍ 13 ຍຸດທະສາດ ແລະ ກົນໄກສ້າງຄວາມເຂັ້ມແຂງໃຫ້ລະບົບການຕິດຕາມ ແລະ ປະເມີນຜົນການປະຕິບັດງານຂອງຂະແໜງການ ຊຶ່ງມີ 2 ນະໂຍບາຍ 5 ຍຸດທະສາດ. ໃນພາກນີ້ໄດ້ກຳນົດຄາດໝາຍສູ້ຊົນໃນແຕ່ລະວຽກງານຕົ້ນຕໍ ຂອງຂະແໜງການສຶກສາ, ໄດ້ກຳນົດກິດຈະກຳຕົ້ນຕໍໃນແຕ່ລະແຜນງານເພື່ອເປັນບ່ອນອີງໃຫ້ແກ່ການສ້າງແຜນ ການຈັດຕັ້ງປະຕິບັດປະຈຳປີ ແລະ ໂຄງານຕ່າງໆສຳລັບແຕ່ນີ້ເຖິງປີ 2015.

ພາກທີ iii: ແມ່ນໄດ້ກຳນົດຊັບພະຍາກອນ ແລະ ແຫຼ່ງທຶນ ເພື່ອມາສະໜັບສະໜູນການຈັດຕັ້ງປະຕິບັດແຜນພັດທະຍາການສຶກສາ ເພື່ອໃຫ້ສາມາດບັນລຸໄດ້ ບັນດາຄາດໝາຍຕ່າງໆຂອງລັດຖະບານ ກໍຄືຂອງຂະແໜງການສຶກສາ. ຢູ່ໃນພາກນີ້ຍັງໄດ້ສະແດງໃຫ້ເຫັນເຖິງຊ່ອງຫວ່າງທາງດ້ານການເງິນທີ່ຕ້ອງການມາສະໜັບສະໜູນການຈັດຕັ້ງປະຕິບັດແຜນ ເພື່ອໃຫ້ບັນລຸບັນດາເປົ້າໝາຍຕ່າງໆ ແລະ ພວກເຮົາຍັງມີຄວາມຈຳເປັນຕ້ອງສືບຕໍ່ຂໍການຊ່ວຍເຫຼືອຈາກບັນດາຄູ່ຮ່ວມພັດທະນາ ເພື່ອມາຊ່ວຍຫຼຸດຊ່ອງຫວ່າງທາງດ້ານການເງິນແຕ່ນີ້ ເຖິງປີ 2015.

ພາກທີ IV: ໄດ້ກຳນົດມາດຕາການໃນການຈັດຕັ້ງປະຕິບັດແຜນດັ່ງກ່າວ ລວມທັງຂັ້ນສູນກາງ ແລະ ອຳນາດການປົກຄອງຂັ້ນທ້ອງຖິ່ນ. ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດແຜນການດັ່ງກ່າວປະສົບຜົນສຳເລັດ, ຊຶ່ງມີຄວາມຈຳເປັນຕ້ອງການສະໜັບສະໜູນຈາກບັນດາອົງການຈັດຕັ້ງຂອງລັດຖະບານໃນທຸກລະດັບ, ບັນດາຄູ່ຮ່ວມພັດທະນາ ແລະ ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ.

ວຽກງານກິລາກາຍະກຳປະກອບມີ 2 ພາກຄື:

ພາກທີ I ໄດ້ລາຍງານກ່ຽວກັບຜົນສຳເລັດຂອງວຽກງານກິລາກາຍະກຳແຕ່ລະສາຍ ລວມທັງໄດ້ລາຍງານເຖິງສາຍເຫດທີ່ພາໃຫ້ມີຈຸດດີ, ຈຸດອ່ອນ, ຂໍ້ຄົງຄ້າງ ແລະ ບົດຮຽນທີ່ຖອດຖອນໄດ້.

ພາກທີ II ໄດ້ກຳນົດບັນດາຄາດໝາຍຕ່າງໆ ແລະ ລາຍລະອຽດຂອງແຜນກິດຈະກຳຂອງກິລາກາຍະກຳທີ່ຈະຕ້ອງເຄື່ອນໄຫວຢູ່ໃນໄລຍະແຕ່ປີ 2011-2015.

ເພື່ອປະຕິບັດຕາມຖະແຫຼງການວຽງຈັນ ແຜນພັດທະນາຂະແໜງການການສຶກສາ ແລະ ກິລາ ແມ່ນໄດ້ພັດທະນາຂຶ້ນ ໂດຍໄດ້ມີການປຶກສາຫາລືກັນລະຫວ່າງ ກະຊວງສຶກສາທິການ ແລະ ກິລາ, ທຸກໆໜ່ວຍງານວິຊາການຂອງຂະແໜງການສຶກສາ ແລະ ບັນດາຜູ້ບໍລິຫານການສຶກສາ ແລະ ກິລາຢູ່ຂັ້ນແຂວງ. ເມື່ອແຜນດັ່ງກ່າວໄດ້ຖືກຈັດຕັ້ງປະຕິບັດ ກະຊວງສຶກສາທິການ ແລະ ກິລາຈະປະສານກັບບັນດາຄູ່ຮ່ວມພັດທະນາໃນການຕິດຕາມເຖິງປະສິດທິພາບ ແລະ ຜົນສຳເລັດໃນການຈັດຕັ້ງປະຕິບັດແຜນຢູ່ໃນແຕ່ລະໄລຍະ ໂດຍເຮັດການຕິດຕາມ ແລະ ປະເມີນຜົນເປັນປະຈຳ ລວມທັງການເຮັດການທົບທວນ, ຕິດຕາມ

ແລະ ປະເມີນຜົນຮ່ວມກັນກັບຄູ່ຮ່ວມພັດທະນາ ແລະ ການກະກຽມບົດລາຍງານການຈັດຕັ້ງແຜນປະຈໍາປີ ຂອງຂະແໜງການ.

ຂ້າພະເຈົ້າເຊື່ອວ່າ ເອກະສານດັ່ງກ່າວນີ້ຈະເປັນເອກະສານອ້າງອີງທີ່ມີຄຸນຄ່າສໍາລັບອົງການຈັດຕັ້ງຂອງລັດຖະບານໃນທຸກລະດັບ ແລະ ບັນດາຄູ່ຮ່ວມພັດທະນາ ໃນການເຮັດວຽກຮ່ວມກັນ ເພື່ອໃຫ້ບັນລຸໄດ້ບັນດາເປົ້າໝາຍແຫ່ງຊາດຂອງລັດຖະບານ ແລະ ການຈັດຕັ້ງປະຕິບັດບັນດາແຜນງານ ແລະ ກິດຈະກໍາທີ່ກ່ຽວຂ້ອງກັບການພັດທະນາການສຶກສາ ແລະ ກິລາໃຫ້ມີຄຸນະພາບ ໂດຍອີງໃສ່ພັນທະ ແລະ ພາລະບົດບາດຄວາມຮັບຜິດຊອບຂອງແຕ່ລະຂັ້ນ.

ວຽງຈັນ, ວັນທີ......................

ລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ

ດຣ. ພັນຄໍາ ວິພາວັນ

ສາລະບານ


**ຄຳນຳ** ........ iii

**ພາກສະເໜີ** ........ 1

**ບົດສັງລວມຫຍໍ້** ........ 3

**ພາກທີ I ສະພາບລວມຂອງວຽກງານການສຶກສາ** ........ 5

1. ຜົນສຳເລັດໃນການຈັດຕັ້ງປະຕິບັດແຜນ 5 ປີຄັ້ງທີ VII (2006-2010) ........ 6
   1.1. ແຜນຂະຫຍາຍໂອກາດການເຂົ້າຮຽນ ........ 6
   1.2. ແຜນປັບປຸງຄຸນນະພາບ ແລະ ຄວາມສອດຄ່ອງ ........ 7
   1.3. ແຜນງານບໍລິຫານ ແລະ ຄຸ້ມຄອງການສຶກສາ ........ 8
2. ບັນຫາ ແລະ ສິ່ງທ້າທາຍໃນຂະແໜງສຶກສາ ........ 9
   2.1. ແຜນງານຂະຫຍາຍໂອກາດການເຂົ້າຮຽນ ........ 9
   2.2. ແຜນງານປັບປຸງຄຸນນະພາບ ແລະ ຄວາມສອດຄ່ອງ ........ 10
   2.3. ແຜນງານບໍລິຫານ ແລະ ຄຸ້ມຄອງການສຶກສາ ........ 11
3. ບົດຮຽນທີ່ຖອດຖອນໄດ້ ແລະ ຂໍ້ແນະນຳ ........ 13
   3.1. ບົດຮຽນທີ່ຖອດຖອນໄດ້ ........ 13
   3.2. ຂໍ້ແນະນຳ ........ 14

**ພາກທີ II ແຜນພັດທະນາການສຶກສາໄລຍະ 5 ປີ (2011-2015)** ........ 16

1. ບ່ອນອີງ ........ 16
2. ເປົ້າໝາຍລວມ ........ 16
3. ທິດທາງລວມ ........ 17
4. ຈຸດປະສົງ ........ 19
   1. ແຜນງານຂະຫຍາຍໂອກາດການເຂົ້າຮຽນ ........ 19
   2. ແຜນປັບປຸງຄຸນນະພາບ ແລະ ຄວາມສອດຄ່ອງ ........ 20
   3. ແຜນງານປັບປຸງວຽກງານບໍລິຫານ ແລະ ຄຸ້ມຄອງການສຶກສາ ........ 21
5. ຄາດໝາຍລວມ ........ 24
   5.1. ການສຶກສາຂັ້ນພື້ນຖານ ........ 24
      5.1.1. ການສຶກສາກ່ອນໄວຮຽນ ........ 24
      5.1.2. ການສຶກສາຂັ້ນປະຖົມ ........ 24
      5.1.3. ການສຶກສາຂັ້ນມັດທະຍົມຕົ້ນ ........ 24
      5.1.4. ການສຶກສາຮຽນຮ່ວມ ແລະ ການສຶກສານອກໂຮງຮຽນ ........ 25
   5.2. ການສຶກສາຫຼັງຂັ້ນພື້ນຖານ ........ 25
      5.2.1. ການສຶກສາຂັ້ນມັດທະຍົມປາຍ ........ 25

5.2.2. ອາຊີວິສຶກສາ ແລະ ຝຶກອົບຮົມວິຊາຊີບ 26
5.2.3. ການສຶກສາຊັ້ນສູງ 26
5.2.4. ການສຶກສາຄູ 27
5.3. ການປັບປຸງການບໍລິຫານ ແລະ ຄຸ້ມຄອງການສຶກສາ 29
6. ແຜນຈັດຕັ້ງປະຕິບັດແຜນພັດທະນາຂະແໜງການສຶກສາ 2011-2015 30
6.1. ແຜນຂະຫຍາຍໂອກາດການເຂົ້າຮຽນຢ່າງທົ່ວເຖິງ 30
6.2. ແຜນປັບປຸງຄຸນນະພາບ ແລະ ຄວາມສອດຄ່ອງ 33
6.3. ແຜນປັບປຸງວຽກງານບໍລິຫານ ແລະ ຄຸ້ມຄອງການສຶກສາ 36
6.4. ກົນໄກການປັບປຸງຍຸດທະສາດ, ການວາງແຜນ ແລະ ການ 38
6.5. ກົນໄກການສ້າງຄວາມເຂັ້ມແຂງໃຫ້ລະບົບການຕິດຕາມ 40
**ພາກທີ III ຄວາມຕ້ອງການທາງດ້ານຊັບພະຍາກອນ ແລະ ການເງິນ** 41
1. ແຜນການເງິນຂອງຂະແໜງການສຶກສາ 2011-2015 41
1.1. ງົບປະມານບໍລິຫານ 42
1.2. ງົບປະມານລົງທຶນ 45
1.3. ຂໍ້ຈຳກັດທາງດ້ານການເງິນ 48
**ພາກທີ IV ມາດຕະການ ແລະ ວິທີຈັດຕັ້ງປະຕິບັດ** 50
1. ການແບ່ງຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດ 50
2. ຊັບພະຍາກອນສຳລັບການຈັດຕັ້ງປະຕິບັດາບັນດາແຜນງານຕ່າງໆ 50
3. ຄູ່ມືແນະນຳ 50
4. ການແບ່ງຄວາມຮັບຜິດຊອບໃນການຕິດຕາມຂອງຂະແໜງການ 51
ເອກະສານຊ້ອນທ້າຍ 1 52

# ພາກສະເໜີ

ລັດຖະບານແຫ່ງ ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ເຫັນໄດ້ຄວາມສຳຄັນຂອງການສຶກສາໃນການເຮັດໃຫ້ລາວເຮົາບັນລຸໄດ້ຄາດໝາຍທີ່ສຳຄັນຄື ເຮັດໃຫ້ຫຼຸດພົ້ນອອກຈາກຄວາມດ້ອຍພັດທະນາໃນປີ 2020 ແລະ ກ້າວໄປສູ່ຄວາມເປັນອຸດສາຫະກຳ ແລະ ທັນສະໄໝເທື່ອລະກ້າວ. ຢູ່ໃນແຜນພັດທະນາເສດຖະກິດສັງຄົມແຫ່ງຊາດຄັ້ງທີ VII ແລະ ມະຕິກອງປະຊຸມໃຫຍ່ຄັ້ງທີ 9 ຂອງພັກ ກໍ່ໄດ້ເນັ້ນໃຫ້ເຫັນເຖິງບົດບາດສຳຄັນຂອງການສຶກສາໃນການພັດທະນາຊັບພະຍາກອນມະນຸດ ເພື່ອໃຫ້ບັນລຸເປົ້າໝາຍດັ່ງກ່າວ. ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ VII ໄດ້ກຳນົດຢ່າງຈະແຈ້ງວ່າ ຢາກບັນລຸເປົ້າໝາຍດັ່ງກ່າວນີ້ ຕ້ອງໄດ້ພັດທະນານະໂຍບາຍກ່ຽວກັບການຊ່ວຍເຫຼືອຜູ້ທຸກຍາກ ພ້ອມທັງຈັດຕັ້ງປະຕິບັດ ເພື່ອເປັນການສະໜັບສະໜູນນະໂຍບາຍຫຼຸດຜ່ອນຄວາມທຸກຍາກ. ໃນຂະນະດຽວກັນນັ້ນການສ້າງບຸກຄະລາກອນໃຫ້ມີຄວາມຊຳນິຊຳນານມີຄຸນສົມບັດສົມທຳປະຕິວັດ ກໍ່ເປັນສິ່ງທີ່ຈຳເປັນເພື່ອເຮັດໃຫ້ລາວເຮົາກ້າວໄປສູ່ຄວາມເປັນອຸດສາຫະກຳ ແລະ ທັນສະໄໝເທື່ອລະກ້າວຕາມທິດສັງຄົມນິຍົມ.

ເພື່ອຕອບສະໜອງໄດ້ຕາມຈຸດປະສົງ ແລະ ເປົ້າໝາຍຂອງລັດຖະບານ ກະຊວງສຶກສາທິການ ແລະ ກິລາໄດ້ສ້າງແຜນພັດທະນາຂະແໜງການສຶກສາຂອງຕົນຂຶ້ນ ໂດຍສະເພາະແມ່ນແຜນຍຸດທະສາດການປະຕິຮູບລະບົບການສຶກສາແຫ່ງຊາດ ແລະ ຂອບພັດທະນາຂະແໜງການສຶກສາ ຊຶ່ງໄດ້ກຳນົດຄາດໝາຍ, ນະໂຍບາຍ ແລະ ຍຸດທະສາດທີ່ຈຳເປັນເພື່ອໃຫ້ບັນລຸແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ VII, ເປົ້າໝາຍສະຫັດສະວັດດ້ານການພັດທະນາ ແລະ ແຜນປະຕິບັດງານແຫ່ງຊາດການສຶກສາເພື່ອທຸກຄົນໃນປີ 2015. ຂອບພັດທະນາຂະແໜງການສຶກສາໄດ້ສະໜັບສະໜູນ ການປະສານງານບັນດາກິດຈະກຳຂອງຜູ້ໃຫ້ທຶນ, ຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ນະໂຍບາຍຊ່ວຍເຫຼືອຄົນທຸກຍາກ ເຊິ່ງທັງໝົດນີ້ກໍ່ແມ່ນເພື່ອບັນລຸເປົ້າໝາຍສະຫັດສະວັດດ້ານການພັດທະນາສຳລັບຂະແໜງການສຶກສາ. ນອກນັ້ນ ຂອບພັດທະນາຂະແໜງການສຶກສາຍັງສອດຄ່ອງກັບຂອບນະໂຍບາຍ ຕ່າງໆເຊັ່ນ: ຍຸດທະສາດການເຕີບໂຕ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ (NGPES), ແຜນ ພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນຍຸດທະສາດການປະຕິຮູບລະບົບການສຶກສາແຫ່ງຊາດ, ຂໍ້ແນະນຳຂອງກອງປະຊຸມຄັ້ງທີ 44 ຂອງຄະນະກຳມາທິການແຫ່ງສະຫາປະຊາຊາດວ່າດ້ວຍການລຶບລ້າງການຈຳແນກຕໍ່ເພດຍິງ (2009). ກະຊວງສຶກສາໄດ້ອີງໃສ່ຂອບພັດທະນາຂະແໜງການສຶກສາ ໃນການພັດທະນາຕາຕະລາງແຜນນະໂຍບາຍສຳລັບແຜນພັດທະນາຂະແໜງການສຶກສາຊຶ່ງເອີ້ນວ່າ ***ຕາຕະລາງແຜນນະໂຍບາຍຂອງແຜນພັດທະນາຂະແໜງການສຶກສາ.***

ແຜນພັດທະນາຂະແໜງການສຶກສາ ຍັງໄດ້ຕອບສະໜອງນະໂຍບາຍບຸລິມະສິດຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ VII ໂດຍສະເພາະແມ່ນ:

- ພັດທະນາຊັບພະຍາກອນມະນຸດຕ້ອງສອດຄ່ອງກັບຄວາມຕ້ອງການສຳລັບການພັດທະນາປະເທດຊາດໃນແຕ່ລະໄລຍະ,
- ການປະຕິຮູບລະບົບການສຶກສາແຫ່ງຊາດໂດຍເນັ້ນໃສ່ການປັບປຸງການຂະຫຍາຍໂອກາດການເຂົ້າຮຽນຢ່າງທົ່ວເຖິງ ແລະ ຄຸນນະພາບການສຶກສາ ແລະ ຄວາມສອດຄ່ອງໃນທຸກຊັ້ນທຸກສາຍ,

- ເພີ່ມການເອົາໃຈໃສ່ຕໍ່ການພັດທະນາຄູ, ການຄຸ້ມຄອງ ແລະ ນຳໃຊ້ຄູ, ການສະໜອງແຮງຈູງໃຈໃຫ້ແກ່ຄູ ແລະ ຄວາມຮັບຜິດຊອບທາງດ້ານສັງຄົມຂອງຄູ,
- ປັບປຸງວຽກງານອາຊີວະສຶກສາ, ຝຶກອົບຮົມວິຊາຊີບ ແລະ ການສຶກສາຊັ້ນສູງ ເພື່ອໃຫ້ຕອບສະໜອງໄດ້ກັບຄວາມຕ້ອງການຂອງຕະຫຼາດແຮງງານ ກໍ່ຄືແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ,
- ປັບປຸງໂຄງຮ່າງການຈັດຕັ້ງຂອງຂະແໜງການສຶກສາ ລວມທັງການບັງຄັບໃຊ້ກົດໝາຍການສຶກສາ (ສະບັບປັບປຸງ 2008) ໃຫ້ປະກົດເປັນຈິງ,
- ປັບປຸງວຽກງານຕິດຕາມ ແລະ ກວດກາການສຶກສາໃຫ້ມີຄວາມເຂັ້ມແຂງ ແລະ
- ນຳໃຊ້ເງິນຊ່ວຍເຫຼືອຈາກຄູ່ຮ່ວມພັດທະນາ ກໍ່ຄືງົບປະມານຂອງລັດຖະບານໃຫ້ມີປະສິດທິພາບດີກວ່າເກົ່າ ພ້ອມທັງເພີ່ມການພົວພັນຮ່ວມມືລະຫວ່າງລັດຖະບານ ແລະ ຄູ່ຮ່ວມພັດທະນາ ໃຫ້ສອດຄ່ອງກັບຖະແຫຼງການວຽງຈັນ ວ່າດ້ວຍການຊ່ວຍເຫຼືອທີ່ມີປະສິດທິຜົນ.

# ບົດສັງລວມຫຍໍ້

ຍຸດທະສາດການປະຕິຮູບລະບົບການສຶກສາແຫ່ງຊາດ ແລະ ຂອບພັດທະນາຂະແໜງການສຶກສາ ແມ່ນສອງເອກະສານຫຼັກທີ່ເປັນທິດທາງ ໃນການສ້າງແຜນພັດທະນາຂະແໜງການສຶກສາໃນໄລຍະ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VII (2011-2015).

ໃນໄລຍະແຕ່ປີ 2006-2010 ເຖິງແມ່ນວ່າວຽກງານການສຶກສາໄດ້ມີການປັບປຸງ ແລະ ພັດທະນາ ໃຫ້ດີຂຶ້ນໃນຫຼາຍດ້ານ, ແຕ່ກໍ່ຍັງມີຫຼາຍບັນຫາ ແລະ ສິ່ງທ້າທາຍທີ່ຈະຕ້ອງໄດ້ເອົາໃຈໃສ່ກ່ອນຈະເລີ່ມປະຕິ ບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VII ເຊັ່ນ: ຍັງມີຄວາມບໍ່ສະເໝີພາບລະຫວ່າງຍິງຊາຍ, ຊົນເຜົ່າ ແລະ ຜູ້ທີ່ຢູ່ຫ່າງໄກສອກຫຼີກໃນການຊົມໃຊ້ ແລະ ການຮັບການບໍລິການດ້ານການສຶກສາ; ການ ສະໜອງແຮງຈູງໃຈໃຫ້ຄູທີ່ໄປສິດສອນຢູ່ເຂດຫ່າງໄກສອກຫຼີກຍັງເປັນບັນຫາທີ່ທ້າທາຍ; ການກໍ່ສ້າງສີມື ແຮງງານຍັງບໍ່ຖືກເປົ້າໝາຍ ແລະ ບໍ່ທັນຕອບສະໜອງໄດ້ຕາມຄວາມຕ້ອງການຂອງຕະຫຼາດແຮງງານ; ການຂະຫຍາຍຕົວທາງດ້ານປະລິມານບໍ່ສົມດູນກັບການປັບປຸງທາງດ້ານຄຸນນະພາບ; ຄວາມຮູ້ຄວາມສາ ມາດ ຂອງຜູ້ບໍລິຫານການສຶກສາຍັງມີຈຳກັດ ໂດຍສະເພາະຢູ່ຂັ້ນເມືອງ ແລະ ໂຮງຮຽນ. ນອກນັ້ນວຽກງານ ການສ້າງແຜນການ ແລະ ການຂຶ້ນງົບປະມານຢູ່ໃນທຸກລະດັບນັບທັງສູນກາງ ແລະ ທ້ອງຖິ່ນ ຍັງບໍ່ທັນມີ ຄວາມກົມກຽວກັນໄດ້ດີເທົ່າທີ່ຄວນ. ວຽກງານການຕິດຕາມ ແລະ ກວດກາຂອງຂະແໜງການຈະຕ້ອງເຮັດ ໃຫ້ມີຄວາມເຂັ້ມແຂງ ແລະ ຮອບດ້ານກວ່າເກົ່າ. ຮັບປະກັນໄດ້ການນຳໃຊ້ງົບປະມານຂອງລັດໃຫ້ມີ ປະສິດທິຜົນສູງກວ່າເກົ່າ. ນອກນັ້ນ, ການລົງທຶນຂອງລັດຖະບານເຂົ້າໃນວຽກງານການສຶກສາແມ່ນຍັງຕ່ຳ ຖ້າທຽບໃສ່ຄວາມຕ້ອງການຕົວຈິງສຳລັບການພັດທະນາ ແລະ ທຽບໃສ່ບັນດາປະເທດ ໃກ້ຄຽງ ແລະ ໃນ ພາກພື້ນ ໂດຍສະເພາະງົບປະມານບໍລິຫານປົກກະຕິ ທີ່ໃຊ້ຈ່າຍເຂົ້າໃນການຈັດຕັ້ງປະຕິບັດກິດຈະກຳ ທີ່ ກ່ຽວຂ້ອງກັບການປັບປຸງຄຸນະພາບການສຶກສາແມ່ນມີຈຳກັດ ແລະ ບໍ່ໄປເຖິງໂຮງຮຽນ.

ເປົ້າໝາຍລວມຂອງຂະແໜງການສຶກສາ ແມ່ນເພື່ອຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ IX ຂອງພັກ ໂດຍໄດ້ຖືເອົາວຽກງານການສຶກສາເປັນໃຈກາງໃນນະໂຍບາຍບຸກທະລຸ ການພັດທະນາ ຊັບພະຍາກອນມະນຸດໃຫ້ມີຄຸນນະພາບສູງ ໂດຍອີງໃສ່ຍຸດທະສາດໃນການພັດທະນາ ແລະ ໂຄງສ້າງຂອງ ເສດຖະກິດແຫ່ງຊາດ ຊຶ່ງສິ່ງດັ່ງກ່າວນີ້ມັນຮຽກຮ້ອງໃຫ້ມີການປັບປຸງ ແລະ ພັດທະນາທົ່ວຂະແໜງການ ສຶກສາໃນການສ້າງ ແລະ ພັດທະນາຄົນລາວ ຈຶ່ງຈະເຮັດໃຫ້ປະເທດເຮົາຫຼຸດພົ້ນອອກຈາກຄວາມດ້ອຍ ພັດທະນາໃນປີ 2020.

ທິດທາງລວມຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VII ແມ່ນເພື່ອຈັດຕັ້ງ ປະຕິບັດແຜນງານແຫ່ງຊາດ, ການສຶກສາເພື່ອທຸກຄົນ ແລະ ເພື່ອບັນລຸເປົ້າໝາຍສະຫັດສະວັດດ້ານການ ພັດທະນາ ໃນປີ 2015. ໃນຂະນະດຽວກັນນັ້ນ ແຜນດັ່ງກ່າວຈະຕ້ອງຮັບປະກັນການພັດທະນາການສຶກ ສາ ໄປຕາມແຕ່ລະຂະແໜງການຍ່ອຍໃຫ້ມີຄວາມສົມດູນກັນ. ເພື່ອຮັບປະກັນຄວາມສະເໝີພາບ, ຄຸນນະ ພາບ ແລະ ປະສິດທິຜົນໃນການໃຫ້ບໍລິການດ້ານການສຶກສາ, ບຸລິມະສິດເບື້ອງຕົ້ນຈະຕ້ອງໄດ້ເອົາໃຈໃສ່ ການພັດທະນາການສຶກສາຂັ້ນພື້ນຖານ ໂດຍສະເພາະແມ່ນຫ້ອງກຽມປະຖົມ ແລະ ຊັ້ນປະຖົມສຶກສາ ພິເສດແມ່ນຢູ່ໃນ 56 ເມືອງທີ່ດ້ອຍໂອກາດດ້ານການສຶກສາ ແລະ ການປະຕິຮູບລະບົບການສຶກສາຈາກ

11 ປີ ມາເປັນ 12 ປີ. ພ້ອມດຽວກັນນັ້ນ ກໍ່ຕ້ອງປັບປຸງຄວາມສອດຄ່ອງຂອງ ການສຶກສາຫຼັງຂັ້ນພື້ນຖານ ເພື່ອໃຫ້ສາມາດຕອບສະໜອງໄດ້ຕາມຄວາມຕ້ອງການຂອງຕະຫຼາດແຮງງານໃນໄລຍະໃໝ່.

ຈຸດປະສົງຂອງແຜນພັດທະນາການສຶກສາ 5 ປີ ຄັ້ງທີ VII ແມ່ນເພື່ອປັບປຸງວຽກງານຂະຫຍາຍ ໂອກາດການເຂົ້າຮຽນຢ່າງທົ່ວເຖິງ, ປັບປຸງຄຸນນະພາບ ແລະ ຄວາມສອດຄ່ອງ ແລະ ການຄຸ້ມຄອງ ບໍລິຫານຂະແໜງການສຶກສາ ໂດຍສະເພາະແມ່ນສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານແຜນການ ແລະ ການເງິນຂອງຂະແໜງການ. ສິ່ງດັ່ງກ່າວນີ້ຈະຊ່ວຍເຮັດໃຫ້ບັນລຸບັນດາເປົ້າໝາຍຕ່າງໆຂອງການສຶກສາ ຂັ້ນພື້ນຖານ ຊຶ່ງເປັນປັດໄຈສຳຄັນທີ່ເອື້ອອຳນວຍໃຫ້ແກ່ການພັດທະນາການສຶກສາຫຼັງຂັ້ນພື້ນຖານ ໃຫ້ ສາມາດຕອບສະໜອງໄດ້ຕາມຄວາມຕ້ອງການຂອງຕະຫຼາດແຮງງານ.

ແຜນພັດທະນາຂະແໜງການສຶກສາໄລຍະ 5 ປີ ຄັ້ງທີ VII ນີ້ ປະກອບດ້ວຍ 3 ແຜນງານ ຄື: 1). ແຜນງານຂະຫຍາຍໂອກາດການເຂົ້າຮຽນຢ່າງທົ່ວເຖິງ; 2). ແຜນງານປັບປຸງຄຸນນະພາບ ແລະ ຄວາມ ສອດຄ່ອງ; 3). ແຜນງານປັງປຸງວຽກງານການບໍລິຫານ ແລະ ຄຸ້ມຄອງການສຶກສາ ໂດຍເອົາໃຈໃສ່ ການປັບປຸງຍຸດທະສາດ, ການວາງແຜນ ແລະ ການບໍລິຫານຄຸ້ມຄອງທາງດ້ານການເງິນ ແລະ ການສ້າງ ຄວາມເຂັ້ມແຂງໃຫ້ແກ່ລະບົບການຕິດຕາມ ແລະ ກວດກາວຽກງານການສຶກສາ.

ແຜນງົບປະມານຂອງຂະແໜງການສຶກສາໄດ້ສັງລວມທັງງົບປະມານບໍລິຫານ ແລະ ງົບປະມານ ການລົງທຶນ (ລວມທັງທຶນຂອງລັດຖະບານ ແລະ ທຶນການຊ່ວຍເຫຼືອທາງການເພື່ອການພັດທະນາ) ຊຶ່ງ ເຫັນໄດ້ໃນໄລຍະ 5 ປີ ແຕ່ 2011-2015 ຈະມີຊ່ອງຫວ່າງທາງດ້ານການເງິນເຖິງ 1,573,000 ລ້ານກີບ (ປະມານ 197 ລ້ານໂດລາ). ຄາດຄະເນເງິນການຊ່ວຍເຫຼືອທາງການເພື່ອການພັດທະນາ (ODA) ທີ່ມີໃນ ປັດຈຸບັນຈະບໍ່ສາມາດຕອບສະໜອງໄດ້ຕາມຄວາມຕ້ອງການຂອງທົ່ວຂະແໜງການ. ຊຶ່ງມີຜົນສະທ້ອນ ເຮັດໃຫ້ການພັດທະນາແຕ່ລະຂະແໜງການຍ່ອຍບໍ່ມີຄວາມດຸ່ນດ່ຽງກັນ ແລະ ເປັນບັນຫາທີ່ທ້າທາຍຂຶ້ນ ສຳລັບການບັນລຸເປົ້າໝາຍການສຶກສາເພື່ອທຸກຄົນ, ເປົ້າໝາຍສະຫັດສະວັດດ້ານການພັດທະນາໃນປີ 2015.

ຍຸດທະສາດໃນການຈັດຕັ້ງປະຕິບັດແຜນພັດທະນາຂະແໜງການສຶກສາກ ໄດ້ຮັບການພັດທະນາ ຂຶ້ນຢ່າງຕໍ່ເນື່ອງ ແລະ ເປັນລະບົບ ເພື່ອຮັບປະກັນວ່າແຜນດັ່ງກ່າວໄດ້ກຳນົດບຸລິມະສິດໃນການຈັດຕັ້ງ ປະຕິບັດຢູ່ໃນແຕ່ລະລະດັບ ແຕ່ສູນກາງຮອດທ້ອງຖິ່ນ; ນອກຈາກນັ້ນ ກໍ່ໄດ້ສ້າງຂອບປະເມີນຜົນການ ປະຕິບັດງານໃນການຕິດຕາມ ແລະ ກວດກາວຽກງານຂອງຂະແໜງການ.

# ພາກທີ I ສະພາບລວມຂອງວຽກງານການສຶກສາ

ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ແມ່ນປະເທດທີ່ມີຫຼາຍຊົນເຜົ່າ ຊຶ່ງໃນປີ 2010 ມີປະຊາກອນປະມານ 6.2 ລ້ານຄົນ. ໃນຊຸມປີຜ່ານມານີ້ ເສດຖະກິດແຫ່ງຊາດໄດ້ມີຄວາມເຕີບໃຫຍ່ຢ່າງໄວວາ, ແຕ່ວ່າຍັງມີປະຊາກອນປະມານ 34% ຂອງຈຳນວນປະຊາກອນທັງໝົດມີລາຍໄດ້ຕ່ຳກວ່າ 1.25 ໂດລາຕໍ່ວັນ ແລະ ຍັງມີບາງຕົວຊີ້ບອກທາງດ້ານການສຶກສາທີ່ຕ່ຳທີ່ສຸດຢູ່ໃນບັນດາປະເທດໃນອາຊີ. ປະຊາກອນຂອງລາວສ່ວນໃຫຍ່ແມ່ນດຳລົງຊີວິດຢູ່ຊົນນະບົດ ແລະ ໃນນັ້ນມີປະມານ 75% ຂອງປະຊາກອນດັ່ງກ່າວແມ່ນເຮັດການຜະລິດກະສິກຳເປັນຕົ້ນຕໍ.

ໃນໄລຍະຜ່ານມາການສຶກສາໄດ້ມີການພັດທະນາໄປໃນທ່າກ້າວທີ່ດີ ແຕ່ຖ້າເບິ່ງແນວໂນ້ມຂອງການພັດທະນາທີ່ມີໃນປັດຈຸບັນນີ້ ລາວເຮົາຈະບໍ່ສາມາດບັນລຸໄດ້ເປົ້າໝາຍສະຫັດສະວັດດ້ານການພັດທະນາ[1]. ໃນສົກຮຽນ 2009-2010 ອັດຕາການເຂົ້າຮຽນສຸດທິຊັ້ນປະຖົມສຶກສາບັນລຸ 92.7% (ຍິງ: 91.7%), ແຕ່ອັດຕາການຄ້າງຫ້ອງ ແລະ ອັດຕາການປະລະແມ່ນຍັງສູງ. ອັດຕາການລອດເຫຼືອຮອດ ປ. 5 ມີພຽງແຕ່ 71.1%. ຈຳນວນໂຮງຮຽນມູນຍັງກວມເປີເຊັນສູງ ໝາຍຄວາມວ່າມີໂຮງຮຽນຈຳນວນບໍ່ໜ້ອຍທີ່ມີການສິດສອນພຽງແຕ່ຫ້ອງ ປ.1, ປ. 2 ຫຼື ຮອດ ປ.3 ເທົ່ານັ້ນ. ໂຮງຮຽນທີ່ບໍ່ມີວິດຖ່າຍ ແລະ ນ້ຳສະອາດ ສຳລັບເດັກນັກຮຽນຍັງກວມເປີເຊັນສູງ (30%). ໂດຍທົ່ວໄປແລ້ວ ຢູ່ເຂດຊົນນະບົດຫ່າງໄກສອກຫຼີກ ແມ່ນເປັນເຂດທີ່ຂາດແຄນອາຫານ, ນ້ຳສະອາດ ຊຶ່ງສະພາບດັ່ງກ່າວນີ້ ມັນໄດ້ມີຜົນກະທົບຕໍ່ເດັກນ້ອຍຫຼາຍກວ່າ 40% ຂອງຈຳນວນເດັກນ້ອຍທັງໝົດຢູ່ໃນເຂດດັ່ງກ່າວນີ້ ແລະ ມັນກໍ່ໄດ້ສົ່ງຜົນສະທ້ອນທາງລົບຕໍ່ການເຂົ້າໂຮງຮຽນ ແລະ ການຮຽນຂອງເດັກ. ນອກຈາກນັ້ນບັນດາຊົນເຜົ່າ ຊຶ່ງກວມປະມານ 50% ຂອງຈຳນວນປະຊາກອນຂອງລາວ ແມ່ນດຳລົງຊີວິດຢູ່ເຂດຫ່າງໄກສອກຫຼີກ ແລະ ຢັ້ງຢາຍຢູ່ທຸກແຫ່ງຫົນ ຊຶ່ງປະຊາກອນດັ່ງກ່າວນີ້ ສ່ວນໃຫຍ່ບໍ່ສາມາດເວົ້າພາສາລາວໄດ້. ບັນຫາດັ່ງກ່າວນີ້ບວກກັບສະພາບຄວາມຂາດເຂີນທາງດ້ານພື້ນຖານໂຄງລ່າງ ແມ່ນເປັນສິ່ງທີ່ທ້າທາຍທີ່ສຸດສຳລັບການພັດທະນາການສຶກສາຢູ່ ສ.ປ.ປ. ລາວ.

ການຂະຫຍາຍໂອກາດການສຶກສາກ່ອນໄວຮຽນຢູ່ ສປປ. ລາວ ຍັງຕ່ຳຫຼາຍ (ມີເດັກນ້ອຍໃນເກນອາຍຸພຽງແຕ່ 22% ເທົ່ານັ້ນທີ່ໄດ້ເຂົ້າຮຽນຢູ່ໂຮງລ້ຽງເດັກ ຫຼື ໂຮງຮຽນອະນຸບານ) ຊຶ່ງຈຳນວນເດັກນ້ອຍດັ່ງກ່າວນີ້ສ່ວນໃຫຍ່ແມ່ນຢູ່ຕົວເມືອງ. ຜົນການຈັດຕັ້ງປະຕິບັດແຜນພັດທະນາການສຶກສາສົກຮຽນປີ 2009-2010 ໄດ້ສະແດງໃຫ້ເຫັນວ່າ ມີເດັກນ້ອຍໃນເກນອາຍຸ 6-10 ປີ ປະມານ 7% ທີ່ບໍ່ໄດ້ເຂົ້າໂຮງຮຽນ. ອັດຕາການເຂົ້າຮຽນລວມຊັ້ນມັດທະຍົມສຶກສາທັງຕອນຕົ້ນ ແລະ ຕອນປາຍແມ່ນຍັງຕ່ຳ ຊຶ່ງມີພຽງແຕ່ 60.2% (ຍິງ: 55.5%) ແລະ 33.9% (ຍິງ: 30.4%) ຕາມລຳດັບ.

ບັນດາຕົວຊີ້ບອກດ້ານການສຶກສາຢູ່ ສປປ. ລາວ ໄດ້ສະແດງໃຫ້ເຫັນວ່າ ຍັງມີຄວາມແຕກໂຕນລະຫວ່າງຍິງ-ຊາຍ, ເຂດຊົນນະບົດ ແລະ ຕົວເມືອງ, ບ່ອນທີ່ມີຫົນທາງໄປເຖິງ ແລະ ບ່ອນທີ່ບໍ່ມີຫົນທາງໄປເຖິງ ແລະ ຊົນເຜົ່າຕ່າງໆ. ຈຳນວນນັກຮຽນຕໍ່ຫ້ອງມີຫຼາຍໂດຍສະເພາະຢູ່ເຂດຫ່າງໄກສອກຫຼີກ ແລະ ການສະໜອງຄູໃຫ້ບັນດາຕົວເມືອງທຸກໃຫ້ພຽງພໍກັບຄວາມຕ້ອງການແມ່ນເປັນບັນຫາທີ່ທ້າທາຍ. ບັນຫາ

[1] ຂໍ້ມູນຈາກ: ບົດລາຍງານຄວາມຄືບໜ້າຂອງເປົ້າໝາຍສະຫັດສະວັດດ້ານການພັດທະນາ, ສປປ ລາວ

ຄວາມແຕກໂຕນດັ່ງກ່າວນີ້ ແມ່ນໄດ້ມີຢູ່ທົ່ວທຸກຂົງເຂດໃນທົ່ວປະເທດ, ດັ່ງນັ້ນ ກະຊວງສຶກສາທິການຈຶ່ງໄດ້ກຳນົດເອົາ 56 ເມືອງ (ໃນຈຳນວນ 143 ເມືອງ) ເປັນເມືອງທີ່ດ້ອຍໂອກາດທາງດ້ານການສຶກສາ. ໃນສົກຮຽນປີ 2008-2009 ນີ້ 75% ຂອງຈຳນວນເດັກທັງໝົດທົ່ວປະເທດທີ່ຍັງບໍ່ໄດ້ເຂົ້າຮຽນ ແມ່ນຢູ່ 56 ເມືອງດັ່ງກ່າວນີ້ ທັງໆທີ່ເດັກໃນເກນອາຍຸເຂົ້າຮຽນຊັ້ນປະຖົມຢູ່ໃນເຂດດັ່ງກ່າວນີ້ ກວມພຽງແຕ່ 1/3 ເທົ່ານັ້ນ.

ລັດຖະບານລາວໄດ້ໃຫ້ຄວາມສຳຄັນຕໍ່ວຽກງານການສຶກສາ ເປັນບຸລິມະສິດໃນການພັດທະນາປະເທດຊາດເພື່ອໃຫ້ບັນລຸສອງເປົ້າໝາຍໃຫຍ່ຄື: ການຫຼຸດພົ້ນອອກຈາກຄວາມດ້ອຍພັດທະນາໃນປີ 2020 ແລະ ບັນລຸເປົ້າໝາຍສະຫັດສະວັດດ້ານການພັດທະນາໃນປີ 2015 ແລະ ນອກນັ້ນລັດຖະບານຍັງໄດ້ມີມາດຕາການເພື່ອເພີ່ມການສະໜັບສະໜູນຕໍ່ຂະແໜງການສຶກສາ. ລັດຖະບານໄດ້ອອກນະໂຍບາຍທາງດ້ານເສດຖະກິດມະຫາພາກແບບຮອບດ້ານ ຊຶ່ງເຮັດໃຫ້ລາຍໄດ້ຂອງລັດເພີ່ມຂຶ້ນ ແລະ ໄດ້ເຊັນຮັບຮອງກົດໝາຍສຶກສາສະບັບປັບປຸງ ປີ 2007 ຊຶ່ງໄດ້ກຳນົດສ່ວນແບ່ງງົບປະມານຂອງລັດຖະບານໃສ່ການສຶກສາໃຫ້ໄດ້ 18%. ດັ່ງນັ້ນ ໃນຊຸມປີຜ່ານມາການລົງທຶນຂອງລັດຖະບານເຂົ້າໃນວຽກງານການສຶກສາໄດ້ເພີ່ມຂຶ້ນຢ່າງຕໍ່ເນື່ອງ.

ເຖິງແມ່ນວ່າການລົງທຶນຂອງລັດຖະບານ ເຂົ້າໃນວຽກງານການສຶກສາໄດ້ເພີ່ມຂຶ້ນໃນຊຸມປີທີ່ຜ່ານມາ ແຕ່ຊ່ອງວ່າງຄວາມຕ້ອງການ ແລະ ງົບປະມານທີ່ມີແມ່ນຍັງສູງ. ງົບປະມານລົງທຶນພາຍໃນຂອງລັດຖະບານເຂົ້າໃນຂະແໜງການແມ່ນຍັງຕ່ຳ, ປະມານ 11.8% ຂອງການລົງທຶນທັງໝົດ. ງົບປະມານບໍລິຫານປົກກະຕິທີ່ລັດຖະບານສະໜອງໃຫ້ສ່ວນໃຫຍ່ແມ່ນເງິນເດືອນ ແລະ ເງິນອຸດໜູນຕ່າງໆ. ດັ່ງນັ້ນ ໃນໄລຍະສັ້ນຂະແໜງການສຶກສາຍັງຈະໄດ້ອີງໃສ່ເງິນຊ່ວຍເຫຼືອຈາກພາຍນອກຈຳນວນໜຶ່ງ ເພື່ອມາຊ່ວຍລຶດຊ່ອງວ່າງທາງດ້ານການເງິນດັ່ງກ່າວ.

## 1. ຜົນສຳເລັດໃນການຈັດຕັ້ງປະຕິບັດແຜນ 5 ປີ ຄັ້ງທີ VII (2006-2010)

ພາຍຫຼັງທີ່ຖະແຫຼງການວຽງຈັນໄດ້ຖືກຮັບຮອງໃນປີ 2006 ກະຊວງສຶກສາທິການໄດ້ສ້າງ ແລະ ພັດທະນາຫຼາຍໆນິຕິກຳຂຶ້ນມາ. ການສ້າງຕັ້ງໜ່ວຍວິຊາການຂະແໜງການສຶກສາ ຊຶ່ງເຮັດໃຫ້ວຽກງານນະໂຍບາຍຕ່າງໆມີຄວາມເຂັ້ມແຂງ ພ້ອມທັງໄດ້ຫຼຸດຜ່ອນຂອດປະສານງານໃນຂະແໜງການ. ຜົນສຳເລັດດັ່ງກ່າວປະກອບດ້ວຍ ການພັດທະນາຂອບພັດທະນາຂະແໜງການສຶກສາ ຊຶ່ງເປັນຂອບນະໂຍບາຍທີ່ເປັນແນວທາງສຳລັບການລົງທຶນໃນທົ່ວຂະແໜງການ; ຕາຕະລາງແຜນນະໂຍບາຍທີ່ອີງໃສ່ຂອບພັດທະນາຂະແໜງການສຶກສາ ແລະ ນະໂຍບາຍການສຶກສາຮຽນຮ່ວມ ທີ່ຮັບປະກັນໃຫ້ທຸກຄົນ ໂດຍບໍ່ຈຳແນກເພດໄວ, ຊົນເຜົ່າ, ຄວາມພິການ ແລະ ຄວາມແຕກຕ່າງທາງສັງຄົມໄດ້ມີໂອກາດເຂົ້າເຖິງການສຶກສາທີ່ມີຄຸນະພາບ.

### 1.1. ແຜນງານຂະຫຍາຍໂອກາດການເຂົ້າຮຽນ

ວຽກງານການຂະຫຍາຍໂອກາດການເຂົ້າຮຽນຢູ່ໃນທຸກລະດັບໄດ້ຮັບການປັບປຸງດີຂຶ້ນ (ຮູບທີ 1) ໂດຍໄດ້ສະໜອງໂຄງການອາຫານໃຫ້ໂຮງຮຽນປະຖົມຢູ່ໃນ ໃນ 30 ຕົວເມືອງ ຊຶ່ງເປັນອັນຊຸກຍູ້ໃຫ້ອັດຕາການເຂົ້າຮຽນໄດ້ເພີ່ມຂຶ້ນໂດຍສະເພາະແມ່ນເດັກຍິງ. ຈຳນວນໂຮງຮຽນອະນຸບານ, ປະຖົມສຶກສາ ແລະ

ມັດທະຍົມສຶກສາກໍ່ໄດ້ເພີ່ມຂຶ້ນ. ອັດຕາການເຂົ້າຮຽນຂອງນັກຮຽນໃນແຕ່ລະຊັ້ນໄດ້ເພີ່ມຂຶ້ນຕາມລຳດັບ. ນອກຈາກນັ້ນໂຮງຮຽນອາຊີວະສຶກສາ ແລະ ສູນຝຶກອົບຮົມວິຊາຊີບ, ສະຖາບັນການສຶກສາຊັ້ນສູງ ນັບທັງພາກລັດ ແລະ ເອກະຊົນ ກໍ່ໄດ້ມີການຂະຫຍາຍຕົວເຊັ່ນ: ໃນປີ 2009 ມະຫາວິທະຍາໄລສະຫວັນນະເຂດໄດ້ຮັບການສ້າງຕັ້ງຂຶ້ນຢ່າງເປັນທາງການ, ມະຫາວິທະຍາໄລສຸພານຸວົງ ແລະ ມະຫາວິທະຍາໄລຈຳປາສັກ ກໍ່ໄດ້ແຍກຕົວອອກເປັນເອກະລາດຈາກມະຫາວິທະຍາໄລແຫ່ງຊາດ; ພ້ອມດຽວກັນນັ້ນມະຫາວິທະຍາໄລສິງກໍ່ກຳລັງສ້າງຕັ້ງຂຶ້ນ. ຜົນສຳເລັດຂອງແຜນງານຂະຫຍາຍໂອກາດການເຂົ້າຮຽນ ໃນປີ 2006 ຫຼຸບໃສ່ 2010 ໂດຍສັງເຂບມີດັ່ງນີ້:
(ຮູບທີ 1)

- ອັດຕາການເຂົ້າຮຽນຂອງເດັກອາຍຸ 3-5 ປີ ເພີ່ມຂຶ້ນຈາກ 8.2% ເປັນ 22.1%
- ອັດຕາການເຂົ້າຮຽນຂອງເດັກອາຍຸ 5 ປີ ເພີ່ມຂຶ້ນຈາກ 16.1% ເປັນ 36.6%
- ອັດຕາເຂົ້າຮຽນສຸດທິຂອງເດັກ 6 ປີ ເພີ່ມຈາກ 61.8% ເປັນ 84.2%
- ຈຳນວນໂຮງຮຽນປະຖົມເພີ່ມຂຶ້ນຈາກ 8,573 ແຫ່ງ ເປັນ 8,968 ແຫ່ງ ໃນຂະນະທີ່ໂຮງຮຽນປະຖົມສົມບູນເພີ່ມຂຶ້ນຈາກ 3,795 ແຫ່ງ ເປັນ 5,129 ແຫ່ງ.
- ຈຳນວນໂຮງຮຽນມັດທະຍົມຕອນຕົ້ນ ແລະ ຕອນປາຍເພີ່ມຂຶ້ນຈາກ 641 ແລະ 31 ແຫ່ງ ເປັນ 833 ແລະ 32 ແຫ່ງ ຕາມລຳດັບ, ໃນຂະນະທີ່ໂຮງຮຽນມັດທະຍົມສົມບູນເພີ່ມຂຶ້ນຈາກ 284 ແຫ່ງ ເປັນ 371ແຫ່ງ.
- ອັດຕາການຮູ້ໜັງສືຂອງຄົນໃນເກນອາຍຸ 15-40 ເພີ່ມຂຶ້ນຈາກ 79.9% ເປັນ 87% ແລະ ຄົນອາຍຸ 15 ປີຂຶ້ນໄປ ເພີ່ມຂຶ້ນຈາກ 74.4% ເປັນ 81.73%

ການຂະຫຍາຍໂອກາດການເຂົ້າຮຽນຢູ່ເຂດຊົນນະບົດຫ່າງໄກສອກຫຼີກ ກໍ່ໄດ້ຮັບການປັບປຸງດີຂຶ້ນເທື່ອລະກ້າວ ເນື່ອງຈາກວ່າມີຫຼາຍໂຄງການໄດ້ຮັບການຈັດຕັ້ງປະຕິບັດຢູ່ຂັ້ນແຂວງ, ຂັ້ນເມືອງ, ຂັ້ນບ້ານ ແລະ ກຸ່ມບ້ານພັດທະນາ. ການກໍ່ສ້າງໂຮງຮຽນ, ສູນຝຶກອົບຮົມວິຊາຊີບ ແລະ ສູນການສຶກສາຊຸມຊົນ ເຮັດໃຫ້ວຽກງານຂະຫຍາຍໂອກາດການເຂົ້າຮຽນຂອງຄົນກຸ່ມເປົ້າໝາຍໃນແຕ່ລະລະດັບເພີ່ມຂຶ້ນ.

### 1.2. ແຜນງານປັບປຸງຄຸນນະພາບ ແລະ ຄວາມສອດຄ່ອງ

ນະໂຍບາຍຕ່າງໆໄດ້ຮັບການປັບປຸງໃຫ້ມີຄວາມເຂັ້ມແຂງຂຶ້ນ ໂດຍສະເພາະຢູ່ຊັ້ນອະນຸບານ ແລະ ປະຖົມສຶກສາ ໄດ້ມີການຮັບຮອງເອົາຄູ່ມືຈັດຕັ້ງປະຕິບັດໂຮງຮຽນຄຸນນະພາບ ຊຶ່ງແມ່ນນະໂຍບາຍທີ່ສົ່ງເສີມຄຸນະພາບແບບຫຼາກຫຼາຍ ຊຶ່ງກວມເອົາເດັກທຸກຄົນ, ການຮຽນແບບຕັ້ງໜ້າ, ການສະໜອງສະພາບແວດລ້ອມທີ່ດີ, ປອດໄພ ແລະ ມີຄວາມຍືນຍົງ. ບົດບາດຍິງ-ຊາຍ, ຄວາມເປັນຜູ້ນຳຢູ່ໃນໂຮງຮຽນ ແລະ ການມີສ່ວນຮ່ວມຂອງຊຸມຊົນກໍ່ເປັນປັດໄຈຫຼັກໃນການປັບປຸງຄຸນນະພາບຂອງການສຶກສາ.

ຄຸນນະພາບຂອງສາມັນສຶກສາໄດ້ຮັບການປັບປຸງໃຫ້ດີຂຶ້ນ ເນື່ອງຈາກໄດ້ມີການປັບປຸງຫຼັກສູດໃຫ້ເປັນ 12 ປີ ພ້ອມທັງໄດ້ປັບປຸງປຶ້ມແບບຮຽນ ແລະ ໄດ້ພິມແຈກຢາຍໃຫ້ນັກຮຽນທຸກຄົນ. ໄດ້ເພີ່ມປີຮຽນອີກ 1 ປີ ຢູ່ໃນສາຍສາມັນ ເພື່ອໃຫ້ເປັນລະບົບ 5+4+3 ແລະ ການສະໜອງຄູໃຫ້ແກ່ໂຮງຮຽນຢູ່ເຂດຫ່າງໄກສອກຫຼີກ ໄດ້ມີການປັບປຸງໃຫ້ດີຂຶ້ນ ໂດຍໄດ້ເພີ່ມໂກຕາຄູໃໝ່ 5,000 ຄົນ ໃນສົກ 2009-2010.

(ຮູບທີ 2)

- ໄດ້ຂະຫຍາຍ ແລະ ປັບປຸງຫຼັກສູດສ້າງຄູອະນຸບານຈາກລະບົບ 11+1 ເປັນ 11+2 ແລະ ໄດ້ເລີ່ມນຳໃຊ້ລະບົບ 11+3
- ສ້າງຄູປະຖົມກໍ່ໄດ້ຍົກລະດັບຈາກ 11+1 ເປັນ 11+2 ແລະ ປັບປຸງຫຼັກສູດ 8+3 ຕື່ມ.
- ສ້າງຄູມັດທະຍົມຕອນຕົ້ນ ກໍ່ໄດ້ປັບຫຼັກສູດຈາກ ລະບົບ 11+3 ສາມສາຍ (ທຳມະຊາດ, ສັງຄົມ ແລະ ພາສາຕ່າງປະເທດ) ເປັນລະບົບ 11+3 ຫ້າສາຍ (ພາສາລາວ-ວັນນະຄະດີ, ວິທະຍາສາດສັງຄົມ, ຄະນິດສາດ, ວິທະຍາສາດ ແລະ ພາສາຕ່າງປະເທດ)
- ສືບຕໍ່ການຝຶກອົບຮົມຄູ ພ້ອມທັງປັບປຸງຫຼັກສູດເຊື່ອມຕໍ່ ແລະ ຕໍ່ເນື່ອງສຳລັບຄູທີ່ບໍ່ໄດ້ມາດຖານ ໃນຍາມພັກແລ້ງ

ຫຼັກສູດອາຊີວະສຶກສາ ແລະ ການສຶກສາຊັ້ນສູງໄດ້ຮັບການປັບປຸງ ໂດຍສະເພາະແມ່ນໄດ້ຍົກລະດັບຫຼັກສູດອາຊີວະຊັ້ນຕົ້ນເປັນຊັ້ນກາງ ແລະ ຊັ້ນກາງເປັນຊັ້ນສູງ. ຫຼັກສູດປະລິນຍາຕີ ຢູ່ມະຫາວິທະຍາໄລໄດ້ມີການປັບປຸງຈາກ 5 ປີ ເປັນ 4 ປີ. ນອກຈາກນັ້ນຍັງໄດ້ກະກຽມສ້າງມາດຖານຫຼັກສູດແຫ່ງຊາດ ຊຶ່ງຖ້າມາດຖານດັ່ງກ່າວສ້າງສຳເລັດແລ້ວ ຈະໄດ້ສ້າງຫຼັກສູດໃໝ່ສຳລັບລະດັບຊັ້ນສູງ, ອະນຸປະລິນຍາ, ປະລິນຍາຕີ, ປະລິນຍາໂທ ແລະ ປະລິນຍາເອກ. ປັດຈຸບັນນີ້ກຳລັງພັດທະນາຫຼັກສູດລວມສຳລັບວິຊາທີ່ຈະສິດສອນຢູ່ໃນບັນດາມະຫາວິທະຍາໄລຂອງລັດ.

ພ້ອມດຽວກັນນັ້ນ ເພື່ອເຮັດໃຫ້ຄຸນນະພາບການສຶກສາໄດ້ມີການພັດທະນາໄປຄຽງຄູ່ກັບການຂະຫຍາຍທາງດ້ານປະລິມານ ສູນຮັບປະກັນຄຸນນະພາບການສຶກສາກໍ່ໄດ້ຮັບການສ້າງຕັ້ງຂຶ້ນ ເພື່ອເຮັດໜ້າທີ່ກວດກາ ແລະ ວາງຍຸດທະສາດໃນການປັບປຸງຄຸນນະພາບການສຶກສາ. ສູນຄົ້ນຄວ້າຍຸດທະສາດ ແລະ ວິໄຈການສຶກສາກໍ່ໄດ້ຮັບການສ້າງຕັ້ງຂຶ້ນເຊັ່ນດຽວກັນ ເພື່ອວິໄຈສະພາບການສຶກສາ ແລະ ປະເມີນການຈັດຕັ້ງປະຕິບັດນະໂຍບາຍ ແລະ ຍຸດທະສາດການສຶກສາທີ່ຈະນຳໄປສູ່ວິທີການໃນການປັບປຸງນະໂຍບາຍ ແລະ ຍຸດທະສາດການສຶກສາ.

## 1.3. ແຜນງານບໍລິຫານ ແລະ ຄຸ້ມຄອງການສຶກສາ

ແຜນຍຸດທະສາດການປະຕິຮູບລະບົບການສຶກສາແຫ່ງຊາດ (2006-2015), ຂອບພັດທະນາຂະແໜງການສຶກສາ (2009-2015) ແລະ ຕາຕະລາງແຜນນະໂຍບາຍຂອງແຜນພັດທະນາຂະແໜງການສຶກສາ ໄດ້ວາງຂອບນະໂຍບາຍ, ບູລິມະສິດ ແລະ ເປັນທິດທາງໃນການລົງທຶນຂອງລັດ ກໍ່ຄືການຊ່ວຍເຫຼືອຈາກ ຕ່າງປະເທດຢູ່ໃນຂະແໜງການ. ນອກນັ້ນ ຂອບພັດທະນາຂະແໜງການສຶກສາຍັງໄດ້ກຳນົດວິທີການ ປະຕິຮູບການສຶກສາ, ນະໂຍບາຍຕົ້ນຕໍຕ່າງໆ ແລະ ບັນດາຍຸດທະສາດທີ່ຈຳເປັນເພື່ອໃຫ້ບັນລຸແຜນປະຕິບັດງານແຫ່ງຊາດການສຶກສາເພື່ອທຸກຄົນໃນປີ 2015. ຂອບພັດທະນາຂະແໜງການສຶກສາໄດ້ສ້າງຂຶ້ນໂດຍກະຊວງສຶກສາທິການ, ໂດຍມີການປຶກສາຫາລື ແລະ ປະສານງານຢ່າງໃກ້ຊິດກັບບັນດາກະຊວງ, ທ້ອງຖິ່ນ, ອົງກອນອື່ນໆທີ່ກ່ຽວຂ້ອງ ແລະ ຄູ່ຮ່ວມພັດທະນາ. ຂອບພັດທະນາຂະແໜງການສຶກສາ ແມ່ນແຜນອັນໜຶ່ງອັນດຽວຂອງທົ່ວຂະແໜງການສຶກສາ. ໃນເມື່ອລະບົບການສຶກສາໄດ້ຖືກປັບປ່ຽນຈາກລະບົບ 5+3+3 ເປັນ ລະບົບ 5+4+3, ມັນມີຄວາມຈຳເປັນຕ້ອງມີມາດຕາການເພື່ອ: (1)

ປັບປຸງ ແລະ ພັດທະນາຫຼັກສູດໃຫ້ມີຄຸນະພາບ ແລະ ມີຄວາມສອດຄ່ອງ. (2) ຂະຫຍາຍຫ້ອງຮຽນໃນທົ່ວປະເທດໃຫ້ທົ່ວເຖິງ, (3) ຄັດເລືອກ, ບັນຈຸຊັບຊ້ອນ ແລະ ຮັກສາຄູທີ່ມີຄຸນະພາບ ແລະ ຄູທີ່ໄດ້ຜ່ານໂຮງຮຽນສ້າງຄູ ເພື່ອຮັບຮອງຄວາມຕ້ອງການໃນການຂະຫຍາຍໂຮງຮຽນອະນຸບານ, ປະຖົມ ແລະ ມັດທະຍົມ, ເພື່ອຮັບປະກັນໃຫ້ຊຸມຊົນ ແລະ ເດັກໃນເກນອາຍຸທີ່ຢູ່ ບ້ານສາມາດເຂົ້າເຖິງໂຮງຮຽນໄດ້, (4) ຮັບ ປະກັນໃຫ້ຄູ ແລະ ພະນັກງານໄດ້ຮັບການຝຶກອົບຮົມທີ່ມີຄຸນນະພາບ ເພື່ອສະໜັບສະໜູນໃຫ້ແກ່ການສະໜອງການສຶກສາໃນທຸກຊັ້ນທຸກລະດັບຂອງການຄຸ້ມຄອງການສຶກສາ ແລະ (5) ຮັບປະກັນໃຫ້ກິດຈະກຳທີ່ວາງອອກໃນແຜນພັດທະນາຂອງຂະແໜງການສຶກສາ ໄດ້ຮັບການຈັດຕັ້ງປະຕິບັດ ໃນຂອບເຂດທົ່ວປະເທດເວົ້າລວມ, ເວົ້າສະເພາະແມ່ນຢູ່ 47 ເມືອງທີ່ທຸກທີ່ສຸດ[2]. ຂອບປະເມີນການປະຕິບັດງານຂອງຂະແໜງການສຶກສາກໍ່ໄດ້ພັດທະນາຂຶ້ນມາ ຊຶ່ງຢູ່ພາຍໃຕ້ຄວາມຮັບຜິດຊອບຂອງກົມກວດກາ ໂດຍໄດ້ນຳໃຊ້ເຄືອຂ່າຍການຕິດຕາມ ແລະ ປະເມີນຜົນ ທີ່ມີຢູ່ ແລະ ໄດ້ສ້າງຕັ້ງຂຶ້ນໃນແຕ່ລະລະດັບ ເພື່ອເຮັດການກວດກາ ແລະ ຕິດຕາມການປະຕິບັດງານຂອງຂະແໜງການໂດຍອີງໃສ່ ຂອບປະເມີນຜົນການປະຕິບັດງານ (PAF) ທີ່ໄດ້ສ້າງຂຶ້ນມາ.

ກະຊວງສຶກສາທິການໄດ້ມີການປັບປຸງໂຄງສ້າງການບໍລິຫານຄື: ໄດ້ສ້າງຕັ້ງບັນດາສູນຕ່າງໆທີ່ຈຳເປັນຂຶ້ນມາໃໝ່ ພ້ອມທັງໄດ້ແຍກກົມທີ່ມີພາລະບົດບາດຕ່າງກັນອອກຈາກກັນ ເພື່ອປັບປຸງລະບົບການບໍລິຫານ ແລະ ບໍລິການການສຶກສາໃຫ້ດີຂຶ້ນ. ປັດຈຸບັນນີ້ຢູ່ກະຊວງສຶກສາມີ 5 ສູນທີ່ເຮັດວຽກເປັນເອກະລາດເຊັ່ນ:

- ສູນປະກັນຄຸນນະພາບການສຶກສາ
- ສູນການສຶກສາຮຽນຮ່ວມ
- ສູນຄົ້ນຄວ້າຍຸດທະສາດ ແລະ ວິໄຈການສຶກສາ
- ສູນເທັກໂນໂລຊີຂໍ້ມູນຂ່າວສານ ແລະ ສະຖິຕິການສຶກສາ.
- ສູນພັດທະນາຄູ ແລະ ຜູ້ບໍລິຫານການສຶກສາ

ເນື່ອງຈາກການສຶກສາຂັ້ນມັດທະຍົມໄດ້ມີການຂະຫຍາຍຕົວຢ່າງໄວວາ ດັ່ງນັ້ນ ກົມສາມັນສຶກສາຈຶ່ງໄດ້ແຍກອອກເປັນສອງກົມຄື: ກົມປະຖົມ-ອະນຸບານສຶກສາ ແລະ ກົມມັດທະຍົມສຶກສາ; ເພື່ອຕອບສະໜອງໃຫ້ແກ່ການຜັນຂະຫຍາຍແຜນຍຸດທະສາດພັດທະນາເສດຖະກິດ-ສັງຄົມແຫ່ງຊາດ; ກົມການສຶກສາຊັ້ນສູງ ແລະ ອາຊີວະສຶກສາ ກໍ່ໄດ້ແຍກຕົວອອກຈາກກັນ ເປັນກົມການສຶກສາຊັ້ນສູງ ແລະ ກົມອາຊີວະສຶກສາ.

## 2. ບັນຫາ ແລະ ສິ່ງທ້າທາຍໃນຂະແໜງການສຶກສາ

### 2.1. ແຜນງານຂະຫຍາຍໂອກາດການເຂົ້າຮຽນ

ໃນໄລຍະແຕ່ປີ 2006-2010 ຈຳນວນໂຮງຮຽນ, ຫ້ອງຮຽນພ້ອມທັງຈຳນວນນັກຮຽນ ແລະ ຄູສອນໃນທຸກລະດັບນັບທັງພາກລັດ ແລະ ເອກະຊົນໄດ້ມີການເພີ່ມຂຶ້ນຢ່າງຕໍ່ເນື່ອງ. ການສຶກສາເດັກກ່ອນ

[2] ໃນໄລຍະຕໍ່ມາ ນະໂຍບາຍນີ້ໄດ້ຖືກປັບປຸງ ເພື່ອເລັ່ງໃສ່ 56 ເມືອງທີ່ດ້ອຍໂອກາດທາງດ້ານການສຶກສາ.

ໄວຮຽນໄດ້ມີການເຕີບໂຕສູງກວ່າຄາດໝາຍທີ່ວາງໄວ້, ແຕ່ການຂະຫຍາຍຕົວນີ້ມີພຽງແຕ່ຢູ່ຕົວເມືອງເທົ່ານັ້ນ ສ່ວນຢູ່ເຂດຊົນນະບົດ ແລະ ເຂດຫ່າງໄກສອກຫຼີກ ວຽກງານການສຶກສາກ່ອນໄວຮຽນຍັງຂະຫຍາຍຕົວຊ້າ ຫຼື ບາງບ່ອນກໍ່ບໍ່ມີເລີຍ, ຊຶ່ງເປັນສາຍເຫດເຮັດໃຫ້ມີເດັກນ້ອຍຈຳນວນຫຼວງຫຼາຍເຂົ້າໂຮງຮຽນປະຖົມໂດຍບໍ່ໄດ້ຜ່ານການກຽມມາກ່ອນ ໂດຍສະເພາະແມ່ນເດັກຊົນເຜົ່າທີ່ບໍ່ເວົ້າພາສາລາວ. ອັດຕາການຄ້າງຫ້ອງ ແລະ ປະລະການຮຽນຂອງນັກຮຽນຊັ້ນປະຖົມຍັງຢູ່ໃນລະດັບສູງ. ຈຳນວນໂຮງຮຽນປະຖົມບໍ່ສົມບູນແມ່ນຍັງ ກວມເອົາເປີເຊັນສູງ ເຖິງ 42.8% ຂອງຈຳນວນໂຮງຮຽນທັງໝົດ ຊຶ່ງເປັນສາຍເຫດໃຫ້ອັດຕາລອດເຫຼືອຮອດ ປ.5 ຂອງນັກຮຽນ ມີພຽງແຕ່ 71.1%. ຍັງມີຄວາມບໍ່ສະເໝີພາບຍິງ-ຊາຍ ໃນການເຂົ້າຮຽນ ໃນແຕ່ລະຊັ້ນແຕ່ລະສາຍ ໂດຍສະເພາະແມ່ນຊັ້ນປະຖົມສຶກສາ ໃນ 56 ເມືອງທີ່ດ້ອຍໂອກາດທາງການສຶກສາ ແລະ 87 ເມືອງອື່ນໆ, ຊຶ່ງອັດຕາການເຂົ້າຮຽນສຸດທິຂອງເດັກຍິງຢູ່ໃນ 56 ເມືອງດັ່ງກ່າວ ມີພຽງແຕ່ 85.6% ສ່ວນເດັກຊາຍແມ່ນ 90% ໃນຂະນະທີ່ອັດຕາການເຂົ້າຮຽນຂອງເດັກຍິງຢູ່ 87 ເມືອງທີ່ເຫຼືອ ເດັກຍິງ 94%, ເດັກຊາຍ 95%.

ຍັງມີຄວາມແຕກໂຕນໃນການເຂົ້າຮຽນຊັ້ນປະຖົມສຶກສາ ໂດຍສະເພາະຢູ່ 56 ເມືອງທີ່ດ້ອຍໂອກາດທາງດ້ານການສຶກສາ. ປະມານ 75% ຂອງຈຳນວນເດັກທັງໝົດທົ່ວປະເທດທີ່ຍັງບໍ່ໄດ້ເຂົ້າຮຽນແມ່ນຢູ່ 56 ເມືອງດັ່ງກ່າວນີ້ ໃນຂະນະທີ່ເດັກໃນເກນອາຍຸເຂົ້າຮຽນຢູ່ເຂດດັ່ງກ່າວນີ້ກວມພຽງແຕ່ 1/3 ຂອງຈຳນວນປະຊາກອນເດັກໃນເກນອາຍຸທົ່ວປະເທດ.

ອັດຕາການຮູ້ໜັງສືຂອງຜູ້ຍິງແມ່ນຍັງຕ່ຳ (37%), ຮ້າຍແຮງໄປກວ່ານັ້ນຢູ່ບາງຊົນເຜົ່າການຮູ້ໜັງສື ຂອງເພດຍິງມີຕ່ຳກວ່າ 5%.

ການສຶກສາຊັ້ນມັດທະຍົມ ກໍ່ໄດ້ມີການຂະຫຍາຍຕົວທາງດ້ານປະລິມານ ແຕ່ວ່າຄຸນນະພາບຂອງການຮຽນການສອນແມ່ນຍັງຕ່ຳ. ການເພີ່ມຊັ້ນຮຽນອີກຊັ້ນໜຶ່ງໃນຊັ້ນມັດທະຍົມຕອນຕົ້ນ ຊຶ່ງເຮັດໃຫ້ຫຼັກສູດລະບົບສາມັນໄດ້ເພີ່ມຈາກ 11 ປີ ເປັນ 12 ປີ ແມ່ນເປັນສິ່ງທີ່ທ້າທາຍ ເນື່ອງຈາກຄູທີ່ມີຢູ່ໃນປັດຈຸບັນຕ້ອງໄດ້ຮັບການຍົກລະດັບ ແລະ ຝຶກອົບຮົມເພື່ອໃຫ້ສາມາດສິດສອນຕາມຫຼັກສູດໃໝ່ໄດ້. ການສະໜອງອຸປະກອນຮັບໃຊ້ການຮຽນ-ການສອນ ດັ່ງທີ່ກຳນົດໄວ້ໃນຕາຕະລາງແຜນນະໂຍບາຍຂອງແຜນພັດທະນາຂະແໜງການສຶກສາ ໂດຍສະເພາະແມ່ນໃຫ້ໂຮງຮຽນທີ່ຢູ່ເຂດຊົນນະບົດແມ່ນເປັນສິ່ງທີ່ທ້າທາຍ.

ເຖິງແມ່ນວ່າຢູ່ໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ VI ໄດ້ຮຽກຮ້ອງໃຫ້ມີການເພີ່ມການສະໜອງແຮງງານທີ່ມີສີມື ແຕ່ໃນຕົວຈິງການສະໜອງສີມືແຮງງານໃຫ້ແກ່ຕະຫຼາດແຮງງານຍັງຕ່ຳ ແລະ ບໍ່ສາມາດຕອບສະໜອງໄດ້ຕາມຄວາມຕ້ອງການຂອງສັງຄົມ ເນື່ອງຈາກຈຳນວນນັກສຶກສາທີ່ເຂົ້າຮຽນໃນສາຍອາຊີວະສຶກສາມີລັກສະນະຫຼຸດລົງ ຊຶ່ງສາຍເຫດມາຈາກຜູ້ຮຽນສ່ວນໃຫຍ່ບໍ່ຕ້ອງການຮຽນໃນລະດັບຊັ້ນຕົ້ນ ແລະ ຊັ້ນກາງ, ມີບາງສາຂາວິຊາບໍ່ມີນັກຮຽນສະໝັກເຂົ້າຮຽນ. ແຕ່ກົງກັນຂ້າມຈຳນວນນັກສຶກສາທີ່ເຂົ້າຮຽນໃນບັນດາມະຫາວິທະຍາໄລ ແມ່ນເກີນຄາດໝາຍທີ່ກຳນົດໄວ້ໃນຕາຕະລາງແຜນນະໂຍບາຍຂອງຂອບພັດທະນາຂະແໜງການສຶກສາ ສຳລັບປີ 2015 ຊຶ່ງເກີນຄວາມສາມາດທີ່ທາງສະຖາບັນຈະຮັບໄດ້ ເປັນສາຍເຫດໃຫ້ມີການພັດທະນາລະບົບການຮຽນ-ການສອນເປັນຫຼາຍລະບົບເວລາຄື: ລະບົບພາກເຊົ້າ, ພາກບ່າຍ ແລະ ພາກຄ່ຳ, ນອກນັ້ນ ບາງຄະນະວິຊາໃນມະຫາວິທະຍາໄລຍັງໄດ້ເປີດສອນພາກ ວັນເສົາ-ອາທິດ ອີກດ້ວຍ.

## 2.2. ແຜນງານປັບປຸງຄຸນນະພາບ ແລະ ຄວາມສອດຄ່ອງ

ໂດຍທົ່ວໄປຄູຍັງຂາດເຂີນຢູ່ ໂດຍສະເພາະແມ່ນຄູທີ່ໄດ້ມາດຕະຖານຢູ່ບັນດາໂຮງຮຽນມູນລະປະຖົມ ເຊິ່ງເປັນສາຍເຫດທີ່ເຮັດໃຫ້ເດັກນ້ອຍຈຳນວນຫຼວງຫຼາຍບໍ່ສາມາດຮຽນຈົບຊັ້ນປະຖົມ. ຢູ່ໃນ 56 ເມືອງທີ່ດ້ອຍໂອກາດທາງການສຶກສາ ອັດຕາລອດເຫຼືອຈົບຊັ້ນປະຖົມມີພຽງ 63.7% ໃນຂະນະທີ່ອັດຕາລອດເຫຼືອທົ່ວປະເທດແມ່ນ 71.1% (2009-2010). ຜົນຂອງການວິໄຈການຮຽນຂອງນັກຮຽນ ປ. 5 ໂດຍນຳໃຊ້ (Assessment of Student Learning Outcome) ຊຶ່ງເອີ້ນກັນຫຍໍ້ໆວ່າ ASLO ໄດ້ຢັ້ງຢືນວ່າການຂາດເຂີນອຸປະກອນການຮຽນ-ການສອນກໍ່ເປັນໜຶ່ງໃນສາຍເຫດ ເຮັດໃຫ້ຄຸນນະພາບການສຶກສາຕ່ຳ. ນອກຈາກນັ້ນ ມີຫຼາຍເມືອງທີ່ບໍ່ໄດ້ພັດທະນາຫຼັກສູດທ້ອງຖິ່ນ (ນະໂຍບາຍກຳນົດ 20% ສຳລັບຫຼັກສູດທ້ອງຖິ່ນ) ຊຶ່ງເຮັດໃຫ້ພໍ່ແມ່ນັກຮຽນເຫັນວ່າການສຶກສາບໍ່ເໝາະສົມກັບຄວາມຕ້ອງການທີ່ແທ້ຈິງຂອງທ້ອງຖິ່ນ. ມີພຽງແຕ່ 30% ຂອງໂຮງຮຽນປະຖົມທົ່ວປະເທດມີນ້ຳດື່ມ ແລະ ຫ້ອງນ້ຳ ຊຶ່ງກໍ່ໃຫ້ເກີດບັນຫາຕໍ່ສຸຂະພາບຂອງນັກຮຽນ. ຕໍ່ກັບບັນຫານີ້ ກະຊວງສຶກສາທິການຈະຕ້ອງໄດ້ເຮັດວຽກຮ່ວມກັນຢ່າງຈິງຈັງກັບກະຊວງສາທາລະນະສຸກ ເພື່ອຈັດຕັ້ງປະຕິບັດນະໂຍບາຍແຫ່ງຊາດກ່ຽວກັບສຸຂະພາບໃນໂຮງຮຽນ (2010) ຊຶ່ງທັງສອງກະຊວງຈະຕ້ອງເປັນຜູ້ຮັບຜິດຊອບຮ່ວມກັນ.

ເນື່ອງຈາກການສຶກສາຊັ້ນມັດທະຍົມໄດ້ມີການຂະຫຍາຍຕົວ ແຕ່ວ່າຄຸນນະພາບຂອງການຮຽນການສອນແມ່ນຍັງຕ່ຳ. ການເພີ່ມຊັ້ນຮຽນອີກຊັ້ນໜຶ່ງໃນຊັ້ນມັດທະຍົມຕອນຕົ້ນ ແມ່ນເປັນສິ່ງທີ່ທ້າທາຍເນື່ອງຈາກຄູທີ່ມີຢູ່ໃນປັດຈຸບັນຕ້ອງໄດ້ຮັບການຍົກລະດັບ ແລະ ຝຶກອົບຮົມເພື່ອໃຫ້ສາມາດສິດສອນຕາມຫຼັກສູດໃໝ່ໄດ້ ແລະ ມີຄຸນນະພາບດີຂຶ້ນ. ນອກຈາກນັ້ນຍັງຈະຕ້ອງໄດ້ພັດທະນາຫຼັກສູດການຝຶກອົບຮົມສຳລັບຄູຊັ້ນມັດທະຍົມອີກດ້ວຍ. ສິ່ງທີ່ທ້າທາຍອີກອັນໜຶ່ງ ກໍຄືການສະໜອງອຸປະກອນຮັບໃຊ້ການຮຽນ-ການສອນໃຫ້ໂຮງຮຽນມັດທະຍົມ ດັ່ງທີ່ກຳນົດໄວ້ໃນແຜນພັດທະນາຂະແໜງການສຶກສາໂດຍສະເພາະແມ່ນໃຫ້ໂຮງຮຽນ ທີ່ຢູ່ເຂດຊົນນະບົດ.

ບັນຫາທ້າທາຍຕົ້ນຕໍສຳລັບວຽກງານອາຊີວະສຶກສາ ແມ່ນການສ້າງໃຫ້ນັກຮຽນເຂົ້າໃຈວ່າກ່ອນຈະມີຄວາມຮູ້ ແລະ ວິຊາຊີບທີ່ດີຈະຕ້ອງໄດ້ຜ່ານອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ ໂດຍສະເພາະແມ່ນຢູ່ໃນລະດັບວິຊາຊີບຊຳນານງານ ແລະ ລະດັບຊ່າງເຕັກນິກ. ປົກກະຕິແລ້ວກຳມະກອນທີ່ມີສີມືດີ ຈະໄດ້ຮັບເງິນເດືອນຫຼາຍກວ່າພະນັກງານຫ້ອງການທົ່ວໄປ ແຕ່ຊາວໜຸ່ມສ່ວນໃຫຍ່ບໍ່ມັກເຮັດວຽກຢູ່ໃນຂົງເຂດດັ່ງກ່າວ. ເປົ້າໝາຍລວມຂອງແຜນພັດທະນາເສດຖະກິດ-ສັງຄົມຄັ້ງທີ VII ແມ່ນຕ້ອງການຢາກໃຫ້ແກ້ໄຂໄດ້ບັນຫາດັ່ງກ່າວ ໂດຍການເພີ່ມຈຳນວນແຮງງານທີ່ມີສີມືໃຫ້ຫຼາຍຂຶ້ນ. ນອກນັ້ນຍັງມີສິ່ງທ້າທາຍອີກຈຳນວນໜຶ່ງເຊັ່ນ: ການພັດທະນາການຮ່ວມມືກັບກຸ່ມທຸລະກິດ ກໍ່ຄືພາກເອກະຊົນໃນລະບົບການບໍລິຫານ ແລະ ຄຸ້ມຄອງການຮຽນ-ການສອນ; ງົບປະມານຍັງມີຈຳກັດສຳລັບການຈັດຊື້ອຸປະກອນ; ຂາດສິ່ງອຳນວຍຄວາມສະດວກຕ່າງໆ ແລະ ອຸປະກອນຮັບໃຊ້ການຝຶກອົບຮົມ ແລະ ຂາດມາດຕະຖານສີມືແຮງງານແຫ່ງຊາດ.

## 2.3. ແຜນງານບໍລິຫານ ແລະ ຄຸ້ມຄອງການສຶກສາ

ແຜນຍຸດທະສາດການປະຕິຮູບລະບົບການສຶກສາແຫ່ງຊາດ ແລະ ຂອບພັດທະນາຂະແໜງການສຶກສາໄດ້ກຳນົດນະໂຍບາຍ ແລະ ຍຸດທະສາດຕົ້ນຕໍສຳລັບຂະແໜງການແຕ່ນີ້ເຖິງປີ 2015; ແຕ່ຄວາມ

ເຂົ້າໃຈ ແລະ ຄວາມສາມາດໃນການຈັດຕັ້ງປະຕິບັດຂອງຜູ້ບໍລິຫານໃນທຸກລະດັບໂດຍສະເພາະຢູ່ຂັ້ນທ້ອງຖິ່ນຍັງມີຄວາມຈຳກັດ. ເພື່ອແກ້ໄຂບັນຫາດັ່ງກ່າວຈະຕ້ອງໄດ້ມີການຈັດຝຶກອົບຮົມວຽກງານການບໍລິຫານ ແລະ ຄຸ້ມຄອງໃຫ້ແກ່ຜູ້ບໍລິຫານການສຶກສາທຸກລະດັບ ລວມທັງການສ້າງຕັ້ງສູນບຳລຸງຜູ້ບໍລິຫານການສຶກສາຂຶ້ນ (ໂຄງການ SEAMEO RETRAC ໄດ້ໃຫ້ການສະໜັບສະໜູນບຳລຸງຍົກລະດັບຜູ້ບໍລິຫານການສຶກສາ). ນອກນັ້ນຍັງໄດ້ພັດທະນາຂອບພັດທະນາການສ້າງຂີດຄວາມສາມາດຂຶ້ນ ເພື່ອຊ່ວຍໃນການວິໄຈສະພາບຄວາມເປັນຈິງຂອງໂຄງຮ່າງການຈັດຕັ້ງແຕ່ລະຂັ້ນ ແລະ ຊ່ວຍໃນການກຳນົດຄວາມຕ້ອງການໃນການຍົກລະດັບຜູ້ບໍລິຫານການສຶກສາ.

ຈຳນວນນັກຮຽນທີ່ເຂົ້າຮຽນຢູ່ໃນລະດັບຊ່າງຊຳນານງານ ແລະ ນາຍຊ່າງເຕັກນິກແມ່ນມີໜ້ອຍ ດັ່ງນັ້ນ, ຂັ້ນສູນກາງໂດຍສົມທົບກັບທ້ອງຖິ່ນຕ້ອງໄດ້ກຳນົດນະໂຍບາຍ ແລະ ສະໜອງສິ່ງຈູງໃຈໃຫ້ເໝາະສົມເພື່ອແກ້ໄຂບັນຫາດັ່ງກ່າວນີ້. ເຖິງວ່າໄດ້ມີແຜນແມ່ບົດອາຊີວະສຶກສາແລ້ວກໍ່ຕາມ ແຕ່ການຈັດຕັ້ງປະຕິບັດແມ່ນມີຄວາມຫຍຸ້ງຍາກ.

ການສຶກສາພາກເອກະຊົນມີການຂະຫຍາຍຕົວ ໂດຍສະເພາະໃນລະດັບຊັ້ນສູງ ແລະ ອະນຸປະລິນຍາ ແມ່ນສາມາດແກ້ໄຂບັນຫາເລື່ອງການສະໜອງສະຖານທີ່ຮຽນຊ່ວຍລັດຖະບານໄດ້, ແຕ່ຄຸນນະພາບການສຶກສາຢູ່ໃນສະຖາບັນດັ່ງກ່າວແມ່ນຍັງຕ່ຳ ເນື່ອງຈາກສະຖາບັນເອກະຊົນສ່ວນໃຫຍ່ເນັ້ນໃສ່ປະລິມານຫຼາຍກວ່າເນັ້ນໃສ່ຄຸນນະພາບ. ການມີສ່ວນຮ່ວມກັບຂະແໜງອຸດສາຫະກຳ ແລະ ພາກສ່ວນເອກະຊົນໃນການວາງແຜນ, ການຈັດຕັ້ງປະຕິບັດ, ການຮັບເອົານັກຮຽນຝຶກຫັດ, ການຈ້າງງານ ແລະ ລະບົບການບໍລິຫານແມ່ນຍັງມີໜ້ອຍ ແລະ ບໍ່ຕອບສະໜອງໄດ້ກັບຄວາມຮຽກຮ້ອງຕ້ອງການຕົວຈິງຂອງຕະຫຼາດແຮງງານມີລັກສະນະເຫຼືອບໍ່ພໍ.

ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດຍຸດທະສາດການປະຕິຮູບລະບົບການສຶກສາແຫ່ງຊາດ ແລະ ຂອບພັດທະນາຂະແໜງການສຶກສາໄດ້ຮັບຜົນດີທັງຢູ່ຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ, ການສ້າງແຜນການ ແລະ ຂົ້ນງົບປະມານຈະຕ້ອງມີຄວາມສອດຄ່ອງກັນ ແລະ ເປັນອັນນຶ່ງອັນດຽວກັນ. ການຕິດຕາມປະເມີນຜົນການປະຕິບັດງານຂອງຂະແໜງການ ຈະຕ້ອງມີຄວາມເຂັ້ມແຂງ ແລະ ເປັນລະບົບ ໂດຍການສ້າງເຄືອຂ່າຍຕິດຕາມ ແລະ ປະເມີນຜົນພາຍໃຕ້ການປະສານງານກັບກົມກວດກາ. ຊຶ່ງມີຄວາມຈຳເປັນຕ້ອງໄດ້ກໍ່ສ້າງບຸກຄະລາກອນກ່ຽວກັບວຽກງານດັ່ງກ່າວນີ້ ເພື່ອເຮັດໃຫ້ວຽກງານການຕິດຕາມໄດ້ຖືກຈັດຕັ້ງປະຕິບັດຢ່າງເປັນລະບົບ ດັ່ງທີ່ກຳນົດໃນຂອບປະເມີນຜົນການປະຕິບັດງານຂອງຂອບພັດທະນາຂະແໜງການສຶກສາ (ESDF PAF).

ເຖິງແມ່ນວ່າງົບປະມານບໍລິຫານ ທີ່ລັດຖະບານໃຊ້ຈ່າຍເຂົ້າໃນວຽກງານການສຶກສາໄດ້ເພີ່ມຂຶ້ນເປັນລຳດັບໃນໄລຍະຜ່ານມາ ແຕ່ໃນຕົວຈິງແລ້ວສ່ວນແບ່ງດັ່ງກ່າວແມ່ນຍັງຢູ່ໃນລະດັບຕ່ຳກວ່າມາດຕະຖານສາກົນ ຊຶ່ງຢູ່ປະມານ 11%[3] (ຖ້າສັງລວມເອົາງົບປະມານສຳລັບກິດຈະກຳທີ່ກ່ຽວຂ້ອງກັບການພັດທະນາຊັບພະຍາກອນມະນຸດທັງໝົດທີ່ຂຶ້ນກັບຂະແໜງການອື່ນ ເປີເຊັນສ່ວນແບ່ງງົບປະມານໃຫ້ແກ່ວຽກງານສຶກສາອາດເພີ່ມຂຶ້ນເຖິງ 15.8%). ການລົງທຶນພາຍໃນຂອງລັດຖະບານເຂົ້າໃນຂະແໜງການ

---

[3] ແຫຼ່ງຂໍ້ມູນ: ບົດສະຫຼຸບປະຈຳປີຂອງຂະແໜງການສຶກສາປະຈຳສົກປີ 2009-2010. ສ່ວນເອກະສານອື່ນໆ ສ່ວນໃຫຍ່ແມ່ນອ້າງອີງເຖິງ ສ່ວນແບ່ງງົບປະມານທັງໝົດທີ່ອາດຈະລວມ ຫຼື ບໍ່ລວມເອົາ ODA ຫຼື ອາດຈະລວມເອົາ ຫຼື ບໍ່ລວມເອົາໜີ້ສິນຕ່າງໆ ດັ່ງນັ້ນ ຕົວເລກ ອາດຈະແຕກຕ່າງກັນ.

ສຶກສາແມ່ນຍັງຕ່ຳ ຊຶ່ງງົບປະມານທີ່ລັດຖະບານຈັດສັນໃຫ້ສ່ວນໃຫຍ່ແມ່ນເງິນເດືອນ ແລະ ເງິນອຸດໜູນ. ໝາຍຄວາມວ່າ ຂະແໜງການສຶກສາມີງົບປະມານຕ່ຳຫຼາຍໃນການຈັດຕັ້ງປະຕິບັດບັນດານະໂຍບາຍຕ່າງໆທີ່ກຳນົດໃນຍຸດທະສາດການປະຕິຮູບລະບົບການສຶກສາແຫ່ງຊາດ ແລະ ຂອບພັດທະນາຂະແໜງການສຶກສາ. ດັ່ງນັ້ນ ຈຶ່ງມີຄວາມຈຳເປັນຕ້ອງໄດ້ຂໍການຊ່ວຍເຫຼືອຈາກບັນດາຄູ່ຮ່ວມພັດທະນາເພື່ອມາຈັດຕັ້ງປະຕິບັດແຜນພັດທະນາຂະແໜງການສຶກສາ (2011-2015) ໃຫ້ມີປະສິດທິຜົນ.

ລັດຖະບານໄດ້ເອົາໃຈໃສ່ໃນການຂະຫຍາຍການສຶກສາໄປສູ່ເຂດຫ່າງໄກສອກຫຼີກ ແລະ ພັດທະນາຄຸນນະພາບການສຶກສາ ໃນສົກຮຽນປີ 2009-2010 ໄດ້ສະໜອງຄູໃຫ້ເພີ່ມເຕີມ 5,000 ຕຳແໜ່ງ ເພື່ອໄປບັນຈຸຢູ່ເຂດຫ່າງໄກສອກຫຼີກ ແລະ ນອກນັ້ນ ລັດຖະບານຍັງໄດ້ຖືວຽກງານການສຶກສາເປັນວຽກບຸລິມະສິດຂະແໜງໜຶ່ງທີ່ຈະໄດ້ນຳໃຊ້ເງິນປັນຜົນຈາກລາຍຮັບຂອງນ້ຳເທີນ II.

ອີງໃສ່ແນວໂນ້ມທີ່ມີໃນປັດຈຸບັນ ຊ່ອງຫວ່າງລະຫວ່າງຄວາມຕ້ອງການເຂົ້າຮຽນ ແລະ ຄວາມອາດສາມາດໃນການຮັບນັກສຶກສາເຂົ້າຮຽນຂອງມະຫາວິທະຍາໄລຂອງລັດ ຄາດວ່າຈະກວ້າງອອກໄປເລື້ອຍໆໃນອານາຄົດ. ດັ່ງນັ້ນ ມະຫາວິທະຍາໄລມີຄວາມຈຳເປັນຕ້ອງ (1) ທົບທວນຂະບວນການ ແລະ ກົນໄກໃນການຈັດສັນງົບປະມານ ໂດຍສະເພາະແມ່ນງົບປະມານບໍລິຫານທີ່ບໍ່ແມ່ນເງິນເດືອນ ທີ່ໃຊ້ຈ່າຍເຂົ້າໃນການປັບປຸງຄຸນະພາບການສຶກສາ, ການບຳລຸງຮັກສາ ແລະ ປົວແປງສິ່ງອຳນວຍຄວາມສະດວກ ແລະ ອຸປະກອນຕ່າງໆ; (2) ຈັດສັນລະບົບການຮັບນັກຮຽນໃນແຜນຄືນໃໝ່ ໂດຍສະເພາະແມ່ນສຳລັບນັກຮຽນທຸກ ແລະ ຜູ້ທີ່ດ້ອຍໂອກາດ ພ້ອມທັງເພີ່ມການຈັດສັນງົບປະມານ ດ້ວຍຮູບແບບທີ່ເປັນເງິນອຸດໜູນຄ່າສິດສອນ ແລະ ເງິນອຸດໜູນຄ່າຄອງຊີບ; (3) ເພີ່ມຄ່າທຳນຽມເຂົ້າຮຽນສຳລັບນັກຮຽນນອກແຜນ ແລະ (4) ຂົນຂວາຍຫາແຫຼ່ງລາຍຮັບອື່ນໆອີກ ເພື່ອມາສະໜັບສະໜູນກິດຈະກຳຂອງມະຫາວິທະຍາໄລຂອງລັດ ໂດຍການຮ່ວມມືກັບພາກສ່ວນເອກະຊົນ.

# 3. ບົດຮຽນທີ່ຖອດຖອນໄດ້ ແລະ ຂໍ້ແນະນຳ

## 3.1. ບົດຮຽນທີ່ຖອດຖອນໄດ້

ໃນໄລຍະການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VI; ວຽກງານການສຶກສາໄດ້ມີການຂະຫຍາຍຕົວຢູ່ໃນລະດັບດີ ແຕ່ຍັງມີບາງບັນຫາ ແລະ ສິ່ງທ້າທາຍທີ່ຕ້ອງໄດ້ແກ້ໄຂ. ຍັງມີຄວາມບໍ່ສະເໝີພາບໃນການເຂົ້າຮຽນຂອງນັກຮຽນໃນທຸກລະດັບລະຫວ່າງຊົນນະບົດ ແລະ ຕົວເມືອງ, ລະຫວ່າງຍິງ-ຊາຍ ແລະ ລະຫວ່າງຊົນເຜົ່າຕ່າງໆຍັງບໍ່ທັນທົ່ວເຖິງ. ນອກນັ້ນ ການສະໜອງສິ່ງຈູງໃຈ ແລະ ນະໂຍບາຍຕ່າງໆ ໃຫ້ຄູທີ່ໄປສິດສອນຢູ່ເຂດຫ່າງໄກສອກຫຼີກຍັງບໍ່ທັນໄດ້ດີເທົ່າທີ່ຄວນ. ຈຳນວນແຮງງານທີ່ມີສີມືແມ່ນມີໜ້ອຍ ແລະ ບໍ່ສາມາດຕອບສະໜອງໄດ້ຕາມຄວາມຕ້ອງການຂອງຕະຫຼາດແຮງງານ, ນັກຮຽນອາຊີວະສ່ວນໃຫຍ່ ແມ່ນຕ້ອງການຮຽນແຕ່ວິຊາທີ່ກ່ຽວຂ້ອງກັບທຸລະກິດ ຫຼື ຄວາມຕ້ອງການຂອງສັງຄົມ.

ເຖິງວ່ານະໂຍບາຍທີ່ກ່ຽວຂ້ອງກັບໂຮງຮຽນຄຸນະພາບ ສຳລັບຊັ້ນປະຖົມສຶກສາໄດ້ຖືກຮັບຮອງແລ້ວ ແຕ່ການຂະຫຍາຍຕົວທາງດ້ານປະລິມານຍັງບໍ່ທັນສົມດູນກັບຄຸນນະພາບ ແລະ ຄວາມສອດຄ່ອງຂອງການສຶກສາ. ນະໂຍບາຍນີ້ຈະຕ້ອງຮັບປະກັນໃຫ້ການຂະຫຍາຍຕົວທາງດ້ານປະລິມານ ແລະ ການປັບປຸງຄຸນະພາບຄຽງຄູ່ກັນໄປ.

ລະດັບຄວາມຮູ້ ແລະ ຄວາມສາມາດທີ່ພົວພັນເຖິງການບໍລິຫານການສຶກສາແມ່ນຍັງຕ່ຳ ໂດຍສະເພາະຢູ່ຂັ້ນເມືອງ ຊຶ່ງເປັນອຸປະສັກຕໍ່ການນຳໃຊ້ຊັບພະຍາກອນຢ່າງມີປະສິດທິພາບ ແລະ ປະສິດທິຜົນ. ນອກນັ້ນ, ການເຊື່ອມໂຍງລະຫວ່າງວຽກແຜນການ ແລະ ແຜນງົບປະມານຢູ່ຂັ້ນສູນກາງ ກໍ່ຄືຢູ່ຂັ້ນທ້ອງຖິ່ນແມ່ນຍັງບໍ່ໄດ້ດີ ຊຶ່ງເປັນຜົນເຮັດໃຫ້ປະສິດທິຜົນຕ່ຳ. ທັງສອງຢ່າງທີ່ກ່າວມານີ້ ເປັນບັນຫາທີ່ບໍ່ສາມາດຕິດຕາມ ແລະ ແກ້ໄຂໄດ້ງ່າຍໆ ເນື່ອງຈາກວ່າງົບປະມານທີ່ໃຊ້ຈ່າຍເຂົ້າໃນການຕິດຕາມຂະແໜງການແມ່ນມີຈຳກັດ ຊຶ່ງເປັນບັນຫາທີ່ຈະຕ້ອງເພີ່ມການເອົາໃຈໃສ່ຢ່າງຈິງຈັງ ເພື່ອເຮັດໃຫ້ສາມາດນຳໃຊ້ຜົນຂອງການຕິດຕາມ ມາປັບປຸງການສ້າງແຜນປະຈຳປີໃນອານາຄົດ.

ສ່ວນແບ່ງງົບປະມານຂອງລັດຖະບານເຂົ້າໃນການພັດທະນາວຽກງານການສຶກສາ ໂດຍສະເພາະແມ່ນສ່ວນແບ່ງການລົງທຶນໃສ່ກິດຈະກຳທີ່ກ່ຽວຂ້ອງກັບການປັບປຸງຄຸນນະພາບການສຶກສາແມ່ນຕ່ຳ ຖ້າທຽບໃສ່ບັນດາປະເທດໃກ້ຄຽງ. ການຊ່ວຍເຫຼືອທາງການເພື່ອການພັດທະນາໃນໄລຍະຜ່ານມາກໍ່ໄດ້ເພີ່ມຂຶ້ນ ແຕ່ປະສິດທິພາບບໍ່ສູງເທົ່າທີ່ຄວນ ຊຶ່ງມີສາຍເຫດມາຈາກຄວາມບໍ່ດຸ່ນດ່ຽງໃນການນຳໃຊ້ທຶນດັ່ງກ່າວເຂົ້າໃນແຕ່ລະຂະແໜງການຍ່ອຍ ໂດຍການອ່ອຍທຶນຈາກຂະແໜງການຍ່ອຍໜຶ່ງໄປຍັງອີກຂະແໜງການຍ່ອຍອື່ນ ຫຼື ບໍ່ເປັນບູລິມະສິດ.

ບົດຮຽນອັນໃຫຍ່ທີ່ສາມາດຖອດຖອນໄດ້ຄື ການໃຊ້ຈ່າຍໃນປັດຈຸບັນ (ທັງຈາກລັດຖະບານ ແລະ ຈາກການຊ່ວຍເຫຼືອທາງການເພື່ອການພັດທະນາ) ບໍ່ໄປຕາມຄວາມຕ້ອງການທີ່ກຳນົດໄວ້ໃນບັນດາເອກະສານທີ່ສຳຄັນເຊັ່ນ: ແຜນພັດທະນາການສຶກສາໄລຍະ 5 ປີ (2006-2010), ແຜນປະຕິບັດງານແຫ່ງຊາດການສຶກສາເພື່ອທຸກຄົນ (2003-2015), ແຜນຍຸດທະສາດການສ້າງຄູ ແຕ່ປີ 2006-2015 ແລະ ແຜນດຳເນີນງານ ແຕ່ປີ 2006-2010, ແຜນຍຸດທະສາດການປະຕິຮູບລະບົບກາສຶກສາແຫ່ງຊາດ ແລະ ຂອບພັດທະນາຂະແໜງການສຶກສາ ຊຶ່ງເຮັດໃຫ້ການພັດທະນາແຕ່ລະຂະແໜງການຍ່ອຍບໍ່ມີຄວາມສົມດູນ ອັນຈະເຮັດໃຫ້ເກີດມີສິ່ງທ້າທາຍໃນການປະຕິບັດແຜນປະຕິບັດງານການສຶກສາເພື່ອທຸກຄົນ ແລະ ເປົ້າໝາຍສະຫັດສະວັດໃນປີ 2015.

## 3.2. ຂໍ້ແນະນຳ

1. ທັງລັດຖະບານ ແລະ ຄູ່ຮ່ວມພັດທະນາຈະຕ້ອງໄດ້ເຮັດວຽກຮ່ວມກັນຢ່າງເປັນລະບົບ ແລະ ຮັດກຸມ ເພື່ອເຮັດໃຫ້ການປັບປຸງຄຸນະພາບການສຶກສາ ແລະ ການຂະຫຍາຍຕົວທາງດ້ານປະລິມານມີຄວາມສົມດູນກັນ. ນະໂຍບາຍໂຮງຮຽນຄຸນະພາບຄວນຂະຫຍາຍໄປໃນທຸກຂັ້ນທຸກສາຍ ລວມທັງວຽກງານການສຶກສາຮຽນຮ່ວມ ແລະ ການສຶກສານອກໂຮງຮຽນ ຈະຕ້ອງໄດ້ເອົາໃຈໃສ່ເປັນພິເສດ ເພື່ອອຳນວຍຄວາມສະດວກໃຫ້ຜູ້ດ້ອຍໂອກາດ ແລະ ຜູ້ທີ່ຢູ່ຫ່າງໄກສອກຫຼີກໄດ້ມີໂອກາດເຂົ້າຮຽນຢ່າງທົ່ວເຖິງ.
2. ຈະຕ້ອງເອົາໃຈໃສ່ປະສານງານກັບຜູ້ຊົມໃຊ້ແຮງງານ ເພື່ອເຮັດໃຫ້ການພັດທະນາທັກສະສີມືແຮງງານຕ່າງໆ ໂດຍສະເພາະຢູ່ໃນສະຖາບັນອາຊີວະສຶກສາ ແລະ ສະຖາບັນການສຶກສາຂັ້ນສູງ ສາມາດຕອບສະໜອງໄດ້ຕາມຄວາມຕ້ອງການຂອງຕະຫຼາດແຮງງານ. ນອກຈາກນັ້ນ ການຍົກລະດັບຜູ້ບໍລິຫານການສຶກສາລະດັບໂຮງຮຽນກໍ່ຄືລະດັບເມືອງ ຈະຕ້ອງເອົາເປັນວຽກບຸລິມະສິດ.

3. ການຈັດບູລິມະສິດແມ່ນເປັນສິ່ງທີ່ຈຳເປັນ ເພື່ອເຮັດໃຫ້ການນຳໃຊ້ງົບປະມານທີ່ມີຈຳກັດນີ້ ມີປະສິດທິພາບສູງ; ການນຳໃຊ້ທຶນທັງໝົດ (ທຶນລັດຖະບານ ແລະ ທຶນການຊ່ວຍເຫຼືອທາງການເພື່ອການພັດທະນາ) ຈະຕ້ອງອີງໃສ່ບູລິມະສິດທີ່ກຳນົດໄວ້ໃນແຜນພັດທະນາຂະແໜງການສຶກສາໄລຍະ 5 ປີ, ຍຸດທະສາດການປະຕິຮູບລະບົບການສຶກສາແຫ່ງຊາດ ແລະ ຂອບພັດທະນາຂະແໜງການສຶກສາ. ສິ່ງດັ່ງກ່າວນີ້ມັນຮຽກຮ້ອງໃຫ້ມີການຄາດຄະເນງົບປະມານທີ່ຕ້ອງການເຂົ້າໃນການປະຕິບັດກິດຈະກຳຕ່າງໆ. ດັ່ງນັ້ນ, ກະຊວງສຶກສາ ແລະ ກະຊວງການເງິນຈະຕ້ອງເຮັດວຽກຮ່ວມກັນໃນການພັດທະນາ ແລະ ຈັດຕັ້ງປະຕິບັດແຜນຂອບໃຊ້ຈ່າຍໄລຍະກາງ (MTEF). ໃນຕົວຈິງການສ້າງແຜນຂອບໃຊ້ຈ່າຍໄລຍະກາງຂອງຂະແໜງການສຶກສາແມ່ນໄດ້ເລີ່ມປະຕິບັດມາແລ້ວ ແຕ່ເພື່ອຮັບປະກັນເຮັດໃຫ້ການນຳໃຊ້ແຜນດັ່ງກ່າວມີປະໂຫຍດສູງສຸດໃນການສ້າງແຜນ ມັນມີຄວາມຈຳເປັນສຳລັບທຸກໆຂະແໜງການຂອງລັດຖະບານ (ລວມທັງແຂວງ) ຈະຕ້ອງໄດ້ມີການສ້າງແຜນຂອບໃຊ້ຈ່າຍໄລຍະກາງຂອງຕົນພ້ອມທັງມີການຕົກລົງເປັນເອກະພາບໃນການນຳໃຊ້ ແລະ ກຳນົດເພດານເງິນໃຫ້ຊັດເຈນກ່ອນໃນແຕ່ລະປີ.
4. ປັດຈຸບັນທຶນຊ່ວຍເຫຼືອທາງການເພື່ອການພັດທະນາ (ODA) ຖືວ່າເປັນທຶນທີ່ຊ່ວຍເຫຼືອເຂົ້າໃນການລົງທຶນ ເຖິງວ່າມີບາງສ່ວນຂອງເງິນເຫຼົ່ານີ້ໄດ້ໃຊ້ຈ່າຍເຂົ້າໃນວຽກງານບໍລິຫານ ດັ່ງນັ້ນ ຄວນແຍກໃຫ້ລະອຽດລະຫວ່າງເງິນທີ່ໃຊ້ເຂົ້າໃນການລົງທຶນ ແລະ ເງິນທີ່ໃຊ້ເຂົ້າໃນວຽກງານບໍລິຫານປົກກະຕິ.
5. ໃນຂອບພັດທະນາຂະແໜງການສຶກສາ ໄດ້ກຳນົດການພັດທະນາ ແລະ ການສະໜອງການເງິນແບບທົ່ວຂະແໜງການ (SWAp), ເຖິງວ່າມີຫຼາຍໂຄງການທີ່ຈັດຕັ້ງປະຕິບັດຢູ່ໃນປັດຈຸບັນນີ້ ໄດ້ກວມເອົາຫຼາຍໆຂະແໜງການຍ່ອຍ, ແຕ່ການຊ່ວຍເຫລືອທາງການເພື່ອການພັດທະນາສ່ວນໃຫຍ່ແມ່ນເນັ້ນໃສ່ຄວາມຕ້ອງການຂອງຂະແໜງການຍ່ອຍໃດໜຶ່ງເທົ່ານັ້ນ. ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດຂອບພັດທະນາຂະແໜງການສຶກສາໃຫ້ປະກົດຜົນເປັນຈິງ, ການຫັນໄປສູ່ການນຳໃຊ້ທຶນຮ່ວມກັນ ຫຼື ນະໂຍບາຍການຮ່ວມທຶນ ແມ່ນມີຄວາມຈຳເປັນ ເພາະວ່າ ພວກເຮົາກຳລັງຈະຫັນໄປສູ່ການພັດທະນາແບບຮອບດ້ານ ແລະ ຄົບຊຸດ (SWAp). ຊຶ່ງບັນຫາດັ່ງກ່າວນີ້ ຈະໄດ້ປຶກສາຫາລືກັນໃຫ້ລະອຽດຢູ່ໃນກຸ່ມວິຊາການຂອງຂະແໜງການສຶກສາ.

## ພາກທີ II ແຜນພັດທະນາການສຶກສາໄລຍະ 5 ປີ (2011-2015)

### 1. ບ່ອນອີງ:

- ອີງຕາມ: ມະຕິກອງປະຊຸມໃຫຍ່ຄັ້ງທີ່ IX ຂອງພັກປະຊາຊົນປະຕິວັດລາວ.
- ອີງຕາມ: ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຂອງລັດຖະບານ 5 ປີ ຄັ້ງທີ່ VII (2011-2015).
- ອີງຕາມ: ວິໄສທັດຍຸດທະສາດການສຶກສາ ແຕ່ 2001 ຫາ 2020.
- ອີງຕາມ: ແຜນຍຸດທະສາດການປະຕິຮູບລະບົບການສຶກສາແຫ່ງຊາດ (2006 - 2015).
- ອີງຕາມ: ຂອບພັດທະນາຂະແໜງການສຶກສາ (2009-2015).
- ອີງຕາມ: ຜົນຂອງການປະເມີນການຈັດຕັ້ງປະຕິບັດຍຸດທະສາດການປະຕິຮູບລະບົບການສຶກສາແຫ່ງ ຊາດ ໄລຍະທີ 1 (2006-2010).

### 2. ເປົ້າໝາຍລວມ

1) ຜັນຂະຫຍາຍເນື້ອໃນຈິດໃຈກອງປະຊຸມໃຫຍ່ຄັ້ງທີ IX ຂອງພັກປະຊາຊົນປະຕິວັດລາວ ໂດຍຖືເອົາການພັດທະນາລະບົບການສຶກສາແຫ່ງຊາດ ຫຼື ການສ້າງຄົນເປັນໃຈກາງ ແລະ ເປັນໜ້າທີ່ຈຸດສຸມແຫ່ງການບຸກທະລຸ ແນໃສ່ສ້າງບຸກຄະລາກອນປະເພດຕ່າງໆໃຫ້ມີຄຸນະພາບ ແລະ ມີຈຳນວນພຽງພໍ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານ ຢູ່ໃນອົງກອນຂອງລັດ ແລະ ທົ່ວສັງຄົມ.
2) ສືບຕໍ່ດຳເນີນການປະຕິຮູບລະບົບການສຶກສາແຫ່ງຊາດໄລຍະທີ II (2011-2015) ຢ່າງເຖິງຖອງ ແລະ ມີຫຼັກການ ບົນພື້ນຖານແນວທາງຂອງພັກ, ຮັບປະກັນສາມລັກສະນະການສຶກສາຂອງພັກ ຄື: ລັກສະນະຊາດ, ວິທະຍາສາດ-ທັນສະໃໝ ແລະ ລັກສະນະມະຫາຊົນ ແລະ ຮັບປະກັນ 5 ຫຼັກມູນການສຶກສາຂອງພັກຄື: ຄຸນສົມບັດສຶກສາ, ປັນຍາສຶກສາ, ສິນລະປະສຶກສາ, ພະລະສຶກສາ ແລະ ແຮງງານສຶກສາ.
3) ບຸກທະລຸໃຫ້ໄດ້ໃນການແກ້ໄຂບັນຫາຂອດຄູສອນ ເຊັ່ນ: ການສະໜອງຄູໃຫ້ພຽງພໍ, ຍົກຖານະບົດບາດຂອງຄູ ແລະ ຍົກຄຸນນະພາບການສິດສອນ ນັບທັງຄຸນນະພາບຊີວິດການເປັນຢູ່ຂອງຄູໃຫ້ສູງຂຶ້ນໃນສັງຄົມ ພ້ອມກັນນັ້ນກໍຕັ້ງໜ້າກໍ່ສ້າງ ແລະ ບຳລຸງຄູໃຫ້ໄດ້ມາດຕະຖານ; ປະຕິບັດນະໂຍບາຍສົ່ງເສີມຜູ້ຮຽນເກັ່ງ, ມີພອນສະຫວັນ ແລະ ມັກອາຊີບຄູໄປຮຽນຄູ; ເປີດກວ້າງການນຳໃຊ້ຄູຜູ້ທີ່ມີຄວາມຮູ້, ຄວາມຊຳນິຊຳນານໃຫ້ໄດ້ຫຼາຍ ແລະ ຍາວນານ, ເອົາໃຈໃສ່ເປັນພິເສດຕໍ່ການປັບປຸງ, ປ່ຽນແປງວິທີການສິດສອນ ແລະ ຮໍ່າຮຽນໃຫ້ມີຄຸນນະພາບອັນໃໝ່ ເພື່ອໃຫ້ໄດ້ຕາມວິໄສທັດທີ່ວ່າ : “ສ້າງຄູ ເພື່ອສ້າງຄົນ, ສ້າງຄົນ ເພື່ອສ້າງຊາດ”.
4) ສືບຕໍ່ພັດທະນາຫຼັກສູດທຸກຂັ້ນ, ທຸກສາຍໃຫ້ສອດຄ່ອງກົມກຽວກັນ ໂດຍເນັ້ນດ້ານສະມັດຖະພາບດ້ານການຮຽນຂອງນັກຮຽນ-ນັກສຶກສາ; ຄົ້ນຄວ້າ ແລະ ປັບປຸງມາດຕະຖານຫຼັກສູດ ໂດຍຮັບປະ

ກັນທັງສອງດ້ານ ຄື: ດ້ານແນວຄິດການເມືອງ, ອຸດົມການສັງຄົມນິຍົມ ແລະ ສ້າງຄົນເກັ່ງທາງດ້ານວິຊາສະເພາະ. ພິເສດຈະໄດ້ປັບປຸງຄືນການຮຽນ-ການສອນວິຊາຄຸນສົມບັດ, ວິຊາການເມືອງ ແລະ ການແນະນຳວິຊາຊີບ. ເວົ້າລວມແລ້ວ ຫຼັກສູດການສຶກສາຕ້ອງຮັບປະກັນການກໍ່ສ້າງຄົນລາວໃຫ້ມີນ້ຳໃຈຮັກຊາດ ຕິດພັນກັບການຮັກລະບອບໃໝ່, ມີຄວາມຮູ້-ຄວາມສາມາດ, ມີຄວາມຮັບຜິດຊອບຕໍ່ໜ້າທີ່ຂອງພົນລະເມືອງ ຕອບສະໜອງກັບການພັດທະນາເສດຖະກິດ-ສັງຄົມ ຂອງປະເທດເຮົາ. ພ້ອມກັນນີ້ ຕ້ອງຄົ້ນຄວ້າປັບປຸງແປງຮູບການສອບເສັງເລື່ອນຂັ້ນ, ເລື່ອນຊັ້ນ, ຈົບຊັ້ນ ແລະ ສອບເສັງຄັດເລືອກໄປຮຽນລະດັບຕ່າງໆຄືນໃໝ່ ແນໃສ່ເລືອກເຟັ້ນ ແລະ ສົ່ງເສີມໃຫ້ໄດ້ຜູ້ຮຽນເກັ່ງ ມີພອນສະຫວັນໄດ້ເຂົ້າຮຽນລະດັບສູງຂຶ້ນຕໍ່ໄປນັບທັງຢູ່ພາຍໃນ ແລະ ຕ່າງປະເທດ.

5) ເອົາໃຈໃສ່ປັບປຸງ ແລະ ແກ້ໄຂໂຄງລ່າງການສຶກສາ ນັບທັງສິ່ງເອື້ອອຳນວຍ ແລະ ອຸປະກອນໃຫ້ແກ່ການຮຽນ-ການສອນໃຫ້ພຽງພໍ ແລະ ໄດ້ມາດຕະຖານ.
6) ປັບປຸງລະບົບການຄຸ້ມຄອງການສຶກສາໃຫ້ມີຄວາມສອດຄ່ອງເຂັ້ມແຂງ ແລະ ໜັກແໜ້ນ. ກໍ່ສ້າງພະນັກງານຄຸ້ມຄອງ, ພະນັກງານນຳພາ, ພະນັກງານວິຊາການທຸກລະດັບ ຢ່າງມີແຜນການ, ເປັນລະບົບຄົບຊຸດ ແລະ ລວມສູນ. ບຳລຸງຍົກລະດັບທາງດ້ານທິດສະດີການເມືອງ, ການບໍລິຫານການສຶກສາໃຫ້ແກ່ພະນັກງານ, ຄູອາຈານ ນັບທັງຜູ້ບໍລິຫານການສຶກສາແຕ່ລະຂັ້ນປະສານສົມທົບກັບຄະນະພັກຢູ່ທ້ອງຖິ່ນໃນການກໍ່ສ້າງກະຕຸກຊຸກຍູ້, ສົ່ງເສີມໃຫ້ຄູ-ອາຈານ ໄດ້ເຂົ້າເປັນສະມາຊິກຂອງພັກ ເພາະຄູແມ່ນຄົນຂອງພັກເປັນຜູ້ຈະສ້າງຄົນ. ປັບປຸງຄືນການແບ່ງຄວາມຮັບຜິດຊອບໃນການລົງທຶນໃສ່ການສຶກສາ, ການສ້າງ ແລະ ຝຶກອົບຮົມຊັບພະຍາກອນມະນຸດລະຫວ່າງກະຊວງສຶກສາທິການກັບບັນດາກະຊວງ, ອົງການທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນໃຫ້ຈະແຈ້ງກວ່າເກົ່າ: ກະຊວງສຶກສາທິການ ແລະ ກິລາ ຮັບຜິດຊອບໂດຍກົງການພັດທະນາຫຼັກສູດ, ການກໍ່ສ້າງຄູ, ສະໜອງປຶ້ມແບບຮຽນ ແລະ ອຸປະກອນຮັບໃຊ້ການຮຽນ-ການສອນ; ສ່ວນອົງການປົກຄອງທ້ອງຖິ່ນແມ່ນຮັບຜິດຊອບການກໍ່ສ້າງອາຄານຫ້ອງຮຽນ ແລະ ພື້ນຖານໂຄງລ່າງທີ່ຈຳເປັນອື່ນໆ, ການຂະຫຍາຍໂຮງຮຽນຕ້ອງຕິດພັນກັບແຜນການກໍ່ສ້າງບ້ານ ແລະ ກຸ່ມບ້ານພັດທະນາຂອງອົງການປົກຄອງທ້ອງຖິ່ນ.
7) ສູ້ຊົນຈັດຕັ້ງປະຕິບັດລາຍຈ່າຍງົບປະມານໃສ່ຂະແໜງການສຶກສາໃຫ້ໄດ້ 17%-18% ຂອງລາຍຈ່າຍງົບປະ ມານຂອງລັດຖະບານ ດັ່ງທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍການສຶກສາ ພ້ອມນັ້ນກໍ່ຂໍການສະໜັບ ສະໜູນຊ່ວຍເຫຼືອຈາກອົງການຈັດຕັ້ງຕ່າງໆ ທັງພາກລັດ ແລະ ພາກເອກະຊົນ, ທັງພາຍໃນ ແລະ ຕ່າງປະເທດ ເຂົ້າຮ່ວມການພັດທະນາການສຶກສາຕາມຈຸດໝາຍ ທີ່ພັກ ແລະ ລັດຖະບານເຮົາໄດ້ກຳນົດໄວ້.

## 3. ທິດທາງລວມ

ການພັດທະນາຂະແໜງການສຶກສາຈະປະຕິບັດດັ່ງຕໍ່ໄປນີ້:

1) ຖືເອົາການສຶກສາເປັນໃຈກາງໃນການພັດທະນາຊັບພະຍາກອນມະນຸດ ພ້ອມດຽວກັນນັ້ນການພັດທະນາຊັບພະຍາກອນມະນຸດ ຕ້ອງໃຫ້ສອດຄ່ອງກັບໂຄງປະກອບຂອງເສດຖະກິດ ແລະ ຍຸດ

ທະສາດໃນການພັດທະນາປະເທດຊາດ ເພື່ອຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຂອງຕະຫຼາດແຮງງານ (70% ສຳລັບຂະແໜງກະສິກຳ; 7% ສຳລັບຂະແໜງອຸດສາຫະກຳ ແລະ 23% ສຳລັບຂະແໜງບໍລິການ)[4] ແລະ ສາມາດເຊື່ອມໂຍງເຂົ້າກັບພາກພື້ນ ແລະ ສາກົນເທື່ອລະກ້າວ.

2) ຈັດຕັ້ງປະຕິບັດການປະຕິຮູບລະບົບການສຶກສາແຫ່ງຊາດ ໂດຍເລັ່ງໃສ່ການປັບປຸງຄຸນນະພາບການສຶກສາໃນແຕ່ລະຊັ້ນແຕ່ລະສາຍ ລວມທັງການສຶກສານອກໂຮງຮຽນ ແລະ ການສຶກສາພາກເອກະຊົນ.
3) ສົ່ງເສີມວຽກງານສຶກສາອົບຮົມການເມືອງແນວຄິດໃຫ້ແກ່ຊາວໜຸ່ມ, ນັກຮຽນ-ນັກສຶກສາ, ຄູອາຈານ ແລະ ຜູ້ບໍລິຫານການສຶກສາ ເພື່ອໃຫ້ເຂົາເຈົ້າມີຄວາມຕື່ນຕົວທາງດ້ານການເມືອງ ແລະ ກຽມພ້ອມຮັບໃຊ້ປະເທດຊາດ.
4) ສ້າງມາດຕະຖານ ເພື່ອຮັບປະກັນການສຶກສາໃຫ້ມີຄຸນນະພາບ ໂດຍຜ່ານການສົ່ງເສີມໃຫ້ນຳເອົາວຽກງານຄຸນສົມບັດສຶກສາ, ປັນຍາສຶກສາ, ພະລະສຶກສາ, ສິລະປະສຶກສາ ແລະ ແຮງງານສຶກສາເຂົ້າໃນໂຮງຮຽນ, ໂດຍເພີ່ມການມີສ່ວນຮ່ວມໃຫ້ຫຼາຍຂຶ້ນຈາກຄອບຄົວ ແລະ ສັງຄົມ.
5) ສົ່ງເສີມການອ່ານ, ການຂຽນ, ການຮຽນຮູ້, ການປະດິດຄິດແຕ່ງ ແລະ ການຮຽນຮູ້ໜັງສືໃຫ້ກວ້າງຂວາງ ພ້ອມກັບການສະກັດກັ້ນແກ້ໄຂການເຊື່ອຖືງົມງວາຍ ຫຼີກເວັ້ນຈາກສິ່ງເສບຕິດ ແລະ ສິ່ງຫຍໍ້ທໍ້ໃນສັງຄົມ.
6) ສົ່ງເສີມວຽກງານລຶບລ້າງຄວາມບໍ່ຮູ້ໜັງສື, ການຍົກລະດັບການສຶກສາ ແລະ ຝຶກອົບຮົມວິຊາຊີບຂັ້ນພື້ນຖານໃຫ້ແກ່ປະຊາຊົນ ໂດຍນຳໃຊ້ສູນການສຶກສານອກໂຮງຮຽນ ແລະ ສູນຮຽນຮູ້ຊຸມຊົນເປັນບ່ອນຈັດກິດຈະກຳດັ່ງກ່າວ.
7) ພັດທະນາມາດຕະຖານຂອງການສຶກສາລາວເພື່ອໃຫ້ຄ່ອຍໆຫຍັບເຂົ້າໃກ້ກັບມາດຕະຖານຂອງພາກພື້ນ ແລະ ສາກົນເທື່ອລະກ້າວ.
8) ຈັດຕັ້ງປະຕິບັດບັນດາໂຄງການຕ່າງໆຂອງແຜນປະຕິບັດງານແຫ່ງຊາດການສຶກສາເພື່ອທຸກຄົນໃຫ້ປະກົດເປັນຈິງ.
9) ເພີ່ມການປະກອບສ່ວນຂອງຊຸມຊົນ, ສັງຄົມ ແລະ ການລົງທຶນຂອງລັດຖະບານເຂົ້າໃນການຂະຫຍາຍການສຶກສາຢ່າງທົ່ວເຖິງ.
10) ສົ່ງເສີມໃຫ້ເພດຍິງ ແລະ ກຸ່ມຄົນທີ່ດ້ອຍໂອກາດ ໄດ້ເຂົ້າຮຽນຢູ່ໃນທຸກລະດັບການສຶກສາ.

[4] ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ 7(2011-2015), ໜ້າ 90

11) ການພັດທະນາການສຶກສາ ຈະຕ້ອງສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ VII ແລະ ເພື່ອບັນລຸເປົ້າໝາຍການສຶກສາເພື່ອທຸກຄົນ ແລະ ເປົ້າໝາຍສະຫັດສະວັດດ້ານການພັດທະນາ.

12) ສົ່ງເສີມໃຫ້ຄູໄດ້ມີໂອກາດໄດ້ຍົກລະດັບວຸດທິການສຶກສາໃຫ້ສູງຂຶ້ນ ດ້ວຍຮູບການບຳລຸງແບບຕໍ່ເນື່ອງ ແລະ ເຊື່ອມຕໍ່ ເພື່ອພັດທະນາຄູໃຫ້ກາຍເປັນຄູມືອາຊີບ.

13) ຍົກສະຖານະພາບຂອງຄູໃຫ້ສູງຂຶ້ນ ດ້ວຍການສະໜອງນະໂຍບາຍທີ່ເໝາະສົມ ເພື່ອສົ່ງເສີມ ແລະ ພັດທະນາວິຊາຊີບຄູ.

14) ສົ່ງເສີມວຽກງານຝຶກອົບຮົມ ແລະ ນຳໃຊ້ຄູ ພ້ອມທັງສົ່ງເສີມໃຫ້ຜູ້ຍິງໄດ້ມີສ່ວນຮ່ວມໃນຕຳແໜ່ງຜູ້ບໍລິຫານທຸກລະດັບ.

15) ສົ່ງເສີມໃຫ້ມີການລົງທຶນເຂົ້າໃນວຽກງານ ການຕິດຕາມ ແລະ ປະເມີນຜົນການປະຕິບັດງານຂອງຂະແໜງການ.

## 4. ຈຸດປະສົງ

### 1. ແຜນງານຂະຫຍາຍໂອກາດການເຂົ້າຮຽນ

1) ເພື່ອບັນລຸເປົ້າໝາຍສະຫັດສະຫວັດດ້ານການພັດທະນາ ແລະ ແຜນງານແຫ່ງຊາດການສຶກສາເພື່ອທຸກຄົນ.

2) ປັບປຸງການຂະຫຍາຍໂອກາດການເຂົ້າຮຽນໃນທຸກລະດັບ ໂດຍຜ່ານການຂະຫຍາຍການເພີ່ມຫ້ອງຮຽນ, ກໍ່ສ້າງໂຮງຮຽນຫຼັງໃໝ່, ສ້ອມແປງສິ່ງອຳນວຍຄວາມສະດວກທີ່ມີຢູ່ ແລະ ສືບຕໍ່ໃຫ້ບໍລິການ ການສຶກສານອກໂຮງຮຽນ.

3) ສ້າງເງື່ອນໄຂໃຫ້ແກ່ຄົນທຸກ ໄດ້ມີໂອກາດເຂົ້າຮຽນໃນການສຶກສາຂັ້ນພື້ນຖານ ໂດຍການສະໜອງທຶນບໍລິຫານໂຮງຮຽນເພື່ອລົບລ້າງການເກັບຄ່າທຳນຽມໃນໂຮງຮຽນ ແລະ ໃຫ້ທຶນການສຶກສາແກ່ຄົນທຸກໃນທຸກຊັ້ນຮຽນ.

4) ນຳສະເໜີການໃຫ້ບໍລິການການສຶກສາແບບໃໝ່ ລວມທັງການສະໜອງການກຽມຄວາມພ້ອມໃຫ້ເດັກນັກຮຽນໂດຍການສິດສອນໃນໂຮງຮຽນຊຸມຊົນ ແລະ ການສະໜອງຄູສອນແບບເຄື່ອນທີ່.

5) ຂະຫຍາຍຫ້ອງຮຽນສຳລັບມັດທະຍົມຕອນຕົ້ນເພື່ອຮອງຮັບ ຫ້ອງ ມ. 4 ແລະ ສະໜອງທຶນການສຶກສາໃຫ້ນັກຮຽນທຸກ.

6) ປັບປຸງການເຂົ້າເຖິງການພັດທະນາທັກສະສີມືແຮງງານ ໂດຍການນຳເອົາຫຼັກສູດວິຊາຊີບເຂົ້າໃນຊັ້ນໂຮງຮຽນມັດທະຍົມຕອນປາຍ.

7) ສົ່ງເສີມໃຫ້ຊົນເຜົ່າເພດຍິງໄດ້ເຂົ້າຮຽນຕໍ່ໃນສາຍອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ ໂດຍການສະໜອງທຶນການສຶກສາ ແລະ ການສະໜອງທີ່ພັກອາໄສ ເພື່ອຫຼຸດຜ່ອນພາລະການໃຊ້ຈ່າຍທີ່ເປັນອຸປະສັກຕໍ່ການສຶກສາຂອງເຂົາເຈົ້າ.

8) ເພີ່ມຄວາມສະເໝີພາບໃນການເຂົ້າຮຽນໃນສະຖາບັນການສຶກສາຊັ້ນສູງ ໂດຍໃຫ້ມີການປັບປຸງມາດຖານໃນການຄັດເລືອກຜູ້ທີ່ຈະເຂົ້າຮຽນ ແລະ ການກຳນົດນັກຮຽນໃນແຜນ.

9) ປັບປຸງຄຸນະພາບຂອງກາສຶກສາຊັ້ນສູງ ໂດຍການຍົກລະດັບມະຫາວິທະຍາໄລຂອງລັດທັງ 4 ແຫ່ງທີ່ມີຢູ່ ໂດຍສະເພາະແມ່ນການພັດທະນາສິ່ງອຳນວຍຄວາມສະດວກ, ຄູອາຈານ ແລະ ຫຼັກສູດການຮຽນການສອນ.

10) ສ້າງຄວາມເຂັ້ມແຂງໃຫ້ແກ່ການຄຸ້ມຄອງ, ການເງິນ ແລະ ການປະກັນຄຸນນະພາບ ຢູ່ໃນລະບົບການສຶກສາຊັ້ນສູງຂອງລັດ ເພື່ອເຮັດໃຫ້ສາມາດສະໜອງບຸກຄະລາກອນທີ່ມີຄວາມຊຳນານງານໃນຂະແໜງການຫຼັກໆ ເພື່ອໃຫ້ຕອບສະໜອງໄດ້ຕາມຄວາມຕ້ອງການຂອງຕະຫຼາດແຮງງານ.

11) ເພີ່ມອັດຕາລອດເຫຼືອໃນຊັ້ນປະຖົມສຶກສາ ດ້ວຍການຫັນໂຮງຮຽນມູນໃຫ້ເປັນໂຮງຮຽນສົມບູນໂດຍສົ່ງເສີມໃຫ້ມີການສອນຫ້ອງຄວບ ແລະ ການບັນຈຸຄູເພດຍິງທີ່ເປັນຄົນຊົນເຜົ່າ.

12) ປັບປຸງຄວາມສະເໝີພາບໃນການເຂົ້າຮຽນໃນຊັ້ນປະຖົມສຶກສາໃນທົ່ວປະເທດ ແລະ ພິເສດເລີ່ມຈາກ 56 ເມືອງທີ່ດ້ອຍໂອກາດທາງການສຶກສາ.

13) ຂະຫຍາຍການລຶບລ້າງຄວາມບໍ່ຮູ້ໜັງສື, ການບຳລຸງຍົກລະດັບການສຶກສາຊັ້ນປະຖົມ ແລະ ການສຶກສາທຽບເທົ່າຊັ້ນມັດທະຍົມສຳລັບຊາວໜຸ່ມ ແລະ ຜູ້ໃຫຍ່ ໂດຍເລັ່ງໃສ່ 47 ເມືອງທຸກທີ່ສຸດ ແລະ 56 ເມືອງ ທີ່ດ້ອຍໂອກາດທາງກາສຶກສາ.

## 2. ແຜນງານປັບປຸງຄຸນນະພາບ ແລະ ຄວາມສອດຄ່ອງ

1) ເພີ່ມຈຳນວນໂຮງຮຽນຄຸນນະພາບ ພ້ອມທັງຂະຫຍາຍນະໂຍບາຍດັ່ງກ່າວໄປສູ່ຊັ້ນ ມັດທະຍົມ.

2) ປັບປຸງຄຸນນະພາບຂອງນັກຮຽນທີ່ຮຽນຈົບຊັ້ນມັດທະຍົມສຶກສາ ໂດຍຜ່ານການເພີ່ມປີຮຽນ ແລະ ພັດທະນາຫຼັກສູດໃໝ່ສຳລັບຊັ້ນມັດທະຍົມຕອນຕົ້ນ ແລະ ມັດທະຍົມຕອນປາຍ.

3) ສ້າງໂຮງຮຽນມັດທະຍົມສົມບູນຕົວແບບໃນແຕ່ລະແຂວງ.

4) ສືບຕໍ່ຈັດຕັ້ງປະຕິບັດ ແຜນຍຸດທະສາດການສຶກສາຄູ (TESAP) ເພື່ອປັບປຸງຄຸນນະພາບຄູທີ່ມີຢູ່.

5) ສະໜອງທຶນການສຶກສາໃຫ້ນັກຮຽນຄູ ເພື່ອເປັນການກະຕຸ້ນໃຫ້ນັກຮຽນທີ່ມີຄວາມສາມາດສະໝັກຢາກເປັນຄູສອນ.

6) ປັບປຸງ ແລະ ຍົກລະດັບຄຸນວຸດທິຂອງຄູໃນທຸກລະດັບ ໂດຍໃຫ້ມີການປັບປຸງຫຼັກສູດສ້າງຄູ ແລະ ສ້າງສູນຝຶກອົບຮົມຄູໃຫ້ຫຼາຍກວ່າເກົ່າ.

7) ຮັບປະກັນການສະໜອງຄູທີ່ມີຄຸນນະພາບໃນທຸກລະດັບໃຫ້ພຽງພໍ ແລະ ນຳໃຊ້ຄູໃຫ້ມີຄວາມສະເໝີພາບລະຫວ່າງຕົວເມືອງ ແລະ ຊົນນະບົດຫ່າງໄກສອກຫຼີກ ໃນຂອບເຂດທົ່ວປະເທດ ເພື່ອໃຫ້ສອດຄ່ອງກັບການເຕີບໃຫຍ່ຂະຫຍາຍຕົວຂອງການສຶກສາ ໂດຍສະໜອງສິ່ງອຳນວຍຄວາມສະດວກ ແລະ ສິ່ງຈູງໃຈຕ່າງໆໃຫ້ແກ່ຄູ.
8) ປັບປຸງຄຸນະພາບ ແລະ ຄວາມສອດຄ່ອງຂອງຫຼັກສູດມັດທະຍົມສຶກສາ ລວມທັງເພີ່ມການນຳໃຊ້ຫ້ອງທົດລອງເຂົ້າໃນການຮຽນວິຊາວິທະຍາສາດ.
9) ປັບປຸງຫຼັກສູດການສຶກສາເຕັກນິກວິຊາຊີບເພື່ອໃຫ້ທັນກັບຄວາມຕ້ອງການຕະຫຼາດແຮງງານໃຫ້ດີຂຶ້ນ.
10) ສົ່ງເສີມໃຫ້ເອກະຊົນມີສ່ວນຮ່ວມໃນການຈັດຕັ້ງປະຕິບັດຍຸດທະສາດອາຊີວະສຶກສາ.
11) ກຳນົດມາດຕະຖານສີມືແຮງງານແຫ່ງຊາດ ພ້ອມທັງຈັດຕັ້ງການໂຄສະນາວຽກງານດັ່ງກ່າວ ເພື່ອເຮັດໃຫ້ສັງຄົມເຂົ້າໃຈກ່ຽວກັບວຽກງານອາຊີວະສຶກສາ ແລະ ວິຊາຊີບ.
12) ພັດທະນາການສຶກສາຊັ້ນສູງໃຫ້ເໝາະສົມກັບຍຸດທະສາດການພັດທະນາຊັບພະຍາກອນມະນຸດຂອງລັດຖະບານ ໂດຍສົມທົບກັບພາກເອກະຊົນໃນການສະໜອງວິຊາຮຽນ, ຫຼັກສູດ ແລະ ອຸປະກອນການຮຽນການສອນທີ່ເໝາະສົມ; ສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານຮັບປະກັນຄຸນະພາບ, ລະບົບໜ່ວຍກິດ ແລະ ສົ່ງເສີມຄວາມອາດສາມາດໃນການສິດສອນ ແລະ ການວິໄຈຂອງບັນດາຄະນະວິຊາຕ່າງໆຂອງມະຫາວິທະຍາໄລຂອງລັດ ໂດຍການປັບປຸງສະພາບແວດລ້ອມການຮຽນການສອນ.
13) ພັດທະນາມາດຖານການສຶກສາ ແລະ ລະບົບຮັບປະກັນຄຸນນະພາບການສຶກສາໃຫ້ທຸກຊັ້ນຮຽນລວມທັງພາກລັດ ແລະ ເອກະຊົນ.
14) ພັດທະນາຄວາມສາມາດໃນການຄົ້ນຄວ້າວິທະຍາສາດ ໂດຍສ້າງຕັ້ງສະຖາບັນຄົ້ນຄວ້າວິທະຍາສາດສັງຄົມ-ທຳມະຊາດ.
15) ປັບປຸງຫຼັກສູດການສຶກສາຂັ້ນພື້ນຖານ, ຫຼັກສູດວິຊາຊີບຂັ້ນພື້ນຖານ ແລະ ພັດທະນາຫຼັກສູດຊັ້ນມັດທະຍົມຕອນຕົ້ນສຳລັບການສຶກສານອກໂຮງຮຽນ.

### 3. ແຜນງານປັບປຸງວຽກງານບໍລິຫານ ແລະ ຄຸ້ມຄອງການສຶກສາ.

1) ທົບທວນຄືນລະບຽບ ແລະ ຫຼັກການທີ່ກ່ຽວຂ້ອງກັບຄວາມຮັບຜິດຊອບຂອງອົງການຈັດຕັ້ງຂັ້ນສູນກາງ, ຂັ້ນແຂວງ, ແລະ ຂັ້ນເມືອງ. ທົບທວນຄືນບັນດາໜ້າທີ່ ແລະ ຄວາມຮັບຜິດຊອບຂອງຄະນະກຳມະການພັດທະນາການສຶກສາຂັ້ນບ້ານ, ຂັ້ນເມືອງ ແລະ ຂັ້ນແຂວງ.

2) ທົບທວນຄືນນະໂຍບາຍ ແລະ ລະບຽບກ່ຽວກັບການຄັດເລືອກນັກຮຽນຄູ, ການໃຫ້ເບ້ຍລ້ຽງນັກຮຽນຄູ ແລະ ການຈັດສັນຄູໃຫ້ແຕ່ລະເມືອງ ລວມທັງຢູ່ເຂດຊົນນະບົດ ແລະ ເຂດຫ່າງໄກສອກຫຼີກ.
3) ພັດທະນາ ແລະ ສ້າງມາດຕະຖານຄູແຫ່ງຊາດ, ເພື່ອເຮັດໃຫ້ຂະບວນການບັນຈຸ ແລະ ການນໍາໃຊ້ຄູປະຕິບັດຕາມການແບ່ງຂັ້ນຄຸ້ມຄອງການສຶກສາ, ເພື່ອຮັບປະກັນການບັນຈຸຄູທີ່ມີຄຸນນະພາບ ແລະ ການຮັກສາຄູໃຫ້ຢູ່ໃນໜ້າທີ່ສິດສອນເປັນເວລາດົນນານ.
4) ສ້າງຄວາມເຂັ້ມແຂງໃຫ້ແກ່ຂອບນິຕິກໍາ ແລະ ນະໂຍບາຍຂອງວຽກງານອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ ເພື່ອເຮັດໃຫ້ທຶນທີ່ນໍາໃຊ້ເຂົ້າໃນວຽກງານອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ ມີລັກສະນະໃຊ້ຈ່າຍໄປຕາມຄວາມຕ້ອງການ ແລະ ມີຄວາມຍືດຢຸ່ນໃນການບັນຈຸຄູ ເພື່ອເຮັດໃຫ້ສະຖາບັນອາຊີວະສຶກສາ ສາມາດບໍລິຫານຕົນເອງດ້ວຍວິທີການທີ່ມີປະສິດທິພາບ ແລະ ປະສິດທິຜົນ ເພື່ອສາມາດຕອບສະໜອງໄດ້ຕາມການປ່ຽນແປງທາງດ້ານຄວາມຕ້ອງການທາງດ້ານສີມືແຮງງານ.
5) ສ້າງລະບົບຂໍ້ມູນຂ່າວສານ ເພື່ອສະໜອງຂໍ້ມູນໃຫ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ກະຊວງສຶກສາທິການ ແລະ ກິລາກ່ຽວກັບຕົວຊີ້ບອກທາງດ້ານຕະຫຼາດແຮງງານເຊັ່ນ: ຄວາມຂາດແຄນສີມືແຮງງານ, ລະດັບເງິນເດືອນຂອງພະນັກງານ ຫຼື ກໍາມະກອນທີ່ຮຽນຈົບສະຖາບັນອາຊີວະສຶກສາ ແລະ ປັບປັບການສຶກສາຊັ້ນສູງໂດຍເນັ້ນໃສ່ການສະໜອງນັກວິຊາການທີ່ມີຄວາມຮູ້ຄວາມສາມາດ ແລະ ຕອບສະໜອງໄດ້ຕາມຄວາມຕ້ອງການໃນການພັດທະນາປະເທດຊາດ.
6) ປັບປຸງແຜນຍຸດທະສາດລວມ ແລະ ແຜນແມ່ບົດສໍາລັບການສຶກສາຊັ້ນສູງ.
7) ສ້າງຄວາມອາດສາມາດໃຫ້ກົມການສຶກສາຊັ້ນສູງ ໃນການຄຸ້ມຄອງສະຖາບັນການສຶກສາພາກເອກະຊົນ ແລະ ກໍານົດໂຄງຮ່າງບໍລິຫານ ແລະ ຄຸ້ມຄອງມະຫາວິທະຍາໄລຂອງລັດໃຫ້ຈະແຈ້ງ.
8) ສະໜອງຂໍ້ມູນກ່ຽວກັບການແນະແນວວິຊາຊີບ, ຂໍ້ມູນທີ່ກ່ຽວຂ້ອງກັບທາງເລືອກສໍາລັບການເຂົ້າຮຽນໃນສະຖາບັນການສຶກສາຊັ້ນສູງ ແລະ ປະເດັນທີ່ກ່ຽວຂ້ອງກັບການຈ້າງງານ ໃຫ້ແກ່ນັກຮຽນຊັ້ນມັດທະຍົມຕອນຕົ້ນ ແລະ ຕອນປາຍຢ່າງທົ່ວເຖິງ.
9) ປັບປຸງຂະບວນການ ແລະ ຂັ້ນຕອນໃນການຮັບນັກສຶກສາເຂົ້າຮຽນ ເພື່ອເພີ່ມປະສິດທິພາບ ແລະ ຄວາມສະເໝີພາບ.
10) ສ້າງຄວາມເຂັ້ມແຂງໃຫ້ແກ່ການບໍລິຫານການສຶກສາ ໂດຍສ້າງຕັ້ງສູນຝຶກອົບຮົມການບໍລິຫານການສຶກສາ, ສ້າງຄູຝຶກ, ສ້າງຫຼັກສູດຝຶກອົບຮົມ ພ້ອມທັງຈັດຕັ້ງການຝຶກອົບຮົມໃຫ້ຜູ້ບໍລິຫານການສຶກສາໃນທຸກລະດັບຢ່າງທົ່ວເຖິງ.
11) ຕິດຕາມ ແລະ ກວດກາການປະຕິບັດກົດໝາຍການສຶກສາສະບັບປັບປຸງໃໝ່.

12) ໃຫ້ຊຸມຊົນເຂົ້າຮ່ວມໃນການຈັດການໂຮງຮຽນ ໂດຍຜ່ານຄະນະກຳການພັດທະນາຂັ້ນບ້ານ ໃນການຈັດຕັ້ງປະຕິບັດແຜນປັບປຸງໂຮງຮຽນ ໂດຍນຳໃຊ້ເງິນບໍລິຫານໂຮງຮຽນ.
13) ສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານຕິດຕາມການປະຕິບັດງານຂອງຂະແໜງການ ໂດຍຜ່ານຂອບປະເມີນການປະຕິບັດງານ ຂອງຂອບພັດທະນາຂະແໜງການສຶກສາ ເພື່ອເຮັດໃຫ້ການກະກຽມບົດລາຍງານປະຈຳປີຂອງຂະແໜງການເປັນໄປຕາມຂະບວນການ ໂດຍພາຍໃຕ້ການປະສານງານກັບກົມກວດກາ.
14) ປັບປຸງຄືນນະໂຍບາຍ, ຍຸດທະສາດ ແລະ ພັດທະນານິຕິກຳຕ່າງໆຂອງວຽກງານການສຶກສານອກໂຮງຮຽນ.
15) ຈັດຕັ້ງປະຕິບັດຖະແຫຼງການວຽງຈັນ ໂດຍນຳໃຊ້ລະບົບຂອງລັດຖະບານ ພ້ອມທັງນຳໃຊ້ໂຄງການແບບກອງທຶນລວມສຳລັບທົ່ວຂະແໜງການ.
16) ເພີ່ມການລົງທຶນຂອງລັດຖະບານ ເຂົ້າໃນຂະແໜງການສຶກສາ ໃຫ້ໄປຕາມແນວທາງເປົ້າໝາຍຂອງຍຸດທະສາດການປະຕິຮູບລະບົບການສຶກສາແຫ່ງຊາດ ແລະ ຂອບພັດທະນາຂະແໜງການສຶກສາ ແລະ ສອດຄ່ອງກັບກົດໝາຍການສຶກສາ (18%).
17) ສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານແຜນການ ແລະ ການເງິນ ພ້ອມທັງປັບປຸງການເຊື່ອມໂຍງລະຫວ່າງວຽກງານແຜນການ ແລະ ແຜນງົບປະມານ ເພື່ອຮັບປະກັນປະສິດທິພາບ ແລະ ປະສິດທິຜົນໃນການນຳໃຊ້ງົບປະມານຂອງລັດຖະບານ ແລະ ງົບປະມານການຊ່ວຍເຫຼືອຂອງຕ່າງປະເທດ (ODA) ເພື່ອເຮັດໃຫ້ການນຳໃຊ້ເງິນຊ່ວຍເຫຼືອສອດຄ່ອງກັບບຸລິມະສິດ ຂອງຂອບພັດທະນາຂະແໜງການສຶກສາ ແລະ ຍຸດທະສາດການປະຕິຮູບລະບົບການສຶກສາແຫ່ງຊາດ.
18) ສະໜອງການຈັດສັນງົບປະມານບໍລິຫານໂຮງຮຽນ ເພື່ອຫຼຸດຜ່ອນພາລະຄ່າໃຊ້ຈ່າຍໃນໂຮງຮຽນ ແລະ ສະໜອງທຶນເພື່ອປັບປຸງຄຸນນະພາບການຮຽນໃຫ້ດີຂຶ້ນ.
19) ສະໜອງສ່ວນແບ່ງງົບປະມານໃຫ້ຖືກຕາມທີ່ກຳນົດໄວ້ໃນຂອບພັດທະນາຂະແໜງການສຶກສາ ເພື່ອຮັບປະກັນຄວາມດຸ່ນດ່ຽງໃນການພັດທະນາ ລະຫວ່າງການສຶກສາຂັ້ນພື້ນຖານ ແລະ ການສຶກສາຫຼັງຂັ້ນພື້ນຖານ.
20) ພັດທະນາຂອບລາຍຈ່າຍໄລຍະກາງໃຫ້ຂະແໜງການລວມທັງຂັ້ນແຂວງ.
21) ເຊື່ອມໂຍງບັນດາຈຸດປະສົງ, ຕົວຊີ້ວັດ, ໂຄງການ ແລະ ງົບປະມານ ກັບບັນດາຍຸດທະສາດຂອງຂະແໜງການສຶກສາ.

## 5. ຄາດໝາຍລວມ:

## 5.1. ການສຶກສາຂັ້ນພື້ນຖານ

### 5.1.1 ການສຶກສາກ່ອນໄວຮຽນ

1) ໃນປີ 2015 ໃຫ້ມີເດັກນ້ອຍ 39% ໄດ້ເຂົ້າໂຮງຮຽນລ້ຽງເດັກ, ອະນຸບານ, ກຸ່ມຫຼິ້ນເພື່ອຮຽນ ແລະ ຫ້ອງກຽມປະຖົມ.
2) ເດັກນ້ອຍອາຍຸ 5 ປີ ເຂົ້າຮຽນຫ້ອງກຽມປະຖົມ ໃຫ້ໄດ້ 55% ໃນປີ 2015.
3) ບັນລຸອັດຕາການເຂົ້າຮຽນ 17% ສຳລັບເດັກນ້ອຍອາຍຸ 3 ແລະ 4 ປີ ໃນປີ 2015.
4) ບັນລຸອັດຕາສ່ວນການເຂົ້າຮຽນ 30 % ໃນອະນຸບານຊຸມຊົນໃນປີ 2015.
5) ບັນລຸອັດຕາສ່ວນການເຂົ້າຮຽນ 30 % ໃນອະນຸບານເອກະຊົນໃນປີ 2015.

### 5.1.2 ການສຶກສາຂັ້ນປະຖົມ

1) ອັດຕາເຂົ້າຮຽນສຸດທິໃຫ້ໄດ້ 98% ຮອດປີ 2015.
2) ອັດຕາເຂົ້າຮຽນໃໝ່ສຸດທິຊັ້ນ ປ. 1 ໃຫ້ໄດ້ 98% ຮອດປີ 2015.
3) ອັດຕາລອດເຫຼືອຊັ້ນປະຖົມໃຫ້ໄດ້ 95% ຮອດປີ 2015.
4) ຂະຫຍາຍໂຄງການອາຫານໃນໂຮງຮຽນໄປ 39 ເມືອງ ໂດຍໃຫ້ມີການຖ່າຍໂອນຄວາມຮັບຜິດຊອບ ໃນການບໍລິຫານ ແລະ ການຈັດຕັ້ງປະຕິບັດ ຈາກຜູ້ໃຫ້ທຶນໄປໃຫ້ກະຊວງສຶກສາທິການ ແລະ ກິລາ ເລີ່ມຈາກ 2011.
5) ຮັບປະກັນການເລື່ອນຊັ້ນສຳລັບຊັ້ນປະຖົມໃຫ້ໄດ້ 98% ຮອດປີ 2015.
6) ຮອດປີ 2015 ໃຫ້ມີຈຳນວນ 20% ຂອງນັກຮຽນໃນຊັ້ນ ປ 4 ແລະ ປ 5 ຈະໄດ້ຮັບທຶນອຸດໜູນການສຶກສາ ສຳລັບຜູ້ທີ່ທຸກຍາກ ແລະ ຮຽນເກັ່ງໂດຍຈະເລີ່ມຈາກ 10% ແຕ່ປີ 2010 ເປັນຕົ້ນໄປ.
7) ນັກຮຽນທຸກຄົນໃຫ້ໄດ້ຮັບປຶ້ມແບບຮຽນຄົບຊຸດ (1 ຫົວ ຕໍ່ນັກຮຽນ 1 ຄົນ ຕໍ່ 1 ວິຊາ)ໃນປີ 2015.
8) 50% ຂອງໂຮງຮຽນປະຖົມໃຫ້ໄດ້ມີນ້ຳໃຊ້ ແລະ ວິດຖ່າຍ

### 5.1.3 ການສຶກສາຂັ້ນມັດທະຍົມຕອນຕົ້ນ

1) ເພີ່ມອັດຕາການເຂົ້າຮຽນລວມໃນຊັ້ນມັດທະຍົມຕອນຕົ້ນ ໃຫ້ໄດ້ 75% ຮອດປີ 2015.
2) ຮັບປະກັນການເລື່ອນຊັ້ນ ໃຫ້ໄດ້ 98% ຮອດປີ 2015.
3) ພັດທະນາຫຼັກສູດ ພ້ອມທັງສະໜອງຄູ່ມືຄູ ແລະ ປຶ້ມແບບຮຽນໃຫ້ໂຮງຮຽນມັດທະຍົມຕອນຕົ້ນທົ່ວປະເທດ.
4) 20% ຂອງນັກຮຽນມັດທະຍົມຕອນຕົ້ນ ແລະ ຕອນປາຍທັງໝົດຈະໄດ້ຮັບທຶນອຸດໜູນການສຶກສາ ສຳລັບ ນັກຮຽນທຸກຍາກອີງຕາມເງື່ອນໄຂທີ່ວາງອອກເລີ່ມຈາກ 10% ນັບແຕ່ປີ 2011.
5) ຂະຫຍາຍໂຮງຮຽນມັດທະຍົມຕົ້ນໄປທຸກໆກຸ່ມບ້ານພັດທະນາ ພ້ອມທັງຮັບປະກັນໃຫ້ມີອັດຕາສ່ວນ ໂຮງຮຽນມັດທະຍົມຕອນຕົ້ນ 1 ແຫ່ງ ຕໍ່ໂຮງຮຽນປະຖົມສົມບູນ 4 ແຫ່ງ.
6) ນັກຮຽນທຸກຄົນໃຫ້ໄດ້ຮັບປຶ້ມແບບຮຽນຄົບຊຸດ (1 ຫົວ ຕໍ່ນັກຮຽນ 1 ຄົນ ຕໍ່ 1 ວິຊາ) ໃນປີ 2015.

### 5.1.4. ການສຶກສາຮຽນຮ່ວມ ແລະ ການສຶກສານອກໂຮງຮຽນ

1) ປັບປຸງການອອກແບບຫຼັກສູດຝຶກອົບຮົມວິຊາຊີບ ແລະ ສີມືແຮງງານສຳລັບທ້ອງຖິ່ນສຳລັບການສຶກສານອກໂຮງຮຽນ.
2) ລຶບລ້າງຄວາມບໍ່ຮູ້ໜັງສືສຳລັບປະຊາກອນໃນກຸ່ມເປົ້າໝາຍດັ່ງນີ້:
    - ກຸ່ມອາຍຸ 15-24 ປີ ຈາກ 91.8% ໃນປີ 2010 ເປັນ 99% ໃນປີ 2015.
    - ກຸ່ມອາຍຸ 15-40 ປີ ຈາກ 87% ໃນປີ 2010 ເປັນ 93% ໃນປີ 2015.
    - ກຸ່ມອາຍຸ 15 ປີ ຂຶ້ນໄປ ຈາກ 81.73% ໃນປີ 2010 ເປັນ 87% ໃນປີ 2015.
3) ສືບຕໍ່ໃຫ້ບັນດາເມືອງເປົ້າໝາຍປະກາດຈົບປະຖົມບຳລຸງ ແນໃສ່ຮອດປີ 2015 ໃຫ້ສາມາດປະກາດຈົບປະຖົມໃນທົ່ວປະເທດ.
4) ເພີ່ມການບຳລຸງຍົກລະດັບຊັ້ນມັດທະຍົມຕົ້ນຈາກ 4,914 ຄົນ ໃນປີ 2010 ໃຫ້ໄດ້ 19,500 ຄົນ ແລະ ມັດທະຍົມປາຍ ຈາກ 9,489 ຄົນ ໃນປີ 2010 ໃຫ້ໄດ້ 27,000 ຄົນ ໃນປີ 2015.
5) ປັບປຸງເນື້ອໃນຫຼັກສູດສ້າງຄູ ແລະ ຫຼັກສູດການຝຶກອົບຮົມ ເພື່ອຮອງຮັບນະໂຍບາຍການສຶກສາຮຽນຮ່ວມ ໂດຍອີງໃສ່ບັນຫາຄວາມສະເໝີພາບຍິງ-ຊາຍ, ຄວາມຫຼາກຫຼາຍທາງດ້ານຊົນເຜົ່າ, ເດັກທີ່ມີຄວາມຕ້ອງການພິເສດ ແລະ ເດັກພິການ ຊຶ່ງລວມທັງບັນຫາການສິດສອນພາສາລາວໃຫ້ເດັກທີ່ມາຈາກເຜົ່າທີ່ບໍ່ເວົ້າພາສາລາວ.
6) ກະກຽມ ແລະ ຮັບຮອງຄູ່ມືໃນການອອກແບບໂຮງຮຽນ ແລະ ສະພາບແວດລ້ອມທີ່ເອື້ອອຳນວຍ, ປະກອບອຸປະກອນໃຫ້ໂຮງຮຽນເດັກພິການ ແລະ ເດັກທີ່ມີຄວາມຕ້ອງການພິເສດ ແລະ ມາດຖານໃນການເປີດໂຮງຮຽນສຳລັບເດັກພິການເພື່ອການຮຽນຮ່ວມ.
7) ສ້າງເງື່ອນໄຂໃຫ້ແກ່ການປຸກສ້າງໂຮງຮຽນສະເພາະສຳລັບເດັກພິການໜັກ ພ້ອມທັງເພີ່ມຈຳນວນໂຮງຮຽນສຳລັບການຮຽນຮ່ວມ ໂດຍອີງໃສ່ຈຳນວນຂອງເດັກພິການຢູ່ເມືອງ ແລະ ແຂວງ.
8) ຮອດປີ 2015 ໃຫ້ມີເດັກພິການ 30% ໃຫ້ໄດ້ເຂົ້າຮຽນໃນໂຮງຮຽນສຳລັບການຮຽນຮ່ວມ (ປ.1-ມ.4).
9) ປັບປຸງ ແລະ ສົ່ງເສີມການຮຽນຮ່ວມລະຫວ່າງເດັກປົກະຕິ ແລະ ເດັກພິການ.
10) ສົ່ງເສີມການຮຽນວິຊາຊີບໃຫ້ຄົນພິການ.

## 5.2. ການສຶກສາຫຼັງຊັ້ນພື້ນຖານ

### 5.2.1. ການສຶກສາຊັ້ນມັດທະຍົມຕອນປາຍ

1) ເພີ່ມອັດຕາການເຂົ້າຮຽນລວມຊັ້ນມັດທະຍົມປາຍໃຫ້ໄດ້ 43% ພາຍໃນປີ 2015.
2) ຊຸກຍູ້ໃຫ້ເອກະຊົນລົງທຶນໃສ່ການສຶກສາຊັ້ນມັດທະຍົມຕອນປາຍ ໂດຍໃຫ້ມີລະບຽບທີ່ຮັດກຸມພ້ອມທັງຮັບປະກັນຄຸນນະພາບ.
3) ຮອດປີ 2015 ຈຳນວນນັກຮຽນທີ່ເຂົ້າຮຽນມັດທະຍົມຕອນປາຍທັງໝົດ ໃຫ້ມີ 25% ເຂົ້າຮຽນໃນສາຍສາມັນວິຊາຊີບ ໂດຍໃຫ້ມີແມ່ຍິງ 50% ແລະ 20% ມາຈາກຄອບຄົວທຸກຍາກທີ່ສຸດ.
4) ພັດທະນາຫຼັກສູດພ້ອມທັງສະໜອງຄູ່ມືຄູ ແລະ ປຶ້ມແບບຮຽນໃຫ້ໂຮງຮຽນມັດທະຍົມຕອນປາຍທົ່ວປະເທດ.

5) ຄາດໝາຍຮອດປີ 2015 ແຕ່ລະແຂວງໃຫ້ມີໂຮງຮຽນມັດທະຍົມສົມບູນຕົວແບບທີ່ມີຄຸນະພາບ.

### 5.2.2. ອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ

1) 40% ຂອງນັກຮຽນອາຊີວະສຶກສາໃຫ້ໄດ້ຮັບເບ້ຍລ້ຽງ ເລີ່ມຈາກ ປີ 2010.
2) ສ້າງຫຼັກສູດໃໝ່ເພື່ອໃຫ້ຕອບສະໜອງກັບຄວາມຕ້ອງການຂອງຕະຫຼາດແຮງງານ.
3) ເນັ້ນໃສ່ການສຶກສາລະດັບວິຊາຊີບຊຳນານງານ (9+2), (9+3) ແລະ ລະດັບຊ່າງເຕັກນິກ (12+2), (9+3)+(1 ຫາ 2 ປີ) ໃນ 4 ສາຂາວິຊາບຸລິມະສິດ[5] ທີ່ສັງຄົມມີຄວາມຕ້ອງການ.
4) ເນັ້ນໃສ່ການພັດທະນາສະຖາບັນອາຊີວະສຶກສາຂອງລັດ 7 ແຫ່ງ[6].
5) ໃນປີ 2015 ໃຫ້ມີນັກຮຽນເຕັກນິກວິຊາຊີບທົ່ວໄປ ແລະ ສາມັນວິຊາຊີບທັງໝົດຢ່າງຕ່ຳ 50.000 ຄົນ ໃນນັ້ນ 50% ເປັນເພດຍິງ ແລະ 20% ແມ່ນຜູ້ທີ່ມາຈາກຄອບຄົວທຸກຍາກ.
6) ແຕ່ລະປີ ສາມາດຜະລິດຄູສອນສາຍອາຊີວະສຶກສາໃຫ້ໄດ້ 300 ຄົນ ເລີ່ມຈາກປີ 2012.
7) ສ້າງຕັ້ງສູນອົບຮົມວິຊາຊີບໃນບັນດາຕົວເມືອງທີ່ມີເສດຖະກິດຂະຫຍາຍຕົວໃຫ້ໄດ້ 3-4 ແຫ່ງ.
8) ໃຫ້ທຶນການສຶກສາແກ່ນັກຮຽນ ໂດຍສະເພາະແມ່ນນັກຮຽນຍິງ ແລະ ຊົນເຜົ່າຈາກຄອບຄົວທຸກຍາກ ພ້ອມທັງສະໜອງທີ່ພັກອາໄສໃຫ້ ເພື່ອເພີ່ມການເຂົ້າຮຽນໃນຫຼັກສູດລະດັບຊັ້ນຕົ້ນ ແລະ ຊັ້ນກາງຂອງໂຮງຮຽນອາຊີວະສຶກສາ.

### 5.2.3. ການສຶກສາຊັ້ນສູງ

1) ເພີ່ມການເຂົ້າຮຽນລວມໃນສະຖາການສຶກສາບັນຊັ້ນສູງ ແລະ ການສຶກສາສ້າງຄູ ໂດຍ 50% ແມ່ນເພດຍິງ.
2) ປັບປຸງໂຄງລ່າງຂອງມະຫາວິທະຍາໄລຈຳປາສັກ, ມະຫາວິທະຍາໄລສຸພານຸວົງ ແລະ ມະຫາວິທະຍາໄລສະຫວັນນະເຂດ.
3) ຫຼຸດຜ່ອນຈຳນວນນັກສຶກສາໃນແຜນເທື່ອລະກ້າວ ຈາກ 50% ໃນປີ 2009 ເປັນ 20% ໂດຍໃຫ້ກວມເອົານັກສຶກສາ ທີ່ມາຈາກຄອບຄົວທຸກຍາກ ແລະ ຊົນເຜົ່າ.
4) ປັບປຸງການເຂົ້າຮຽນຕໍ່ລະດັບມະຫາວິທະຍາໄລ ໂດຍການສະໜອງທຶນການສຶກສາ (20% ຂອງຈຳນວນນັກຮຽນທັງໝົດ).
5) 80% ຂອງນັກສຶກສາຊັ້ນສູງຈະຕ້ອງໄດ້ຈ່າຍຄ່າຮຽນ.
6) ປັບປຸງລະບົບການບໍລິຫານມະຫາວິທະຍາໄລໃຫ້ມີຄວາມເປັນເອກະລາດ ໂດຍການສ້າງຕັ້ງສະພາມະຫາວິທະຍາໄລ ຊຶ່ງໃຫ້ມີສະມາຊິກຢ່າງໜ້ອຍ 30% ມາຈາກຊຸມຊົນ ແລະ ໜ່ວຍງານທຸລະກິດ ພາຍໃນປີ 2013 ແລະ ໃຫ້ມີສະມາຊິກທີ່ເປັນເພດຍິງ 40% ພາຍໃນປີ 2014.

---

[5] ວິຊາກໍ່ສ້າງ, ກົນຈັກ, ຊ່າງໄມ້ ແລະ ທຸລະກິດເບື້ອງຕົ້ນ

[6] 1. ໂຮງຮຽນເຕັກນິກວິຊາຊີບຫຼວງພະບາງ, 2. ວິທະຍາໄລເຕັກນິກຈຳປາສັກ, 3. ວິທະຍາໄລເຕັກນິກແຂວງວຽງຈັນ, 4. ໂຮງຮຽນເຕັກນິກ-ວິຊາຊີບສະຫວັນນະເຂດ, 5. ໂຮງຮຽນເຕັກນິກລາວ-ເຢຍລະມັນ, 6. ໂຮງຮຽນເຕັກນິກກະສິກຳດົງຄຳຊ້າງ ແລະ 7. ວິທະຍາໄລເຕັກນິກປາກປາສັກ.

7) ສ້າງຕັ້ງລະບົບບໍລິຫານຂໍ້ມູນຂ່າວສານທີ່ສາມາດເຊື່ອມຕໍ່ກັນໄດ້ ລະຫວ່າງກົມການສຶກສາຊັ້ນສູງ ແລະ 3 ມະຫາວິທະຍາໄລ ພາຍໃນປີ 2012.
8) ພັດທະນາສູນການຮຽນການສອນທີ່ນຳໃຊ້ ICT ເຂົ້າຊ່ວຍຢູ່ໃນມະຫາວິທະຍາໄລຂອງລັດທັງ 4 ແຫ່ງ ພ້ອມທັງສູ້ຊົນໃຫ້ແຕ່ລະມະຫາວິທະຍາໄລ ມີຫ້ອງສະໝຸດທີ່ທັນສະໄໝນຳໃຊ້ສື່ເອເລັກໂຕຣນິກເຂົ້າໃນການບໍລິການ (E-Library).
9) ປັງປຸງຫຼັກສູດປະລິນຍາຕີ 20 ຫຼັກສູດ ໃຫ້ສອດຄ່ອງກັບລະບົບມາດຖານຫຼັກສູດແຫ່ງຊາດ.
10) ລັດຖະບານໃຫ້ການສະໜັບສະໜູນການລົງທຶນຂອງເອກະຊົນທັງພາຍໃນ ແລະ ຕ່າງປະເທດເຂົ້າໃນການພັດທະນາອາຊີວະສຶກສາ ແລະ ການສຶກສາຊັ້ນສູງຂອງພາກເອກະຊົນຢ່າງເຕັມສ່ວນ.
11) ປະເມີນ ແລະ ຮັບຮອງສະຖາບັນການສຶກສາຊັ້ນສູງພາກເອກະຊົນໃຫ້ໄດ້ 80 ແຫ່ງ ພາຍໃນປີ 2015.
12) ເນັ້ນໃສ່ການພັດທະນາຫຼັກສູດວິທະຍາສາດ, ເທັກໂນໂລຊີ, ວິສາວະກຳ ແລະ ຄະນິດສາດ ເພື່ອແນ່ໃສ່ຕອບສະໜອງເປົ້າໝາຍໃນການພັດທະນາປະເທດຊາດ.
13) ກະກຽມສ້າງວິທະຍາໄລຊຸມຊົນທີ່ແຂວງອຸດົມໄຊ ແລະ ແຂວງຊຽງຂວາງ ແລະ ສ້າງມະຫາວິທະຍາໄລເຕັກໂນໂລຊີ.
14) ສ້າງຄວາມເຂັ້ມແຂງໃຫ້ມະຫາວິທະຍາໄລແຫ່ງຊາດ ເປັນມະຫາວິທະຍາໄລສັງລວມ ແລະ ຕົວແບບທາງດ້ານການຄົ້ນຄວ້າວິທະຍາສາດ.
15) ຈຳນວນບົດວິໄຈວິທະຍາສາດຕ້ອງໃຫ້ເພີ່ມຂຶ້ນເຖິງ 10 ຫົວຂໍ້ ຮອດປີ 2015.
16) ສ້າງຄວາມເຂັ້ມແຂງໃຫ້ມະຫາວິທະຍາໄລຈຳປາສັກ ເປັນຕົວແບບທາງດ້ານກະສິກຳ.
17) ສ້າງຄວາມເຂັ້ມແຂງໃຫ້ມະຫາວິທະຍາໄລສຸພານຸວົງ ເປັນຕົວແບບທາງດ້ານວິສາວະກຳໂຍທາ ແລະ ການທ່ອງທ່ຽວ.
18) ສ້າງຄວາມເຂັ້ມແຂງໃຫ້ມະຫາວິທະຍາໄລສະຫວັນນະເຂດ ເປັນຕົວແບບທາງດ້ານເສດຖະກິດ.
19) ສົ່ງເສີມການຮ່ວມມືທາງດ້ານວິຊາການ ແລະ ແລກປ່ຽນບົດຮຽນກັບສະຖາບັນການສຶກສາຊັ້ນສູງທີ່ກ່ຽວຂ້ອງທັງພາຍໃນ ແລະ ຕ່າງປະເທດໃນການຈັດຕັ້ງການຮຽນ-ການສອນ ໂດຍຜ່ານການສື່ສານເອເລັກໂຕຣນິກ.
20) ສົ່ງເສີມພາລະບົດບາດຂອງໜ່ວຍງານພັດທະນາວິຊາຊີບ ແລະ ສ້າງເຄືອຄ່າຍລະຫວ່າງກົມການສຶກສາຊັ້ນສູງ ແລະ ມະຫາວິທະຍາໄລຂອງລັດ ເພື່ອຮັບປະກັນເຮັດໃຫ້ຄຸນະພາບຂອງການຮຽນການສອນສູງຂຶ້ນ.

### 5.2.4. ການສຶກສາຄູ

1) ນັກຮຽນຄູໃນແຜນທຸກຄົນໄດ້ຮັບທຶນການສຶກສາ.
2) ສືບຕໍ່ຈັດຕັ້ງປະຕິບັດແຜນຍຸດທະສາດຄູໃຫ້ເປັນນຈິງ ລວມທັງປັບປຸງສິ່ງອຳນວຍຄວາມສະດວກ, ປັບປຸງເງື່ອນໄຂໃນການຮັບນັກຮຽນຄູ, ປັບປຸງວິທີການສິດສອນ ແລະ ເພີ່ມຄວາມເຂັ້ມແຂງໃຫ້ແກ່ວຽກງານການບໍລິຫານ ແລະ ຄຸ້ມຄອງ.

3) ອອກດຳລັດຕ່າງໆ ຫຼັງປີ 2010 ເພື່ອສະໜັບສະໜູນການສ້າງຄວາມເຂັ້ມແຂງໃນການສ້າງຄູ ແລະ ເຮັດໃຫ້ສະຖາບັນສ້າງຄູສາມາດນຳໃຊ້ຫຼັກສູດ 9+3, 12+2 ແລະ 12+4 ນັບແຕ່ສົກປີ 2011-2012 ເປັນຕົ້ນໄປ ໃນນັ້ນການເຂົ້າຮຽນລວມໃຫ້ໄດ້ປະມານ 15,000 ຄົນ.
4) ສຳເລັດການສ້າງຫຼັກສູດໃໝ່ສຳລັບການຝຶກອົບຮົມຄູ ພາຍໃນປີ 2010-12 ໂດຍອີງໃສ່ໂຄງສ້າງໃໝ່ຂອງສາມັນສຶກສາ 5+4+3.
5) ປັບປຸງກົນໄກການຮັບປະກັນຄຸນະພາບການສ້າງ ແລະ ຝຶກອົບຮົມຄູ.
6) 20% ຂອງຄູທັງໝົດ ໄດ້ຮັບການບຳລຸງກັບທີ່ແຕ່ລະປີ.
7) ຂະຫຍາຍສູນຝຶກອົບຮົມຄູໄປບັນດາແຂວງທີ່ບໍ່ມີສະຖາບັນສ້າງຄູ ໃຫ້ໄດ້ 9 ແຫ່ງ.
8) ອອກດຳລັດວ່າດ້ວຍລະບົບໂຄຕ້າຄູ ແລະ ການຄິດໄລ່ງົບປະມານ ໂດຍອີງໃສ່ອັດຕານັກຮຽນຕໍ່ຄູຄື:
   - ອັດຕາສ່ວນນັກຮຽນຕໍ່ຄູໃນຊັ້ນອານຸບານໃຫ້ຢູ່ໃນລະດັບ 20:1
   - ອັດຕາສ່ວນນັກຮຽນຕໍ່ຄູໃນຊັ້ນປະຖົມໃຫ້ຢູ່ໃນລະດັບ 31:1
   - ອັດຕາສ່ວນນັກຮຽນຕໍ່ຄູໃນຊັ້ນມັດທະຍົມຕົ້ນໃຫ້ຢູ່ໃນລະດັບ 25:1
   - ອັດຕາສ່ວນນັກຮຽນຕໍ່ຄູໃນຊັ້ນມັດທະຍົມປາຍໃຫ້ຢູ່ໃນລະດັບ 20:1
9) ຮອດປີ 2015 ມາດຕະຖານທາງດ້ານວິຊາຊີບຄູ ຈະໄດ້ຍົກລະດັບຂຶ້ນດັ່ງນີ້:
   - **ສຳລັບຄູອານຸບານ:**
     - ຄູອານຸບານ (ຊັ້ນກາງ) 20%.
     - ຄູອານຸບານ (ຊັ້ນສູງ) 70%.
     - ຄູອານຸບານ (ປະລິນຍາຕີ) 10%.
   - **ສຳລັບຄູປະຖົມ:**
     - ຄູປະຖົມ (ຊັ້ນກາງ) 20%.
     - ຄູປະຖົມ (ຊັ້ນສູງ) 70%.
     - ຄູປະຖົມ (ປະລິນຍາຕີ) 10%.
   - **ສຳລັບຄູມັດທະຍົມຕອນຕົ້ນ:**
     - ຄູມັດທະຍົມຕົ້ນ (ຊັ້ນສູງ) 30%.
     - ຄູມັດທະຍົມຕົ້ນ (ປະລິນຍາຕີ) 70%.
   - **ສຳລັບຄູມັດທະຍົມຕອນປາຍ:**
     - ຄູມັດທະຍົມປາຍ (ປະລິນຍາຕີ) 90%.
     - ຄູມັດທະຍົມປາຍ (ປະລິນຍາໂທ) 7%.
     - ຄູມັດທະຍົມປາຍ (ປະລິນຍາເອກ) 3%.
   - **ການສຶກສາຊັ້ນສູງ:**
     - ຄູສອນທຸກຄົນໃຫ້ໄດ້ຮັບໃບຢັ້ງຢືນດ້ານການສອນ ດ້ວຍຮູບແບບການຮຽນໃນຫ້ອງ ຫຼື ການຮຽນທາງໄກ.
     - ຄູສອນຢູ່ໃນມະຫາວິທະຍາໄລຂອງລັດຕ້ອງໃຫ້ໄດ້ອັດຕາສ່ວນ:

-1 : ປະລິນຍາເອກ

- 6 : ປະລິນຍາໂທ

- 3 : ປະລິນຍາຕຣີ

## 5.3. ການປັບປຸງການບໍລິຫານ ແລະ ຄຸ້ມຄອງການສຶກສາ

1) ປັບປຸງກົງຈັກການຈັດຕັ້ງ, ບໍລິຫານ ແລະ ຄຸ້ມຄອງການສຶກສາທຸກຂັ້ນ.
2) ທົບທວນນິຕິກຳ ແລະ ລະບຽບການຕ່າງໆ ໃຫ້ສອດຄ່ອງກັບການທົບທວນໜ້າວຽກຂອງບຸກຄະລາກອນ, ໜ້າທີ່ຮັບຜິດຊອບ ແລະ ພາລະກິດຂອງອົງການຈັດຕັ້ງຢູ່ຂັ້ນສູນກາງ, ຂັ້ນແຂວງ ແລະ ຂັ້ນເມືອງ, ລວມເຖິງໜ້າທີ່ຮັບຜິດຊອບຂອງຄະນະກຳມະການພັດທະນາການສຶກສາຂັ້ນບ້ານຕໍ່ກັບການສຶກສາຊັ້ນປະຖົມ ແລະ ຊັ້ນມັດທະຍົມ.
3) ກະຊວງສຶກສາທິການ ແລະ ກິລາຈະວາງບັນດາມາດຕາການ ເພື່ອຍົກລະດັບຄວາມສາມາດຂອງຜູ້ບໍລິຫານໂຮງຮຽນ ແລະ ຄູ ໃຫ້ສຳເລັດໃນປີ 2015 ໂດຍອີງໃສ່ຂອບພັດທະນາຂີດຄວາມສາມາດ (CDF).
4) ນຳໃຊ້ ICT ເຂົ້າໃນການປັບປຸງປະສິດທິພາບຂອງວຽກງານການບໍລິຫານຂະແໜງການ.
5) ສະໜອງການຊ່ວຍເຫຼືອທາງດ້ານວິຊາການເພີ່ມເຕີມ ໃນການບໍລິຫານ, ຄຸ້ມຄອງ ແລະ ປະຕິຮູບສະຖາບັນ, ການປະເມີນຜົນອົງກອນແບບຄົບຊຸດ ແລະ ການທົບທວນພາລະບົດບາດຂອງກະຊວງສຶກສາທິການ ແລະ ກິລາ, ພະແນກສຶກສາທິການ ແລະ ກິລາແຂວງ, ຫ້ອງການສຶກສາທິການ ແລະ ກິລາເມືອງ ແລະ ຄະນະກຳມະການພັດທະນາການສຶກສາຂັ້ນບ້ານ ແລະ ສ້າງຄູ່ມືສຳລັບການປະຕິບັດງານໂດຍອີງໃສ່ສິ່ງທີ່ໄດ້ທົບທວນມານັ້ນ ໃນທ້າຍປີ 2010.
6) ທົບທວນລະບົບບໍລິການ ແລະ ລະບົບການໃຊ້ຈ່າຍໃນແຕ່ລະລະດັບຂອງອົງກອນບໍລິຫານການສຶກສາ ໂດຍການນຳໃຊ້ເງິນບໍລິຫານໂຮງຮຽນ ຊຶ່ງຢູ່ພາຍໃຕ້ງົບປະມານຂອງກະຊວງສຶກສາ ແລະ ກິລາ.
7) ອອກດຳລັດກ່ຽວກັບການວາງແຜນຄວາມຕ້ອງການ ແລະ ການສະໜອງຄູ ພ້ອມທັງຄວາມຮັບຜິດຊອບຂອງຂັ້ນສູນກາງ, ແຂວງ, ເມືອງ ແລະ ສະຖາບັນສ້າງຄູ ໂດຍອີງໃສ່ອັດຕາສ່ວນນັກຮຽນຕໍ່ຄູທີ່ໄດ້ກຳນົດ.
8) ທົບທວນລະບົບການບໍລິຫານຂອງກົມສ້າງຄູ, ສະຖາບັນສ້າງຄູ ແລະ ສູນພັດທະນາຄູ ເພື່ອປັບປຸງປະສິດທິຜົນ, ປະສິດທິພາບຂອງການບໍລິຫານ ແລະ ຄຸ້ມຄອງ.
9) ສ້າງມາດຕະຖານອັດຕາສ່ວນນັກຮຽນຕໍ່ຄູ ໂດຍອີງໃສ່ມາດຕະຖານການບັນຈຸຄູໃນໂຮງຮຽນ ໂດຍເລີ່ມ ຈັດຕັ້ງປະຕິບັດ ໃນປີ 2010.
10) ທົບທວນລະບຽບ ແລະ ຄູ່ມືປະຕິບັດງານ ເພື່ອເຮັດໃຫ້ສະຖາບັນສ້າງຄູສາມາດສ້າງຄູເພື່ອຕອບສະໜອງໄດ້ກັບຄວາມຕ້ອງການ.
11) ອອກດຳລັດ, ລະບຽບການ ແລະ ທິດຊີ້ນຳໃນການຕິດຕາມກວດກາ ສຳລັບການລົບລ້າງການເກັບຄ່າທຳນຽມໃນການລົງທະບຽນໃນການສຶກສາເດັກກ່ອນໄວຮຽນ, ກຸ່ມການຫຼິ້ນເພື່ອຮຽນ, ການສຶກສາຊັ້ນປະຖົມ, ຊັ້ນມັດທະຍົມຕອນຕົ້ນ, ການສຶກສານອກລະບົບໂຮງຮຽນ ແລະ ການສຶກສາຄູ.

12) ກະຊວງສຶກສາທິການ ແລະ ກິລາ ມີທິດຊີ້ນຳການປະຕິບັດທົດລອງເປັນແຕ່ລະໄລຍະ ແລະ ຂະຫຍາຍການ ຈັດຕັ້ງປະຕິບັດໃຫ້ກວ້າງອອກ ໂດຍນຳໃຊ້ 56 ເມືອງ ທີ່ດ້ອຍໂອກາດທາງດ້ານການສຶກສາ ເປັນເມືອງທົດລອງໃນການລົບລ້າງຄ່າທຳນຽມ.
13) ອອກດຳລັດ, ລະບຽບການ ແລະ ທິດຊີ້ນຳໃນການຕິດຕາມກວດກາ ສຳລັບການນຳສະເໜີວິທີຄິດໄລ່ແບບມູນຄ່າຫົວໜ່ວຍ ໂດຍອີງໃສ່ເງິນບໍລິຫານໂຮງຮຽນທີ່ບໍ່ແມ່ນເງິນເດືອນ ສຳລັບໂຮງຮຽນປະຖົມ, ມັດທະຍົມ ເພື່ອທົດແທນການເກັບເງິນຄ່າທຳນຽມພ້ອມທັງການໃຫ້ຂໍ້ມູນຂ່າວສານ ແລະ ການໂຄສະນາປຸກລະດົມໃນທົ່ວປະເທດ.
14)ອອກດຳລັດກ່ຽວກັບການຫຼຸດຊັດສ່ວນນັກສຶກສາໃນແຜນໃຫ້ເປັນ 20% ແລະ ເພີ່ມຊັດສ່ວນນັກສຶກສາທີ່ຈະຈ່າຍຄ່າຮຽນໃຫ້ເປັນ 80%.

## 6. ແຜນຈັດຕັ້ງປະຕິບັດແຜນພັດທະນາຂະແໜງການສຶກສາ 2011-2015

ບັນດານະໂຍບາຍ ແລະ ຍຸດທະສາດທີ່ໄດ້ກຳນົດຢູ່ໃນຍຸດທະສາດການປະຕິຮູບລະບົບການສຶກສາແຫ່ງຊາດ ແລະ ຂອບພັດທະນາຂະແໜງການສຶກສາ ແມ່ນເປັນຫຼັກເກນທີ່ສຳຄັນ ເພື່ອເຮັດໃຫ້ການປະຕິບັດແຜນພັດທະນາຂະແໜງການສຶກສາ 5 ປີ (2011-2015) ປະກົດຜົນເປັນຈິງ. ແຜນຈັດຕັ້ງປະຕິບັດລວມທັງໄລຍະເວລາ, ງົບປະມານ ໄດ້ລະບຸໃນແຜນການປະຈຳປີທີ່ມີການຄິດໄລ່ມູນຄ່າ. ບັນດາໂຄງການປະຕິຮູບທີ່ເປັນຈຸດສຸມໃນແຕ່ລະປີມີດັ່ງນີ້: ປັບປຸງຫຼັກສູດສາຍສາມັນຈາກ 11 ປີ ເປັນ 12 ປີ ໃນສົກຮຽນ 2010-11; ສະໜອງເງິນບໍລິຫານໂຮງຮຽນ ແລະ ລົບລ້າງການເກັບຄ່າທຳນຽມຕ່າງໆສຳລັບການສຶກສາຂັ້ນພື້ນຖານ ເລີ່ມແຕ່ສົກຮຽນ 2011-12; ເພີ່ມຄວາມສະເໝີພາບໃນການເຂົ້າຮຽນໃນສາຍອາຊີວະສຶກສາ ແລະ ການສຶກສາຊັ້ນສູງເລີ່ມຈາກປີ 2012; ທຸກແຂວງໃຫ້ມີໂຮງຮຽນມັດທະຍົມສົມບູນຕົວແບບພາຍໃນປີ 2013; ສ້າງຫຼັກສູດພ້ອມດ້ວຍພິມປຶ້ມແບບຮຽນຊັ້ນມັດທະຍົມໃຫ້ສຳເລັດພາຍໃນປີ 2014 ແລະ ບັນລຸເປົ້າໝາຍການສຶກສາເພື່ອທຸກຄົນພາຍໃນປີ 2015.

ບົດສັງລວມຕໍ່ໄປນີ້ ໄດ້ກຳນົດບັນດາຈຸດປະສົງ ແລະ ນະໂຍບາຍຂອງແຕ່ລະຍຸດທະສາດ ພ້ອມທັງໄດ້ກຳນົດບັນດາກິດຈະກຳຂອງແຕ່ລະແຜນງານອີກດ້ວຍ. ລາຍລະອຽດຂອງບັນດາກິດຈະກຳແມ່ນຈະໄດ້ກຳນົດຢູ່ໃນແຜນການປະຈຳປີຂອງຂະແໜງການ. ຕາຕະລາງແຜນໂຍບາຍຂອງແຜນພັດທະນາການສຶກສາ 5 ປີ ແມ່ນໄດ້ມີໃນ ເອກະສານຊ້ອນທ້າຍ 1.

### 6.1. ແຜນງານຂະຫຍາຍໂອກາດການເຂົ້າຮຽນຢ່າງທົ່ວເຖິງ

*ຈຸດປະສົງ ເພື່ອກະຕຸ້ນຄວາມຕ້ອງການສຳລັບການສຶກສາ ໃນຂະນະດຽວກັນກໍ່ຕ້ອງຮັບປະກັນການສະໜອງການສຶກສາໃຫ້ໄດ້ຕາມຄວາມຕ້ອງການ ລວມທັງການສັບຊ້ອນບັນຈຸຄູໃຫ້ເໝາະສົມ ເພື່ອໃຫ້ບັນລຸຄວາມສະເໝີພາບ ໃນການຂະຫຍາຍໂອກາດການເຂົ້າຮຽນຂອງເດັກຍິງ, ຊົນເຜົ່າ, ເດັກພິການ ແລະ ເດັກທີ່ດ້ອຍໂອກາດອື່ນໆ.*

ນະໂຍບາຍທີ 1: ຫຼຸດຜ່ອນຄ່າໃຊ້ຈ່າຍຕ່າງໆທີ່ເປັນອຸປະສັກຕໍ່ການສຶກສາ
ກິດຈະກຳ:

1. ລຶບລ້າງຄ່າລົງທະບຽນເຂົ້າຮຽນ ແລະ ຄ່າທຳນຽມອື່ນໆສຳລັບຊັ້ນຮຽນຂອງເດັກກ່ອນໄວຮຽນ, ກຸ່ມຫຼິ້ນເພື່ອຮຽນ, ຊັ້ນປະຖົມສຶກສາ, ມັດທະຍົມຕອນຕົ້ນ, ການສຶກສານອກໂຮງຮຽນ ແລະ ການສຶກສາຄູ ໂດຍການນຳໃຊ້ເງິນບໍລິຫານໂຮງຮຽນ, ງົບປະມານບໍລິຫານທົ່ວໄປມາທົດແທນ.
2. ເລີ່ມນຳໃຊ້ທຶນບໍລິຫານໂຮງຮຽນເປັນເທື່ອລະກ້າວໃຫ້ແກ່ກຸ່ມຫຼິ້ນເພື່ອຮຽນ, ໂຮງຮຽນອະນຸບານ ແລະ ໂຮງຮຽນປະຖົມ.
3. ສະໜອງເງິນອຸດໜູນ ແລະ ທຶນການສຶກສາໃຫ້ນັກຮຽນທີ່ມາຈາກຄອບຄົວທີ່ທຸກຍາກ ໂດຍສະໜອງເງິນອຸດໜູນໃຫ້ ປ.1 - ປ.5 ແລະ ທຶນການສຶກສາໃຫ້ນັກຮຽນ ມ.1 - ມ.4.
4. ເພີ່ມການສະໜອງທຶນການສຶກສາສຳລັບນັກຮຽນຄູ ໂດຍອີງໃສ່ລະບຽບທີ່ໄດ້ກຳນົດສຳລັບຄູທີ່ໄປສິດສອນຢູ່ເຂດຫ່າງໄກສອກຫຼີກ.
5. ໃຫ້ທຶນການສຶກສາແກ່ນັກຮຽນ ເພື່ອສະໜັບສະໜູນນັກຮຽນທຸກຍາກໄດ້ເຂົ້າຮຽນໃນຫຼັກສູດລະດັບວິຊາຊີບຊຳນານງານ ແລະ ລະດັບຊ່າງເຕັກນິກໂຮງຮຽນອາຊີວະສຶກສາ.
6. ຄ່ອຍໆປັບປຸງລະບົບການໃຫ້ທຶນການສຶກສາແກ່ນັກຮຽນທຸກຍາກຢູ່ມະຫາວິທະຍາໄລ ໃຫ້ໄດ້ 20% ໂດຍໃຫ້ມີການທົບທວນຄືນຄ່າທຳນຽມຮຽນ ແລະ ການເກັບຄ່າບໍລິການອື່ນໆ ເພື່ອເປັນການປັບປຸງລະບົບການເງິນ ຢູ່ໃນສະຖາບັນການສຶກສາຊັ້ນສູງ.

ນະໂຍບາຍທີ 2: ຫຼຸດຜ່ອນການຄ້າງຫ້ອງ ແລະ ການປະລະການຮຽນ

ກິດຈະກຳ:

1. ເພີ່ມອັດຕາການເລື່ອນຂັ້ນ ຈາກ ປ.1 - ມ.4 ແລະ ເລື່ອນຊັ້ນ ຈາກ ປ.5 - ມ.1 ໂດຍອີງໃສ່ນະໂຍບາຍ ການເລື່ອນຊັ້ນແບບຕໍ່ເນື່ອງ ໂດຍໃຫ້ມີການບຳລຸງນັກຮຽນທີ່ຮຽນອ່ອນ.
2. ສະໜອງເງິນອຸດໜູນ ແລະ ທຶນການສຶກສາໃຫ້ແກ່ນັກຮຽນທີ່ມາຈາກຄອບຄົວທຸກຍາກທີ່ສຸດ ລວມທັງການສະໜອງອາຫານໃຫ້ໂຮງຮຽນ ພ້ອມກັນນັ້ນກໍ່ປັບປຸງການເຂົ້າຮຽນຂອງນັກຮຽນພິການ.
3. ສົ່ງເສີມໃຫ້ເດັກອາຍຸ 6 ປີ ໄດ້ເຂົ້າຮຽນ ປ.1 ແລະ ໃຫ້ໂອກາດເດັກອາຍຸ 5 ປີ ໄດ້ເຂົ້າຮຽນຢູ່ຫ້ອງກຽມ.
4. ປັບປຸງການໃຫ້ທຶນການສຶກສາສຳລັບການສຶກສາຊັ້ນສູງ ເພື່ອຮັບປະກັນເຮັດໃຫ້ນັກສຶກສາທີ່ດ້ອຍໂອກາດ ສາມາດຮຽນຈົບຫຼັກສູດປະລິນຍາ.

ນະໂຍບາຍທີ 3: ເພີ່ມທະວີການມີສ່ວນຮ່ວມຂອງພາກເອກະຊົນ ແລະ ຊຸມຊົນເຂົ້າໃນການສຶກສາ.

ກິດຈະກຳ:

1. ກະກຽມນະໂຍບາຍ ແລະ ແຜນຍຸດທະສາດ ສຳລັບການຮ່ວມມືລະຫວ່າງພາກລັດ ແລະ ພາກເອກະຊົນ.
2. ຟື້ນຟູສ້ອມແປງຄືນໃໝ່ ແລະ ຂະຫຍາຍຕາໜ່າງສູນການສຶກສາຊຸມຊົນ ພາຍໃຕ້ການສະໜັບສະໜູນຂອງຄະນະພັດທະນາການສຶກສາຂັ້ນບ້ານ.
3. ສົ່ງເສີມໃຫ້ພາກສ່ວນເອກະຊົນ (ລວມທັງ ອົງກອນທີ່ບໍ່ຂຶ້ນກັບລັດຖະບານ ແລະ ອົງກອນທີ່ບໍ່ຫວັງຜົນກຳໄລຕ່າງໆ) ປະກອບສ່ວນເຂົ້າໃນການຂະຫຍາຍໂອກາດການເຂົ້າຮຽນຢູ່ໃນທຸກລະດັບ.

4. ສົ່ງເສີມໃຫ້ຊຸມຊົນ ແລະ ຂະແໜງທຸລະກິດປະກອບສ່ວນເຂົ້າໃນການພັດທະນາຫຼັກສູດ.

ນະໂຍບາຍທີ 4: ການນໍາໃຊ້ທຶນໃຫ້ຖືກຕ້ອງຕາມເປົ້າຫມາຍ

ກິດຈະກໍາ:

1. ສະໜອງຫ້ອງຮຽນໃໝ່ເພີ່ມເຕີມ ພ້ອມທັງສົ່ງເສີມການສອນຫ້ອງຄວບໃນບ້ານ ແລະ ກຸ່ມບ້ານພັດທະນາທີ່ບໍ່ມີໂຮງຮຽນປະຖົມສົມບູນ ໃຫ້ສອນຄົບ 5 ຊັ້ນຮຽນ.
2. ເລີ່ມນໍາໃຊ້ລະບົບໂຮງຮຽນສາມັນຂັ້ນພື້ນຖານຄົບຊຸດແຕ່ ປ.1 - ມ. 4 ໂດຍການສະໜອງຫ້ອງຮຽນເພີ່ມໃນໂຮງຮຽນທີ່ບໍ່ມີຫ້ອງຮຽນສໍາລັບ ມ.1 - ມ.4.
3. ສະໜອງຫ້ອງຮຽນ ແລະ ສິ່ງອໍານວຍຄວາມສະດວກເພີ່ມເຕີມ ສໍາລັບຊັ້ນມັດທະຍົມຕອນປາຍ ພ້ອມທັງສ້າງມັດທະຍົມສົມບູນຕົວແບບໃຫ້ໄດ້ແຂວງລະແຫ່ງ.
4. ຂະຫຍາຍສູນຝຶກອົບຮົມວິຊາຊີບແບບປະສົມ ແລະ ຫັນເອົາສະຖາບັນສ້າງຄູໃຫ້ປັນສະຖາບັນທີ່ສາມາດສິດສອນໃນລະດັບປະລິນຍາໄດ້.

ນະໂຍບາຍທີ 5: ການອໍານວຍຄວາມສະດວກຂອງການເຂົ້າຮຽນ, ການເລື່ອນຊັ້ນ ແລະ ການຮຽນຈົບຊັ້ນຂອງເດັກ ທີ່ດ້ອຍໂອກາດໂດຍວິທີການຮຽນຮ່ວມ

ກິດຈະກໍາ:

1. ພັດທະນາ ແລະ ການຈັດຕັ້ງປະຕິບັດ ນະໂຍບາຍແຫ່ງຊາດວ່າດ້ວຍການສຶກສາຮຽນຮ່ວມ.
2. ສ້າງຫຼັກສູດໃຫມ່ເພື່ອຕອບສະຫນອງຄວາມຕ້ອງການຂອງກຸ່ມຄົນດ້ອຍໂອກາດ.
3. ສະຫນອງໂຮງຮຽນໃຫມ່ ແລະ ຫ້ອງຮຽນເພີ່ມເຕີມໃຫ້ແກ່ເຂດທີ່ມີອັດຕາການເຂົ້າຮຽນຂອງເພດຍິງ ແລະ ຊົນເຜົ່າຕໍ່າ ຫຼື ການປະລະສູງ.
4. ໃຫ້ໂອກາດເທົ່າທຽມກັນລະຫວ່າງ ຍິງ-ຊາຍເພື່ອສໍາເລັດການສຶກສາຂັ້ນພື້ນຖານ ແລະ ເຂົ້າຮຽນຕໍ່ໃນຊັ້ນມັດທະຍົມຕອນປາຍ ແລະ ອາຊີວະສຶກສາ.
5. ປັບປຸງສິ່ງອໍານວຍຄວາມສະດວກຢູ່ໃນໂຮງຮຽນ (ທາງລາດເນີນ, ຫ້ອງນໍ້າ ແລະ ອື່ນໆ) ເພື່ອໃຫ້ເດັກພິການສາມາດ ເຂົ້າຮຽນຮ່ວມໄດ້.
6. ສົ່ງເສີມການສອນຫ້ອງຄວບໃນເຂດທີ່ມີໂຮງຮຽນຂະໜາດນ້ອຍ ຫຼື ໂຮງຮຽນມູນ.
7. ສະໜອງໂຮງຮຽນປະຖົມສົມບູນໃນເຂດຫ່າງໄກສອກຫຼີກ ແລະ ຂະຫຍາຍຕາໜ່າງກຸ່ມໂຮງຮຽນເພື່ອເຮັດໃຫ້ການສະໜັບສະໜູນດ້ານວິຊາການມີຄວາມສະດວກ.
8. ສະໜອງການສຶກສາໃຫ້ແກ່ເດັກທີ່ມີຄວາມຕ້ອງການພິເສດໃນລະບົບສາມັນສຶກສາ.
9. ຫຼຸດຜ່ອນການໃຊ້ຈ່າຍໂດຍກົງ ຫຼື ທາງອ້ອມທີ່ເປັນອຸປະສັກຕໍ່ຄອບຄົວທຸກຍາກ.
10. ເພີ່ມການເຂົ້າຮຽນຂອງເດັກອາຍຸ 5 ປີໃນເຂດຫ່າງໄກສອກຫຼີກ.
11. ເພີ່ມການເຂົ້າຮຽນຂອງເດັກໃນລະບົບການສຶກສານອກໂຮງຮຽນ ໂດຍການເພີ່ມການລົງທຶນເຂົ້າໃສ່ສູນການສຶກສາຮຽນຮູ້ຕະຫຼອດຊີວິດຂອງຊຸມຊົນ/ຂອງບ້ານ.
12. ສະໜອງລະບົບການຮຽນທຽບເທົ່າສໍາຫຼັບເດັກທີ່ມີອາຍຸເກີນໄວຮຽນປະຖົມທີ່ບໍ່ໄດ້ເຂົ້າຮຽນ.

13. ນຳເອົາການສຶກສາທັກສະຊີວິດເຂົ້າໃນການສຶກສາ ເພື່ອເສີມຄວາມຮູ້ຕົວຈິງ ແລະ ຄວາມຊຳນິຊຳນານໃຫ້ແກ່ເດັກທຸກຄົນ.
14. ນຳເອົາການສຶກສາກ່ຽວກັບສຸຂະພາບ ແລະ ໂພຊະນາການເຂົ້າສູ່ໂຮງຮຽນ.
15. ປູກຈິດສຳນຶກກ່ຽວກັບພະຍາດ ເຮັດສ ໄອວີ / ເອດສ ໃຫ້ແກ່ກຸ່ມສ່ຽງ.

ນະໂຍບາຍທີ 6: ອຳນວຍຄວາມສະດວກໃຫ້ແກ່ການສຶກສາກ່ອນໄວຮຽນ

ກິດຈະກຳ:

1. ເພີ່ມຈຳນວນກຸ່ມຫຼິ້ນເພື່ອຮຽນ, ໂຮງລ້ຽງເດັກ ແລະ ໂຮງຮຽນອະນຸບານ ໂດຍສະເພາະໃນເຂດຊົນນະບົດ.
2. ສະໜອງເງິນບໍລິຫານໂຮງຮຽນສຳຫຼັບກຸ່ມຫຼິ້ນໃນຊຸມຊົນ ແລະ ໂຮງຮຽນອານຸບານ

ນະໂຍບາຍທີ 7: ເພີ່ມການເຂົ້າຮຽນໃນໂຮງຮຽນມັດທະຍົມຕອນປາຍ, ໂຮງຮຽນສາມັນວິຊາຊີບ, ວິທະຍາໄລເຕັກນິກ ແລະ ສະຖາບັນການສຶກສາຊັ້ນສູງ

ກິດຈະກຳ:

1. ເພີ່ມການສະໜອງໂຮງຮຽນມັດທະຍົມຕອນປາຍ ແລະ ສະຖາບັນການສຶກສາຊັ້ນສູງ ໂດຍສົ່ງເສີມໃຫ້ມີການລົງທຶນຂອງພາກເອກະຊົນ ລວມທັງສົ່ງເສີມໃຫ້ມີການຮ່ວມມືລະຫວ່າງລັດ ແລະ ເອກະຊົນໃນການໃຫ້ການບໍລິການການສຶກສາ.
2. ສະໜອງໂຮງຮຽນວິທະຍາໄລເຕັກນິກ-ອາຊີວະສຶກສາໃຫ້ແຕ່ລະແຂວງ ພ້ອມທັງຂະຫຍາຍໂອກາດໄປສູ່ການສຶກສາໃນຊັ້ນສູງຂຶ້ນໄປ.
3. ສ້າງສູນຝຶກອົບຮົມວິຊາຊີບໃຫ້ໄດ້ 3-4 ແຫ່ງຢູ່ບັນດາຕົວເມືອງທີ່ເສດຖະກິດຂະຫຍາຍຕົວດີ.
4. ເພີ່ມຄວາມສະເໝີພາບໃນການເຂົ້າຮຽນໃນສະຖາບັນການສຶກສາຊັ້ນສູງໃຫ້ທຸກໆແຂວງ.
5. ປັບປຸງລະບົບການຊ່ວຍເຫຼືອທາງດ້ານການເງິນແກ່ຄົນທຸກ ເພື່ອໃຫ້ເຂົາເຈົ້າສາມາດເຂົ້າຮຽນຕໍ່ໄດ້ໃນລະດັບສູງຂຶ້ນ.

## 6.2. ແຜນງານປັບປຸງຄຸນະພາບ ແລະ ຄວາມສອດຄ່ອງ

*ຈຸດປະສົງ* *ເພື່ອປັບປຸງຄຸນະພາບ ໂດຍມີການປະສົມປະສານລະຫວ່າງຍຸດທະສາດການສະໜອງແບບຄຽງຄູ່ກັນ (ມີປຶ້ມແບບຮຽນ ແລະ ຄູສອນທີ່ມີຄຸນະພາບ) ແລະ ການບໍລິຫານທີ່ດີ ຊຶ່ງເນັ້ນໃສ່ບັນດາຍຸດທະສາດການຕິດຕາມການປະຕິບັດງານຂອງໂຮງຮຽນ ລວມທັງການຮຽນຂອງນັກຮຽນ, ປັບປຸງລະບົບການຮັບຮອງວິທະຍາຖານະລະດັບປະລິນຍາ, ປະກາດສະນິຍະບັດ ແລະ ໃບຢັ້ງຢືນ ພ້ອມທັງສ້າງລະບົບປະກັນຄຸນນະພາບ.*

ນະໂຍບາຍທີ 1: ການປະຕິຮູບຫຼັກສູດ ແລະ ການສະໜອງອຸປະກອນການຮຽນ-ການສອນ

ກິດຈະກຳ:

1. ກຳນົດນະໂຍບາຍ ແລະ ຍຸດທະສາດກ່ຽວກັບການນຳໃຊ້ຫຼັກສູດ ໂດຍການເພີ່ມຊົ່ວໂມງສອນ.

2. ສະໜອງປຶ້ມແບບຮຽນ ແລະ ອຸປະກອນການຮຽນ-ການສອນເສີມທີ່ຈຳເປັນໃຫ້ທົ່ວເຖິງ, ໂດຍການຈັດຊື້ຕັ້ງດຽວຢູ່ຂັ້ນສູນກາງ ແລະ ສະໜອງລາຍຈ່າຍງົບປະມານພິມທົດແທນ ແລະ ເສຍຫາຍໂດຍການສະໜອງເງິນບໍລິຫານໂຮງຮຽນ.
3. ພັດທະນາ ແລະ ນຳໃຊ້ຫຼັກສູດທີ່ໄດ້ມາດຕະຖານ ສຳລັບການຝຶກອົບຮົມວິຊາຊີບທີ່ຕອບສະໜອງໃຫ້ແກ່ຄວາມຕ້ອງການຂອງຕະຫຼາດແຮງງານ.
4. ສົ່ງເສີມຊຸກຍູ້ໃຫ້ພາກສ່ວນເອກະຊົນປະກອບສ່ວນ ເຂົ້າໃນການປັບປຸງຄວາມສອດຄ່ອງຂອງຫຼັກສູດການສຶກສາທັງຂັ້ນພື້ນຖານ ເພື່ອໃຫ້ສາມາດຕອບສະໜອງໄດ້ຕາມຄວາມຕ້ອງການຂອງຕະຫຼາດແຮງງານ.
5. ນຳອີງການແນະແນວວິຊາຊີບເຂົ້າໃນຫຼັກສູດຂັ້ນມັດທະຍົມຕົ້ນ ແລະ ມັດທະຍົມປາຍ ເພື່ອຊ່ວຍໃຫ້ນັກຮຽນສາມາດເລືອກວິຊາຮຽນຕ່າງໆ ໃນສະຖາບັນອາຊີວະສຶກສາກໍຄືສະຖາບັນຂັ້ນສູງ.
6. ພັດທະນາຫຼັກສູດການສຶກສານອກໂຮງຮຽນ.

ນະໂຍບາຍທີ 2: ການກໍ່ສ້າງ-ບຳລຸງຍົກລະດັບຄູ ແລະ ການພັດທະນາບຸກຄະລາກອນ

ກິດຈະກຳ:

1. ຈັດສັນລະບົບຂອງການຮັບນັກຮຽນໃໝ່ໃນສະຖາບັນສ້າງຄູຂອງແຂວງ ແລະ ຄະນະສຶກສາສາດ, ມະຫາວິທະຍາໄລ ເພື່ອນຳໃຊ້ອາຄານສະຖານທີ່ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ, ຄູອາຈານ ແລະ ຊັບພະຍາກອນຕ່າງໆ ຂອງສະຖາບັນສ້າງຄູຢ່າງເຕັມສ່ວນ, ເພື່ອຮັບປະກັນໃນການສະໜອງ ແລະ ບັນຈຸຄູຂັ້ນປະຖົມ, ຂັ້ນມັດທະຍົມຕອນຕົ້ນ ແລະ ຂັ້ນມັດທະຍົມຕອນປາຍໃຫ້ໄດ້ຕາມຄວາມຕ້ອງການ.
2. ທົບທວນ ແລະ ພັດທະນາຫຼັກສູດສ້າງຄູ, ປຶ້ມແບບຮຽນ ແລະ ອຸບປະກອນຮັບໃຊ້ການຮຽນການສອນອື່ນໆ ເພື່ອໃຫ້ສອດຄ່ອງກັບຍຸດທະສາດການປະຕິຮູບລະບົບການສຶກສາແຫ່ງຊາດ ແລະ ຂອບພັດທະນາຂະແໜງການສຶກສາ.
3. ທົບທວນ ແລະ ປັບປຸງວິທີການສິດສອນຢູ່ໃນສະຖາບັນສ້າງຄູ.
4. ຍົກລະດັບຄວາມຮູ້ຄວາມສາມາດຂອງຄູສອນ ແລະ ພະນັກງານບໍລິຫານຢູ່ສະຖາບັນສ້າງຄູ ໃຫ້ສາມາດສະໜອງການສອນໃນລະດັບປະລິນຍາ.
5. ປັບປຸງຄຸນະພາບຂອງຜູ້ທີ່ຈະສະໝັກເຂົ້າຮຽນໃນສະຖາບັນສ້າງຄູ ພ້ອມທັງເພີ່ມການສັບຊ້ອນຄູໃໝ່ທີ່ຫາກໍ່ຈົບຈາກສະຖາບັນສ້າງຄູ ແລະ ມະຫາວິທະຍາໄລແຫ່ງຊາດໄປເຂດດ້ອຍການພັດທະນາ ພ້ອມດຽວກັນນັ້ນກໍ່ເພີ່ມການຮັບເອົານັກຮຽນທີ່ຮຽນຈົບຈາກເຂດດັ່ງກ່າວເຂົ້າຮຽນໃນສະຖາບັນສ້າງຄູ.
6. ນຳໃຊ້ເຄືອຂ່າຍພັດທະນາຄູ ເພື່ອສະໜັບສະໜູນການພັດທະນາວິຊາຊີບຄູຢ່າງຕໍ່ເນື່ອງ.
7. ນຳໃຊ້ຫຼັກສູດພັດທະນາວິຊາຊີບຄູ ສຳລັບຄູສອນຢູ່ໃນມະຫາວິທະຍາໄລ ເພື່ອໃຫ້ເຂົາເຈົ້າໄດ້ມີໃບຢັ້ງຢືນຄວາມສາມາດໃນການສອນ

ນະໂຍບາຍທີ 3: ບັນຈຸ ແລະ ສັບຊ້ອນຄູໃຫ້ທົ່ວເຖິງ

ກິດຈະກຳ:

1. ນຳໃຊ້ຫຼັກການໃໝ່ໃນການບັນຈຸສັບຊ້ອນບຸກຄະລາກອນຄູທີ່ມີຄຸນະພາບ ໃຫ້ແກ່ໂຮງຮຽນ ແລະ ງົບປະມານເງິນເດືອນຄູຕາມຫຼັກການບັນຈຸສະບັບໃໝ່.
2. ນຳໃຊ້ຂໍ້ແນະນຳສະບັບໃໝ່ສຳລັບການບັນຈຸຄູທີ່ໄປສິດສອນຢູ່ເຂດຫ່າງໄກສອກຫຼີກ ແລະ ຂາດເຂີນຄູ ໂດຍການເພີ່ມເງິນອຸດໜູນພິເສດສຳລັບຄູທີ່ໄປສອນຢູ່ເຂດດັ່ງກ່າວ.
3. ນຳໃຊ້ເງື່ອນໄຂໃໝ່ທີ່ກ່ຽວພັນເຖິງການໄປປະຈຳການຢູ່ເຂດຫ່າງໄກສອກຫຼີກ ແລະ ທຸລະກັນດານ ຊຶ່ງລວມທັງການສະໜອງເງິນຄ່າທີ່ພັກອາໄສ 100% ໃຫ້ແກ່ຄູທີ່ໄປປະຈຳຢູ່ເຂດດັ່ງກ່າວ ພ້ອມທັງຈ່າຍເງິນເດືອນລ່ວງໜ້າເມື່ອຮັບເຂົ້າປະຈຳການ.
4. ກຳນົດແຕ່ເບື້ອງຕົ້ນ ສຳລັບໂຮງຮຽນທີ່ຈະເປັນບ່ອນປະຈຳການຂອງນັກຮຽນຄູ ກ່ອນການເຂົ້າຮຽນໃນສະຖາບັນສ້າງຄູ ຊຶ່ງຈະຕ້ອງມີການເຊັນສັນຍາວ່າຫຼັງຈາກຮຽນຈົບແລ້ວຈະຕ້ອງໄປປະຈຳການຢູ່ໂຮງຮຽນດັ່ງກ່າວ.
5. ນຳໃຊ້ວິທີການໃໝ່ ເພື່ອຮັບປະກັນເຮັດໃຫ້ການບັນຈຸ ແລະ ນຳໃຊ້ຄູມີປະສິດທິພາບກວ່າເກົ່າ ຊຶ່ງລວມທັງການຂະຫຍາຍການສອນຫ້ອງຄວບ, ຝຶກອົບຮົມຄູໃຫ້ໄດ້ 2-3 ວິຊາ ແລະ ຄູແຕ່ລະຄົນຕ້ອງໄດ້ໄປສອນຢູ່ຫຼາຍໂຮງຮຽນຖ້າມີຄວາມຈຳເປັນ.

ນະໂຍບາຍທີ 4: ການປະຕິບັດໜ້າທີ່, ການຄິດໄລ່ຄ່າຕອບແທນ ແລະ ສິ່ງຈູງໃຈອື່ນໆສຳລັບຄູ

ກິດຈະກຳ:

1. ເລັ່ງລັດການເລື່ອນຊັ້ນໃຫ້ແກ່ຫົວໜ້າຄູໃນໂຮງຮຽນມູນລະປະຖົມສຶກສາໃຫ້ເປັນ ຜູ້ອຳນວຍການໂຮງຮຽນ ໂດຍມີການສ້າງຄວາມເຂັ້ມແຂງດ້ານການນຳພາ, ການວາງແຜນ, ການປະເມີນການປະຕິບັດໜ້າທີ່ວຽກງານ.
2. ນຳໃຊ້ແຜນການທົດສອບການປະຕິບັດງານຂອງຜູ້ອຳນວຍການໂຮງຮຽນໄລຍະ 3 ປີ ໃນບັນດາໂຮງຮຽນມູນ ແລະ ຫຼັງຈາກ 3 ປີ ຖ້າໂຮງຮຽນດັ່ງກ່າວ ສາມາດເປີດສອນແຕ່ ປ.1-ປ.5 ໄດ້ ກໍປະກາດແຕ່ງຕັ້ງຄູທີ່ສອນຢູ່ນັ້ນເປັນອຳນວຍການໄດ້.

ນະໂຍບາຍທີ 5: ປັບປຸງວຽກງານການຕິດຕາມຜົນງານຂອງໂຮງຮຽນ ແລະ ຜົນການຮຽນຂອງນັກຮຽນ

ກິດຈະກຳ:

1. ກຳນົດມາດຕະຖານຕ່ຳສຸດສຳລັບຜົນການຮຽນຂອງນັກຮຽນຊັ້ນ ປ.3, ປ.5 ແລະ ມ.4 ພ້ອມທັງຮັບປະກັນຄວາມເຂົ້າໃຈເປັນເອກະພາບກັນ ກ່ຽວກັບມາດຕະຖານດັ່ງກ່າວລະຫວ່າງຄູ, ພໍ່ແມ່ນັກຮຽນ ແລະ ຜູ້ທີ່ມີສ່ວນກ່ຽວຂ້ອງອື່ນໆ.
2. ສ້າງລະບຽບການໃນການຕິດຕາມຜົນການຮຽນຂອງນັກຮຽນທົ່ວປະເທດ ເພື່ອປັບປຸງຜົນການຮຽນຂອງນັກຮຽນ ແລະ ໂອກາດໃນການຫາວຽກເຮັດງານທຳ.
3. ປັບປຸງປະສິດທິພາບໃນການຕິດຕາມການປະຕິບັດວຽກງານຂອງໂຮງຮຽນ.

4. ປັບປຸງປະສິດທິພາບໃນການຄຸ້ມຄອງ ແລະ ວາງແຜນ ໂດຍການກຳນົດຄືນບົດບາດຂອງວຽກງານນິເທດ ແລະ ວຽກງານກວດກາຂັ້ນສູນກາງ, ແຂວງ ແລະ ເມືອງ ແລະ ນຳໃຊ້ບັນດາລະບຽບການປະເມີນຜົນ ແລະ ການປະຕິບັດໜ້າທີ່ວຽກງານ ສຳລັບບຸກຄະລາກອນສຶກສາທຸກຄົນໃນທຸກໆຂັ້ນ.

### 6.3. ແຜນງານປັບປຸງວຽກງານບໍລິຫານ ແລະ ຄຸ້ມຄອງການສຶກສາ

*ຈຸດປະສົງ* *ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານບລິຫາການສຶກສາຢູ່ຂັ້ນສູນກາງ, ຂັ້ນແຂວງ, ຂັ້ນເມືອງ, ຂັ້ນໂຮງຮຽນ ແລະ ຊຸມຊົນ ໂດຍຜ່ານການປັບປຸງຄືນບັນດານິຕິກຳຕ່າງໆ ແລະ ປັບປຸງຄືນໂຄງຮ່າງການຈັດຕັ້ງພ້ອມທັງພາລາບົດບາດ ພ້ອມກັນນັ້ນ ກໍປັບປຸງຄືນບັນດາລະບຽບການໃນການບໍລິຫານ ແລະ ຄຸ້ມຄອງ.*

ນະໂຍບາຍທີ 1: ສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບການຕິດຕາມ ແລະ ການວາງແຜນຂອງຂັ້ນສູນກາງ ແລະ ຂັ້ນແຂວງ

ກິດຈະກຳ:

1. ສ້າງຄວາມເຂັ້ມແຂງໃຫ້ລະບົບການປະສານງານ ລະຫວ່າງບັນດາກົມພາຍໃນກະຊວງສຶກສາທິການ ແລະ ກິລາ ແລະ ພະແນກສຶກສາທິການແຂວງ ໃນການວາງແຜນປະຕິບັດງານ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດແຜນພັດທະນາການສຶກສາ.
2. ສ້າງຄວາມເຂັ້ມແຂງໃຫ້ລະບົບຂໍ້ມູນຂ່າວສານຢູ່ຂັ້ນສູນກາງ ແລະ ຂັ້ນແຂວງສຳລັບການຄຸ້ມຄອງພະນັກງານ ແລະ ຄຸ້ມຄອງການເງິນ ໂດຍອີງໃສ່ບັນດາຕົວຊີ້ບອກ ໃນການປະຕິບັດວຽກງານທີ່ໄດ້ກຳນົດໄວ້.
3. ສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານການສ້າງແຜນການ ແລະ ແຜນງົບປະມານຂອງສະຖາບັນການສຶກສາຊັ້ນສູງ ກໍຄືຂອງກະຊວງສຶກສາທິການ ແລະ ກິລາ.

ນະໂຍບາຍທີ 2: ຍົກສູງປະສິດທິພາບລະບົບການຄຸ້ມຄອງຂັ້ນເມືອງ ແລະ ໂຮງຮຽນ

ກິດຈະກຳ:

1. ສ້າງຄວາມເຂັ້ມແຂງໃຫ້ລະບົບການຄຸ້ມຄອງແຜນງານຂັ້ນເມືອງ ແລະ ຂັ້ນໂຮງຮຽນ ໂດຍຜ່ານການສ້າງຄວາມສາມາດເພີ່ມໃຫ້ແກ່ບັນດາໜ່ວຍງານຄຸ້ມຄອງງົບປະມານ ແລະ ຄຸ້ມຄອງໂຮງຮຽນ.
2. ສ້າງຄວາມເຂັ້ມແຂງໃຫ້ລະບົບການວາງແຜນ ແລະ ຄຸ້ມຄອງບຸກຄະລາກອນຂັ້ນເມືອງ ໂດຍອີງໃສ່ ລະບຽບການທີ່ໄດ້ກຳນົດໄວ້.
3. ສ້າງຄວາມເຂັ້ມແຂງ ໃຫ້ລະບົບການຄຸ້ມຄອງວິຊາການ ແລະ ການເງິນຂອງສະຖາບັນການສຶກສາຊັ້ນສູງ, ສະຖາບັນອາຊີວະສຶກສາ ແລະ ສະຖາບັນສ້າງຄູ.

ນະໂຍບາຍທີ 3: ສ້າງຄວາມເຂັ້ມແຂງໃນການບໍລິຫານ ແລະ ຄຸ້ມຄອງລະບົບຂໍ້ມູນ

ກິດຈະກຳ:

1. ສ້າງຄວາມເຂັ້ມແຂງໃນການປົກຄອງ ແລະ ການຕັດສິນບັນຫາທາງດ້ານການຄຸ້ມຄອງການເງິນໃຫ້ແກ່ໂຮງຮຽນ ແລະ ການຈັດຕັ້ງ.
2. ເພີ່ມສິດ ແລະ ຄວາມເປັນເຈົ້າການໃຫ້ແກ່ໂຮງຮຽນ ແລະ ຫ້ອງການສຶກສາທິການເມືອງ ໃນການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດແຜນພັດທະນາຂະແໜງການສຶກສາ.
3. ສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານການສ້າງແຜນຍຸດທະສາດ ແລະ ແຜນງົບປະມານສຳລັບການສຶກສາຊັ້ນສູງ ແລະ ກະຊວງສຶກສາທິການ ແລະ ກິລາ.
4. ສ້າງຄວາມເຂັ້ມແຂງດ້ານການວາງແຜນພັດທະນາການສຶກສາ, ການປະສານງານ, ການຕິດຕາມບຸກຄະລາກອນ ແລະ ການຕິດຕາມການປະຕິບັດງານຂອງຂະແໜງການໃຫ້ກະຊວງ ຕາມຕົວຊີ້ບອກທີ່ໄດ້ກຳນົດໄວ້.
5. ປັບປຸງການສື່ສານດ້ານຂໍ້ມູນ ລະຫວ່າງກະຊວງສຶກສາທິການ ແລະ ກິລາ, ແຂວງ, ຄະນະພັດທະນາການສຶກສາຂັ້ນບ້ານ ແລະ ອົງການຈັດຕັ້ງຂອງສັງຄົມ.

ນະໂຍບາຍທີ 4: ສ້າງຄວາມເຂັ້ມແຂງໃຫ້ແກ່ການຄຸ້ມຄອງການສຶກສາ ແລະ ຊັບພະຍາກອນມະນຸດ

ກິດຈະກຳ:

1. ປັບປຸງນິຕິກຳກ່ຽວກັບພາລະບົດບາດຂອງບຸກຄະລາກອນ ແລະ ການຈັດຕັ້ງຢູ່ຂັ້ນກະຊວງ, ຂັ້ນແຂວງ, ຂັ້ນເມືອງ, ໂຮງຮຽນ ແລະ ຄະນະພັດທະນາການສຶກສາຂັ້ນບ້ານ.
2. ສ້າງຄູ່ມືຈັດຕັ້ງປະຕິບັດກ່ຽວກັບພາລະບົດບາດຂອງບຸກຄະລາກອນ ແລະ ການຈັດຕັ້ງທຸກຂັ້ນໃຫ້ມີຄວາມສອດຄ່ອງ.
3. ປັບປຸງລະບຽບການ ແລະ ໜ້າທີ່ຮັບຜິດຊອບຂອງແຕ່ລະພາກສ່ວນ ສຳລັບການສ້າງແຜນຄວາມຕ້ອງການ ແລະ ແຜນການສະໜອງຄູ.
4. ທົບທວນລະບົບການເບີກຈ່າຍເງິນເດືອນ ແລະ ເງິນອຸດໜູນຕ່າງໆຂອງຄູເພື່ອປັບປຸງສິ່ງຈູງໃຈ.

ນະໂຍບາຍທີ 5: ຈັດຕັ້ງປະຕິບັດຍຸດທະສາດການເງິນການສຶກສາສຳລັບຜູ້ທຸກຍາກ

ກິດຈະກຳ:

1. ສ້າງລະບຽບການກ່ຽວກັບການກຳນົດສ່ວນແບ່ງງົບປະມານ ສຳລັບການສຶກສາຫຼັງຂັ້ນພື້ນຖານ.
2. ລົບລ້າງຄ່າທຳນຽມຕ່າງໆສຳລັບການສຶກສາຂັ້ນພື້ນຖານ.
3. ສະໜອງເງິນບໍລິຫານໂຮງຮຽນ ແລະ ໃຫ້ທຶນການສຶກສາໂດຍມີເປົ້າໝາຍ.
4. ສະໜອງງົບປະມານໃຫ້ແກ່ບັນດາປັດໄຈນຳເຂົ້າຫຼັກ ເພື່ອຮັບປະກັນຄຸນນະພາບການສຶກສາ (ປຶ້ມແບບຮຽນ ແລະ ຄູທີ່ມີຄຸນນະພາບ).
5. ສ້າງແຜນສະໜອງ ແລະ ແຜນຄວາມຕ້ອງການຄູ ແລະ ພະນັກງານ ພ້ອມທັງຂຶ້ນງົບປະມານຕາມລະບຽບການບັນຈຸສັບຊ້ອນບຸກຄະລາກອນ.

6. ເສີມຂະຫຍາຍບົດບາດຂອງຄະນະພັດທະນາການສຶກສາຂັ້ນບ້ານ ແລະ ປັບປຸງລະບຽບການຕ່າງໆກ່ຽວກັບການມີສ່ວນຮ່ວມຂອງຊຸມຊົນ ໃນການຕັດສິນບັນຫາດ້ານການເງິນຂອງໂຮງຮຽນ.
7. ເພີ່ມຄວາມໂປ່ງໃສ ແລະ ຄວາມຮັບຜິດຊອບໃນການລາຍງານ/ເຜີຍແຜ່ການໃຊ້ຈ່າຍງົບປະມານຂອງລັດ ແລະ ທຶນປະກອບສ່ວນຂອງພໍ່ແມ່ນັກຮຽນ, ໂຮງຮຽນ ແລະ ຊຸມຊົນ.
8. ປັບປຸງການຈັດສັນງົບປະມານຂອງສູນກາງ/ແຂວງ/ເມືອງ ໃຫ້ສອດຄ່ອງກັບນະໂຍບາຍແຫ່ງຊາດ.
9. ປັບປຸງການໃຫ້ທຶນການສຶກສາແກ່ນັກສຶກສາທີ່ມາຈາກຄອບຄົວທຸກຍາກ ສຳລັບການສຶກສາຊັ້ນສູງ
10. ນຳໃຊ້ຕາຕະລາງນະໂຍບາຍ ແລະ ຍຸດທະສາດບຸລິມະສິດຂອງແຜນພັດທະນາຂະແໜງການສຶກສາ ເພື່ອລະດົມການຊ່ວຍເຫຼືອຈາກຄູ່ຮ່ວມພັດທະນາ.

ນະໂຍບາຍທີ 6: ຍຸດທະສາດທາງດ້ານການປະຕິບັດເພື່ອປັບປຸງຜົນການຕິດຕາມທົ່ວຂະແໜງການ
ກິດຈະກຳ:

1. ຕົກລົງການແບ່ງປັນຂອບເຂດຄວາມຮັບຜິດຊອບລະຫວ່າງກະຊວງສຶກສາທິການ, ແຂວງ, ອົງການກວດສອບແຫ່ງລັດຂັ້ນສູນກາງ ແລະ ແຂວງ ພ້ອມທັງພັດທະນາກົນກອງຂອງກະຊວງກ່ຽວກັບການຕິດຕາມຜົນງານທົ່ວຂະແໜງການ ໂດຍອີງຕາມຜົນໄດ້ຮັບຕົວຈິງເປັນຫຼັກ.
2. ປັບປຸງການຕິດຕາມຜົນງານ ຂອງພະແນກສຶກສາທິການແຂວງ.
3. ປັບປຸງລະບົບການລາຍງານການປະຕິບັດງານດ້ານການເງິນຂອງຂະແໜງການ.
4. ປະສານງານດ້ານການຕິດຕາມ, ການປະຕິບັດດ້ານການເງິນລວມທັງການປ່ອຍເງິນ.
5. ເພີ່ມທະວີການກວດສອບບັນຊີໂດຍການສຸ່ມຕົວຢ່າງ.

ນະໂຍບາຍທີ 7: ເພີ່ມທະວີຄວາມສອດຄ່ອງຂອງລະບົບຕິດຕາມການປະຕິບັດງານ
ກິດຈະກຳ:

1. ສ້າງຄວາມເຂັ້ມແຂງໃຫ້ລະບົບຂໍ້ມູນຂ່າວສານໂດຍນຳໃຊ້ສີ່ເທັກໂນໂລຊີເຂົ້າຊ່ວຍ ໂດຍສະເພາະຢູ່ຂັ້ນເມືອງ ເພື່ອເຮັດໃຫ້ການປະສານງານມີຄວາມສະດວກ ແລະ ວ່ອງໄວ.
2. ຈັດຕັ້ງປະຕິບັດການທົບທວນປະຈຳປີຂອງຂະແໜງການ ລວມທັງຂອບການປະເມີນຜົນ ການປະຕິບັດງານ (PAF).

### 6.4. ກົນໄກການປັບປຸງຍຸດທະສາດ, ການວາງແຜນ ແລະ ການຄຸ້ມຄອງວຽກງານການເງິນ.

*ຈຸດປະສົງ* *ເພື່ອກຳນົດຍຸດທະສາດທາງດ້ານການເງິນ ໃນການສະໜັບສະໜູນການພັດທະນາຂະແໜງການສຶກສາ ລວມທັງການວາງແຜນການເງິນ ແລະ ອົງປະກອບອື່ນໆໃນການບໍລິຫານການເງິນ. ແຜນການການເງິນທີ່ໄດ້ກຳນົດໃນຂອບພັດທະນາຂະແໜງການສຶກສາ ຈະເປັນແນວທາງໃນການກະກຽມແຜນງົບປະມານປະຈຳປີ.*

ຫຼັກເກນທີ 1: ປັບປຸງບັນດາຄາດໝາຍ ແລະ ການຄາດຄະເນແຫຼ່ງງົບປະມານການເງິນຂອງຂະແໜງການ

ກິດຈະກຳ

1. ການວາງແຜນທາງດ້ານການເງິນຕ້ອງມີເປົ້າໝາຍ ໂດຍອີງໃສ່ບັນດາບຸລິມະສິດທີ່ໄດ້ກຳນົດໃນແຜນພັດທະນາຂະແໜງການສຶກສາ.
2. ປັບປຸງສະຖຽນລະພາບທາງດ້ານການລົງທຶນຈາກພາຍນອກ.
3. ເພີ່ມການນຳໃຊ້ລະບຽບການທາງດ້ນການເງິນຂອງລັດຖະບານ
4. ເພີ່ມສ່ວນແບ່ງງົບປະມານການລົງທຶນເຂົ້າໃນວຽກງານການສຶກສາ.

ຫຼັກເກນທີ 2: ປັບປຸງປະສິດທິພາບຂອງການນຳໃຊ້ເງິນຊ່ວຍເຫຼືອ ໂດຍການນຳໃຊ້ບັນດາບຸລິມະສິດຍຸດທະສາດ ແລະ ນະໂຍບາຍທີ່ກຳນົດໄວ້ໃນແຜນພັດທະນາຂະແໜງການສຶກສາ ເປັນພື້ນຖານໃນການຕັດສິນໃຈຮັບເອົາການຊ່ວຍເຫຼືອຈາກຕ່າງປະເທດ.

ກິດຈະກຳ

1. ເພີ່ມບັນດາກິດຈະກຳທີ່ໄດ້ຮັບການສະໜັບສະໜູນທາງດ້ານການເງິນຈາກລັດຖະບານ ໂດຍການສ້າງແຜນການປະຈຳປີຂອງຂະແໜງການທີ່ມີການຄິດໄລມູນຄ່າ.
2. ໜ່ວຍງານວິຊາການຂອງຂະແໜງການສຶກສາ ຈະຕ້ອງປຶກສາຫາລືວິທີການເພື່ອເຮັດໃຫ້ ຍຸດທະສາດຂອງບັນດາປະເທດຄູ່ຮ່ວມພັດທະນາ ສອດຄ່ອງກັບບັນດາບຸລິມະສິດທາງດ້ານການເງິນທີ່ໄດ້ກຳນົດໃນແຜນພັດທະນາຂະແໜງການສຶກສາ.
3. ໜ່ວຍງານວິຊາການຂອງຂະແໜງການສຶກສາ ໄດ້ຕົກລົງຈະນຳໃຊ້ວິທີທີ່ເປັນເອກະພາບ ແລະ ເພີ່ມການນຳໃຊ້ລະບົບຂອງລັດຖະບານເພື່ອໃຫ້ສອດຄ່ອງກັບຖະແຫຼງການວຽງຈັນ.
4. ຈະນຳໃຊ້ຖານຂໍ້ມູນເກັບກຳບັນດາທຶນຊ່ວຍເຫຼືອຂອງຕ່າງປະເທດ (ODA) ເພື່ອເປັນການວາງແຜນນຳໃຊ້ທຶນຊ່ວຍເຫຼືອຈາກຕ່າງປະເທດ.
5. ປັບປຸງວິທີການຄັດເລືອກ ແລະ ການກຳນົດເປົ້າໝາຍສຳລັບຜູ້ທີ່ຈະໄດ້ຮັບທຶນການສຶກສາ ແລະ ການຝຶກອົບຮົມຈາກພາຍນອກ.

ຫຼັກເກນທີ 3: ປັບປຸງລະບົບການບໍລິຫານ, ການວາງແຜນງົບປະມານ ແລະ ການເງິນ

ກິດຈະກຳ

1. ສ້າງຄວາມເຂັ້ມແຂງໃນການປະສານງານລະຫວ່າງກະຊວງສຶກສາທິການ ແລະ ກິລາ, ກະຊວງການເງິນ, ກະຊວງແຜນການ ແລະ ການລົງທຶນ ແລະ ອຳນາດການປົກຄອງຂັ້ນແຂວງ ໃນການສ້າງແຜນຂອບໃຊ້ຈ່າຍໄລຍະກາງຂອງຂະແໜງການສຶກສາ ໂດຍອີງໃສ່ບັນດາບຸລິມະສິດທີ່ໄດ້ກຳນົດໃນແຜນພັດທະນາຂະແໜງການສຶກສາ.
2. ສ້າງລະບຽບ ແລະ ຄູ່ມືປະຕິບັດງານໃນການບໍລິຫານ ແລະ ການຄຸ້ມຄອງເງິນບໍລິຫານໂຮງຮຽນໄປພ້ອມໆກັບການຝຶກອົບຮົມໃຫ້ພະນັກງານຂັ້ນສູນກາງ, ຂັ້ນເມືອງ ແລະ ຂັ້ນໂຮງຮຽນໃນການບໍລິຫານ ແລະ ລາຍງານ.

3. ຖ້າຫາກແຜນການຈັດແບ່ງງົບປະມານທີ່ໄດ້ກຳນົດ ຢູ່ໃນແຜນພັດທະນາຂະແໜງການສຶກສາໄດ້ຖືກຈັດຕັ້ງປະຕິບັດ, ຈະຕ້ອງໄດ້ປະຕິບັດບັນດາຂໍ້ແນະນຳ ທີ່ໄດ້ທົບທວນສຳລັບກົນໄກການສະໜອງເງິນບໍລິຫານໂຮງຮຽນ ໃຫ້ແກ່ໂຮງຮຽນອາຊີວະສຶກສາ, ສະຖາບັນສ້າງຄູ ແລະ ມະຫາວິທະຍາໄລ.
4. ກຳນົດຄວາມສາມາດຂອງພະນັກງານຂັ້ນສູນກາງ ແລະ ອຳນາດການປົກຄອງຂັ້ນແຂວງ ເພື່ອກຳນົດ ແລະ ຕິດຕາມວິທີການບັນຈຸພະນັກງານຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນໂຮງຮຽນ ແລະ ປະເດັນທີ່ກ່ຽວພັນກັບງົບປະມານເງິນເດືອນ ເພື່ອຍົກສູງພາລະບົດບາດຂອງອຳນາດການປົກຄອງແຂວງ ໃນການຄຸ້ມຄອງງົບປະມານເງິນເດືອນ

### 6.5. ກົນໄກສ້າງຄວາມເຂັ້ມແຂງໃຫ້ລະບົບການຕິດຕາມ ແລະ ກວດກາການປະຕິບັດງານຂອງຂະແໜງການ

*ຈຸດປະສົງ* *ເພື່ອກຳນົດຄວາມຮັບຜິດຊອບໃນແຕ່ລະຂັ້ນເພື່ອຮັບປະກັນ ໃຫ້ມີຜົນສູງສຸດໃນວຽກງານການຕິດຕາມການປະຕິບັດງານຂອງຂະແໜງການ*

ຫຼັກເກນທີ 1: ຄູ່ຮ່ວມພັດທະນາ ແລະ ລັດຖະບານຈະຕ້ອງນຳໃຊ້ລະບົບການຕິດຕາມ ແລະ ການລາຍງານທີ່ມີຄວາມກົມກຽວ ແລະ ເປັນເອກະພາບກັນ ພ້ອມທັງນຳໃຊ້ໂຄງສ້າງບົດລາຍງານທີ່ເປັນເອກະພາບກັນ.

ກິດຈະກຳ

1. ການທົບທວນຮ່ວມກັນທົ່ວຂະແໜງການປະຈຳປີຈະໄດ້ຈັດຕັ້ງປະຕິບັດ ໂດຍມີການຊຸກຍູ້ໃຫ້ຄູ່ຮ່ວມ ພັດທະນາຮວບຮວມການທົບທວນໂຄງການ ຂອງພວກເຂົາເຈົ້າເຂົ້າໃນການທົບທວນຮ່ວມກັນ.
2. ການທົບທວນຮ່ວມກັນທົ່ວຂະແໜງການຈະເນັ້ນໃສ່ທັງ ຜົນຂອງການຈັດຕັ້ງປະຕິບັດແຜນພັດທະນາຂະແໜງການສຶກສາ ແລະ ແຜນພັດທະນາຂະແໜງການສຶກສາ ເພື່ອໃຫ້ເປັນຂະບວນການອັນໜຶ່ງອັນດຽວ.

ຫຼັກເກນທີ 2: ເພີ່ມທະວີຄວາມສອດຄ່ອງລະບົບການຕິດຕາມການປະຕິບັດງານ

ກິດຈະກຳ

1. ນຳໃຊ້ຂອບປະເມີນຜົນການປະຕິບັດງານຂອງຂອບພັດທະນາຂະແໜງການສຶກສາ ເພື່ອຮວບຮວມການບໍລິຫານຂໍ້ມູນທີ່ພົວພັນເຖິງ ການປະຕິບັດເປົ້າໝາຍຂອງການປະຕິບັດງານ ທີ່ຕົກລົງເຫັນດີນຳກັນ ໂດຍອີງໃສ່ວຽກງານຂະຫຍາຍໂອກາດ, ຄຸນະພາບ, ມາດຕະຖານ, ການປົກຄອງ ແລະ ຄວາມຮັບຜິດຊອບຂອງຂະແໜງການ.
2. ນຳໃຊ້ຜົນການວິເຄາະແນວໂນ້ມ ແລະ ຜົນຮັບຂອງຂອບປະເມີນຜົນການປະຕິບັດງານ ເພື່ອກຳນົດຍຸດທະສາດ ແລະ ດັດປັບແຜນງານໃນໄລຍະຕໍ່ໄປ .
3. ສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບຂໍ້ມູນຂ່າວສານໂດຍເນັ້ນໃສ່ການນຳໃຊ້ ICT ເຂົ້າມາຊ່ວຍ ໂດຍສະເພາະຢູ່ຂັ້ນເມືອງ

# ພາກທີ III: ຄວາມຕ້ອງການທາງດ້ານຊັບພະຍາກອນ ແລະ ການເງິນ

## 1. ແຜນການເງິນຂອງຂະໜງການສຶກສາ 2011 - 2015

ແຜນພັດທະນາຂະແໜງການສຶກສາສະໜອງວິທີການແບບສົມດູນ ສຳລັບການພັດທະນາຂະແໜງການສຶກສາ ເພື່ອຮັບປະກັນວ່າການລົງທຶນເຂົ້າໃນຂະແໜງການສຶກສາມີລັກສະນະຊາດ, ລັກສະນະ ປະສານງານ ແລະ ເທົ່າທຽມກັນ. ຊຶ່ງສິ່ງດັ່ງກ່າວ ຈະຊ່ວຍແກ້ໄຂບັນຫາຄວາມບໍ່ສະເໝີພາບໃນລະບົບການສຶກສາ ຊຶ່ງເປັນສິ່ງທີ່ກີດຂວາງການພັດທະນາແບບຍືນຍົງຂອງວຽກງານການສຶກສາ. ຂອບແຜນວຽກຂອງທົ່ວຂະແໜງການ ຈະນຳໄປສູ່ວິທີການພັດທະນາແບບຮອບດ້ານ ແລະ ຄົບຊຸດ (SWAP) ຊຶ່ງຈະເຮັດໃຫ້ ລັດຖະບານ ແລະ ຄູ່ຮ່ວມພັດທະນາ ສາມາດວາງແຜນຮ່ວມກັນ ໂດຍອີງໃສ່ເປົ້າໝາຍ ແລະ ຜົນຮັບອັນດຽວກັນ ເພື່ອຫັນເປັນແຜນປະຕິບັດງານປະຈຳປີ. ແຜນການເງິນດັ່ງກ່າວນີ້ ຍັງຊ່ວຍໃຫ້ກະຊວງສຶກສາທິການ ແລະ ກິລາ ແລະ ຄູ່ຮ່ວມພັດທະນາ ຮັບເອົາວິທີການແບບຍາວນານສຳລັບການສະໜັບສະໜູນວຽກງານການລົງທຶນເຂົ້າໃນຂະແໜງການ ໂດຍອີງໃສ່ແຫຼ່ງທຶນອັນໜຶ່ງອັນດຽວ.

ແຜນງົບປະມານ ແມ່ນນຳໃຊ້ຂໍ້ມູນຈາກປີ 2009/10 ເຊິ່ງເປັນປີເລີ່ມຕົ້ນ ແລະ ການຄາດຄະເນການເຕີບໂຕຂອງການເຂົ້າຮຽນໃນຊັ້ນຕ່າງໆ ໂດຍອີງຕາມນະໂຍບາຍທີ່ໄດ້ວາງໄວ້ ໃນແຜນພັດທະນາຂະແໜງການສຶກສາ. ນະໂຍບາຍດັ່ງກ່າວນີ້ ແມ່ນໄດ້ຄາດຄະເນຜົນໄດ້ຮັບຂອງການສຶກສາເພື່ອທຸກຄົນ (EFA) ແລະ ເປົ້າໝາຍສະຫັດສະຫວັດດ້ານການພັດທະນາ (MDG) ໃນປີ 2015 ພ້ອມທັງອັດຕາເຂົ້າຮຽນຊັ້ນມັດທະຍົມຕົ້ນໃຫ້ໄດ້ 75%, ໃນເວລາດຽວກັນນັ້ນ ຕ້ອງໃຫ້ມີຄວາມດຸ່ນດ່ຽງໃນການພັດທະນາຂະແໜງການ ໃຫ້ສອດຄ່ອງກັບແຜນພັດທະນາເສດຖະກິດສັງຄົມຂອງຊາດຄັ້ງທີ 7. ການຄາດຄະເນການເຂົ້າຮຽນໃນເບື້ອງຕົ້ນ, ການກະຕວງຈຳນວນຫ້ອງຮຽນທີ່ເພີ່ມ, ຈຳນວນຄູ ແລະ ອື່ນໆ ແມ່ນສ້າງຂຶ້ນບົນພື້ນຖານທາງດ້ານນະໂຍບາຍຂອງແຜນພັດທະນາຂະແໜງການສຶກສາທີ່ກ່ຽວພັນເຖິງຂະໜາດຂອງຫ້ອງຮຽນ, ອັດຕາສ່ວນປຶ້ມຕຳລາຮຽນ ແລະ ອື່ນໆ. ໃນຮູບແບບທີ່ຄ້າຍຄືກັນນັ້ນແມ່ນການຄາດຄະເນຈຳນວນພະນັກງານບໍລິຫານ, ງົບປະມານເພີ່ມເຕີມສຳລັບການສຶກສາການຮຽນຮ່ວມ ແລະ ເງິນບໍລິຫານໂຮງຮຽນ ເພື່ອຫຼຸດຜ່ອນພາລະຄ່າໃຊ້ຈ່າຍໃນໂຮງຮຽນ ແລະ ເຮັດໃຫ້ແຜນປັບປຸງໂຮງຮຽນໃຫ້ໄດ້ຮັບການພັດທະນາ ແລະ ຈັດຕັ້ງປະຕິບັດຕົວຈິງໂດຍຄະນະກຳມະການພັດທະນາການສຶກສາຂັ້ນບ້ານ. ຮູບແບບດັ່ງກ່າວນີ້ ສາມາດຄາດຄະເນຄວາມຕ້ອງການທາງດ້ານງົບປະມານທັງໝົດ (ໂດຍມີການແຍກເງິນລົງທຶນ ແລະ ເງິນບໍລິຫານປົກກະຕິອອກຈາກກັນຢ່າງຊັດເຈນ) ທີ່ຕ້ອງການຈັດຕັ້ງປະຕິບັດແຜນພັດທະນາຂະແໜງການສຶກສາຈົນເຖິງປີ 2015.

ຊ່ອງຫວ່າງທາງດ້ານການເງິນທີ່ຕ້ອງການເພື່ອໃຫ້ບັນລຸແຜນພັດທະນາການສຶກສາ 5 ປີ ແມ່ນໄດ້ຄິດໄລ່ ໂດຍສົມທຽບມູນຄ່າການຈັດຕັ້ງປະຕິບັດຕົວຈິງທັງໝົດ ກັບການຄາດຄະເນຊັບພະຍາກອນທີ່ຕ້ອງການສຳລັບຂະແໜງການ. ຊ່ອງຫວ່າງດັ່ງກ່າວມີປະມານ 1,573,000 ລ້ານກີບ (ປະມານ 197 ລ້ານ ໂດລາ) ໃນໄລຍະ 5 ປີ. ຮູບທີ 1 ໄດ້ສະແດງໃຫ້ເຫັນເຖິງແຜນສັງລວມທາງດ້ານການເງິນ.

ຮູບທີ 1: ຄາດຄະເນງົບປະມານສຳລັບແຜນພັດທະນາຂະແໜງການສຶກສາ 5 ປີ (ລ້ານກີບ)




## 1.1. ງົບປະມານບໍລິຫານ

ປັດໄຈທີ່ເປັນສິ່ງກີດຂວາງສຳລັບການປັບປຸງຄຸນະພາບການຮຽນ-ການສອນ ແລະ ການສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານບໍລິຫານຄຸ້ມຄອງການສຶກສາ ແມ່ນງົບປະມານບໍລິຫານປົກະຕິທີ່ໄດ້ຮັບແມ່ນມີຈຳກັດ ໂດຍສະເພາະຢູ່ບັນດາແຂວງ. ໃນສົກປີ 2009-2010 ຊຶ່ງເປັນປີສຸດທ້າຍຂອງແຜນພັດທະນາຄັ້ງທີ 6 ງົບປະມານບໍລິຫານປົກະຕິຂອງສຶກສາແຂວງທົ່ວປະເທດ ສະເລ່ຍມີພຽງແຕ່ 9.5% ທຽບໃສ່ງົບປະມານບໍລິຫານປົກະຕິຂອງທົ່ວແຂວງ. ກະຊວງການເງິນພະຍາຍາມຈະນຳໃຊ້ກຳນົດໝາຍຄິດໄລ່ງົບປະມານໃນສົກຮຽນ 2011-12 ເພື່ອເປັນການສະໜອງງົບບປະມານເພີ່ມເຕີມໃຫ້ແຂວງ ເພື່ອໃຫ້ງົບປະມານບໍລິຫານປົກກະຕິນີ້ເພີ່ມຂຶ້ນຮອດ 14% ແລະ ຮອດ 25% ໃນປີ 2015. ເງິນເພີ່ມດັ່ງກ່າວນີ້ ບວກກັບເງິນບໍລິຫານໂຮງຮຽນ ຈະເປັນເງິນບໍລິຫານປົກະຕິທີ່ຈະໄປສະໜັບສະໜູນຫຼາຍກິດຈະກຳທີ່ກຳນົດໃນແຜນພັດທະນາການສຶກສາ 5 ປີ.

ຕາຕະລາງທີ 1: ໄດ້ສະແດງໃຫ້ເຫັນຕົວຄາດຄະເນຄວາມຕ້ອງງົບປະມານບໍລິຫານ ທີ່ຈະມາສະໜັບສະໜູນການຈັດຕັ້ງປະຕິບັດແຜນ 5 ປີ 2011-2015.

| | 2010/11 | 2011/12 | 2012/13 | 2013/14 | 2014/15 | ລວມງົບປະມານ 5 ປີ |
|---|---|---|---|---|---|---|
| **ງົບປະມານບໍລິຫານທີ່ຕ້ອງການ** | 1,081,679 | 1,229,722 | 1,306,470 | 1,385,892 | 1,551,544 | **6,555,307** |
| ງົບປະມານເງິນເດືອນທັງໝົດ | 748,805 | 803,231 | 856,292 | 911,532 | 967,076 | **4,286,934** |
| ງົບປະມານທີ່ບໍ່ແມ່ນເງິນເດືອນທັງໝົດ | 332,874 | 426,492 | 450,178 | 474,360 | 584,468 | **2,268,372** |

ຕາຕະລາງ 2: ຄາດຄະເນງົບປະມານບໍລິຫານຂອງແຕ່ລະຂະແໜງການຍ່ອຍ.

| | **2010/11** | **2011/12** | **2012/13** | **2013/14** | **2014/15** | ລວມງົບປະມານ 5 ປີ |
|---|---|---|---|---|---|---|
| ການສຶກສາກ່ອນໄວຮຽນ | 41,537 | 48,610 | 54,636 | 60,673 | 66,698 | 272,154 |
| ເງິນເດືອນ | 29,159 | 33,654 | 38,149 | 42,644 | 47,139 | 190,744 |
| ບໍ່ແມ່ນເງິນເດືອນ | 12,378 | 14,956 | 16,487 | 18,029 | 19,560 | 81,410 |
| ປະຖົມສຶກສາ | 386,412 | 410,674 | 435,409 | 459,889 | 484,172 | 2,176,556 |
| ເງິນເດືອນ | 294,903 | 314,011 | 333,118 | 352,225 | 371,332 | 1,665,589 |
| ບໍ່ແມ່ນເງິນເດືອນ | 91,509 | 96,663 | 102,291 | 107,664 | 112,840 | 510,967 |
| ມັດທະຍົມສຶກສາ | 281,414 | 300,532 | 313,502 | 326,625 | 339,902 | 1,561,975 |
| ເງິນເດືອນ | 207,780 | 223,618 | 233,153 | 242,688 | 252,223 | 1,159,462 |
| ບໍ່ແມ່ນເງິນເດືອນ | 73,634 | 76,914 | 80,349 | 83,937 | 87,679 | 402,512 |
| ການສຶກສານອກໂຮງຮຽນ | 46,462 | 50,181 | 53,917 | 57,670 | 61,442 | 269,673 |
| ເງິນເດືອນ | 39,806 | 43,193 | 46,579 | 49,965 | 53,352 | 232,895 |
| ບໍ່ແມ່ນເງິນເດືອນ | 6,656 | 6,989 | 7,338 | 7,705 | 8,090 | 36,778 |
| ອາຊີວະສຶກສາ | 75,511 | 88,664 | 102,105 | 115,838 | 129,863 | 511,981 |
| ເງິນເດືອນ | 23,550 | 28,827 | 34,399 | 40,265 | 46,425 | 173,466 |
| ບໍ່ແມ່ນເງິນເດືອນ | 51,961 | 59,836 | 67,707 | 75,573 | 83,438 | 338,515 |
| ການສຶກສາຄູ | 77,923 | 69,869 | 67,977 | 68,548 | 69,114 | 353,431 |
| ເງິນເດືອນ | 56,795 | 50,461 | 48,761 | 48,936 | 49,111 | 254,064 |
| ບໍ່ແມ່ນເງິນເດືອນ | 21,128 | 19,407 | 19,216 | 19,612 | 20,003 | 99,367 |
| ການສຶກສາຊັ້ນສູງ | 63,466 | 68,666 | 73,894 | 79,159 | 170,451 | 455,637 |
| ເງິນເດືອນ | 31,581 | 36,303 | 41,035 | 45,777 | 50,528 | 205,224 |
| ບໍ່ແມ່ນເງິນເດືອນ | 31,885 | 32,362 | 32,859 | 33,383 | 119,924 | 250,413 |
| ການສຶກສາຮຽນຮ່ວມ | - | 71,760 | 72,449 | 73,096 | 73,694 | 290,999 |
| ເງິນເດືອນ | | | | | | - |
| ບໍ່ແມ່ນເງິນເດືອນ | - | 71,760 | 72,449 | 73,096 | 73,694 | 290,999 |
| ໜ່ວຍງານບໍລິຫານ | 108,954 | 120,767 | 132,580 | 144,394 | 156,207 | 662,902 |
| ເງິນເດືອນ | 65,230 | 73,164 | 81,098 | 89,032 | 96,967 | 405,491 |
| ບໍ່ແມ່ນເງິນເດືອນ | 43,724 | 47,603 | 51,482 | 55,362 | 59,241 | 257,411 |

ໝາຍເຫດ: ເງິນເດືອນສໍາລັບການສຶກສາຮຽນຮ່ວມແມ່ນລວມຢູ່ນໍາບໍລິຫານ.

ງົບປະມານບໍລິຫານທີ່ຈະມາສະໜັບສະໜູນການຈັດຕັ້ງປະຕິ ບັດແຜນພັດທະນາການສຶກສາ 5 ປີ ໄດ້ສະແດງໃຫ້ເຫັນໃນຮູບລຸ່ມນີ້. ງົບປະມານດັ່ງກ່າວນີ້ແມ່ນໄດ້ລວມເອົາເງິນບໍລິຫານໂຮງຮຽນ ສຳລັບທຸກລະດັບ ດັ່ງທີ່ໄດ້ກຳນົດໃນຂອບພັດທະນາຂະແໜງການສຶກສາ. ປັດຈຸບັນນີ້ເປີເຊັນສ່ວນແບ່ງສຳລັບບໍລິຫານຂອງສຶກສາທຽບໃສ່ເງິນບໍລິຫານຂອງລັດຖະບານ ມີພຽງແຕ່ປະມານ 11% ເທົ່ານັ້ນ ຊຶ່ງຍັງບໍ່ພຽງພໍກັບຄວາມຕ້ອງການມາຮັບໃຊ້ການຈັດຕັ້ງປະຕິບັດແຜນພັດທະນາຂອງຂະແໜງການໃຫ້ປະກົດເປັນຈິງ. ດັ່ງນັ້ນ ມີຄວາມຈຳເປັນຕ້ອງໄດ້ຮຽກຮ້ອງໃຫ້ລັດຖະບານເພີ່ມລາຍຈ່າຍງົບ ປະມານບໍລິຫານໃຫ້ຂະແໜງສຶກສາຕື່ມອີກ.

**ຮູບທີ 2: ແຜນງົບປະມານບໍລິຫານສຳລັບ 5 ປີ 2011-2015 (ຫົວໜ່ວຍ ລ້ານກີບ)**




ຮູບທີ 3: ໄດ້ສະແດງໃຫ້ເຫັນສ່ວນແບ່ງງົບປະມານບໍລິຫານສຳລັບແຕ່ລະຂະແໜງການຍ່ອຍ ຊຶ່ງສ່ວນແບ່ງຂອງຂັ້ນປະຖົມສຶກສາແມ່ນຫຼາຍກວ່າຂະແໜງການອື່ນ.




## 1.2. ງົບປະມານລົງທຶນ

ຕາຕະລາງ 3 ໄດ້ສະແດງໃຫ້ເຫັນເຖິງຄວາມຕ້ອງການເງິນລົງທຶນໃນແຜນພັດທະນາການສຶກສາ 5 ປີ

| | 2011 | 2012 | 2013 | 2014 | 2015 | ລວມ |
|---|---|---|---|---|---|---|
| **ລວມງົບປະມານລົງທຶນ** | **1,349,158** | **1,296,062** | **1,372,254** | **1,356,465** | **1,351,650** | **6,725,589** |
| ລັດຖະບານ | 208,892 | 215,066 | 213,158 | 222,975 | 280,217 | **1,140,308** |
| ODA ທີ່ມີແລ້ວ | 843,910 | 760,418 | 700,380 | 425,628 | 352,793 | **3,083,129** |
| ODA ທີ່ຍັງບໍ່ທັນແນ່ນອນ | - | 21,536 | 125,536 | 345,120 | 335,594 | **827,786** |
| INGO (ອົງການທີ່ບໍ່ຂຶ້ນກັບລັດຖະບານ) | 68,922 | 46,442 | 45,889 | 41,892 | 41,476 | **244,621** |
| ເອກະຊົນ | 4,131 | 4,131 | 4,144 | 4,144 | 4,144 | **20,693** |
| ຍັງບໍ່ທັນມີແຫຼ່ງທຶນ | 256,076 | 281,243 | 315,921 | 349,479 | 370,199 | **1,572,919** |

ຮູບທີ 4: ໄດ້ສະແດງເຖິງຄາດຄະເນຄວາມຕ້ອງການເງິນລົງທຶນ ເພື່ອມາຈັດຕັ້ງປະຕິບັດແຜນພັດທະນາການສຶກສາ 5 ປີ ຊຶ່ງຈະເຫັນໄດ້ຊ່ອງຫວ່າງຄວາມຕ້ອງການທາງດ້ານການເງິນໄດ້ເພີ່ມຂຶ້ນຈາກ 19% ໃນປີ 2011 ເປັນ 27% ໃນປີ 2015.

ຮູບທີ 4: ງົບປະມານລົງທຶນທີ່ຕ້ອງການສຳລັບແຜນພັດທະນາການສຶກສາ 5 ປີ




ຕາຕະລາງ 4: ສະແດງເຖິງງົບປະມານລົງທຶນຂອງແຕ່ລະໜ່ວຍປະຕິບັດງານ.

| ງົບປະມານລົງທຶນທີ່ຕ້ອງການ (ລ້ານກີບ) | 2011 | 2012 | 2013 | 2014 | 2015 | Total | ເປີເຊັນສ່ວນແບ່ງ |
|---|---|---|---|---|---|---|---|
| ການສຶກສາກ່ອນໄວຮຽນ ແລະ ປະຖົມສຶກສາ | 455,436 | 404,204 | 482,257 | 433,064 | 426,004 | 2,200,965 | 33% |
| ມັດທະຍົມສຶກສາ | 218,369 | 220,701 | 217,219 | 239,069 | 260,637 | 1,155,996 | 17% |
| ອາຊີວະສຶກສາ | 209,862 | 209,129 | 205,629 | 208,029 | 152,370 | 985,020 | 15% |
| ການສຶກສາຊັ້ນສູງ | 165,424 | 170,824 | 160,624 | 160,624 | 164,249 | 821,745 | 12% |
| ການສຶກສາຄູ | 61,055 | 60,226 | 84,373 | 113,321 | 113,321 | 432,296 | 6% |
| ການສຶກສານອກໂຮງຮຽນ | 18,740 | 17,322 | 16,217 | 16,172 | 16,172 | 84,622 | 1% |
| ການສຶກສາພາກເອກະຊົນ | 700 | 700 | 700 | 700 | 700 | 3,500 | 0.05% |
| ພະລະສຶກສາ ແລະ ສິລະປະສຶກສາ | 34,012 | 32,869 | 28,004 | 25,789 | 21,701 | 142,374 | 2% |
| ການສຶກສາຮຽນຮ່ວມ | 86,073 | 79,749 | 70,341 | 58,927 | 47,727 | 342,817 | 5% |
| ໜ່ວຍງານບໍລິຫານ | 99,487 | 100,337 | 106,890 | 100,770 | 148,770 | 556,254 | 8% |

ຮູບທີ 5: ໄດ້ແຍກໃຫ້ເຫັນເຖິງງົບປະມານລົງທຶນທີ່ຕ້ອງການຂອງແຕ່ລະກົມອ້ອມຂ້າງກະຊວງ ພ້ອມທັງໄດ້ສະແດງເຖິງເປີເຊັນສ່ວນແບ່ງຂອງເງິນລົງທຶນທີ່ຕ້ອງການ ແລະ ເປີເຊັນສ່ວນແບ່ງຂອງການລົງທຶນທີ່ມີແຫຼ່ງທຶນແລ້ວ.

ຮູບທີ 5: ເປີເຊັນສ່ວນແບ່ງເງິນລົງທຶນທີ່ຕ້ອງການຂອງແຕ່ລະກົມ ແລະ ສູນອ້ອມຂ້າງກະຊວງ




ຕາຕະລາງ 5: ສະແດງເຖິງທຶນຈາກແຕ່ລະແຫຼ່ງທຶນ

| | 2011 | 2012 | 2013 | 2014 | 2015 | ລວມ |
|---|---|---|---|---|---|---|
| ອົງການການເງິນສາກົນ ລວມທັງ AusAID | 356,495 | 356,495 | 329,497 | 157,897 | 122,019 | 1,322,401 |
| ຮ່ວມມືສອງຝ່າຍ | 378,786 | 347,561 | 314,961 | 266,761 | 229,805 | 1,537,874 |
| UN | 108,629 | 56,362 | 55,923 | 970 | 970 | 222,854 |
| NGO | 66,889 | 44,408 | 43,855 | 39,859 | 39,442 | 234,453 |
| ລັດຖະບານ | 208,892 | 215,066 | 213,158 | 222,975 | 280,217 | 1,140,308 |
| ເອກະຊົນ | 4,131 | 4,131 | 4,144 | 4,144 | 4,144 | 20,693 |

ໝາຍເຫດ: ບໍ່ລວມງົບປະມານທີ່ຍັງບໍ່ທັນມີແຫຼ່ງທຶນ

ຮູບທີ 6: ໄດ້ສະແດງເຖິງເປີເຊັນສ່ວນແບ່ງຂອງທຶນທີ່ມີແລ້ວ ຂອງແຕ່ລະແຫຼ່ງທຶນ.




ໝາຍເຫດ: ບໍ່ລວມງົບປະມານທີ່ຍັງບໍ່ທັນມີແຫຼ່ງທຶນ

- ແຜນການປະຈໍາປີຂອງຂະແໜງການທີ່ມີການຄິດໄລ່ມູນຄ່າ.

ຮູບແບບໃນການຈັດຕັ້ງປະຕິບັດແຜນ 5 ປີ ແມ່ນຈະໄດ້ໄປຜັນຂະຫຍາຍເປັນແຜນການປະຈໍາປີທີ່ມີການຄິດໄລ່ມູນຄ່າ ທັງສູນກາງ ແລະ ທ້ອງຖິ່ນ. ແຜນປະຈໍາປີດັ່ງກ່າວນີ້ຈະໄດ້ແຍກໃຫ້ເຫັນຢ່າງຊັດເຈນລະຫວ່າງງົບປະມານບໍລິຫານ ແລະ ງົບປະມານລົງທຶນຂອງແຕ່ລະຂະແໜງການຍ່ອຍ ແລະ ນອກຈາກນັ້ນມັນຍັງໄດ້ກໍານົດກິດຈະກໍາ ເພື່ອໃຫ້ສອດຄ່ອງກັບນະໂຍບາຍຂອງແຜນ 5 ປີ.

# ພາກທີ IV: ມາດຕະການ ແລະ ວິທີການຈັດຕັ້ງປະຕິບັດ

## 1. ການແບ່ງປັນຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດ

ຕາມຂໍ້ຕົກລົງລັດຖະມົນວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບການຈັດຕັ້ງປະຕິບັດຂອບພັດທະນາຂະແໜງການສຶກສາ ແຕ່ປີ 2009-2015[7]. ຢູ່ໃນຂໍ້ຕົກລົງດັ່ງກ່າວໄດ້ແຕ່ງຕັ້ງຄະນະກຳມະການຮັບຜິດຊອບຈັດຕັ້ງປະຕິບັດຂອບພັດທະນາຂະແໜງການສຶກສາ ໂດຍການເປັນປະທານຂອງທ່ານລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ແຕ່ງຕັ້ງຫົວໜ້າກົມແຜນການ ແລະ ການຮ່ວມມືເປັນຫົວໜ້າກອງເລຂາຄະນະກຳມະການຮັບຜິດຊອບການຈັດຕັ້ງປະຕິບັດຂອບພັດທະນາຂະແໜງການສຶກສາ.

ຄະນະຮັບຜິດຊອບປະສານງານຂອງໜ່ວຍງານວິຊາການຂອງຂະແໜງການສຶກສາ ໃນການພັດທະນາ ແລະ ຈັດຕັ້ງປະຕິບັດແຜນປະຕິບັດງານຂອງ ຂອບພັດທະນາຂະແໜງການສຶກສາ ໄດ້ຖືກແບ່ງເປັນ 3 ຄະນະດັ່ງລຸ່ມນີ້:

- ຄະນະຮັບຜິດຊອບການປະສານງານດ້ານການສຶກສາຂັ້ນພື້ນຖານ.
- ຄະນະຮັບຜິດຊອບການປະສານງານດ້ານການຫຼັງການສຶກສາພື້ນຖານ.
- ຄະນະຮັບຜິດຊອບການປະສານງານດ້ານການບໍລິຫານ, ຄຸ້ມຄອງ ແລະ ການຕິດຕາມປະເມີນຜົນການປະຕິບັດງານຂອງຂະແໜງການສຶກສາ.

ໜ້າທີ່ຫຼັກຂອງຄະນະດັ່ງກ່າວນີ້ ແມ່ນນຳພາໃນຂະບວນການພັດທະນາແຜນປະຕິບັດງານປະຈຳ 3 ປີ ແລະ 5 ປີ ໂດຍປະສານສົມທົບກັບທີ່ປຶກສາທັງພາຍໃນ ແລະ ຕ່າງປະເທດ ແລະ ພະນັກງານຄູ່ຮ່ວມພັດທະນາ. ໜ່ວຍງານວິຊາການດັ່ງກ່າວນີ້ ຍັງເປັນກົນໄກໜ່ວຍງານວິຊາການຂະແໜງການສຶກສາ ແລະ ຈະໄດ້ທົດລອງປະຕິບັດຢູ່ຂັ້ນແຂວງ.

ຄະນະຮັບຜິດຊອບການຄົ້ນຄວ້າ ແລະ ວິໄຈຂອງຂະແໜງການສຶກສາກໍໄດ້ສ້າງຂຶ້ນ ເພື່ອທົບທວນ ແລະ ກຳນົດຂອບເຂດການຄົ້ນຄວ້າທີ່ຈະໄດ້ປະຕິບັດໃນອານາຄົດ ແລະ ເພື່ອເປັນການປັບປຸງການພັດທະນາຂະແໜງການ, ພ້ອມດຽວກັນນັ້ນຍັງເປັນຄະນະວິຊາການທີ່ສະໜັບສະໜູນການປະຕິບັດງານຂອງຄະນະຮັບຜິດຊອບການຈັດຕັ້ງປະຕິບັດຂອບພັດທະນາຂະແໜງການສຶກສາ ແລະ ຄະນະຮັບຜິດຊອບປະສານງານອື່ນອີກ ໃນການວິໃຈວຽກງານທີ່ຈຳເປັນ.

[7] ຂໍ້ຕົກລົງຂອງລັດຖະມົນຕີວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບປະຕິບັດຂອບພັດທະນາຂະແໜງການສຶກສາ 2009-2015, ເລກທີ 209/ສສ.ຜຮ/11, ລົງວັນທີ 24 ມັງກອນ 2011.

## 2. ຊັບພະຍາກອນສຳລັບການຈັດຕັ້ງປະຕິບັດບັນດາແຜນງານຕ່າງໆ

ການນຳໃຊ້ແຫຼ່ງຊັບພະຍາກອນໃນການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດສັງຄົມແຫ່ງຊາດ ຄັ້ງທີ 7 ແມ່ນຈະໄດ້ມາຈາກແຫຼ່ງຊັບພະຍາກອນດັ່ງຕໍ່ໄປນີ້. ຂໍ້ມູນທີ່ຕ້ອງການຂອງແຫຼ່ງຊັບພະຍາກອນທັງໝົດແມ່ນກຳນົດໄວ້ຢູ່ໃນພາກທີ 3.

- ການຈັດສັນງົບປະມານຂອງລັດໃຫ້ກະຊວງສຶກສາ ແລະ ກິລາ ແລະ ບັນດາກົມທີ່ກ່ຽວຂ້ອງ
- ການຈັດສັນງົບປະມານຂອງແຂວງໃຫ້ຫ້ອງການສຶກສາປະຈຳແຂວງ
- ການຊ່ວຍເຫຼືອລ້າ ແລະ ກູ້ຢືມຈາກຄູ່ຮ່ວມພັດທະນາ
- ຊັບພະຍາກອນອື່ນໆ ລວມທັງອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານທັງພາຍໃນ ແລະ ຕ່າງປະເທດ.
- ການຈັດສັນງົບປະມານຈາກລາຍຮັບຈາກນ້ຳເທີນ 2.

## 3. ຄູ່ມືແນະນຳລວມ

ປະຕິບັດຕາມຄຳສັ່ງແນະນຳຂອງລັດຖະມົນຕີວ່າດ້ວຍການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດຂອບພັດທະນາຂະແໜງການສຶກສາ 2009-2015[8]. ໃນຄຳສັ່ງແນະນຳດັ່ງກ່າວແມ່ນໄດ້ກຳນົດພາລະບົດບາດ ແລະ ຄວາມຮັບຜິດຊອບໃນການເຜີຍແຜ່ ຊຶ່ງລວມມີ:

- ຄະນະກຳມະການຂັ້ນເມືອງ ແລະ ແຂວງທີ່ຮັບຜິດຊອບແຜນປະຕິບັດງານແຫ່ງຊາດກ່ຽວການສຶກສາເພື່ອທຸກຄົນ.
- ໜ່ວຍງານຂໍ້ມູນຂ່າວສານຂອງສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ
- ສູນສະຖິຕິ ແລະ ເຕັກໂນໂລຊີຂໍ້ມູນຂ່າວສານການສຶກສາ ໂດຍຜ່ານເວບໄຊຂອງກະຊວງສຶກສາທິການ ແລະ ກິລາ

## 4. ການແບ່ງປັນຄວາມຮັບຜິດຊອບໃນການຕິດຕາມຂອງຂະແໜງການເພື່ອປັບປຸງຜົນການຈັດຕັ້ງປະຕິບັດ

ເພື່ອເນັ້ນໃຫ້ເກີດຜົນສຳເລັດຕົວຈິງຫຼາຍຂຶ້ນ ໃນການຕິດຕາມຂະແໜງການຈຶ່ງສະເໜີແບ່ງໜ້າທີ່ຮັບຜິດຊອບຂອງແຕ່ລະຂັ້ນດັ່ງຕໍ່ໄປນີ້:

- ຂັ້ນສູນກາງ, ກະຊວງສຶກສາທິການ ແລະ ກິລາຈະມີໜ້າທີ່ຮັບຜິດຊອບ ໃນການປະສານງານລວມຂອງຂະບວນການທົບທວນການປະຕິບັດງານຂອງຂະແໜງການ, ຕິດຕາມກວດກາຜົນໄດ້ຮັບ, ລາຍງານໃຫ້ຜູ້ທີ່ມີສ່ວນກ່ຽວຂ້ອງລະດັບສູງ (ຕົວຢ່າງ: ສະພາແຫ່ງຊາດ, ກະຊວງການເງິນ, ກະຊວງແຜນການ ແລະ ການລົງທຶນ, ກະຊວງພາຍໃນ) ແລະ ຕິດຕາມການທົບທວນນະໂຍບາຍ ແລະ ຍຸດ

---

[8] ຄຳສັ່ງແນະນຳຂອງລັດຖະມົນຕີວ່າດ້ວຍການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດຂອບພັດທະນາຂະແໜງການສຶກສາ 2009-2015, ສະບັບເລກທີ 1243/ສສ.ພຮ/09, ລົງວັນທີ 18 ທັນວາ 2009.

ທະສາດ ແລະ ຂັ້ນຕອນຂອງການປຶກສາເຈລະຈາ, ລວມທັງກັບຜູ້ທີ່ມີສ່ວນຮ່ວມກ່ຽວຂ້ອງຂອງສາກົນ ແລະ ຄູ່ຮ່ວມພັດທະນາອື່ນໆ.

- ຂັ້ນພະແນກສຶກສາທິການປະຈຳແຂວງ ຈະຄຸ້ມຄອງດ້ານວິຊາການຂອງການຕິດຕາມຄຸ້ມຄອງການປະຕິບັດງານໂດຍການສັງລວມຜົນກະທົບ ແລະ ການລາຍງານຄວາມຄືບໜ້າຂອງແຜນງານຕ່າງ ໆ, ບົດລາຍງານແຜນງານສະເພາະ ຂອງລັດຖະບານ/ ຜູ້ໃຫ້ທຶນ/ ອົງການບໍ່ສັງກັດລັດ ແລະແຫຼ່ງຂໍ້ມູນອື່ນໆ. ນອກຈາກນັ້ນ, ພະແນກສຶກສາທິການປະຈຳແຂວງ ຈະເຮັດການສຳຫຼວດສະເພາະກ່ຽວກັບຜົນກະທົບ ແລະ ການວິໄຈຜົນການປະຕິບັດງານ ໂດຍການອະນຸມັດ ຮັບຮອງຈາກກະຊວງສຶກ ສາທິການ ແລະ ກິລາ ແລະ ບັນດາທ່ານເຈົ້າແຂວງ.
- ພະແນກສຶກສາທິການປະຈຳແຂວງ ໂດຍການຮ່ວມມືກັບຫ້ອງການສຶກສາ ທິການປະຈຳເມືອງຈະມີໜ້າທີ່ຮັບຜິດຊອບສັງລວມການປະສານງານ ເພື່ອລາຍງານການປະຕິບັດງານປະຈຳປີ ຂອງຂະແໜງການຂອງແຂວງ ແລະ ລາຍງານຜົນງານການປະຕິບັດດ້ານການເງິນປະຈຳປີ ຂອງແຂວງຊຶ່ງເປັນໜ້າທີ່ສ່ວນໜຶ່ງຂອງຂັ້ນຕອນໃນການຮ່ວມມື ການທົບທວນການປະຕິບັດງານ ຂອງຂະແໜງການຂັ້ນແຂວງ. ຫ້ອງການນີ້ຈະມີໜ້າທີ່ຮັບຜິດຊອບ ໃນການປະສານງານບົດລາຍງານຂອງຂະແໜງການ, ກ່ຽວກັບການຕິດຕາມຄວາມຄືບໜ້າ ແລະ ຜົນກະທົບຂອງແຜນງານ. ບັນດາບົດລາຍງານເຫຼົ່ານີ້ ຈະປະກອບເຂົ້າໃນບົດລາຍງານກ່ຽວກັບການປະຕິບັດງານຂອງຂະແໜງການລະດັບຊາດທີ່ປະສານໂດຍກະຊວງສຶກສາທິການ ແລະ ກິລາ.
- ອົງການກວດສອບບັນຊີແຫ່ງລັດຂັ້ນສູນກາງ ແລະ ຂັ້ນແຂວງ, ຮ່ວມກັບກະຊວງສຶກສາທິການ ແລະກິລາ ແລະ ການຮ່ວມມືຂອງພະແນກສຶກສາ ທິການປະຈຳແຂວງ ແລະ ຫ້ອງການສຶກສາ ທິການປະຈຳເມືອງຈະ ປະສານການຕິດຕາມການຄຸ້ມຄອງການປະຕິບັດການລວມດ້ານການເງິນ, ກວມເຖິງການຕິດຕາມ ການປ່ອຍເງິນ ແລະ ການໃຊ້ຈ່າຍເງິນຂອງແຜນງານ. ອົງການກວດສອບບັນຊີຈະເຮັດການສຳ ຫຼວດເພື່ອຮັບປະກັນວ່າ ລະບຽບການດ້ານການເງິນຂອງລັດຖະບານ ຈະໄດ້ຖືກປະຕິບັດຢ່າງຖືກຕ້ອງ, ກວມເຖິງການກວດສອບການປະຕິບັດງານຂອງ ແຜນງານປະຈຳປີ ແລະກວດສອບບັນ ຊີການເງິນຂອງແຜນງານສະເພາະ ແລະ ບັນດາສູນຄຸ້ມຄອງງົບປະມານ.
- ບັນດາກົມຢູ່ຂັ້ນສູນກາງ, ໂດຍການມີສ່ວນຮ່ວມ ຂອງພະແນກສຶກສາທິການປະຈຳແຂວງຈະປະສານການປະເມີນການປະຕິບັດງານຂອງຂະແໜງການຍ່ອຍ ແລະ ຂະບວນການທົບທວນ ແລະປະສານການຕິດຕາມຄຸ້ມຄອງຄວາມຄືບໜ້າ ແລະ ຜົນກະທົບຂອງແຜນງານທີ່ໄດ້ຕົກລົງເຫັນດີໂດຍບັນດາກົມຕ່າງໆ, ຊຶ່ງຈະເປັນທັງຜູ້ຮັບຜິດຊອບການປະສານການລາຍງານ ກ່ຽວກັບການຕິດຕາມຄຸ້ມຄອງການປະຕິບັດງານ ແລະ ການປະເມີນທີ່ໄດ້ຕົກລົງເຫັນດີ ແລະ ລົງໄປທົບທວນຢ່າງເປັນປົກກະຕິຮ່ວມກັບພະນັກງານອາວຸໂສຂອງກົມຢູ່ແຂວງ ແລະ ເມືອງ.

## ເອກະສານຊ້ອນທ້າຍ 1: ຕາຕະລາງແຜນພັດທະນາຂະແໜງການສຶກສາຕາມນະໂຍບາຍ ແລະ ຍຸດທະສາດຂອງ ຂອບພັດທະນາຂະແໜງການສຶກສາ

| ແຜນງານທີ 1: ການຂະຫຍາຍໂອກາດເຂົ້າຮຽນຢ່າງທົ່ວເຖິງ | | | ຄາດໝາຍ | ນິຕິກຳທີ່ຕ້ອງການ | ພາກສ່ວນຮັບຜິດຊອບ | ບ່ອນອີງ ໃນ ຂພສສ (ສະບັບພາສາອັງກິດ) |
|---|---|---|---|---|---|---|
| 1.1 | **ການຫຼຸດຜ່ອນຄ່າໃຊ້ຈ່າຍຕ່າງໆທີ່ເປັນອຸປະສັກຕໍ່ການສຶກສາ** | | | • ຄຳສັ່ງແນະນຳລະຫວ່າງກະຊວງສຶກສາທິການ ແລະ ກະຊວງການເງິນກ່ຽວກັບທຶນບໍລິຫານໂຮງຮຽນ<br>• ຄຳສັ່ງແນະນຳກ່ຽວກັບການລົບລ້າງຄ່າທຳນຽມສຳລັບຊັ້ນອະນຸບານ, ປະຖົມສຶກສາ ແລະ ມັດທະຍົມຕອນຕົ້ນ<br>• ດຳລັດນາຍົກລັດຖະມົນຕີວ່າດ້ວຍເພື່ອຊີ້ແຈງກ່ຽວກັບການລົບລ້າງຄ່າທຳນຽມ | • ກົມການເງິນ, ກົມຈັດຕັ້ງ ແລະ ພະນັກງານ (ສູນຄົ້ນຄວ້າຍຸດທະສາດ ແລະ ການວິໄຈການສຶກສາ ແລະ ກົມວິຊາການທີ່ກ່ຽວຂ້ອງ) | ໜ້າທີ 33 |
| | 1.1.1. | ລົບລ້າງຄ່າລົງທະບຽນເຂົ້າຮຽນ ແລະ ຄ່າທຳນຽມອື່ນໆ ສຳລັບຊັ້ນຮຽນຂອງເດັກກ່ອນໄວຮຽນ, ກຸ່ມຫຼິ້ນເພື່ອຮຽນ, ຊັ້ນປະຖົມສຶກສາ, ມັດທະຍົມຕອນຕົ້ນ, ການສຶກສານອກໂຮງຮຽນ ແລະ ການສຶກສາຄູ | • ການລົບລ້າງຄ່າລົງທະບຽນ ແລະ ຄ່າທຳນຽມຕ່າງໆ ສຳ ລັບຊັ້ນອານຸບານ ແລະ ປະຖົມສຶກສາ ແລະ ມັດທະຍົມ ຕອນຕົ້ນ ໃຫ້ໄດ້ປະຕິບັດແຕ່ປີ 2011 ເປັນຕົ້ນໄປ, ສຳລັບຊັ້ນມັດທະຍົມ ແມ່ນເລີ່ມປະຕິບັດແຕ່ປີ 2013 ແລະ ສຳລັບສະຖາບັນສ້າງຄູ ແມ່ນເລີ່ມປະຕິບັດແຕ່ ປີ 2015.[9] ໃນບັນດາເມືອງທີ່ເປັນບຸລິມະສິດ[10] | • ຂໍ້ຕົກລົງລັດຖະມົນຕີ ແລະ ຄຳສັ່ງແນະນຳກ່ຽວກັບການຈັດຕັ້ງປະຕິບັດ<br>• ຄູ່ມືການຝຶກອົບຮົມ ຕ້ອງສຳເລັດກ່ອນ ເດືອນ ທັນວາ ປີ 2010<br>• ຄຳສັ່ງແນະນຳໃນປີ 2010 ເພື່ອຈັດຕັ້ງປະຕິບັດການທົດລອງລົບລ້າງຄ່າໃຊ້ຈ່າຍຕ່າງໆ ໃນ 56<br>• ກົນໄກການຕິດຕາມທີ່ມີຄວາມສອດຄ່ອງ<br>• ໂຄສະນາເຜີຍແຜ່ | • ກົມການເງິນ (ກົມຈັດຕັ້ງ ແລະ ພະນັກງານ ແລະ ກົມທີ່ກ່ຽວຂ້ອງ) | ໜ້າທີ 34 |

[9] ຂພສສ ໄດ້ມີເປົ້າໝາຍໃນເມືອກ່ອນ ແຕ່ຍັງບໍ່ຖືກຕ້ອງຕາມຄວາມເປັນຈິງ. ຕາຕະລາງກຽມປະຕິບັດແຜນພັດທະນາຂະແໜງການສຶກສາຕາມນະໂຍບາຍ ແລະ ຍຸດທະສາດຂອງ ຂພສສ ດັ່ງກ່າວນີ້ມີເປົ້າໝາຍທີ່ເໝາະສົມກວ່າ

[10] ຂພສສ ໄດ້ກຳນົດເອົາ 47 ທີ່ທຸກທີ່ສຸດເປັນບຸລິມະສິດ. ນັບແຕ່ ຂພສສໄດ້ຖືກຮັບຮອງ, ກະຊວງສຶກສາທິການໄດ້ກຳນົດເອົາ 56 ເມືອງທີ່ດ້ອຍໂອກາດທາງການສຶກສາເປັນບຸລິມະສິດ

| | | | | | |
|---|---|---|---|---|---|
| 1.1.2. | ນຳໃຊ້ທຶນບໍລິຫານໂຮງຮຽນເພື່ອທົດແທນການລົບລ້າງການເກັບຄ່າທຳນຽມສຳລັບການບໍລິຫານໂຮງຮຽນ (ນອກຈາກເງິນເດືອນ) ແລະ ແຜນພັດທະນາໂຮງຮຽນ | • ເລີ່ມແຕ່ສົກປີ 2011- 2012 ເປັນຕົ້ນໄປ<br>• ຈັດຕັ້ງປະຕິບັດໃນຂັ້ນປະຖົມ ແລະ ມັດທະຍົມສຶກສາ ໃນ 56 ເມືອງທີ່ດ້ອຍໂອກາດ<br>• ທຶນບໍລິຫານໂຮງຮຽນ ຈະກວມເອົາຄ່າໃຊ້ຈ່າຍສຳລັບການສຶກສາຮຽນຮ່ວມ | • ຄຳສັ່ງແນະນຳແລະ ຄູ່ມືການນຳໃຊທຶນບໍລິຫານໂຮງຮຽນ<br>• ພ້ອມດ້ວຍກຳນົດໝາຍງົບປະມານໂດຍກະຊວງການເງິນ<br>• ດຳລັດຈັດຕັ້ງປະຕິບັດກົດໝາຍການສຶກສາສະບັບປັບປຸງ | • ກົມການເງິນ<br>• (ກົມຈັດຕັ້ງ ແລະ ພະນັກງານ ແລະ ກົມແຜນການ ແລະ ການຮ່ວມມື) | ໜ້າທີ 33-34 |
| 1.1.3. | ສ້າງແຜນກຽມຄວາມພ້ອມໃຫ້ແກ່ເດັກທີ່ຈະ ເຂົ້າໂຮງຮຽນປະຖົມສຶກສາ | • ໃນປີ 2015 ຕ້ອງໃຫ້ເດັກອາຍຸ 3-5 ປີ ໄດ້ເຂົ້າອະນຸບານ ແລະ ຫ້ອງກຽມ ປະຖົມສຶກສາ 39%<br>• ບັນລຸອັດຕາການເຂົ້າຮຽນໃໝ່ສຸດທິ 26% ຂອງເດັກອາຍຸ 5 ປີ ໃນປີ 2015.<br>• ບັນລຸອັດຕາການ ເຂົ້າຮຽນ 17% ສຳລັບເດັກ ອາຍຸ 3 ແລະ 4 ປີ ໃນປີ 2015.<br>• ບັນລຸອັດຕາ ການເຂົ້າຮຽນ 55% ຂອງເດັກອາຍຸ 5 ປີ ໃນປີ 2015.<br>• ບັນລຸອັດຕາການ ເຂົ້າຮຽນ 30% ສຳລັບເດັກກຸ່ມຫຼົ້ນເພື່ອຮຽນ ອາຍຸ 3 ແລະ 5 ປີ<br>• ບັນລຸອັດຕາການເຂົ້າຮຽນ 30% ໃນອະນຸບານພາກເອກະຊົນ ໃນປີ 2010. | • ຂໍ້ຕົກລົງລັດຖະມົນຕີວ່າດ້ວຍວິທີການປະຕິບັດການສຶກສາເດັກກ່ອນໄວຮຽນ ລວມທັງ ກຸ່ມຫຼິ້ນເພື່ອຮຽນ<br>• ຂໍ້ຕົກລົງລັດຖະມົນຕວ່າດ້ວຍການນຳໃຊ້ຫຼັກສູດການສຶກສາເດັກກ່ອນໄວຮຽນ | • ກົມປະຖົມ ແລະ ອະນຸບານສຶກສາ | ໜ້າທີ 22 & 33 |
| 1.1.4. | ສະໜອງເງິນອຸດໜູນ ແລະ ທຶນການສຶກສາຢ່າງມີເປົ້າໝາຍສຳລັບເດັກທີ່ມາຈາກຄອບຄົວທຸກຍາກ | • ຂະຫຍາຍໂຄງການອາຫານເສີມ ໃຫ້ 39 ເມືອງໃນປີ 2015.<br>• ຂະຫຍາຍທຶນການສຶກສາສຳລັບນັກຮຽນ ມ.1-ມ.4 ໃຫ້ໄດ້ 20 % ຂອງຈຳນວນນັກຮຽນ ທັງໝົດ, ນັບແຕ່ປີ 2010 ເປັນຕົ້ນໄປໂດຍເລີ່ມຈາກ 56 ເມືອງທີ່ດ້ອຍໂອກາດທາງດ້ານການສຶກສາ | • ດຳລັດນາຍົກລັດຖະມົນຕີວ່າດ້ວຍການສະໜອງເງິນອຸດໜູນການສຶກສາ ແລະ ທຶນການສຶກສາໃຫ້ແກ່ນັກຮຽນ ຈາກຄອບຄົວ ທຸກຍາກແຕ່ ມ.1 - ມ.4 ແລະ ນັກຮຽນ ເປົ້າໝາຍ ປ.1 - ປ.5. | • ສູນການສຶກສາຮຽນຮ່ວມ, (ກົມການເງິນ, ກົມມັດທະຍົມສຶກສາ, ກົມຄຸ້ມຄອງ ການສຶກສາພາກເອກກະຊົນ, ພະແນກສຶກສາທິການແຂວງ) | ໜ້າທີ 34 |
| 1.1.5. | ສະໜອງທຶນການສຶກສາໃຫ້ນັກຮຽນຄູທີ່ມີເງື່ອນໄຂທີ່ຈະໄປປະຈຳການຢູ່ເຂດ | • ນັກຮຽນທຸກຄົນທີ່ເຂົ້າຮຽນໃນໂຮງຮຽນສ້າງຄູໄດ້ ຮັບທຶນການສຶກສາ ໃນປີ 2010 | • ດຳລັດນາຍົກລັດຖະມົນຕີ | • ກົມສ້າງຄູ | ໜ້າທີ 34 |

| | | | | | | |
|---|---|---|---|---|---|---|
| | | ຫ່າງໄກສອກຫຼີກ | • ກະຊວງສ້າງແຜນແມ່ບົດກ່ຽວກັບການພັດທະນາ ລະບົບການສຶກສາຄູ ໃນປີ 2011 (ອີງຕາມ ຈຸດປະສົງທີ 6.1 - 6.12 ຂອງແຜນປະຕິບັດງານແຫ່ງຊາດ ການສຶກສາ ເພື່ອທຸກຄົນ). | | | |
| | 1.1.6. | ສະໜອງທຶນສຶກສາໃຫ້ແກ່ນັກຮຽນທີ່ທຸກ ຍາກຂອງຊັ້ນ ມັດທະຍົມຕອນປາຍ, ອາຊີວະສຶກສາ - ອົບຮົມວິຊາຊີບ ແລະ ມະຫາວິທະຍາໄລ. | • 30% ແມ່ນມາຈາກແຂວງທີ່ບໍ່ມີມະຫາວິທະຍາໄລ<br>• ສະໜອງທຶນການສຶກສາໃຫ້ໄດ້ປະມານ 20% ຂອງຊັ້ນ ມັດທະຍົມຕອນປາຍ, ອາຊີວະສຶກສາ - ອົບຮົມວິຊາ ຊີບ ແລະ ມະຫາວິທະຍາໄລ. | • ດຳລັດນາຍົກລັດຖະມົນຕີ ຫຼື ລະບຽບການ ແລະ ຄຳສັ່ງແນະນຳກ່ຽວກັບການຄັດເລືອກນັກຮຽນເປົ້າໝາຍ | • ກົມມັດທະຍົມສຶກສາ | ໜ້າທີ 31, 34 |
| **1.2.** | **ການຫຼຸດຜ່ອນການຄ້າງຫ້ອງ ແລະ ການປະລະ ການຮຽນ** | | | • ຂໍ້ຕົກລົງລັດຖະມົນຕີ, ຄຳສັ່ງແນະນຳ ແລະ ຄູ່ມືປະຕິບັດກ່ຽວກັບການ ເລື່ອນ ຊັ້ນແບບຕໍ່ເນື່ອງໂດຍມີການສອນບຳລຸງໃຫ້ແກ່ນັກຮຽນອ່ອນໃນການສຶກສາຂັ້ນພື້ນຖານ.<br>• ຄຳສັ່ງແນະນຳກ່ຽວກັບການຂະຫຍາຍຫ້ອງຮຽນໃຫ້ຄົບ 5 ຊັ້ນ ຫຼື ໃຫ້ເປັນໂຮງຮຽນປະຖົມສົມບູນ<br>• ຮັບຮອງການນຳໃຊ້ຮູບແບບການພັດທະນາໂຮງຮຽນຄຸນນະພາບ | • ກົມປະຖົມ ແລະ ອະນຸບານສຶກສາ, ກົມມັດທະຍົມສຶກສາ, ສູນສະຖິຕິ- ເຕັກໂນໂລຊີຂ່າວສານການ ສຶກສາ, ກົມສ້າງຄູ, (ສູນຄົ້ນຄວ້າຍຸດທະສາດ ແລະ ການວິໄຈການສຶກສາ) | ໜ້າທີ 34-35 |
| | 1.2.1. | ເລື່ອນຂັ້ນແບບຕໍ່ເນື່ອງໂດຍການສອນບຳລຸງໃຫ້ແກ່ນັກຮຽນອ່ອນໃນການສຶກສາຂັ້ນພື້ນຖານ | • ອັດຕາການຄ້າງຫ້ອງ ປ.1 ໃຫ້ ເຫຼືອສູງສຸດ 3% ຕາມຄາດໝາຍ EFA ໃນປີ 2015 | • ຄຳສັ່ງແນະນຳຂອງລັດຖະມົນຕີ | • ກົມປະຖົມ ແລະ ອະນຸບານສຶກສາ, ກົມມັດທະຍົມສຶກສາ, | ໜ້າທີ 21-23 |
| | 1.2.2. | ສະໜອງເງິນອຸດໜູນ ແລະ ໃຫ້ທຶນການສຶກສາສຳລັບນັກຮຽນທີ່ມາຈາກຄອບຄົວທຸກຍາກທີ່ສຸດ | • ໃຫ້ທຶນການສຶກສາ 20% ຂອງຈຳນວນນັກຮຽນ ມ1-ມ4 ໃນ 56 ເມືອງ ເລີ່ມແຕ່ປີ 2010 ເປັນຕົ້ນໄປ | • ຄຳສັ່ງແນະນຳຂອງລັດຖະມົນຕີ ແລະ ຄູ່ມືການຈັດຕັ້ງປະຕິບັດ<br>• ດຳລັດນາຍົກລັດຖະມົນຕີກ່ຽວກັບການສະໜອງເງິນອຸດໜູນການສຶກສາ ແລະ ທຶນການສຶກສາໃຫ້ແກ່ນັກຮຽນ ຈາກຄອບຄົວທຸກຍາກ ແຕ່ ມ.1 - ມ.4 ແລະ ນັກຮຽນເປົ້າໝາຍ ປ.1 - ປ.5. | • ສູນການສຶກສາຮຽນຮ່ວມ | ໜ້າທີ 34 |
| | 1.2.3. | ຂະຫຍາຍໂຄງການອາຫານເສີມໃນໂຮງ | • ເລີ່ມແຕ່ປີ 2010 ເປັນຕົ້ນໄປ | • ຄຳສັ່ງແນະນຳຂອງລັດຖະມົນຕີ ແລະ ຄູ່ມືການຈັດຕັ້ງ | • ສູນການສຶກສາຮຽນຮ່ວມ | ໜ້າທີ 13, 20 ແລະ |

| | | | | | | |
|---|---|---|---|---|---|---|
| | | ຮຽນສຳລັບເດັກອາຍຸ 6 ປີ ( 2010 ) | • ຈັດຕັ້ງປະຕິບັດໃນໂຮງຮຽນປະຖົມສຶກສາທີ່ນອນຢູ່ໃນ 39 ເມືອງ | ປະຕິບັດ | | 22 |
| | 1.2.4. | ຂະຫຍາຍໂຄງການໂພຊະນາການ, ໂດຍຊຸມຊົນມີສ່ວນຮ່ວມສຳ ລັບເດັກ ອາຍຸ 5 ປີ (2011/2012) | • ເລີ່ມແຕ່ປີ 2011 ເປັນຕົ້ນໄປ<br>• ສ້າງຍຸດທະສາດ ແລະ ແຜນປະສານງານໃຫ້ສຳເລັດໃນທ້າຍປີ 2010 | • ຂໍ້ຕົກລົງລັດຖະມົນຕີ | • ສູນການສຶກສາຮຽນຮ່ວມ | ໜ້າທີ 13, 20, 33 ແລະ 35 |
| | 1.2.5. | ປັບປຸງລະບຽບການເຂົ້າຮຽນຂອງເດັກອາຍຸ 6 ປີ ເຂົ້າຮຽນຫ້ອງ ປ.1 | • ອັດຕາເຂົ້າຮຽນສຸດທິສຳລັບເດັກນ້ອຍອາຍຸ 6 ປີ ໃຫ້ໄດ້ 98% ໃນປີ 2015 | • ຂໍ້ຕົກລົງລັດຖະມົນຕີ | • ກົມປະຖົມ ແລະ ອະນຸບານສຶກສາ (ກົມຈັດຕັ້ງ ແລະ ພະນັກງານ) | ໜ້າທີ 35 |
| **1.3** | **ການເພີ່ມທະວີການມີສ່ວນຮ່ວມຂອງພາກເອກະຊົນ ແລະ ຊຸມຊົນ** | | | • ຂໍ້ຕົກລົງລັດຖະມົນຕີວ່າດ້ວຍການເຜີຍແຜ່ບົດຮຽນຂອງເມືອງເຟືອງ ແລະ ສາລະຄາມ ກ່ຽວກັບການແຕ່ງຕັ້ງຄະນະພັດທະນາການສຶກສາຂັ້ນເມືອງແລະຂັ້ນບ້ານ<br>• ຂໍ້ຕົກລົງລັດຖະມົນຕີວ່າດ້ວຍການຄຸ້ມຄອງທຶນບໍລິຫານໂຮງຮຽນຂອງຄະນະພັດທະນາການສຶກສາຂັ້ນບ້ານ | • ກົມຄຸ້ມຄອງການສຶກສາພາກເອກະຊົນ, ກົມການສຶກສານອກໂຮງຮຽນ<br>• (ກົມປະຖົມ ແລະ ອະນຸບານສຶະສາ , ກົມມັດທະຍົມສຶກສາ) | ໜ້າທີ 26-27, 32-35,43, 46 (ເອກະຊົນ) ໜ້າທີ 18,28,34,35,40,44 (ຊຸມຊົນ) |
| | 1.3.1. | ວາງນະໂຍບາຍ ແລະ ແຜນຍຸດທະສາດທີ່ເຊື່ອມໂຍງສຳລັບການຮ່ວມມືລະຫວ່າງພາກລັດ ແລະ ພາກເອກະຊົນ | • ສ້າງຍຸດທະສາດ ແລະ ແຜນປະຕິບັດງານລະອຽດໃຫ້ສຳເລັດໃນປີ 2011 | • ດຳລັດນາຍົກລັດຖະມົນຕີ | • ກົມຄຸ້ມຄອງການສຶກສາພາກ ເອກະຊົນ, ກົມຈັດຕັ້ງ ແລະ ພະນັກງານ | ໜ້າທີ 35 |
| | 1.3.2. | ຟື້ນຟູ ແລະ ການຂະຫຍາຍຕາໜ່າງສູນການສຶກສາຊຸມຊົນໂດຍການມີສ່ວນຮ່ວມຂອງຄະນະພັດທະນາການສຶກສາຂັ້ນບ້ານ (ຄພສບ) | • ສ້າງຍຸດທະສາດ ແລະ ແຜນປະຕິບັດງານໃຫ້ສຳເລັດໃນທ້າຍປີ 2011. | • ດຳລັດ/ຂໍ້ຕົກລົງ | • ກົມການສຶກສານອກໂຮງຮຽນ, (ກົມປະຖົມ ແລະ ອະນຸບານສຶກສາ, ກົມມັດທະຍົມສຶກສາ, ກົມຄຸ້ມຄອງການສຶກສາ | ໜ້າທີ 35 |

| | | | | | | |
|---|---|---|---|---|---|---|
| | | | | | ພາກເອກະຊົນ) | |
| **1.4** | **ການນຳໃຊ້ທຶນໃຫ້ຖືກຕ້ອງ ຕາມເປົ້າໝາຍ** | | | • ຂໍ້ຕົກລົງລັດຖະມົນຕີກະຊວງສຶກສາທິການ ແລະ ກະຊວງການເງິນກ່ຽວກັບການສະໜອງທຶນການສຶກສາໃຫ້ນັກຮຽນຄູທີ່ສະໝັກໄປສອນຢູ່ເຂດຫ່າງໄກສອກຫຼີກ<br>• ຂໍ້ຕົກລົງລັດຖະມົນຕີກະຊວງສຶກສາທິການວ່າດ້ວຍນະໂຍບາຍຄູ, ເພດຍິງ ແລະ ຊົນເຜົ່າທີ່ສະໝັກໄປສອນຢູ່ເຂດຫ່າງໄກສອກຫຼີກ | • ກົມແຜນການ ແລະ ການຮ່ວມມື, (ສູນສະຖິຕິ - ເຕັກໂນໂລຊີ ຂ່າວສານການສຶກສາ, ກົມທີ່ກ່ຽວຂ້ອງ) | |
| | 1.4.1. | ສະໜອງຫ້ອງຮຽນໃໝ່ເພີ່ມເຕີມໂດຍມີການສອນຫ້ອງຄວບ | • ໃນປີ 2015 ໃຫ້ສະໜອງໄດ້ 85 % ໃນທົ່ວປະເທດ | • ດຳລັດ ຫຼື ຄຳສັ່ງແນະນຳວ່າດ້ວຍການສອນຫ້ອງຄວບ | • ກົມຈັດຕັ້ງ ແລະ ພະນັກງານ, ກົມປະຖົມ ແລະ ອະນຸບານສຶກສາ, | ໜ້າທີ 35 |
| | 1.4.2. | ສະໜອງຫ້ອງຮຽນເພີ່ມເຕີມໃຫ້ພຽງພໍສຳລັບການສຶກສາຂັ້ນພື້ນຖານ ປ.1- ມ.4 | • ໃນປີ 2015 ສະໜອງໃຫ້ໄດ້ 85%, ໃນອັດຕາສ່ວນໂຮງຮຽນ ມັດທະຍົມຕອນຕົ້ນ 1 ຫຼັງ ຕໍ່ໂຮງຮຽນປະຖົມ 4 ຫຼັງ | • ຂໍ້ຕົກລົງ/ຄຳສັ່ງແນະນຳ | • ກົມແຜນການ ແລະ ການຮ່ວມມື, ກົມການເງິນ ແລະ ກົມວິຊາການທີ່ກ່ຽວຂ້ອງ | ໜ້າທີ 35 |
| | 1.4.3. | ສະໜອງຫ້ອງຮຽນເພີ່ມເຕີມ ແລະ ອຸປະກອນຮັບໃຊ້ສຳລັບ ມັດທະຍົມຕອນ ປາຍ, ສູນອາຊີວະສຶກສາ - ອົບຮົມວິຊາຊີບ. ຍົກລະດັບສະຖາບັນສ້າງຄູເພື່ອເປີດສອນລະດັບປະລິນຍາ | • ສະໜອງສິ່ງອຳນວຍຄວາມສະດວກຕ່າງໆ ພ້ອມດ້ວຍຫໍພັກໃຫ້ໂຮງ ຮຽນ ແລະ ສູນການສຶກສາວິຊາຊີບ<br>• ຂະຫຍາຍສູນເຝິກອົບຮົມວິຊາຊີບໃນທົ່ວປະເທດໃນປີ 2015<br>• ຍົກລະດັບສະຖາບັນສ້າງຄູເພື່ອເປີດສອນລະດັບປະລິນຍາຕີ ໃນປີ 2015 | • ຂໍ້ຕົກລົງ/ຄຳສັ່ງແນະນຳ | • ກົມສ້າງຄູ, ກົມມັດທະຍົມສຶກສາ, ກົມພະລະ ແລະ ສິລະປະສຶກສາ | ໜ້າທີ 35 |
| **1.5** | **ການອຳນວຍຄວາມສະດວກໃນການເຂົ້າຮຽນ, ການເລື່ອນຂັ້ນ ແລະ ການຮຽນ ຈົບຊັ້ນຂອງນັກຮຽນ** | | | • ຂໍ້ຕົກລົງຂອງລັດຖະມົນຕີ ຫຼື ລະບຽບການອື່ນໆ ວ່າດ້ວຍມາດຖານການເຂົ້າຮຽນຂອງນັກຮຽນທີ່ດ້ອຍໂອກາດ. | • ກົມປະຖົມ ແລະ ອະນຸບານສຶກສາ, ກົມມັດທະຍົມສຶກສາ,<br>• ສູນການສຶກສາຮຽນຮ່ວມ, | ໜ້າທີ 15, 20, 23-25,28,32,34, 37 ແລະ 46 |

| | | | | | | |
|---|---|---|---|---|---|---|
| | ທີ່ດ້ອຍໂອກາດໂດຍ ວິທີການຮຽນຮ່ວມ | | | | ກົມການສຶກສານອກໂຮງຮຽນ, ກົມຄຸ້ມຄອງການສຶກສາພາກເອກະຊົນ | |
| | 1.5.1. | ພັດທະນາ ແລະ ຈັດຕັ້ງປະຕິບັດນະໂຍບາຍແຫ່ງຊາດ ວ່າດ້ວຍການສຶກສາ ຮຽນຮ່ວມ | • ສຸມໃສ່ຊົນເຜົ່າ, ບົດບາດຍິງຊາຍ ແລະ ເດັກ ທີ່ມີຄວາມຕ້ອງການພິເສດ ໃນລະບົບສ້າງຄູ | • ຂໍ້ຕົກລົງລັດຖະມົນຕີ ຫຼື ລະບຽບການອື່ນໆ ແລະ ຄູ່ມືການຈັດຕັ້ງປະຕິບັດເງື່ອນໄຂການຄັດເລືອກນັກຮຽນເປົ້າໝາຍ | • ສູນການສຶກສາຮຽນຮ່ວມ, | ໜ້າທີ 23-25 |
| | 1.5.2. | ສ້າງໂຄງການຫຼັກສູດໃໝ່ທີ່ຕອບສະໜອງກັບຄວາມຕ້ອງການຂອງກຸ່ມຄົນທີ່ດ້ອຍໂອກາດ | • ເພື່ອຕອບສະໜອງຕາມຄວາມຕ້ອງການຂອງເດັກຍິງ ນັກຮຽນພິການ ແລະ ຊົນເຜົ່າໃຫ້ສຳເລັດການສ້າງຫຼັກສູດ ປ.1- ມ.4 ພາຍໃນປີ 2015 ໂດຍໃຫ້ມີ 3 ວິຊາຫຼັກໃນຊັ້ນປະຖົມ ແລະ 4 ວິຊາຫຼັກໃນຊັ້ນມັດທະຍົມຕອນຕົ້ນ | • ຄຳສັ່ງແນະນຳຂອງລັດຖະມົນຕີ | • ສູນຄົ້ນຄວ້າຍຸດທະສາດ ແລະ ການວິໄຈການສຶກສາ, (ສູນການສຶກສາຮຽນຮ່ວມ) | ໜ້າທີ 25 |
| | | **ບົດບາດຍິງ-ຊາຍ** | | | | |
| | 1.5.3. | ສະໜອງໂຮງຮຽນໃໝ່ ແລະ ຫ້ອງຮຽນເພີ່ມເຕີມໃຫ້ແກ່ເຂດທີ່ມີອັດຕາການເຂົ້າຮຽນຂອງເພດຍິງ/ຊົນເຜົ່າຕ່ຳ ຫຼື ການປະລະການຮຽນສູງ | • ສະໜອງໃຫ້ໄດ້ 85% ໃນປີ 2015 | • ແຈ້ງການ/ຄຳສັ່ງແນະນຳ | • ກົມແຜນການ ແລະ ການຮ່ວມມື, ກົມການເງິນ | ໜ້າທີ 15,19, 30,32 |
| | 1.5.4. | ໃຫ້ໂອກາດເທົ່າທຽມກັນລະຫວ່າງ ຍິງ-ຊາຍ ເພື່ອສຳເລັດການສຶກສາຂັ້ນ ພື້ນຖານ ແລະ ເຂົ້າຮຽນຕໍ່ຊັ້ນມັດທະຍົມ ຕອນປາຍ ແລະ ອາຊີວະສຶກສາ. | • ມີຄວາມເທົ່າທຽມລະຫວ່າງຍິງ-ຊາຍໃນປີ 2015 | • ແຈ້ງການ/ຄຳສັ່ງແນະນຳ | • ສູນການສຶກສາຮຽນຮ່ວມ | ໜ້າທີ 26-27 |
| | | **ຊົນເຜົ່າ** | | | | |
| | 1.5.5. | ສົ່ງເສີມການສອນຫ້ອງຄວບໃນເຂດທີ່ມີໂຮງຮຽນຂະໜາດນ້ອຍ | • ສ້າງໂຮງຮຽນທີ່ສອນຫ້ອງຄວບໃຫ້ເປັນໂຮງຮຽນປະຖົມສົມບູນໃຫ້ໄດ້ 85% ພາຍໃນປີ 2015 | • ຂໍ້ຕົກລົງລັດຖະມົນຕີ | • ກົມປະຖົມ ແລະ ອະນຸບານສຶກສາ, ກົມຈັດຕັ້ງ ແລະ ພະນັກງານ | ໜ້າທີ 21,23,35 |
| | 1.5.6. | ສະໜອງໂຮງຮຽນປະຖົມສົມບູນໃນເຂດຫ່າງໄກສອກຫຼີກໂດຍການມີສ່ວນຮ່ວມ | • ຍົກລະດັບໂຮງຮຽນມູນລະປະຖົມຂຶ້ນເປັນໂຮງຮຽນປະຖົມສົມບູນ | • ຂໍ້ຕົກລົງລັດຖະມົນຕີ | • ກົມປະຖົມ ແລະ ອະນຸບານສຶກສາ, | |

| | | | | | |
|---|---|---|---|---|---|
| | | ຂອງຄະນະພັດທະນາການສຶກສາຂັ້ນ ບ້ານ ແລະ ຂະຫຍາຍຕາໜ່າງກຸ່ມໂຮງຮຽນ ໂດຍມີການຊ່ວຍເຫຼືອທາງດ້ານວິຊາການ | | | ກົມຈັດຕັ້ງ ແລະ ພະນັກງານ | |
| | | **ເດັກພິການ** | | | | |
| | 1.5.7. | ສະໜອງການສຶກສາໃຫ້ແກ່ເດັກທີ່ມີຄວາມຕ້ອງການພິເສດ | • ຂໍ້ແນະນຳ ແລະ ມາດຖານໃນການສ້າງໂຮງຮຽນພິເສດ<br>• ສ້າງໂຮງຮຽນພິເສດສຳລັບຄົນພິການໜັກ<br>• ໃຫ້ມີການຮຽນຮ່ວມລະຫວ່າງເດັກພິການ ແລະ ເດັກປົກກະຕິ<br>• ສະໜອງອຸປະກອນ ແລະ ເຄື່ອງມືທີ່ຈຳເປັນສຳລັບເດັກພິການ | • ຄຳສັ່ງແນະນຳ | • ສູນການສຶກສາຮຽນຮ່ວມ, ກົມປະຖົມ ແລະ ອະນຸບານສຶກສາ, ສູນຄົ້ນຄວ້າຍຸດທະສາດ ແລະ ການວິໄຈການສຶກສາ, ກົມພະລະ ແລະ ສິລະປະສຶກສາ, (ກົມແຜນການ ແລະ ການຮ່ວມມື, ກົມການເງິນ) | ໜ້າທີ 18,24,25 ແລະ 46 |
| | | **ເດັກທີ່ມາຈາກຄອບຄົວທີ່ທຸກຍາກ** | | | | |
| | 1.5.8. | ຫຼຸດຜ່ອນຄ່າໃຊ້ຈ່າຍສຳລັບການສຶກສາທາງກົງ ຫຼື ທາງອ້ອມທີ່ເປັນອຸປະສັກຕໍ່ຄອບຄົວທຸກຍາກ | • ຢູ່ເມືອງເປົ້າໝາຍ ການລົບລ້າງຄ່າລົງທະບຽນ ແລະ ຄ່າທຳນຽມສຳລັບຊັ້ນອະນຸບານ ແລະ ປະຖົມສຶກສາໃຫ້ເລີ່ມຕົ້ນປະຕິບັດແຕ່ປີ 2011 ເປັນຕົ້ນໄປ, ສຳລັບມັດທະຍົມສຶກສາໃຫ້ເລີ່ມຕົ້ນແຕ່ປີ 2013 ແລະ ສ່ວນສະຖາບັນສ້າງຄູ ໃຫ້ເລີ່ມຕົ້ນແຕ່ປີ 2015<br>• ການຈັດຕັ້ງປະຕິບັດໃນຊັ້ນປະຖົມ ແລະ ມັດທະຍົມສຶກສາ ແມ່ນຢູ່ໃນ 56 ເມືອງເປົ້າໝາຍ | • ອອກຂໍ້ຕົກລົງລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ປະຕິບັດທົດລອງ ການລົບລ້າງຄ່າໃຊ້ຈ່າຍ ແລະ ຄ່າລົງທະບຽນໃນ 56 ເມືອງເປົ້າໝາຍໃຫ້ສຳເລັດໃນປີ 2010 | • ກົມການເງິນ, ກົມແຜນການ ແລະ ການຮ່ວມມື<br>• ສູນການສຶກສາຮຽນຮ່ວມ | ໜ້າທີ 32-34 |
| | | **ການສຶກສາເດັກກ່ອນໄວຮຽນ** | | | | |
| | 1.5.9. | ເພີ່ມການເຂົ້າຮຽນຂອງເດັກກ່ອນໄວຮຽນທີ່ມີອາຍຸ 5 ປີ ໃນເຂດຫ່າງໄກສອກຫຼີກ | • ຈັດກຸ່ມຫຼິ້ນເພື່ອຮຽນ (ເບິ່ງ 1.1.3) | • ຄຳສັ່ງແນະນຳຂອງລັດຖະມົນຕີ | • ກົມການສຶກສານອກໂຮງຮຽນ, ກົມປະຖົມ ແລະ ອະນຸບານສຶກສາ | ໜ້າທີ 22, 33 |
| | | **ການສຶກສານອກໂຮງຮຽນສຳລັບເດັກທີ່ບໍ່ໄດ້ເຂົ້າໂຮງຮຽນ** | | | | |

| | | | | | | |
|---|---|---|---|---|---|---|
| | 1.5.10. | ເພີ່ມການເຂົ້າຮຽນຂອງເດັກໃນການສຶກສານອກໂຮງຮຽນໂດຍເພີ່ມການລົງທຶນເຂົ້າໃສ່ສູນການສຶກສາຊຸມຊົນ | • ການເຂົ້າຮຽນຂອງຜູ້ບໍ່ຮູ້ໜັງສືໃຫ້ໄດ້ 2% ໃນແຕ່ລະປີ | • ຄຳສັ່ງແນະນຳຂອງລັດຖະມົນຕີ | • ກົມການສຶກສານອກໂຮງຮຽນ | ໜ້າທີ 19, 23 |
| | 1.5.11. | ການເຂົ້າຮຽນຂອງເດັກທຸກຄົນໃນເກນອາຍຸເຂົ້າຮຽນ | • ໃຫ້ສຳເລັດ 98% ພາຍໃນປີ 2015 | • ຄຳສັ່ງແນະນຳຂອງລັດຖະມົນຕີ | • ກົມປະຖົມ ແລະ ອະນຸບານສຶກສາ, ກົມຄຸ້ມຄອງການສຶກສາພາກເອກະຊົນ | ໜ້າ 60-61 |
| | 1.5.12. | ລະບົບການເຂົ້າຮຽນຄືນ ສຳລັບເດັກໃນເກນ ອາຍຸທີ່ບໍ່ໄດ້ເຂົ້າໂຮງຮຽນ | • ການເຂົ້າຮຽນຄືນຂອງນັກຮຽນທີ່ປະລະການຮຽນໃຫ້ໄດ້ 20% ໃນແຕ່ລະປີ | • ຄຳສັ່ງແນະນຳຂອງລັດຖະມົນຕີ<br>• ທົບທວນຄືນກ່ຽວກັບລະບຽບຫຼັກການເຂົ້າຮຽນຄືນສຳລັບເດັກໃນເກນອາຍຸທີ່ບໍ່ໄດ້ເຂົ້າໂຮງຮຽນ | • ກົມການສຶກສານອກໂຮງຮຽນ, ກົມຄຸ້ມຄອງການສຶກສາພາກເອກະຊົນ | ໜ້າທີ 25 |
| | 1.5.13. | ລະບົບການສຶກສາທຽບເທົ່າສຳລັບເດັກທີ່ອາຍຸເກີນໄວຮຽນປະຖົມສຶກສາຢູ່ນອກໂຮງຮຽນ | • ຫຼັກສູດທຽບເທົ່າ (ແຜນງານກອງທຶນເລັ່ງລັດ FTI) | • ຄຳສັ່ງແນະນຳຂອງລັດຖະມົນຕີ | • ກົມການສຶກສານອກໂຮງຮຽນ | ໜ້າທີ 24 |
| | | **ສຸຂະພາບຂອງເດັກ (ປູກຈິດສຳນຶກກ່ຽວກັບໂພຊະນາການ ແລະ ເຮັດສ໌ໄອວີ/ເອດສ)** | | | | ໜ້າທີ 20,33 ແລະ 35 |
| | 1.5.14. | ນຳເອົາການສຶກສາທັກສະຊີວິດເພື່ອເສີມຄວາມຮູ້ຕົວຈິງ ແລະ ຄວາມຊຳນິຊຳນານໃຫ້ແກ່ເດັກທຸກຄົນ | • ຝຶກທັກສະຊີວິດໃຫ້ເດັກຢ່າງທົ່ວເຖິງ | • ຄຳສັ່ງແນະນຳຂອງລັດຖະມົນຕີ | • ສູນການສຶກສາຮຽນຮ່ວມ, ກົມປະຖົມ ແລະ ອະນຸບານສຶກສາ, ສູນຄົ້ນຄວ້າຍຸດທະສາດ ແລະ ວິໄຈການສຶກສາ, ກົມການສຶກສານອກໂຮງຮຽນ, | |
| | 1.5.15. | ນຳເອົາການບໍລິການດ້ານສຸຂະພາບ ແລະ ໂພຊະນາການເຂົ້າສູ່ໂຮງຮຽນ | • ຝຶກອົບຮົມທາງດ້ານສຸຂະພາບ ແລະ ໂພຊະນາການຢ່າງທົ່ວເຖິງ | • ຄຳສັ່ງແນະນຳຂອງລັດຖະມົນຕີ | • ສູນການສຶກສາຮຽນຮ່ວມ, ກົມປະຖົມ ແລະ ອະນຸບານສຶກສາ, ສູນຄົ້ນຄວ້າຍຸດທະສາດ ແລະ ວິໄຈການສຶກສາ, ກົມການ | |

| | | | | | |
|---|---|---|---|---|---|
| | | | | ສຶກສານອກໂຮງຮຽນ | |
| 1.5.16. | ປູກຈິດສຳນຶກກ່ຽວກັບພະຍາດເຮັດສ໌ໄອວີ/ເອດສ໌ ໃຫ້ແກ່ກຸ່ມສ່ຽງ | • ຝຶກອົບຮົມທາງດ້ານພະຍາດເຮັດສ໌ໄອວີ/ເອດສ໌ ຢ່າງທົ່ວເຖິງ | • ຄຳສັ່ງແນະນຳຂອງລັດຖະມົນຕີ | • ສູນການສຶກສາຮຽນຮ່ວມ, ກົມປະຖົມ ແລະ ອະນຸບານສຶກສາ, ສູນຄົ້ນຄວ້າຍຸດທະສາດ ແລະ ວິໄຈການສຶກສາ, ກົມການສຶກສານອກໂຮງຮຽນ, | |
| **1.6** | **ການອຳນວຍຄວາມສະດວກໃຫ້ແກ່ການສຶກສາເດັກກ່ອນໄວຮຽນ** | | • ຂໍ້ຕົກລົງລັດຖະມົນຕີ ວ່າດ້ວຍການສຶກສາເດັກກ່ອນໄວຮຽນ ໂດຍເນັ້ນໜັກໃສ່ກຸ່ມຫຼິ້ນເພື່ອຮຽນ | • ກົມປະຖົມ ແລະ ອະນຸບານສຶກສາ, ກົມການສຶກສານອກໂຮງຮຽນ, (ກົມສ້າງຄູ) | ໜ້າທີ 18-20,22 |
| 1.6.1. | ເພີ່ມຈຳນວນກຸ່ມຫຼິ້ນເພື່ອຮຽນ | • ການເຂົ້າຮຽນຂອງເດັກກ່ອນໄວຮຽນ ໃຫ້ໄດ້ 30% ໃນປີ 2015 | • ແຈ້ງການ | • ກົມປະຖົມ ແລະ ອະນຸບານສຶກສາ, ກົມການສຶກສານອກໂຮງຮຽນ | ໜ້າທີ 22 |
| 1.6.2. | ສະໜອງທຶນບໍລິຫານໂຮງຮຽນໃຫ້ກຸ່ມຫຼິ້ນເພື່ອຮຽນ ແລະ ໂຮງຮຽນອະນຸບານ | • ສົ່ງເສີມເປົ້າໝາຍຜູ້ເຂົ້າຮຽນໃຫ້ໄດ້ 250,000 ຄົນໃນປີ 2015, ເຮັດທົດລອງໃນ 56 ເມືອງເປົ້າໝາຍ | • ຄຳສັ່ງແນະນຳ/ແຈ້ງການ | • ກົມປະຖົມ ແລະ ອະນຸບານສຶກສາ, ກົມການສຶກສານອກໂຮງຮຽນ | ໜ້າທີ 33 |
| **1.7** | **ການເພີ່ມການເຂົ້າຮຽນໃນໂຮງຮຽນມັດທະຍົມຕອນປາຍ, ໂຮງຮຽນສາມັນວິຊາຊີບ, ວິທະຍາໄລເຕັກນິກ ແລະ ການສຶກສາຊັ້ນສູງ** | | • (ຂໍ້ຕົກລົງລັດຖະມົນຕີ ວ່າດ້ວຍການສະໜອງບ່ອນຮຽນໃນຊັ້ນມັດທະຍົມຕອນປາຍໂດຍມີການຮ່ວມມືລະຫວ່າງພາກລັດ ແລະ ພາກເອກະຊົນ) | • ກົມປະຖົມ ແລະ ອະນຸບານສຶກສາ, ກົມມັດທະຍົມສຶກສາ, ກົມອາຊີວະສຶກສາ, ກົມການສຶກສາຊັ້ນສູງ, (ກົມແຜນການ ແລະ ການຮ່ວມມື, ກົມການສຶກສານອກໂຮງຮຽນ, ສູນສະຖິຕິ-ເຕັກໂນໂລຊີຂ່າວສານການສຶກສາ | ໜ້າທີ 22-23 |

| | | | | | | |
|---|---|---|---|---|---|---|
| | 1.7.1. | ສະໜອງບ່ອນຮຽນໃນຊັ້ນມັດທະຍົມຕອນປາຍ ໂດຍມີການຮ່ວມມື ລະຫວ່າງພາກລັດ ແລະ ພາກເອກະຊົນ | • ໃນປີ 2020 ອັດຕາການເຂົ້າຮຽນລວມໃນຊັ້ນມັດທະຍົມຕອນປາຍ ໃຫ້ໄດ້ 75%, ໃນໂຮງຮຽນສາມັນວິຊາຊີບໃຫ້ໄດ້ 25% ໃນນັ້ນ 50% ເປັນເພດຍິງ | • ແຈ້ງການ | • ກົມແຜນການ ແລະ ການຮ່ວມມື, ກົມພະລະ ແລະ ສິລະປະສຶກສາ, ກົມມັດທະຍົມສຶກສາ ແລະ ສູນຄົ້ນຄວ້າຍຸດທະສາດ ແລະ ວິໄຈການສຶກສາ | ໜ້າທີ 21, 26-27 |
| | 1.7.2. | ສະໜອງວິທະຍາໄລອາຊີວະສຶກສາ ແລະ ອົບຮົມວິຊາຊີບໃຫ້ແຕ່ລະແຂວງ ພ້ອມທັງຂະຫຍາຍໂອກາດໄປສູ່ການສຶກສາຊັ້ນສູງຂຶ້ນໄປ | • ໃຫ້ແຕ່ລະແຂວງມີວິທະຍາໄລເຕັກນິກວິຊາຊີບໜຶ່ງແຫ່ງ ພ້ອມທັງມີແຜນໃຫ້ນັກສຶກສາສາມາດຮຽນຕໍ່ຊັ້ນສູງ, 25% ຂອງນັກຮຽນມັດທະຍົມຕອນປາຍໃຫ້ໄດ້ຮຽນຕໍ່ສາຍ ອາຊີວະສຶກສາ ໃນປີ 2020 | • ຄຳສັ່ງແນະນຳຂອງລັດຖະມົນຕີ | • ກົມແຜນການ ແລະ ການຮ່ວມມື, ກົມອາຊີວະສຶກສາ, ກົມມັດທະຍົມສຶກສາ, ກົມການສຶກສາຊັ້ນສູງ | ໜ້າທີ 25-27 |
| | 1.7.3. | ເພີ່ມໂອກາດເຂົ້າຮຽນໃນການສຶກສາຊັ້ນສູງສຳລັບນັກຮຽນຈາກທຸກໆແຂວງ ຢ່າງທົ່ວເຖິງ | • 30% ຈາກແຂວງທີ່ບໍ່ມີມະຫາວິທະຍາໄລ ໃນນັ້ນ 50% ເປັນເພດຍິງ<br>• 20% ແມ່ນໄດ້ຮັບທຶນການສຶກສາຂອງນັກຮຽນທີ່ມາຈາກຄອບຄົວ ທຸກຍາກ | • ຄຳສັ່ງແນະນຳຂອງລັດຖະມົນຕີ | • ກົມການສຶກສາຊັ້ນສູງ, ກົມການເງິນ, ພະແນກສຶກສາທິການແຂວງ | ໜ້າທີ 25-28 |

| ແຜນງານທີ 2: ການປັບປຸງຄຸນນະພາບ ແລະ ຄວາມສອດຄ່ອງ | | | ຄາດໝາຍ | ນິຕິກຳທີ່ຕ້ອງການ | ພາກສ່ວນ ຮັບຜິດຊອບ | ບ່ອນອີງໃນ ຂພສສ (ສະບັບພາສາອັງກິດ) |
|---|---|---|---|---|---|---|
| **2.1.** | **ການປະຕິຮູບຫຼັກສູດ ແລະ ການສະໜອງອຸປະ ກອນການຮຽນ-ການສອນ** | | • ສະໜອງປຶ້ມແບບຮຽນ 1 ຊຸດ ຕໍ່ ນັກຮຽນ 1 ຄົນ (ຫົວ ຕໍ່ນັກຮຽນ 1 ຄົນ ຕໍ່ 1 ວິຊາ) ສຳລັບ ປ.1-ມ.4 ໃຫ້ໄດ້ໃນປີ 2015 ໂດຍເລີ່ມສະໜອງທົ່ວປະເທດ ນັບແຕ່ປີ 2010 ເປັນຕົ້ນໄປ ແລະ ນຳໃຊ້ທຶນ ບໍລິຫານໂຮງຮຽນເພື່ອທົດແທນຄືນ ນັບແຕ່ປີ 2010.<br>• ຕ້ອງສຳເລັດຫຼັກສູດແຕ່ ອະນຸບານສຶກສາ ຮອດ ມ 7 ໃນປີ 2012 | • ແຈ້ງການຂອງລັດຖະມົນຕີ ວ່າດ້ວຍ ການນຳໃຊ້ ແລະ ຈັດຕັ້ງ ປະຕິບັດ ຫຼັກ (ປະຖົມ, ມັດທະຍົມ) | • ສູນຄົ້ນຄວ້າຍຸດທະສາດ ແລະ ວິໄຈການສຶກສາ, ສູນພັດທະນາຫຼັກສູດ, ການສຶກສາຊັ້ນສູງ, ສູນຮັບປະກັນ ຄຸນະພາບການສຶກສາ, ກົມການ ເງິນ, (ກົມທີ່ກ່ຽວຂ້ອງ) | ໜ້າທີ 37 |
| | 2.1.1. | ກຳນົດນະໂຍບາຍ ແລະ ຍຸດທະສາດກ່ຽວກັບການນຳໃຊ້ ຫຼັກສູດໂດຍການເພີ່ມຊົ່ວໂມງສອນ | • ເພີ່ມປີຮຽນຈາກ 11 ປີ ມາເປັນ 12 ປີ ໂດຍໃຫ້ມີ ມ.4 ໃນປີ 2009 ແລະ ມ. 7 ໃນປີ 2010, ເພີ່ມຊົ່ວໂມງສອນ ການ ສຶກສາຮຽນຮ່ວມ ແລະ 20% ຂອງເນື້ອໃນທີ່ເປັນພູມປັນ ຍາຂອງທ້ອງຖິ່ນ. | • ຂໍ້ຕົກລົງລັດຖະມົນຕີ | • ກົມມັດທະຍົມສຶກສາ, ສະຖາບັນຄົ້ນຄວ້າ ວິທະຍາສາດ ການສຶກສາ | ໜ້າທີ 37 |
| | 2.1.2. | ສະໜອງປຶ້ມແບບຮຽນ ແລະ ອຸປະກອນການຮຽນ-ການ ສອນເສີມທີ່ຈຳເປັນຢ່າງທົ່ວເຖິງ | • ສະໜອງປຶ້ມແບບຮຽນ 1 ຊຸດ ຕໍ່ 1 ຄົນ (1 ຫົວຕໍ່ນັກຮຽນ 1 ຄົນ ຕໍ່ 1 ວິຊາ) ສຳລັບ ປ.1-ມ.4 ໃຫ້ໄດ້ໃນປີ 2015 ໂດຍເລີ່ມສະໜອງທົ່ວປະເທດ ນັບແຕ່ປີ 2010 ເປັນຕົ້ນໄປ ແລະ ນຳໃຊ້ທຶນບໍລິຫານໂຮງຮຽນເພື່ອ ທົດ ແທນຄືນ ນັບແຕ່ປີ 2010.<br>• ຕ້ອງສຳເລັດຫຼັກສູດແຕ່ ອະນຸບານສຶກສາຮອດ ມ 7 ໃນປີ 2012 | • ຄຳສັ່ງ ແນະນຳຂອງລັດຖະມົນຕີ | • ສະຖາບັນຄົ້ນຄວ້າ ວິທະຍາສາດການສຶກສາ, ກົມການເງິນ ແລະ ກົມວິຊາການທີ່ກ່ຽວຂ້ອງ | ໜ້າທີ 37 |
| | 2.1.3. | ການຈັດຊື້ປຶ້ມແບບຮຽນ/ອຸປະກອນການຮຽນ-ການສອນ ຈາກກະຊວງສຶກສາທິການເທື່ອດຽວ. | • ສະໜອງປຶ້ມແບບຮຽນໃຫ້ ປ.1- ມ.4 ຕາມອັດຕາສ່ວນ 1/1 (1 ຊຸດ ຕໍ່ 1 ຄົນ) ໃນປີ 2015 ໂດຍເລີ່ມຈັດຊື້ໃນປີ 2010 ຈາກນັ້ນໃຫ້ນຳໃຊ້ທຶນບໍລິຫານໂຮງຮຽນເພື່ອຊື້ທົດແທນຄືນ ປຶ້ມທີ່ຕົກເຮ່ຍເສຍຫາຍ | • ຄຳສັ່ງແນະນຳ | • ກົມແຜນການ ແລະ ການຮ່ວມມື, ກົມການເງິນ | ໜ້າທີ 37 |
| | 2.1.4. | ນຳໃຊ້ຫຼັກສູດທີ່ໄດ້ມາດຕະຖານສຳລັບການຝຶກອົບຮົມວິ ຊາຊີບທີ່ຕອບສະໜອງໃຫ້ແກ່ຄວາມຕ້ອງ ການຂອງຕະຫຼາດແຮງງານ | • ອີງໃສ່ແຜນແມ່ບົດຂອງອາຊີວະສຶກສາ ປີ 2010 | • ຂໍ້ຕົກລົງລັດຖະມົນຕີວ່າດ້ວຍ ການ ປັບປຸງ ມາດຕະຖານຫຼັກສູດ (ສາຍອະຊີວະສຶກສາ, ການສຶກ ສາຊັ້ນສູງ) | • ກົມອາຊີວະສຶກສາ, ກົມການສຶກສາຊັ້ນສູງ | ໜ້າທີ 25-26 |
| | 2.1.5. | ການນຳໃຊ້ທຶນບໍລິຫານໂຮງຮຽນ | • ການນຳໃຊ້ທຶນບໍລິຫານໂຮງຮຽນ ແມ່ນປະຕິບັດຕາມ ຂັ້ນ ຕອນແຕ່ລະ | • ຂໍ້ຕົກລົງລັດຖະມົນຕີ | • ກົມການເງິນ | ໜ້າທີ 37 |

| | | | | | | |
|---|---|---|---|---|---|---|
| | | | ໄລຍະ | | | |
| | 2.1.6. | ພັດທະນາຫຼັກສູດຂອງການສຶກສານອກໂຮງຮຽນ | • ສ້າງຫຼັກສູດສຳລັບການລຶບລ້າງຄວາມບໍ່ຮູ້ໜັງສື, ການບຳ ລຸງຍົກລະດັບການສຶກສາ ແລະ ການຝຶກອົບວິຊາຊີບໃຫ້ແກ່ຄະນະປົກຄອງບ້ານ ແລະ ຊຸມຊົນ | • ຄຳສັ່ງແນະນຳ | • ກົມການສຶກສານອກໂຮງຮຽນ | ໜ້າທີ 25 |
| **2.2.** | **ການກໍ່ສ້າງ - ບຳລຸງຍົກລະດັບຄູ ແລະ ການ ພັດທະນາ ບຸກຄະລາກອນ** | | | • ຂໍ້ຕົກລົງລັດຖະມົນຕີ ວ່າດ້ວຍ ການກໍ່ສ້າງ-ຍົກລະດັບຄູ<br>• ຂໍ້ຕົກລົງລັດຖະມົນຕີ ວ່າດ້ວຍ ການພັດທະນາ ບຸກຄະລະກອນ<br>• ຂໍ້ຕົກລົງລັດຖະມົນຕີ ວ່າດ້ວຍ ການຮັບຮອງ ເອົາຫຼັກສູດສ້າງຄູ | • ກົມສ້າງຄູ,<br>• ກົມຈັດຕັ້ງ ແລະ ພະນັກງານ, ກົມສ້າງຄູ, | ໜ້າທີ 35-39 |
| | 2.2.1. | ຈັດສັນລະບົບຂອງການຮັບນັກຮຽນນັກສຶກສາໃໝ່ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ (ໃນສະຖາ ບັນສ້າງຄູຢູ່ແຕ່ລະແຫ່ງ, ມະຫາວິທະຍາໄລ) ເພື່ອສະໜອງຄູຕາມຄວາມຕ້ອງການ. | • ສ້າງແຜນປະຕິບັດງານໃນປີ 2010, ແຜນພັດທະນາຂີດຄວາມສາມາດໃນປີ 2011, ແຜນຈັດຕັ້ງປະຕິບັດຕົວຈິງແຕ່ ປີ 2012. | • ຂໍ້ຕົກລົງລັດຖະມົນຕີ | • ກົມສ້າງຄູ, ກົມຈັດຕັ້ງ ແລະ ພະນັກງານ, ມະຫາວິທະຍາໄລ | ໜ້າທີ 38 |
| | 2.2.2. | ບັນຈຸຄູຄືນໃໝ່ຕາມຄວາມຕ້ອງການເພື່ອຮັບປະກັນໃຫ້ມີ ຄູໄປສອນໃນເມືອງທີ່ຂາດເຂີນຄູ | • ບັນຈຸຄູຄືນໃໝ່ ຕາມຄວາມຕ້ອງການ ເພື່ອຮັບປະກັນ ໃຫ້ມີຄູໄປສອນໃນເຂດ ທີ່ຂາດເຂີນຄູ ໃນ ປີ 2012 | • ຂໍ້ຕົກລົງລັດຖະມົນຕີ | • ກົມສ້າງຄູ, ກົມຈັດຕັ້ງ ແລະ ພະນັກງານ | ໜ້າທີ 38 |
| | 2.2.3 | ເພີ່ມການສັບຊ້ອນຄູໃໝ່, ມີຄຸນນະພາບທີ່ຈົບສະ ຖາບັນ ສ້າງຄູ ແລະ ມະຫາວິທະຍາໄລໃຫ້ເຂດ ທີ່ຂາດເຂີນຄູ | • ຄູທີ່ຈົບສະຖາບັນສ້າງຄູໃໝ່ຈະຖືກສັບຊ້ອນໄປປະຈຳຢູ່ເຂດຫ່າງໄກສອກຫຼີກຕາມນະໂຍບາຍສົ່ງເສີມບົດບາດຍິງ-ຊາຍ ແລະ ຊົນເຜົ່າ . | • ຂໍ້ຕົກລົງລັດຖະມົນຕີ | • ກົມສ້າງຄູ, ກົມມັດທະຍົມສຶກສາ, ກົມຈັດຕັ້ງ ແລະ ພະນັກງານ | ໜ້າທີ 38 |
| | 2.2.4 | ເພີ່ມການຮັບເອົານັກຮຽນຄູຈາກເຂດທີ່ຂາດເຂີນຄູເຂົ້າ ຮຽນໃນສະຖາບັນສ້າງຄູ | • ເພີ່ມການບັນຈຸນັກຮຽນຄູໃໝ່ທີ່ມາຈາກບັນດາເຂດທີ່ຂາດ ເຂີນຄູ<br>• ເພີ່ມການບັນຈຸນັກຮຽນຄູໃໝ່ທີ່ສະໝັກໄປສອນ ຄົນພິການ | • ຂໍ້ຕົກລົງລັດຖະມົນຕີ | • ກົມຈັດຕັ້ງ ແລະ ພະນັກງານ, ກົມສ້າງຄູ | ໜ້າທີ 38 |
| | 2.2.5 | ສ້າງຄວາມເຂັ້ມແຂງໃຫ້ແກ່ການຄຸ້ມຄອງ, ປະ | • ກົມສ້າງຄູຮັບຜິດຊອບໃນການຄຸ້ມຄອງ ແລະ ການປະສານງານການ | • ຄຳສັ່ງແນະນຳຂອງລັດ | • ກົມສ້າງຄູ | ໜ້າທີ 28, 39 |

| | | | | | | |
|---|---|---|---|---|---|---|
| | | ສານງານ ແລະ ການສະໜອງການສ້າງຄູ | ສ້າງຄູ | ຖະມົນຕີ | | |
| | 2.2.6. | ພັດທະນາຫຼັກສູດຝຶກອົບຮົມຄູຢ່າງຄົບຊຸດຮອບດ້ານແຕ່ ສາມາດປັບປ່ຽນໄດ້ | • ທົບທວນເນື້ອໃນຫຼັກສູດໂດຍເນັ້ນໃສ່ບົດບາດຍິງ-ຊາຍ ແລະ ຊົນເຜົ່າໃຫ້ສຳເລັດພາຍໃນປີ 2015 | • ຄຳສັ່ງແນະນຳຂອງລັດຖະມົນຕີ | • ກົມສ້າງຄູ | ໜ້າທີ 38 |
| | 2.2.7. | ຍົກລະດັບສະຖາບັນສ້າງຄູຕ່າງໆໃຫ້ສາມາດສະໜອງການສຶກສາລະດັບປະລິນຍາ | • ຮອດປີ 2015 ໃຫ້ສະຖາບັນສ້າງຄູແຕ່ລະແຫ່ງສາມາດເປີດສອນລະດັບປະລິນຍາຕີ | • ຂໍ້ຕົກລົງລັດຖະມົນຕີ | • ກົມສ້າງຄູ | ໜ້າທີ 26, 37 |
| **2.3.** | **ການບັນຈຸ ແລະ ສັບຊ້ອນຄູໃຫ້ທົ່ວເຖິງ** | | | • ຄຳສັ່ງແນະນຳຂອງລັດຖະມົນຕີວ່າ ດ້ວຍການຈັດຕັ້ງ ແລະ ປະຕິ ບັດ ການບັນຈຸ ແລະ ສັບຊ້ອນຄູ<br>• ແຈ້ງການຂອງກົມຈັດຕັ້ງ ແລະ ພະນັກງານກ່ຽວກັບການຈັດຕັ້ງປະຕິບັດ | • ກົມຈັດຕັ້ງ ແລະ ພະນັກງານ | ໜ້າທີ 38-39 |
| | 2.3.1. | ນຳໃຊ້ຫຼັກການໃໝ່ໃນການບັນຈຸສັບຊ້ອນບຸກຄະລາກອນຄູໃຫ້ແກ່ໂຮງຮຽນ ແລະ ງົບປະມານເງິນ ເດືອນຄູຕາມຫຼັກ ການບັນຈຸສະບັບໃໝ່ | • ໃນໄລຍະປີ 2010 - 2015 ໃຫ້ນຳໃຊ້ຂໍ້ແນະນຳໃໝ່ໃນສະຖາບັນສ້າງຄູ ໂດຍອີງຕາມອັດຕາສ່ວນຂອງນັກຮຽນຕໍ່ຄູ 34:1 ສຳລັບຊັ້ນປະຖົມສຶກສາ, 30:1 ສຳລັບຊັ້ນມັດທະຍົມ ຕອນຕົ້ນ, 25:1 ສຳລັບຊັ້ນມັດທະຍົມຕອນປາຍ ແລະ 20:1 ສຳລັບຊັ້ນອາຊີວະສຶກສາ ແລະການສຶກສາຊັ້ນສູງ | • ຂໍ້ຕົກລົງລັດຖະມົນຕີ | • ກົມຈັດຕັ້ງ ແລະ ພະນັກງານ, | ໜ້າທີ 38 |
| | 2.3.2. | ນຳໃຊ້ຂໍ້ແນະນຳສະບັບໃໝ່ສຳລັບການບັນຈຸສັບຊ້ອນຄູ ໃນເຂດຫ່າງໄກສອກຫຼີກ ແລະ ຂາດເຂີນຄູ | • ໃຫ້ບຸລິມະສິດແກ່ຄູທີ່ຮູ້ພາສາຊົນເຜົ່າ | • ຄຳສັ່ງແນະນຳຂອງລັດຖະມົນຕີ | • ກົມຈັດຕັ້ງ ແລະ ພະນັກງານ, ກົມ ສ້າງຄູ, | ໜ້າທີ 15,18,29 |
| | 2.3.3. | ເພີ່ມເງິນອຸດໜູນໃນການໄປປະຈຳ ການຢູ່ເຂດຫ່າງໄກ ສອກຫຼີກ ແລະ ໂຮງຮຽນທີ່ຂາດເຂີນຄູ | • ອອກຄຳສັ່ງແນະນຳໃຫ້ສຳເລັດໃນປີ 2010 -11 | • ຂໍ້ຕົກລົງລັດຖະມົນຕີ | • ກົມຈັດຕັ້ງ ແລະ ພະນັກງານ, ກົມການເງິນ | ໜ້າທີ 38-39 |
| | 2.3.4. | ການສັບຊ້ອນ ແລະ ແບ່ງປັນຄູທີ່ມີຄຸນນະພາບຢ່າງທົ່ວເຖິງ ລະຫວ່າງເຂດຕົວເມືອງ, ຊົນນະບົດ ແລະ ຫ່າງໄກ ສອກຫຼີກ | • ໃຫ້ໄດ້ນຳໃຊ້ລະບຽບໃໝ່ ໃນປີ 2010/11 ລວມທັງຂໍ້ແນະ ນຳກ່ຽວກັບການກຳນົດຊົ່ວໂມງສອນຕໍ່າສຸດຂອງຄູ<br>• ສັບຊ້ອນຄູສອນເຄື່ອນທີ່ ໃຫ້ກຸ່ມບ້ານນ້ອຍທີ່ບໍ່ມີໂຮງຮຽນ | • ຄຳສັ່ງແນະນຳຂອງລັດຖະມົນຕີ | • ກົມຈັດຕັ້ງ ແລະ ພະນັກງານ<br>• ກົມການົກສານອກໂຮງຮຽນ ແລະ | ໜ້າທີ 39 |

| | | | | | | |
|---|---|---|---|---|---|---|
| | | | | | • ພະແນກສຶກສາທິການແຂວງ | |
| **2.4.** | **ການປະຕິບັດໜ້າທີ່, ການຄິດໄລ່ເງິນຄ່າຕອບ ແທນ ແລະ ສິ່ງຈູງໃຈອື່ນໆສຳລັບຄູ** | | | • ດຳລັດນາຍົກລັດຖະມົນຕີວ່າດ້ວຍ ການຄຸ້ມຄອງ ແລະ ພັດທະນາຄູ<br>• ຂໍ້ຕົກລົງລັດຖະມົນຕີວ່າດ້ວຍ ການຈັດຕັ້ງປະຕິບັດ | • ກົມຈັດຕັ້ງ ແລະ ພະນັກງານ, ກົມສ້າງຄູ, ກົມການເງິນ | ໜ້າທີ 39 |
| | 2.4.1. | ເລັ່ງລັດການເລື່ອນຂັ້ນໃຫ້ແກ່ຫົວໜ້າຄູໃນໂຮງຮຽນມູນ ລະປະຖົມສຶກສາໃຫ້ເປັນຜູ້ອຳນວຍການໂຮງຮຽນໂດຍມີການສ້າງຄວາມເຂັ້ມແຂງດ້ານ ການນຳພາ, ການວາງ ແຜນ, ການປະເມີນ ການປະຕິບັດໜ້າທີ່ວຽກງານ | • ກະກຽມມາດຕະຖານ ແລະ ແຜນປະຕິບັດໃຫ້ສຳເລັດພາຍໃນປີ 2010<br>• ເລີ່ມຕົ້ນຈັດຕັ້ງປະຕິບັດໃນປີ 2011<br>• ທົບທວນ ແລະ ຖອດຖອນບົດຮຽນໃນປີ 2013 | • ຂໍ້ຕົກລົງລັດຖະມົນຕີ | • ກົມຈັດຕັ້ງ ແລະ ພະນັກງານ | ໜ້າທີ 39 |
| | 2.4.2. | ນຳໃຊ້ນະໂຍບາຍເງິນອຸດໜູນໃຫ້ແກ່ຫົວໜ້າໂຮງ ຮຽນມູນລະປະຖົມສຶກສາ | • ກຳນົດໜ້າທີ່ຕຳແໜ່ງຜູ້ອຳນວຍການຊົ່ວຄາວໃນໂຮງຮຽນມູນລະປະຖົມສຶກສານັບແຕ່ປີ 2010<br>• ສະໜອງເງິນນະໂຍບາຍໃຫ້ຜູ້ອຳນວຍການໂຮງຮຽນອີງຕາມຜົນງານປະຈຳປີ ແລະ ການນຳໃຊ້ທຶນບໍລິຫານໂຮງຮຽນໃນໄລຍະປີ 2010/2015, ໂດຍແບ່ງເປັນໄລຍະໃນການຈັດຕັ້ງປະຕິບັດ. | • ຂໍ້ຕົກລົງລັດຖະມົນຕີ | • ກົມຈັດຕັ້ງ ແລະ ພະນັກງານ<br>• ກົມການເງິນ | ໜ້າທີ 39 |
| | 2.4.3. | ນຳໃຊ້ລະບົບການທົດສອບ 3 ປີ ສຳລັບຫົວໜ້າຄູໃນໂຮງ ຮຽນມູນລະປະຖົມສຶກສາ | • ປະກາດໃຊ້ລະບົບການທົດສອບຜູ້ອຳນວຍການຊົ່ວຄາວພາຍໃນປີ 2010<br>• ຈັດສັນເງິນອຸດໜູນເປັນແຕ່ລະໄລຍະ ເພື່ອຈັດຕັ້ງປະຕິບັດແຕ່ປີ 2011 - 2015 | • ຄຳສັ່ງແນະນຳ | • ກົມຈັດຕັ້ງ ແລະ ພະນັກງານ<br>• ກົມການເງິນ ແລະ ພະແນກສຶກສາ ທິການແຂວງ | ໜ້າທີ 39 |
| **2.5.** | **ການປັບປຸງການຕິດຕາມຜົນງານຂອງໂຮງຮຽນ ແລະ ຜົນການຮຽນ ຂອງນັກຮຽນ** | | | • ມີນິຕິກຳປະເພດຕ່າງໆກ່ຽວກັບ ການຈັດຕັ້ງປະຕິບັດ ການຕິດຕາມ ແລະ ປະເມີນຜົນ | • ກົມກວດກາ, ສູນຮັບປະ ກັນຄຸນນະພາບການສຶກສາ, ສູນຄົ້ນຄວ້າຍຸດທະສາດ ແລະ ວິໄຈການສຶກສາ, (ກົມວິຊາການ | ໜ້າທີ 39-41 |

| | | | | | |
|---|---|---|---|---|---|
| | | | | ທີ່ກ່ຽວ ຂ້ອງ) | |
| | 2.5.1. ກຳນົດມາດຕະຖານຕ່ຳສຸດສຳລັບຜົນການຮຽນຂອງນັກ ຮຽນຂັ້ນ ປ.3, ປ.5 ແລະ ມ.4 ແລະ ເຜີຍ ແຜ່ມາດຕະຖານ ດັ່ງກ່າວໃຫ້ແກ່ພໍ່ແມ່ນັກຮຽນ ແລະ ຜູ້ທີ່ມີສ່ວນກ່ຽວຂ້ອງ ອື່ນໆ | • ນຳໃຊ້ແຕ່ປີ 2011 ເປັນຕົ້ນໄປ, ພ້ອມດ້ວຍການສຸ່ມສຳ ຫຼວດຂໍ້ມູນໃນປີ 2011-2012.<br>• ສ້າງບັດຕິດຕາມຜົນງານຂອງໂຮງຮຽນໃນປີ 2012 | • ຄຳສັ່ງແນະນຳຂອງລັດຖະມົນຕີ | • ສະຖາບັນຄົ້ນຄວ້າວິທະຍາສາດ ການສຶກສາ, ສູນຮັບປະກັນຄຸນນະພາບການສຶກສາ, ສູນສະຖິຕິ -ເຕັກໂນໂລຊີຂ່າວສານການສຶກສາ (ສຕສ), | ໜ້າທີ 39 |
| | 2.5.2. ສ້າງລະບຽບການໃນການຕິດຕາມຜົນການຮຽນຂອງນັກ ຮຽນທົ່ວປະເທດ | • ມີແຜນປະຕິບັດງານ ການຕິດຕາມປະເມີນຜົນຂັ້ນ ປ.3 ປ.5, ມ.4 ແລະ ມ.7 ນັບແຕ່ປີ 2010. | • ຂໍ້ຕົກລົງລັດຖະມົນຕີ | • ສູນຮັບປະກັນຄຸນນະພາບການສຶກສາ | ໜ້າທີ 39 |
| | 2.5.3. ສ້າງລະບຽບການທີ່ມີປະສິດທິພາບໃນການຕິດຕາມຜົນ ງານ, ການວາງແຜນການ ແລະ ການຄຸ້ມຄອງຂອງໂຮງ ຮຽນ | • ທົບທວນຄືນການວາງແຜນຄວາມຕ້ອງການພະນັກງານ ແລະ ກຳນົດຄວາມຮັບຜິດຊອບຂອງພະນັກງານໃຫ້ສຳເລັດໃນທ້າຍປີ 2011 | • ຂໍ້ຕົກລົງລັດຖະມົນຕີ | • ກົມກວດກາ, ກົມຈັດຕັ້ງ ແລະ ພະນັກງານ, ຫ້ອງການສຶກສາທິການເມືອງ | ໜ້າທີ 40 |
| | 2.5.4. ກຳນົດຄືນພາລະບົດບາດຂອງອົງການກວດກາໃນທຸກໆ ຂັ້ນ | • ທົບທວນຄືນການວາງແຜນຄວາມຕ້ອງການພະນັກງານ ແລະ ກຳນົດຄວາມຮັບຜິດຊອບຂອງພະນັກງານໃຫ້ສຳເລັດໃນທ້າຍປີ 2011 | • ຂໍ້ຕົກລົງລັດຖະມົນຕີ | • ກົມກວດກາ, ກົມຈັດຕັ້ງ ແລະ ພະນັກງານ, | ໜ້າທີ 40 |
| | 2.5.5. ນຳໃຊ້ລະບຽບການປະເມີນຜົນການປະຕິບັດງານ ຂອງພະນັກງານສຶກສາໃນທຸກໆຂັ້ນ | • ທົບທວນຄືນການວາງແຜນຄວາມຕ້ອງການພະນັກງານ ແລະ ກຳນົດຄວາມຮັບຜິດຊອບຂອງພະນັກງານໃຫ້ສຳເລັດໃນທ້າຍປີ 2011 | • ຂໍ້ຕົກລົງລັດຖະມົນຕີ | • ກົມຈັດຕັ້ງ ແລະ ພະນັກງານ, ກົມກວດກາ | ໜ້າທີ 40 |

| ແຜນງານທີ 3: ການສ້າງຄວາມເຂັ້ມແຂງໃນດ້ານການວາງແຜນ ແລະ ຄຸ້ມຄອງການສຶກສາ | | | ຄາດໝາຍ | ນິຕິກຳທີ່ຕ້ອງການ | ພາກສ່ວນ ຮັບຜິດຊອບ | ບ່ອນອີງໃນ ຂພສສ (ສະບັບພາສາອັງກິດ) |
|---|---|---|---|---|---|---|
| **3.1.** | **ການສ້າງຄວາມເຂັ້ມແຂງໃຫ້ລະບົບການຕິດຕາມ ແລະ ການວາງແຜນຂັ້ນສູນກາງ ແລະ ແຂວງ** | | | • (ຄຳສັ່ງແນະນຳຂອງລັດຖະມົນຕີວ່າດ້ວຍ ການ ຈັດຕັ້ງປະຕິບັດໃນການສ້າງ ຄວາມເຂັ້ມແຂງໃຫ້ລະບົການວາງແຜນ ແລະ ການຕິດຕາມຂັ້ນສູນກາງ ແລະ ຂັ້ນແຂວງ) | • ກົມແຜນການ ແລະ ການຮ່ວມມື, ກົມກວດກາ, ກົມວິຊາການທີ່ກ່ຽວຂ້ອງ | ໜ້າທີ 40-42 |
| | 3.1.1. | ສ້າງຄວາມເຂັ້ມແຂງໃຫ້ລະບົບການວາງແຜນປະຕິບັດງານຈັດຕັ້ງປະຕິບັດ ຂພສສ ໃຫ້ຂັ້ນກະຊວງສຶກສາ ແລະ ພະແນກສຶກສາທິການແຂວງ | • ສ້າງຕັ້ງໜ່ວຍງານວິຊາການຢູ່ຂັ້ນກະຊວງໃນການປະສານງານການ ປະຕິບັດ ຂພສສ ທ້າຍປີ 2009 ພ້ອມດ້ວຍການກະກຽມ ແຜນປະຕິບັດງານຂອງແຕ່ລະກົມໃນ ຕົ້ນປີ 2010, ສ້າງຕັ້ງໜ່ວຍ ປະສານງານປະ ຕິບັດ ຂພສສ ຂັ້ນແຂວງ ໃນ ປີ 2010 ໂດຍອີງ ໃສ່ກົນໄກການວາງ ແຜນການສຶກສາເພື່ອທຸກຄົນ | • ຂໍ້ຕົກລົງລັດຖະມົນຕີ | • ກົມແຜນການ ແລະ ການຮ່ວມມື, ກົມຈັດຕັ້ງ ແລະ ພະນັກ ງານ, (ກົມວິຊາການ ທີ່ກ່ຽວ ຂ້ອງ) | ໜ້າທີ 42 |
| | 3.1.2. | ສ້າງຄວາມເຂັ້ມແຂງໃຫ້ລະບົບຂໍ້ມູນຂ່າວສານຢູ່ຂັ້ນສູນ ກາງ ແລະ ຂັ້ນແຂວງ, ສຳລັບການຄຸ້ມຄອງຂໍ້ມູນໂຮງ ຮຽນ ຄຸ້ມຄອງພະນັກງານ, ແລະ ຄຸ້ມຄອງການເງິນຕາມຕົວຊີ້ບອກທີ່ໄດ້(ກຳນົດໄວ້) ຕົກລົງເຫັນດີນຳກັນ | • ໃຫ້ສຳເລັດແຜນປະຕິບັດງານພາຍໃນປີ 2012 ແລະ ເລີ່ມຈັດຕັ້ງປະຕິບັດແຕ່ປີ 2013<br>• ສ້າງຕັ້ງສະຖາບັນຝຶກອົບຮົມຜູ້ບໍລິຫານການສຶກສາ ໃຫ້ສຳເລັດພາຍໃນປີ 2012 | • ຄຳສັ່ງແນະນຳຂອງລັດຖະມົນຕີ<br>• ຂໍ້ຕົກລົງລັດຖະມົນຕີ | • ສູນສະຖິຕິ-ເຕັກໂນໂລຊີຂ່າວສານ ການສຶກສາ, ກົມຈັດຕັ້ງ ແລະ ພະນັກງານ, ກົມການເງິນ, ກົມແຜນ ການ ແລະ ການຮ່ວມມື ແລະ ກົມວິຊາການທີ່ກ່ຽວຂ້ອງ | ໜ້າທີ 42 |
| **3.2.** | **ການຍົກສູງປະສິດທິພາບລະບົບການຄຸ້ມຄອງຂັ້ນເມືອງ ແລະ ໂຮງຮຽນ** | | | • ຄຳສັ່ງແນະນຳຂອງລັດຖະມົນຕີ ວ່າດ້ວຍ ການ ສ້າງຄວາມເຂັ້ມແຂງ ໃຫ້ລະບົບການ ຄຸ້ມຄອງແຜນງານຂັ້ນເມືອງ ແລະ ໂຮງ ຮຽນ | • ກົມຈັດຕັ້ງ ແລະ ພະນັກງານ, (ກົມວິຊາການທີ່ກ່ຽວຂ້ອງ) | ໜ້າທີ 41-42 |

| | | | | | |
|---|---|---|---|---|---|
| | | | • ຄໍາສັ່ງແນະນໍາຂອງລັດຖະມົນ ຕີວ່າດ້ວຍ ລະບົບການ ຄຸ້ມຄອງດ້ານວິຊາການ ແລະ ການເງິນ | | |
| 3.2.1. | ສ້າງຄວາມສາມາດທາງດ້ານການຄຸ້ມຄອງ ງົບປະມານ ແລະ ຄຸ້ມຄອງໂຮງຮຽນ | • ທົບທວນຄືນລະບຽບຫຼັກການ ແລະ ແຜນປະຕິບັດງານ ໃນຕົ້ນປີ 2010<br>• ສະໜອງການຝຶກອົບຮົມຢູ່ສະຖາບັນຝຶກອົບຮົມຜູ້ບໍລິ ຫານການສຶກສາ | • ອອກ ແຈ້ງການ | • ກົມຈັດຕັ້ງ ແລະ ພະນັກງານ,<br>• ພະແນກສຶກສາທິການ ແຂວງ | ໜ້າທີ 42 |
| 3.2.2. | ກໍານົດລະບຽບກ່ຽວກັບມາດຕະຖານພະນັກງານແຕ່ ລະຂັ້ນເພື່ອຕິດຕາມຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ | • ເລີ່ມແຕ່ປີ 2010 ໃຫ້ແຕ່ລະແຂວງມີແຜນຄວາມຕ້ອງ ພະນັກງານ ປະຈໍາປີ | • ຂໍ້ຕົກລົງລັດຖະມົນຕີ | • ກົມຈັດຕັ້ງ ແລະ ພະນັກງານ,<br>• ພະແນກສຶກສາທິການ ແຂວງ ຫ້ອງການ ສຶກສາທິການ ເມືອງ | ໜ້າທີ 36,38 ແລະ 42 |
| 3.2.3. | ສ້າງຄວາມເຂັ້ມແຂງໃຫ້ຂັ້ນເມືອງໃນການວາງແຜນ ຄວາມຕ້ອງການພະນັກງານຕາມມາດຕະຖານທີ່ໄດ້ ກໍານົດໄວ້ | • ເລີ່ມແຕ່ປີ 2010 ໃຫ້ແຕ່ລະເມືອງມີແຜນຄວາມ ຕ້ອງພະນັກງານ ປະຈໍາປີ | • ຂໍ້ຕົກລົງລັດຖະມົນຕີ | • ກົມຈັດຕັ້ງ ແລະ ພະນັກງານ,<br>• ພະແນກສຶກສາທິການ ແຂວງ, ຫ້ອງການ ສຶກສາທິການເມືອງ | ໜ້າທີ 42 |
| 3.2.4. | ເພີ່ມສິດໃຫ້ອົງການປົກຄອງແຂວງໃນການຄຸ້ມຄອງງົບ ປະມານເງິນເດືອນ. | • ທົບທວນແຜນປະຕິບັດງານ ແລະ ກະກຽມ ຂໍ້ແນະນໍາ ເລີ່ມແຕ່ປີ 2010.<br>• ປັບປຸງນິຕິກໍາເລກທີ 1500 | • ດໍາລັດນາຍົກລັດຖະມົນຕີ, ຂໍ້ຕົກລົງລັດຖະມົນຕີ | • ກົມຈັດຕັ້ງ ແລະ ພະນັກງານ, ກົມການເງິນ | ໜ້າທີ 48 |
| 3.2.5. | ສ້າງຂອບລາຍຈ່າຍໄລຍະກາງຂອງຂະແໜງການ ສຶກສາ ໂດຍອີງໃສ່ບຸລິມະສິດທີ່ກໍານົດໄວ້ໃນ ຂພສສ | • ໃຫ້ສໍາເລັດປີ 2011-12 | • ຄໍາສັ່ງ ແນະນໍາຂອງລັດຖະມົນຕີ | • ກົມການເງິນ,<br>• ກົມແຜນການ ແລະ ການ ຮ່ວມມື | ໜ້າທີ 30, 48 |

| | | | | | | |
|---|---|---|---|---|---|---|
| | 3.2.6. | ສ້າງລະບຽບການ ແລະ ຂໍ້ແນະນຳກ່ຽວກັບການຄຸ້ມຄອງ ການຈັດຕັ້ງປະຕິບັດທຶນບໍລິຫານໂຮງ ຮຽນ ໃຫ້ການສຶກສາເດັກກ່ອນໄວຮຽນ ແລະ ປະຖົມ ສຶກສາ | • ໃຫ້ສຳເລັດປີ 2011-12 | • ຄຳສັ່ງ ແນະນຳຂອງລັດຖະມົນຕີ | • ກົມປະຖົມ ແລະ ອະນຸບານ ສຶກສາ, ກົມການເງິນ | ໜ້າທີ 48 |
| | 3.2.7. | ສ້າງຄວາມສາມາດໃຫ້ຂັ້ນກະຊວງ, ຂັ້ນແຂວງ ຂັ້ນເມືອງ ແລະ ຂັ້ນໂຮງຮຽນທາງດ້ານການເງິນ-ການບັນຊີ ແລະ ການລາຍງານ | • ອົບຮົມພະນັກງານຂັ້ນກະຊວງ, ແຂວງ,ເມືອງ ແລະໂຮງຮຽນໃນ ກຸ່ມ ເປົ້າໝາຍກ່ຽວກັບການຄຸ້ມຄອງການເງິນ-ການບັນຊີ ແລະ ການລາຍງານ<br>• ບັນຈຸບຸກຄະລາກອນທີ່ມີວິຊາສະເພາະການເງິນເຂົ້າເພີ່ມຢູ່ຂັ້ນ ແຂວງ ແລະ ເມືອງ<br>• ສ້າງປຶ້ມຄູ່ມືສຳລັບພະນັກງານເມືອງ ແລະ ຄູອາຈານ | ຄຳສັ່ງແນະນຳຂອງລັດຖະມົນຕີ | • ກົມການເງິນ ແລະ ກົມແຜນການ ແລະ ການຮ່ວມມື<br>• ພະແນກສຶກສາທິການ ແຂວງ, ຫ້ອງການ ສຶກສາທິການເມືອງ | ໜ້າທີ 41, 48 |
| | 3.2.8. | ດັດແກ້ຂໍ້ແນະນຳກ່ຽວກັບທຶນບໍລິຫານໂຮງຮຽນສຳ ລັບສາຍອາຊີວະສຶກສາ-ຝຶກອົບຮົມວິຊາຊີບ, ສາຍ ສ້າງຄູ ແລະ ການສຶກສາຂັ້ນສູງ ໂດຍອີງ ໃສ່ຜົນງານ ແລະ ລະບຽບການກ່ຽວກັບການມີສ່ວນຮ່ວມດ້ານ ການເງິນ | • ເຜີຍແຜ່ກົດໝາຍການສຶກສາ | • ຄຳສັ່ງ ແນະນຳຂອງລັດຖະມົນຕີ | • ກົມການເງິນ, ກົມມັດທະຍົມ ສຶກສາ, ກົມການສຶກສາ ຊັ້ນສູງ, ກົມອາຊີວະສຶກສາ, ກົມສ້າງຄູ | ໜ້າທີ 48 |
| **3.3.** | **ການສ້າງຄວາມເຂັ້ມແຂງໃນການປົກຄອງ, ຄຸ້ມຄອງ ແລະ ລະບົບຂໍ້ມູນຂ່າວສານ** | | | • ທົບທວນລະບຽບການຕ່າງໆ ໃນການ ປັບປຸງ ການຈັດຕັ້ງຂັ້ນກະ ຊວງ, ຂັ້ນແຂວງ ແລະ ຂັ້ນເມືອງ | • ກົມຈັດຕັ້ງ ແລະ ພະນັກງານ, (ກົມກວດາ, ກົມແຜນການ ແລະ ການ ຮ່ວມມື, ກົມວິຊາ ການທີ່ກ່ຽວຂ້ອງ) | ໜ້າທີ 40-42 |
| | 3.3.1. | ສ້າງຄວາມເຂັ້ມແຂງໃນການປົກຄອງ ແລະ ການຕັດສິນບັນຫາທາງດ້ານການຄຸ້ມຄອງ ການ ເງິນໃຫ້ແກ່ໂຮງຮຽນ ແລະ ການຈັດຕັ້ງ | • ແຜນປະຕິບັດງານໃຫ້ສຳເລັດ ໃນປີ 2012 ແລະ ເລີ່ມປະຕິບັດໃນປີ 2013 | • ຂອບບລາຍຈ່າຍໄລຍະກາງ ຂອງຂະ ແໜງ ການສຶກສາ (MTEF) ແລະ ແຜນ 5 ປີ ຂອງຂະແໜງ ການສຶກສາ | • ກົມການເງິນ, ກົມແຜນ ການ ແລະ ການຮ່ວມມື | ໜ້າທີ 42 |
| | 3.3.2. | ເພີ່ມສິດ ແລະ ຄວາມເປັນເຈົ້າການໃຫ້ແກ່ໂຮງຮຽນ ແລະ ຫ້ອງການສຶກສາທິການ ເມືອງ ໃນການຄຸ້ມຄອງ ແລະ ຈັດຕັ້ງປະຕິ ບັດ ຂພສສ | | | • ກົມຈັດຕັ້ງ ແລະ ພະນັກງານ, ກົມການເງິນ, ກົມແຜນການ ແລະ ການ ຮ່ວມມື ແລະ ພະ ແນກ | ໜ້າທີ 41 |

| | | | | | | |
|---|---|---|---|---|---|---|
| | | | | | ສຶກສາທິການແຂວງ | |
| | 3.3.3. | ສ້າງຄວາມເຂັ້ມແຂງດ້ານການວາງແຜນ ຂພສສ ການປະສານງານ, ການຕິດຕາມ ບຸກຄະລາກອນ ແລະ ການ ຕິດຕາມການປະຕິບັດງານຂອງຂະແໜງ ການໃຫ້ກະ ຊວງຕາມຕົວຊີ້ບອກທີ່ໄດ້ກຳນົດ ໄວ້ | | • ຄຳສັ່ງແນະນຳ ຂອງລັດຖະມົນຕີ | • ກົມແຜນການ ແລະ ການຮ່ວມມື, ກົມກວດກາ, ກົມຈັດຕັ້ງ ແລະ ພະນັກງານ | ໜ້າທີ 41 |
| | 3.3.4. | ປັບປຸງການສື່ສານດ້ານຂໍ້ມູນລະຫວ່າງກະ ຊວງ ສຶກສາທິການ, ແຂວງ, ເມືອງ, ຄະນະ ພັດທະນາ ການສຶກສາຂັ້ນບ້ານ ແລະ ອົງ ການ ຈັດຕັ້ງສັງຄົມ | | • ຄຳສັ່ງ ແນະນຳຂອງລັດຖະມົນຕີ | • ຫ້ອງການກະຊວງສຶກສາທິການ, ກົມຈັດຕັ້ງ ແລະ ພະນັກ ງານ, ສູນສະຖິຕິ-ເຕັກໂນໂລຊີຂ່າວສານ ການສຶກສາ<br>• ພະແນກສຶກສາທິການແຂວງ, ຫ້ອງການສຶກສາທິການເມືອງ | ໜ້າທີ 41 |
| **3.4.** | **ການສ້າງຄວາມເຂັ້ມແຂງໃຫ້ແກ່ການຄຸ້ມຄອງການສຶກສາ ແລະ ຊັບພະຍາກອນມະນຸດ** | | | • ດຳລັດນາຍົກລັດຖະມົນຕີວ່າດ້ວຍການສະໜອງເງິນອຸດໜູນ ແລະ ທຶນການ ສຶກສາ ໃຫ້ເດັກຈາກຄອບຄົວທຸກຍາກ ສຳລັບການສຶກສາຂັ້ນພື້ນຖານ | • ກົມການເງິນ, ກົມແຜນການ ແລະ ການຮ່ວມມື | ໜ້າທີ 28-29,41-42 |
| | 3.4.1. | ປັບປຸງນິຕິກຳກ່ຽວກັບພາລະບົດບາດ ຂອງບຸກຄະລາກອນ ແລະ ການຈັດຕັ້ງ ຢູ່ຂັ້ນກະຊວງ, ຂັ້ນແຂວງ ແລະ ຂັ້ນເມືອງ, ໂຮງຮຽນ ແລະ ຄະນະພັດທະນາການສຶກ ສາຂັ້ນບ້ານ | • ປັບປຸງຄູ່ມື ວິທີເຮັດວຽກ, ຂໍ້ກຳນົດກົດລະບຽບຂັ້ນສູນກາງ, ແຂວງ,ເມືອງ, ບ້ານ ໃຫ້ສອດຄ່ອງກັບ ຂພສສ ເພື່ອຄຸ້ມຄອງທຶນບໍລິຫານ ໂຮງນຮຽນ | • ຄຳສັ່ງແນະນຳ ຂອງລັດຖະມົນຕີ | • ກົມຈັດຕັ້ງ ແລະ ພະນັກງານ, ກົມການເງິນ | ໜ້າທີ 29 |
| | 3.4.2. | ສ້າງຄູ່ມືຈັດຕັ້ງປະຕິບັດກ່ຽວກັບ ພາລະບົດບາດຂອງບຸກຄະລາກອນ ແລະ ການຈັດ ຕັ້ງທຸກຂັ້ນໃຫ້ມີຄວາມສອດຄ່ອງ | • ໃຫ້ສຳເລັດໃນ ປີ 2010 | • ຄຳສັ່ງແນະນຳ ຂອງລັດຖະມົນຕີ | • ກົມຈັດຕັ້ງ ແລະ ພ ນັກງານ, (ພາກສ່ວນ ອື່ນໆທີ່ກ່ຽວຂ້ອງ) | ໜ້າທີ 29 |
| | 3.4.3. | ປັບປຸງນິຕິກຳກ່ຽວກັບການວາງແຜນແລະ ສະໜອງຄູ | • ໃຫ້ສຳເລັດໃນປີ 2011 | • ຄຳສັ່ງແນະນຳ ຂອງລັດຖະມົນຕີ | • ກົມຈັດຕັ້ງ ແລະ ພະ ນັກງານ, ກົມສ້າງຄູ, | ໜ້າທີ 29 |

| | | | | | | |
|---|---|---|---|---|---|---|
| | | | | | ກົມແຜນການ ແລະ ການຮ່ວມມື, (ພາກສ່ວນ ກ່ຽວຂ້ອງ) | |
| | 3.4.4. | ທົບທວນລະບົບການເບີກຈ່າຍເງິນເດືອນ ແລະ ເງິນອຸດ ໜູນຕ່າງໆຂອງຄູເພື່ອປັບ ປຸງສິ່ງຈູງໃຈ | • ໃຫ້ສຳເລັດໃນປີ 2010 | • ດຳລັດນາຍົກລັດຖະມົນຕີ ວ່າດ້ວຍການ ທົບທວນ ແລະ ການດັດແກ້ ຄ່າແຮງ ງານ ເງິນເດືອນ ແລະ ຄ່າ ຕອບແທນຍ້ອງຍໍ ໂດຍອີງຕາມການປະຕິບັດວຽ ກ ງານການສຶກສາຄູ | • ທະບວງການຄຸ້ມຄອງລັດ ຖະກອນ, ກະຊວງການ ເງິນ,<br>• ກົມການເງິນກະຊວງ ສຶກສາ, ກົມຈັດຕັ້ງ ແລະ ພະນັກງານ | ໜ້າທີ 42 |
| **3.5.** | **ການປະຕິບັດຍຸດທະສາດການເງິນ ສຳລັບຜູ້ ທຸກຍາກ** | | | • ຄຳສັ່ງແນະນຳຂອງລັດຖະມົນ ຕີ ວ່າ ດ້ວຍ ຂະບວນການຈັດຕັ້ງປະຕິບັດ<br>• ຄຳສັ່ງແນະນຳຂອງລັດຖະມົນ ຕີວ່າ ດ້ວຍ ການກຳນົດ ມາດຕະຖານການ ປະເມີນ ການປະຕິບັດງານຂອງຂະ ແໜງການ | ກົມການເງິນ, ກົມແຜນການ ແລະ ການຮ່ວມມື, | ໜ້າທີ 43-46 |
| | 3.5.1. | ສ້າງລະບຽບການກ່ຽວກັບການມີສ່ວນແບ່ງ ດ້ານຄ່າໃຊ້ ຈ່າຍສຳລັບຫຼັງການສຶກສາຂັ້ນພື້ນຖານ | • ໃຫ້ສຳເລັດໃນປີ 2015 | • ຄຳສັ່ງແນະນຳ ຂອງລັດຖະມົນຕີ | • ກົມການເງິນ, ກົມ ແຜນການ ແລະ ການຮ່ວມ ມື, ກົມວິຊາການທີ່ກ່ຽວ ຂ້ອງ | ໜ້າທີ 43 |
| | 3.5.2. | ລົບລ້າງຄ່າທຳນຽມຕ່າງໆສຳລັບການສຶກສາ ຂັ້ນພື້ນຖານ | • ລົບລ້າງຄ່າລົງທະບຽນ ແລະ ທຳນຽມຕ່າງໆສຳລັບຊັ້ນ ອານຸບານ ແລະ ປະຖົມສຶກສາໃຫ້ເລີ່ມປະຕິບັດ ໃນປີ 2011 ເປັນຕົ້ນໄປ, ສຳລັບຊັ້ນ ມັດທະຍົມຕອນ ຕົ້ນແມ່ນເລີ່ມແຕ່ປີ 2013 ແລະ ສຳລັບສະຖາບັນສ້າງຄູ ແມ່ນເລີ່ມແຕ່ 2015. | • ດຳລັດລັດຖະມົນຕີ | • ກົມປະຖົມ ແລະ ອະນຸ ບານ, ກົມມັດທະຍົມຕົ້ນ<br>• (ກົມການເງິນ) | ໜ້າທີ 43 |
| | 3.5.3. | ສະໜອງທຶນບໍລິຫານໂຮງຮຽນ ແລະ ທຶນການສຶກສາ | • ທຶນບໍລິຫານໂຮງຮຽນໃຫ້ປະຕິບັດ 2011 | • ຄຳສັ່ງແນນຳຂອງລັດຖະມົນຕີ | • ກົມການເງິນ, ກົມປະຖົມ | ໜ້າທີ 44 |

| | | | | | | |
|---|---|---|---|---|---|---|
| | | ໂດຍມີເປົ້າໝາຍ | • ທຶນການສຶກສາ 2010 | | ແລະ ອະນຸບານສຶກສາ, ກົມມັດ ທະ ຍົມສຶກສາ, ສູນການສຶກສາຮຽນຮ່ວມ | |
| | 3.5.4. | ສະໜອງທຶນບໍລິຫານໂຮງຮຽນເພື່ອຮັບປະກັນຄຸນນະ ພາບການສຶກສາ (ປຶ້ມແບບຮຽນ ແລະ ຄູທີ່ມີຄຸນນະ ພາບ) | • ເລີ່ມປີ 2010 | • ມາດຕະຖານງົບປະມານ | • ກົມການເງິນ, ກະຊວງການ ເງິນ | ໜ້າທີ 44 |
| | 3.5.5. | ວາງແຜນສະໜອງ ແລະ ຄວາມຕ້ອງການຄູ ແລະ ຂື້ນ ງົບປະມານຕາມລະບຽບການບັນຈຸ ສັບຊ້ອນບຸກຄະລາ ກອນ | • ເລີ່ມປະຕິບັດໃນປີ 2010 | • ຄຳສັ່ງແນນຳ ຂອງລັດຖະມົນຕີ | • ກົມຈັດຕັ້ງ ແລະ ພະນັກງານ, ກົມແຜນການ ແລະການຮ່ວມມື, ກົມການເງິນ, | ໜ້າທີ 44 |
| | 3.5.6. | ເສີມຂະຫຍາຍບົດບາດຂອງຄະນະພັດທະນາການສຶກ ສາຂັ້ນບ້ານ ແລະ ປັບປຸງລະບຽບການຕ່າງໆກ່ຽວກັບ ການມີສ່ວນຮ່ວມຂອງຊຸມຊົນໃນການຕັດສິນບັນຫາ ດ້ານການເງິນຂອງໂຮງຮຽນ | • ຄູ່ມືການຈັດຕັ້ງປະຕິບັດໃຫ້ສຳເລັດໃນປີ 2010 | • ຂໍ້ຕົກລົງລັດຖະມົນຕີ | • ກົມຈັດຕັ້ງ ແລະ ພະນັກງານ, ກົມການເງິນ | ໜ້າທີ 28,44 |
| | 3.5.7. | ລາຍງານ/ເຜີຍແຜ່ການໃຊ້ຈ່າຍງົບປະມານຂອງລັດ ແລະ ທຶນປະກອບສ່ວນຂອງພໍ່ແມ່ນັກຮຽນ, ໂຮງຮຽນ ແລະ ຊຸມຊົນ | • ອອກວາລະສານການເງິນຂອງຂະແໜງການສຶກສາ | • ຄຳສັ່ງແນະນຳ ຂອງລັດຖະມົນຕີ | • ກົມການເງິນ | ໜ້າທີ 44 |
| | 3.5.8. | ປັບປຸງການຈັດສັນ ງົບປະມານຂອງສູນກາງ/ແຂວງ/ ເມືອງໃຫ້ສອດຄ່ອງກັບນະໂຍບາຍແຫ່ງຊາດ | • ມີຄູ່ມືລະບຽບການສ້າງແຜນງົບ ປະມານ-ການເງິນຢ່າງເປັນ ເອກະພາບ | • ດຳລັດນາຍົກລັດຖະມົນຕີ | • ກົມການເງິນ, ກະຊວງການ ເງິນ | ໜ້າທີ 44 |
| | 3.5.9. | ນຳໃຊ້ນະໂຍບາຍ ແລະ ຍຸດທະສາດບຸລິມະສິດຂອງ ຂພສສ ເພື່ອລະດົມການຊ່ວຍເຫຼືອຈາກຄູ່ຮ່ວມພັດ ທະນາ | • ໃຫ້ໄດ້ປະຕິບັດໃນປີ 2010 | • ການຮັບຮອງເອົາ ຂພສສ ຈາກລັດຖະ ບານ ແລະ ຄູ່ຮ່ວມພັດທະນາ | • ກົມແຜນການ ແລະ ການ ຮ່ວມມື, ກົມກ່ຽວຂ້ອງ | ໜ້າທີ 44 |
| **3.6.** | **ຍຸດທະສາດທາງດ້ານການປະຕິບັດເພື່ອປັບປຸງ ຜົນການຕິດຕາມທົ່ວຂະແໜງການ** | | | • ຂໍ້ຕົກລົງຂອງລັດຖະມົນຕີ ວ່າດ້ວຍການ ສ້າງຕັ້ງ ຫ້ອງການຕິດຕາມ ແລະ ປະເມີນຜົນການສຶກສາ | • ກົມກວດກາ, ກົມແຜນການ ແລະ ການຮ່ວມມື, (ສູນຮັບ ປະກັນຄຸນນະພາບການ ສຶກສາ, ສູນຄົ້ນຄວ້າຍຸດທະ ສາດ ແລະ ວິໄຈການ | ໜ້າທີ 49 |

| | | | | | |
|---|---|---|---|---|---|
| | | | | ສຶກສາ, ພາກສ່ວນ ອື່ນໆທີ່ກ່ຽວຂ້ອງ) | |
| | 3.6.1. ຕົກລົງການແບ່ງປັນຂອບເຂດຄວາມຮັບຜິດຊອບ ລະ ຫວ່າງກະຊວງສຶກສາທິການ, ແຂວງ, ອົງການກວດສອບແຫ່ງລັດ ຂັ້ນສູນກາງ ແລະ ແຂວງ ພ້ອມທັງພັດທະນາ ກົນກອງຂອງກະຊວງກ່ຽວ ກັບການຕິດຕາມຜົນງານທົ່ວ ຂະແໜງການ ໂດຍອີງຕາມຜົນໄດ້ຮັບຕົວຈິງ ເປັນຫຼັກ | | • ຂໍ້ຕົກລົງລັດຖະມົນຕີ | • ກົມກວດກາ, ກົມການເງິນ | ໜ້າທີ 49 |
| | 3.6.2 ການຕິດຕາມການປະຕິບັດງານຂອງ ພະແນກສຶກສາ ທິການແຂວງ | • ມີແຜນປະຕິບັດງານ (ຂອງ ກົມກວດກາ) | • ຄຳສັ່ງແນະນຳ ຂອງລັດຖະມົນຕີ | • ກົມກວດກາ | ໜ້າທີ 49 |
| | 3.6.3. ປັບປຸງລະບົບການລາຍງານການປະຕິບັດງານທາງ ດ້ານການເງິນ ແລະ ຂະແໜງການ | • ມີເຄື່ອງມືລະບົບລາຍງານ | • ຄຳສັ່ງແນະນຳ ຂອງລັດຖະມົນຕີ | • ກົມກວດກາ, ກົມການເງິນ, ກົມແຜນການ ແລະ ການ ຮ່ວມມື, ສູນຄົ້ນຄວ້າຍຸດ ທະສາດ ແລະ ວິໄຈການ ສຶກສາ, ສູນຮັບປະ ກັນຄຸນ ນະພາບການສຶກສາ, (ພາກສ່ວນກ່ຽວຂ້ອງ) | ໜ້າທີ 49 |
| | 3.6.4. ປະສານງານດ້ານການຕິດຕາມ, ການປະຕິບັດດ້ານ ການເງິນລວມທັງການປ່ອຍເງິນ | • ມີການກວດກາພາຍໃນ/ນອກຢ່າງເປັນປົກກະຕິ<br>• ມີການກວດກາສະເພາະກິດ | • ຂໍ້ຕົກລົງລັດຖະມົນຕີ | • ກົມກວດກາ , ກົມການເງິນ<br>• (ພາກສ່ວນກ່ຽວຂ້ອງ) | ໜ້າທີ 49 |
| | 3.6.5. ເພີ່ມທະວີການກວດສອບບັນຊີໂດຍການສຸ່ມຕົວຢ່າງ | • ປະຕິບັດໃນປີ 2011 | • ຂໍ້ຕົກລົງລັດຖະມົນຕີ | • ກົມກວດກາ , ກົມການເງິນ | ໜ້າທີ 49 |

| | | | | | | |
|---|---|---|---|---|---|---|
| **3.7.** | **ເພີ່ມທະວີຄວາມສອດຄ່ອງຂອງລະບົບຕິດຕາມການປະຕິບັດງານ** | | | | | ໜ້າທີ 50 |
| | 3.7.1 | ສ້າງຄວາມເຂັ້ມແຂງໃຫ້ລະບົບສະຖິຕິ-ຂ່າວສານ ດ້ວຍ ລະບົບຄອມພິວເຕີ້ຮອດຂັ້ນເມືອງ | • ພະນັກງານຂັ້ນເມືອງໄດ້ຮັບການຝຶກອົບຮົມພະນັກງານສະຖິຕິ ແລະ ຄອມພິວເຕີ້ທົ່ວປະເທດ<br>• ມີຂໍ້ມູນແຍກເພດ, ແຍກເຜົ່າ ແລະ ຄົນພິການ | • ຂໍ້ຕົກລົງລັດຖະມົນຕີ | • ສູນສະຖິຕິ-ເຕັກໂນໂລຊີ ຂ່າວສານການສຶກສາ | ໜ້າທີ 50 |
| | 3.7.2. | ຈັດຕັ້ງປະຕິບັດການທົບທວນປະຈໍາປີ ຂອງຂະແໜງການ | • ມີແຜນປະຕິບັດງານປະຈໍາປີ ກ່ຽວກັບກັບຂອບປະເມີນຜົນການປະຕິບັດງານໃຫ້ໄດ້ປະຕິບັດໃນ ປີ 2010 | • ຂໍ້ຕົກລົງລັດຖະມົນຕີ | • ກົມກວດກາ | ໜ້າທີ 50 |

# ສາລະບານ

## ພາກທີ I
## ສະຫລຸບຕີລາຄາການຈັດຕັ້ງປະຕິບັດແຜນການພັດ ທະນາກິລາກາຍະກຳ 5 ປີຄັ້ງທີ່ VI (2006-2010).


I. ສະພາບລວມ ແລະ ຜົນສຳເລັດ ........ 1
1. ຜົນສຳເລັດໃນການເຄື່ອນໄຫວປີ 2006-2010 ........ 3
1.1. ດ້ານການເມືອງແນວຄິດ ແລະ ການຈັດຕັ້ງ ........ 3
1.2. ດ້ານວິຊາສະເພາະ ........ 5
1.2.1. ກິລາມວນຊົນ ........ 5
1.2.2. ວຽກງານກິລາສາຍສູງ ........ 7
1.2.3. ວຽກງານຮ່ວມມືກິລາສາກົນ ........ 9
2. ວຽກງານຫ້ອງການຄະນະກຳມະການກິລາການຍະກຳແຫ່ງຊາດ ........ 9
2.1. ວຽກງານສູນຝຶກກິລາແຫ່ງຊາດ ........ 10
2.2. ວຽກງານສະໜາມກິລາແຫ່ງຊາດ ........ 11
2.3. ວຽກງານຂ່າວສານ, ໜັງສືພິມ ........ 11
3. ສາເຫດທີ່ພາໃຫ້ມີຈຸດດີ ........ 11
4. ດ້ານອ່ອນຄົງຄ້າງ ........ 12
5. ບົດຮຽນທີ່ຖອດຖອນໄດ້ ........ 12


## <u>ພາກທີ II</u>
## ແຜນການພັດທະນາກິລາກາຍະກຳແຫ່ງຊາດ 5 ປີຄັ້ງທີ່ VII (2011 - 2015)


1. ຈຸດປະສົງ ແລະ ລະດັບຄາດໝາຍ ........ 14
2. ເນື້ອໃນວຽກງານໃນແຕ່ລະດ້ານປີ 2011-2015 ........ 15
2.1. ວຽກງານກໍ່ສ້າງພັກ-ພະນັກງານ, ອົງການຈັດຕັ້ງມະຫາຊົນ ........ 15
2.2. ວຽກວິຊາສະເພາະ ........ 16
2.2.1. ວຽກກິລາມວນຊົນ ........ 16
2.2.2. ວຽກງານກົມກິລາສາຍສູງ ........ 16
2.2.3. ວຽກງານພົວພັນກິລາສາກົນ ........ 17
2.2.4. ວຽກງານຫ້ອງການຂອງຄະນະກຳມະການກິລາ-ກາຍະກຳແຫ່ງຊາດ ........ 18
2.2.5. ວຽກງານສູນຝຶກກິລາແຫ່ງຊາດ ........ 19

2.2.6. ວຽກງານສະໜາມກິລາແຫ່ງຊາດ ........ 19
3. ບັນດາວິທີມາດຕະການຈັດຕັ້ງປະຕິບັດ ........ 19
ວຽກງານກິລາການຍະກຳໃນປີ 2006-2010 ທີ່ຍັງຄ້າງຄາ ........ 20
ຕາຕະລາງຈັດການແຂ່ງຂັນຢູ່ພາຍໃນປະເທດ ........ 23
ສະຖິຕິ ແລະ ການຄາດຄະເນກິລາມວນຊົນທີ່ອອກກຳລັງກາຍ ........ 24
ແຜນກໍ່ສ້າງນັກກິລາ, ຄູຝຶກ ແລະ ກຳມະການຕັດສິນລະດັບຊາດ ........ 26

# ບົດສະຫຼຸບ ການຈັດຕັ້ງປະຕິບັດ
# ແຜນການພັດທະນາວຽກງານກິລາ-ກາຍະກຳ ປີ ( 2006-2010 ) ແລະ
# ທິດທາງແຜນການພັດທະນາກິລາ-ກາຍະກຳ ປີ ( 2011-2015 )
# ຂອງຄະນະກຳມະການກິລາ-ກາຍະກຳແຫ່ງຊາດ.

# <u>ພາກທີ I</u>

## ສະຫລຸບຕີລາຄາການຈັດຕັ້ງປະຕິບັດແຜນການພັດ ທະນາກິລາກາຍະກຳ 5 ປີຄັ້ງທີ່ VI (2006-2010).

ໃນໄລຍະ 5 ປີ ຜ່ານມາ(2006-2010) ຄະນະກຳມະການກິລາກາຍະກຳແຫ່ງຊາດໄດ້ພ້ອມກັນ ຜັນຂະຫຍາຍແຜນການ 5 ປີ ຄັ້ງທີ່ 6 (2006-2010), ເວົ້າລວມ ເພື່ອສືບຕໍ່ຈັດຕັ້ງປະຕິບັດມະຕິ ຂອງກອງປະຊຸມໃຫ່ຍ ຄັ້ງທີ່ VIII ຂອງພັກ, ທັງເປັນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດສັງຄົມ 5 ປີ ຄັ້ງທີ 6 ຂອງລັດຖະບານ ໂດຍສະເພາະສູ້ຊົນຈັດຕັ້ງປະຕິບັດແຜນພັດທະນາ ວຽກງານກິລາກາຍະກຳ ທີ່ໄດ້ວາງອອກແຕ່ປີ 2006-2010 ຢ່າງຕໍ່ເນື່ອງ ຄະນະກຳມະການກິລາກາຍະກຳແຫ່ງຊາດ ພາຍຫຼັງ ໄດ້ມີການມອບໝາຍວຽກງານ ໂດຍສະເພາະແມ່ນ ການກະກຽມສຸມໃສ່ໃຫ້ແກ່ການຈັດງານ ມະຫາກຳ ກິລາ ຊີເກມຄັ້ງທີ 25, ປີ 2009. ເຊິ່ງແມ່ນ ສປປ ລາວ ໄດ້ຮັບກຽດເປັນເຈົ້າພາບລັດຖະບານໄດ້ຖືເປັນວຽກ ທີ່ສຳຄັນ ແລະ ເອົາໃຈໃສ່ຊີ້ນຳໃນການກະກຽມງານຄັ້ງນີ້ ໂດຍໄດ້ແຕ່ງຕັ້ງຄະນະຮັບຜິດຊອບລະດັບຊາດ, ແຕ່ງຕັ້ງບັນດາກຳມະການຝ່າຍຕ່າງໆ ໂດຍສະເພາະຄະນະກຳມະການກິລາ-ກາຍະກຳແຫ່ງຊາດ ໃນນາມ ທີ່ເປັນເສນາທິການໃຫ້ແກ່ຄະນະຈັດງານໃນ 3 ວຽກໃຫ່ຍ ທີ່ເປັນໃຈກາງ ເຊິ່ງພັກ-ລັດຖະບານມອບໃຫ້ ແລະ ສາມາດບັນລຸຜົນສຳເລັດຄື: ວຽກງານກອງເລຂາ, ວຽກງານການບໍລິຫານ-ບໍລິການ, ການຕ້ອນຮັບ ແລະ ວຽກງານເຕັກນິກຈັດການແຂ່ງຂັນ ໄດ້ຮັບຜົນສຳເລັດ ຢ່າງຈົບງາມ.

### I. ສະພາບລວມ ແລະ ຜົນສຳເລັດ.

ໃນໄລຍະ 5 ປີ ຜ່ານມາ ເຖິງວ່າສະພາບແວດລ້ອມສາກົນບໍ່ອຳນວຍຄວາມສະດວກ, ມີຄວາມສັບສົນ ຫຼາຍປະການ ບວກໃສ່ສະພາບທາງດ້ານເສດຖະກິດ-ສັງຄົມ ພົບຄວາມຫຍຸ້ງຍາກ, ຂາດດຸນງົບປະມານ ພາຍໃນບໍ່ສາມາດສະໜອງໄດ້ຕາມແຜນ, ເກີດມີໜີ້ສິນ, ຜົນກະທົບເຖິງການເຄື່ອນໄຫວວຽກງານກິລາ-ກາຍະກຳຂອງຄະນະກຳມະການກິລາ-ກາຍະກຳແຫ່ງຊາດບໍ່ໜ້ອຍ, ແຕ່ໂດຍໄດ້ຮັບການເອົາໃຈໃສ່ ຊີ້ນຳພາ ຂອງພັກ-ລັດຖະບານ, ຄະນະກຳມະການກິລາ-ກາຍະກຳແຫ່ງຊາດ ພ້ອມດ້ວຍການນຳກິລາ-ກາຍະກຳຂັ້ນ ແຂວງ, ເມືອງກໍ່ຄືຄະນະພັກ, ອຳນາດການປົກຄອງຂັ້ນຕ່າງໆ ບວກກັບກຳລັງແຮງການຈັດຕັ້ງຂອງສັງຄົມ ທົ່ວປະເທດ ໄດ້ເຮັດໃຫ້ຂະບວນກິລາ-ກາຍະກຳຢູ່ພາຍໃນປະເທດມີບາດກ້າວຂະຫຍາຍຕົວ ແລະ ມີຜົນສຳເລັດຫຼາຍດ້ານທີ່ເປັນໜ້າຊົມຊື່ນ, ໂດຍສະເພາະແມ່ນການຈັດການແຂ່ງຂັນງານມະຫາກຳກິລາ ແຫ່ງຊາດຄັ້ງທີ VIII ທີ່ແຂວງຈຳປາສັກຢູ່ພາຍໃນປະເທດ ເປັນຕົ້ນແມ່ນແຂ່ງຂັນກິລາຊ່ຳນັບຮັບຕ້ອນ ວັນສຳຄັນຕ່າງໆຂອງຊາດ, ພັກ ແລະ ງານບຸນປະເພນີໂດຍສະເພາະແມ່ນ ການກະກຽມ ການເປັນເຈົ້າພາບ ທີ່ດີ ໃນງານມະຫາກຳກິລາຊີເກມ ຄັ້ງທີ 25, ປີ 2009, ໄດ້ຮັບຜົນສຳເລັດຢ່າງຈົບງາມ.

ຈາກການເຄື່ອນໄຫວຕົວຈິງໃນໄລຍະ 5 ປີ ຜ່ານມານີ້ ທາງຄະນະກຳມະການກິລາກາຍະກຳ ແຫ່ງຊາດ ກໍ່ສາມາດປະຕິບັດແຜນຍຸດທະສາດກິລາໃນເບື້ອງຕົ້ນ ເຂົ້າສູ່ຊີວິດຕົວຈິງໃນສັງຄົມນັບທັງຢູ່ ອ້ອມຂ້າງສູນກາງກໍ່ຄືທ້ອງຖິ່ນຕົວເມືອງ, ຊົນນະບົດເຂດຫ່າງໄກສອກຫຼີກ ກໍ່ເກີດມີຂະບວນການກິລາ ປະເພດຕ່າງໆ, ປະຊາຊົນບັນດາເຜົ່າມີຄວາມນິຍົມ, ໃຫ້ຄວາມຮ່ວມມື, ເຂົ້າຮ່ວມສະໜັບສະໜູນເປັນ

ຂະບວນກ້ວາງຂວາງກ່ວາເກົ່າ, ຫຼາຍພາກສ່ວນ ໄດ້ເປັນເຈົ້າການໃນການຈັດຕັ້ງແຂ່ງຂັນກິລາ ປະເພດຕ່າງໆ ຕິດພັນກັບວັນສຳຄັນ, ວັນບຸນປະເພນີ, ກິລາຕ່າງໆ. ລະຫວ່າງແຂວງຕໍ່ແຂວງ, ເມືອງຕໍ່ເມືອງ, ສະຖາບັນຕໍ່ສະຖາບັນ, ໂຮງຮຽນຕໍ່ໂຮງຮຽນ, ສະໂມສອນຕໍ່ສະໂມສອນ, ບ້ານຕໍ່ບ້ານ, ສຳນັກງານຕໍ່ສຳນັກງານ, ດ້ານພື້ນຖານໂຄງລ່າງຮັບໃຊ້ຂະບວນການກິລາ ເກີດມີໜໍ່ແໜງເປັນທ່າແຮງໃຫ້ແກ່ການເຄື່ອນໄຫວກິລາ-ກາຍະກຳ. ພັກ-ລັດຖະບານພວກເຮົາກໍ່ໄດ້ກໍ່ສ້າງລົງທຶນອັນມະຫາສານທີ່ຈຳເປັນ ນອກນັ້ນເອກະຊົນ, ບຸກຄົນໄດ້ສະຫຼະທຶນຮອນຂອງຕົນເອງ ເພື່ອປະກອບສ່ວນເຂົ້າໃນການສ້າງສາພັດທະນາ ທາງດ້ານກິລາທີ່ໄດ້ສ້າງຂຶ້ນມາ ຫຼື ຊຸກຍູ້ໃຫ້ເອກະຊົນລົງທຶນກ່ອນ, ບັນດາສະຫະພັນແຫ່ງຊາດ, ສະໂມສອນຕ່າງໆທີ່ໄດ້ເປັນເຈົ້າການ ເຄື່ອນໄຫວດ້ານວຽກງານກິລາກາຍະກຳເຫັນວ່າໄດ້ດີຂຶ້ນ.

ການປະກອບສ່ວນຂອງການຈັດຕັ້ງ, ທຸກໆຊັ້ນຄົນໃນສັງຄົມກໍ່ໃຫ້ການອຸປະຖຳຊຸກຍູ້ຫຼາຍຂຶ້ນກ່ວາເກົ່າ ແລະ ກ້ວາງຂວາງວຽກງານການກິລາໄດ້ກາຍເປັນຂອງທົ່ວປວງຊົນເທື່ອລະກ້າວ ແລະ ກາຍເປັນຄວາມຮັບຜິດຊອບຂອງໝົດທຸກຄົນ ພິເສດຂະບວນການອອກກຳລັງກາຍ ເພື່ອສຸຂະພາບເຊັ່ນ ເຕັ້ນເອໂຣບິກ, ຂະບວນການແລ່ນເພື່ອສຸຂະພາບ, ໄດ້ຂະຫຍາຍຕົວຢ່າງກ້ວາງຂວາງກ່ວາເກົ່າ. ຢູ່ຂັ້ນອ້ອມຂ້າງສູນກາງກໍ່ຄືທ້ອງຖິ່ນ, ບັນດາແຂວງ, ນັບທັງສະຖານທີ່ພັກ ຜ່ອນອອກກຳລັງກາຍ ຫຼາຍບ່ອນ ກໍ່ປະກົດເຫັນຜູ້ສູງອາຍຸ, ເດັກນ້ອຍຍ່າງອອກກຳລັງກາຍຫຼາຍຂຶ້ນ. ພະນັກງານ, ການນຳຂັ້ນຕ່າງໆ ກໍ່ໃຫ້ຄວາມສຳຄັນແບ່ງເວລາຫຼິ້ນກິລາອອກກຳລັງກາຍຕາມເງື່ອນໄຂແລະທັງເປັນການ ເຂົ້າຮ່ວມເຄື່ອນໄຫວຂະບວນ ການກິລານຳມວນຊົນ ນອກນັ້ນຍັງມີຫຼາຍຮູບການຫຼິ້ນກິລາ ຈາກການເຄື່ອນໄຫວ ກິລາຢູ່ພາຍໃນເຫັນວ່າມີຂະບວນການທີ່ດີ, ມີບັນຍາກາດຟົດຟື້ນມ່ວນຊື່ນ, ສ້າງສຸຂະພາບໃຫ້ແຂງແຮງມີອາຍຸຍືນ, ເປັນເງື່ອນໄຂໜຶ່ງມັນໄດ້ຕິດພັນກັບການຜະລິດ ແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ. ນອກນັ້ນພວກເຮົາຍັງໄດ້ເຄື່ອນໄຫວແຂ່ງຂັນກິລາລະດັບສູງໃນເວທີສາກົນຫຼາຍຄັ້ງ ໃນ 5 ປີມານີ້, ມີທັງຜົນສຳເລັດຫຼາຍດ້ານທີ່ເປັນໜ້າຊົມເຊີຍ, ໄດ້ສ້າງກຽດສັກສີ ແລະ ຊື່ສຽງມາໃຫ້ປະເທດຊາດ ກໍ່ຄືທ້ອງຖິ່ນຕົນເອງ, ການເຄື່ອນໄຫວກິລາລະດັບສູງ ກໍ່ມີຫລາຍລະດັບຕ່າງກັນ ຜ່ານການຊີ້ນຳ-ນຳພາຂະບວນການກິລາກາຍະກຳ 5 ປີມານີ້ ໄດ້ພັດທະນາກິລາກາຍະກຳ ຕິດພັນກັບທາງດ້ານການເມືອງ, ເສດຖະກິດ, ວັດທະນະທຳ, ສັງຄົມ, ປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ເຮັດໃຫ້ເຍົາວະຊົນ, ຊາວໜຸ່ມ ຫ່າງໄກຈາກສິ່ງເສບຕິດ, ສ້າງຄົນໃຫ້ມີສຸຂະພາບແຂງແຮງຂຶ້ນຫລາຍກວ່າເກົ່າ, ພວກເຮົາຕ້ອງເຂົ້າໃຈວ່າ: ການພັດທະນາກິລາ-ກາຍະກຳແມ່ນການຜັນຂະຫຍາຍດ້ວຍວິທີ ການລົງເຄືອນໄຫວທາງກວ້າງ, ທາງເລິກ ແລະ ເຮັດໜ້າທີ່ ຢ່າງຕັ້ງໜ້າ ຖ້າທຽບໃສ່ເງື່ອນໄຂຂອງປະເທດຊາດ, ເສດຖະກິດ-ສັງຄົມ, ສິ່ງແວດລ້ອມ ແມ່ນພວກເຮົາມີຫລາຍຂໍ້ຈຳກັດ, ຂໍ້ຫຍຸ້ງຍາກ ແລະ ມີຫລາຍສິ່ງທ້າທາຍ ທີ່ຈະປະເຊີນໜ້າແຕ່ພວກເຮົາ ກໍ່ສາມາດ ຜ່ານຜ່າໄດ້ທຸກເຫດການ ເຊັ່ນ:

ວຽກງານມະຫາກຳກິລາຊີເກມ ຄັ້ງທີ 25, ປີ 2009 ເພື່ອຈຸດປະສົງ ແລະ ຄາດໝາຍຕົ້ນຕໍຂອງການກະກຽມນັກກິລາລາວ ເພື່ອຍາດເອົາຫຼຽນໃນວຽງຈັນເກມ ນັ້ນແມ່ນເພື່ອເຮັດໜ້າທີ່ການເມືອງໃນການພັດທະນາກິລາລາວກ້າວໄປສູ່ຄຸນນະພາບໃໝ່, ສ່ອງແສງໃຫ້ເຫັນເຖິງຄວາມໝັ້ນຄົງ, ມີສະຖຽນລະພາບ, ຄວາມຮຸ່ງເຮືອງສີວິໄລໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ພາຍໃຕ້ການນຳພາຂອງພັກ-ລັດຖະບານ ກ້າວຂຶ້ນຢ່າງບໍ່ຢຸດຢັ້ງ, ເພີ່ມທະວີການຮ່ວມມືສາມັກຄີກັບສາກົນ, ພິເສດກັບເພື່ອນມິດສະມາຊິກອາຊຽນ.

ຕະລອດໄລຍະ 5 ປີ ຜ່ານມາ ຄະນະກຳມະການກິລາກາຍະກຳແຫ່ງຊາດ ໄດ້ສຸມໃສ່ບາງວຽກຕົ້ນຕໍດັ່ງນີ້:

- ໄດ້ມີການປັບປຸງຄະນະບໍລິຫານງານ, ບຸກຄະລະກອນຂອງສະຫະພັນໃຫ້ມີຄຸນນະພາບ, ທຸກໆສະຫະພັນໄດ້ຄົ້ນຄວ້າຊອກຫາທ່າແຮງລາຍຮັບທາງດ້ານເສດຖະກິດຂອງຕົນເອງ, ວາງແຜນລົງຄັດເລືອກນັກກິລາຕົວຈິງຢູ່ຕາມທ້ອງຖິ່ນຕ່າງໆທົ່ວປະເທດ, ຈັດສັນຄັດເລືອກຄູຝຶກຢູ່ພາຍໃນປະເທດ ແລະ ພົວພັນຊອກຫາຄູຝຶກຕ່າງປະເທດຜູ້ທີ່ມີລະດັບສູງ, ພົວພັນຮ່ວມມືກັບບັນດາປະເທດເພື່ອນມິດອາຊຽນ ແລະບັນດາປະເທດຕ່າງໆໃນໂລກເພື່ອຂໍການຊ່ວຍເຫຼືອ, ວາງແຜນສົ່ງນັກກິລາໄປຝຶກຊ້ອມຢູ່ຕ່າງປະເທດ.

- ໄດ້ເລີ່ມການຄັດເລືອກແຕ່ເດືອນມັງກອນ 2008 ເປັນຕົ້ນມາ ເຊິ່ງນັກກິລາຈຳນວນໜຶ່ງ ແມ່ນໄດ້ຖືເອົາສະຖິຕິຜົນງານຈາກງານຊີເກມ ຄັ້ງທີ 24 ທີ່ປະເທດໄທ ໃນນັ້ນມີກິລາເທຄວັນໂດ, ວູຊູ, ມວຍສາກົນ, ມວຍລາວ, ຢູໂດ, ກາຣາເຕໂດ, ປັນຈັກສີລັດ, ມວຍປໍ້າ, ເປຕັງ, ສ່ວນກິລາປະເພດອື່ນໆ ແມ່ນໄດ້ຄັດເລືອກຄືນໃໝ່ໂດຍສະເພາະແມ່ນໄດ້ຈາກງານກິລາແຫ່ງຊາດ ຄັ້ງທີ VIII ປີ 2008 ຢູ່ແຂວງຈຳປາສັກ ແລະ ສາມາດສັງລວມໄດ້ຄູຝຶກ 134 ທ່ານ ແລະ ນັກກິລາ 629 ຄົນ ລວມທັງໝົດ 763 ຄົນ.

ຈາກຜົນສຳເລັດດັ່ງກ່າວ ຍ້ອນມີການນຳພາທີ່ດີ ພ້ອມດ້ວຍຄະນະນັກກິລາມີຄວາມຕັ້ງໜ້າ ໃນການກະກຽມ, ວາງແຜນທີ່ຖືກຕ້ອງ, ສອດຄ່ອງ ແລະ ມີວິທະຍາສາດ, ບວກກັບນັກກິລາມີຄວາມ ຕັດສິນໃຈສູງ, ຜ່ານການແຂ່ງຂັນງານມະຫາກຳກິລາຊີເກມຄັ້ງນີ້ ຈຶ່ງໄດ້ບັນລຸຜົນສຳເລັດເກີນຄາດໝາຍ ທີ່ໄດ້ວາງໄວ້ສາມາດຍາດໄດ້ 33 ຫຼຽນຄຳ, 25 ຫຼຽນເງິນ, 52 ຫຼຽນທອງ ລວມຫຼຽນທັງໝົດ 110 ຫຼຽນ. ຈຶ່ງສາມາດຕີລາຄາໄດ້ຢ່າງຊັດເຈນວ່າ: ມັນບໍ່ແມ່ນເຫດການທີ່ບັງເອີນຢ່າງແນ່ນອນ ແຕ່ຫາກຍ້ອນມີການ ວາງແຜນຍຸດທະສາດຢ່າງເປັນລະບົບ, ມີການຄົ້ນຄວ້າໄຕ່ຕອງ, ມີຍຸດໂທບາຍເພື່ອຮັບໃຊ້ຍຸດທະສາດ ໃນແຕ່ລະລາຍການແຂ່ງຂັນຂອງແຕ່ລະປະເພດກິລາ ແລະ ຍ້ອນພັກ-ລັດຖະບານ ເຫັນໄດ້ເຖິງຄວາມສຳຄັນ ຂອງຄະນະກຳມະການກິລາ-ກາຍະກຳແຫ່ງຊາດ, ຄະນະກຳມະການກິລາໂອແລມປິກແຫ່ງຊາດລາວ ແລະບັນດາສະຫະພັນກິລາແຫ່ງຊາດ ແຕ່ລະປະເພດກິລາ ໄດ້ເປັນຫຼັກໃນການຊີ້ນຳພາຢ່າງໃກ້ສິດ ໂດຍພາຍໃຕ້ການຊີ້ນຳຂອງພະນະທ່ານ ສົມສະຫວາດ ເລັ່ງສະຫວັດ ຮອງນາຍົກລັດຖະມົນຕີ, ຜູ້ປະຈຳການລັດຖະບານ, ປະທານຄະນະກຳມະການຈັດງານມະຫາກຳກິລາຊີເກມ ຄັ້ງທີ 25.

ໂດຍສືບຕໍ່ຈັດຕັ້ງປະຕິບັດຕາມເນື້ອໃນມະຕິ ຂອງກອງປະຊຸມຜູ້ນຳກິລາທົ່ວປະເທດໃນແຕ່ລະປີແຕ່ລະຄັ້ງທີ່ໄດ້ກຳນົດອອກ. ໂດຍອີງໃສ່ພາລະບົດບາດ ແລະ ທິດທາງແຜນການຂອງບັນດາກົມ, ຂອງຫ້ອງການກິລາແຂວງ-ເມືອງ, ຄະນະກຳມະການໂອແລມປິກແຫ່ງຊາດ, ບັນດາສະຫະພັນແຫ່ງຊາດຕ່າງໆ ທີ່ໄດ້ຈັດຕັ້ງປະຕິບັດແຜນການ 5 ປີຜ່ານມານີ້ມີຜົນສຳເລັດພົ້ນເດັ່ນ ແລະ ມີດ້ານດີ, ດ້ານອ່ອນຂໍ້ຄົງຄ້າງຊຶ່ງມັນສະແດງອອກດັ່ງນີ້:

## 1. ຜົນສຳເລັດໃນການເຄື່ອນໄຫວປີ 2006-2010:

### 1.1. ດ້ານເມືອງແນວຄິດແລະການຈັດຕັ້ງ:

ໃນ 5 ປີ ຜ່ານມາຄະນະໜ່ວຍພັກ, ຄະນະນຳຄະນະກຳມະການກິລາກາຍະກຳແຫ່ງຊາດພວກເຮົາໄດ້ເອົາໃຈໃສ່, ຖືເປັນສຳຄັນໃນການສຶກສາອົບຮົມການເມືອງ-ແນວຄິດ ໃຫ້ແກ່ພະນັກງານລັດຖະກອນ, ສະມາຊິກພັກ, ບຸກຄະລາກອນຂອງຂະແໜງການກິລາ-ກາຍະກຳນັບທັງສະຫະພັນ ແລະ

ນັກກິລາປະເພດຕ່າງໆຢ່າງເປັນປະຈຳ ແລະ ຕໍ່ເນື່ອງ, ທັນກັບເວລາດ້ວຍຫລາຍຮູບການທີ່ແນ່ໃສ່ ເຮັດໃຫ້ພະນັກງານລັດຖະກອນ ມີຄວາມຮັບຮູ້ຕໍ່ແນວທາງນະໂຍບາຍຂອງພັກ-ລັດຖະບານໃນແຕ່ລະໄລຍະ ແລະ ວຽກງານການຈັດຕັ້ງຄົ້ນຄວ້າຮໍ່າຮຽນ ເພື່ອເຊື່ອມຊຶມບັນດາເອກະສານແນວທາງນະໂຍບາຍຂອງພັກ ລະບຽບກົດໝາຍຂອງລັດຖະບານ ໂດຍສະເພາະແມ່ນການຈັດຕັ້ງຮໍ່າຮຽນເພື່ອເຊື່ອມຊຶມບັນດາມະຕິຕ່າງໆ ຂອງກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ( ສະໄໝທີ VII ແລະ VIII ).

ເພື່ອສືບຕໍ່ ຄົ້ນຄວ້າເຊື່ອມຊຶມ ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ແຫ່ງລັດຄັ້ງທີ VI ແລະ ເອກະສານສຳຄັນອື່ນໆຂອງພັກ-ລັດ ຫຼາຍໆເອກະສານຕິດພັນກັບການປັບປຸງການຈັດຕັ້ງ, ນະໂຍບາຍຕ່າງໆ ຕາມແຜນການນະໂຍບາຍລວມຂອງພັກ-ລັດຖະບານຄື: ນະໂຍບາຍຕ່າງໆ ຂອງພາຍໃນຄະນະກຳມະການກິລາ-ກາຍະກຳແຫ່ງຊາດ ເພື່ອແນ່ໃສ່ເພີ່ມທະວີຄວາມສາມັກຄີພາຍໃນໃຫ້ໜັກແໜ້ນກວ່າເກົ່າ, ເອກະພາບກັນນັບແຕ່ສູນກາງລົງຮອດທ້ອງຖິ່ນໃນທົ່ວປະເທດ, ກົງຈັກການຈັດຕັ້ງຂັ້ນຕ່າງໆໄດ້ຮັບການປັບປຸງ, ເສີມສ້າງ ແລະ ພວມສືບຕໍ່ປັບປຸງແຕ່ສູນກາງລົງຮອດຂັ້ນເມືອງ, ເຮັດໃຫ້ບົດບາດການເຄື່ອນໄຫວ, ສິດໜ້າທີ່ ຂອງຄະນະກຳມະການກິລາ-ກາຍະກຳແຫ່ງຊາດໄດ້ເປີດກວ້າງ ແລະ ຍົກສູງຄຸນນະພາບ ການແລກປ່ຽນວັດທະນາທຳ, ການກິລາສາກົນ, ເພື່ອພັດທະນານັກກິລາລາວ ໃຫ້ໄດ້ປະລິມານ ແລະ ຄຸນນະພາບ, ສ້າງຄວາມເຂັ້ມແຂງທາງດ້ານຮ່າງກາຍ ແລະ ມັນສະໝອງ, ເສີມຂະຫຍາຍຈິດໃຈຮັກຊາດ ຂອງປະຊາຊົນລາວ ບັນດາເຜົ່າຢ່າງແທ້ຈິງ.

ເພື່ອເຮັດໃຫ້ບັນດາກົມຕ່າງໆ, ພະແນກ, ຫ້ອງການກິລາບັນດາແຂວງ, ເມືອງ, ມີຄວາມຮັບປະກັນໃນການຈັດຕັ້ງປະຕິບັດແນວທາງການກິລາ. ຄະນະກຳມະການກິລາ-ກາຍະກຳແຫ່ງຊາດ ກໍ່ໄດ້ປັບປຸງຄະນະນຳ, ຄະນະກົມ, ພະແນກ, ຂະແໜງການ ແລະ ບັນຈຸຊັບຊ້ອນ ແບ່ງງານລັດຖະກອນຄືນໃໝ່ ໃຫ້ສອດຄ່ອງກັບໜ້າທີ່ວຽກງານ, ປັດຈຸບັນພະນັກງານ ລັດຖະກອນ ພວມເຮັດໜ້າທີ່ທັງໝົດ 411 ທ່ານ, ຍິງ 58 ທ່ານ ໄດ້ແຈກຢາຍຢູ່ຂັ້ນສູນ ກາງ ແລະ ທ້ອງຖິ່ນຄື:

- **ພະນັກງານກິລາ-ກາຍະກຳ ທົ່ວປະເທດມີ: 506 ທ່ານ, ຍິງ 90 ຄົນ.**
- **ພະນັກງານຂັ້ນສູນກາງມີທັງໝົດ: 140 ທ່ານ.**
- **ພະນັກງານທ້ອງຖິ່ນທັງໝົດ: 366 ຄົນ, ຍິງ 55 ຄົນ.**
- **ຂັ້ນສູນກາງ** 84 ທ່ານ, ຍິງ 23 ທ່ານ ຊຶ່ງປະກອບຄຸນວຸດທິດັ່ງນີ້:
  - ປະລິຍາເອກ 03 ທ່ານ.
  - ປະລິຍາໂທ 10 ທ່ານ.
  - ປະລິນຍາຕີ 40 ທ່ານ
  - ຊັ້ນສູງ 09 ທ່ານ
  - ຊັ້ນກາງ 04 ທ່ານ
  - ຊັ້ນຕົ້ນ 02 ທ່ານ
  - ບໍ່ມີວິຊາສະເພາະ 01 ທ່ານ
  - ພະນັກງານຈ້າງຕາມສັນຍາມີ 15 ທ່ານ, ຍິງ 05 ທ່ານ.

• **<u>ຂັ້ນແຂວງ, ເມືອງ</u>**

- ມີ 16 ແຂວງ 1 ນະຄອນຫຼວງ.
- ມີ 62 ເມືອງ ໃນຈຳນວນ 141 ເມືອງ, ຍັງ 79 ເມືອງ ບໍ່ທັນໄດ້ປັບປຸງ.

• **ຂັ້ນແຂວງ + ເມືອງ** ມີພະນັກງານ ລັດຖະກອນຈຳນວນ 327 ທ່ານ, ຍິງ 45 ທ່ານ.

- ປະລິນຍາຕີ 15 ທ່ານ.
- ຊັ້ນສູງ 55 ທ່ານ.
- ຊັ້ນກາງ 162 ທ່ານ.
- ຊັ້ນຕົ້ນ 45 ທ່ານ.
- ບໍ່ມີວິຊາສະເພາະ 15 ທ່ານ. ພະນັກງານຈ້າງຕາມສັນຍາມີ 45 ທ່ານ, ຍິງ 20 ທ່ານ ສຳລັບກົງຈັກການຈັດຕັ້ງອົງການສັງຄົມເຊັ່ນ :

ບັນດາສະຫະພັນກິລາ-ກາຍະກຳແຫ່ງຊາດປະເພດຕ່າງໆເຊິ່ງໃນນັ້ນມີ 28 ສະຫະພັນ, ມາຮອດປີ 2009 ມີ 35 ສະຫະພັນ ແລະ ມີ 1 ສະມາຄົມ, ເຊິ່ງແມ່ນສະມາຄົມກິລາຄົນພິການ, ພ້ອມທັງໄດ້ເອົາໃຈໃສ່ປັບປຸງລະບອບ, ລະບຽບ ກໍ່ໄດ້ມີການປັບປຸງສ້າງຕັ້ງຂຶ້ນທັງໝົດ 15 ສະຫະພັນ ຄື: ເຕະບານ, ລອຍນ້ຳ, ເທຄ້ວນໂດ, ຢູໂດ, ກາຣາເຕໂດ, ມວຍສາກົນ, ແລ່ນ-ລານ, ກະຕໍ້-ຕີດອກຂົນໄກ່, ປິງປ່ອງ, ເນນິດ, ບານສົ່ງ, ບານບ້ວງ, ຍິງປືນ, ຍິງທະນູ, ເປຕັງ ແລະ ມີ 7 ສະຫະພັນໄດ້ຈັດຕັ້ງຂຶ້ນໃໝ່ຄື: ມວຍລາຍລາວ, ລັກບີ້, ສະນຸກເກີ-ບິນລຽນ, ໝາກຂ່າງ, ໜ້າເກັກ, ເພາະກາຍ ແລະ ໝາກແລ້ ການຄຸ້ມຄອງລັດຄຸ້ມຄອງລັດຖະກອນແມ່ນປະຕິບັດຕາມດຳລັດ ເລກທີ 13/ນຍ. ພ້ອມນັ້ນ ຄະນະກຳມະການກິລາແຫ່ງຊາດ ຄຸ້ມຄອງໂດຍກົງບັນດາອົງການຈັດຕັ້ງກິລາມະຫາຊົນຂັ້ນສູນກາງ ແລະ ແບ່ງຂັ້ນຄຸ້ມຄອງ ໃຫ້ທ້ອງຖິ່ນຮັບຜິດຊອບເຊັ່ນ: ຄະນະກຳມະການບໍລິຫານງານໂອແລມປິກແຫ່ງຊາດລາວ. ປະກອບດ້ວຍ 13 ທ່ານ, ຍິງ 1 ທ່ານ, ສະຫະພັນກິລາແຫ່ງຊາດ ປະກອບດ້ວຍ 35 ສະຫະພັນ ຄື: ບານເຕະ, ບານບ້ວງ, ປິງປ່ອງ, ຍິງປືນ, ມວຍລາວ, ເທຄວັນໂດ, ຢູໂດ, ຍິງທະນູ, ດອກປີກໄກ່, ເຮືອ ຊ່ວງປະເພນີ, ບານສົ່ງ, ແລ່ນ-ລານ, ກະຕໍ້, ມວຍສາກົນ, ມວຍວູຊູ, ຄາລາເຕໂດ, ລອຍນ້ຳ, ເທນນິດ, ລັກບີ້, ເຮືອກາໂນ-ກາຍັກ, ເປຕັງ, ກິລາໝາກຂ່າງ, ໜ້າເກັກ ແລະ ໝາກແລ້ . ນອກຈາກນີ້ ຍັງມີສາມະຄົມກິລາກາຍະກຳຂັ້ນກະຊວງ, ອົງການທຽບເທົ່າສະໂມສອນກິລາປະເພດຕ່າງໆ, ຂັ້ນແຂວງກໍ່ໄດ້ຄຸ້ມຄອງບັນດາສະມາຄົມກິລາກາຍະກຳແຂວງ ສະຫະພັນກິລາແຂວງ, ກິລາສະໂມສອນປະເພນີຕ່າງໆ ຂັ້ນແຂວງ.

ບັນດາສະຫະພັນແຫ່ງຊາດຕ່າງໆ, ຂັ້ນສູນກາງ, ແຂວງຮອດທ້ອງຖິ່ນກໍ່ໄດ້ປັບປຸງຄືນໃໝ່ ເຮັດໃຫ້ການເຄື່ອນໄຫວວຽກງານກິລາ-ກາຍະກຳສະຫະພັນແຕ່ລະຂັ້ນເຫັນວ່າມີທ່າເພີ່ມຂຶ້ນດີກວ່າເກົ່າ.

## 1.2. ດ້ານວິຊາສະເພາະ

### 1.2.1. ກິລາມວນຊົນ:

ໂດຍປະຕິບັດຕາມຊີ້ທິດນຳທີ່ວ່າ: ໃຕ້ການນຳພາ ຂອງພັກ-ການຄຸ້ມຄອງລັດ ແນ່ໃສ່ຈຸດປະສົງອັນສູງສົ່ງໃນການພັດທະນາກິລາ ແມ່ນປະກອບສ່ວນເຂົ້າໃນການປະຕິບັດໜ້າທີປົກປັກຮັກສາ ແລະ ສ້າງສາ ສປປ ລາວ ກາຍເປັນປະເທດມີສັນຕິພາບ, ວັດທະນາຖາວອນ, ຮັ່ງມີໝັ້ນຄົງ, ປະຊາຊົນມີຄວາມຜາສຸກ ແລະ ອຸດົມສົມບູນເຂັ້ມແຂງ ສັງຄົມມີອິດສະລະພາບ-ສີວິໄລກ້າວຂຶ້ນສູ່ສັງຄົມນິຍົມເທື່ອລະກ້າວ. ກິລາ-ກາຍະກຳ

ແມ່ນປັດໄຈປະກອບສ່ວນທະນຸບຳລຸງ ແລະ ເສີມຂະຫຍາຍດ້ານປັດໄຈຕ່າງໆ ຂອງຄົນເພື່ອປະກອບສ່ວນໃນທຸກຂົງເຂດວຽກງານ, ຍົກສູງສຸຂະພາບທົ່ວປວງຊົນດ້ານກຳລັງກາຍ, ດ້ານຄຸນທາດ, ແບບແຜນການດຳລົງຊີວິດຂອງປະຊາຊົນອຸດົມສົມບູນ ດ້ານວັດທະນາທຳ ແລະ ຈິດໃຈ. ກໍ່ສ້າງພື້ນຖານກິລາ-ກາຍະກຳ ມີລັກສະນະຊາດ, ວິທະຍາສາດ ແລະ ມະຫາຊົນ, ເສີມຂະຫຍາຍທາດແທ້ມູນເຊື້ອອັນຈົບງາມຂອງຊາດ, ພ້ອມກັນນັ້ນຕ້ອງນຳເອົາວິທະຍາສາດທີ່ທັນສະໄໝ ດ້ານກິລາ-ກາຍະກຳຂອງຕ່າງປະເທດ ທີ່ກ້າວໜ້າມານຳໃຊ້.

ອີງໃສ່ກຳລັງຕົນເອງເປັນຕົ້ນຕໍ ພ້ອມກັນນັ້ນ ກໍ່ຍາດແຍ່ງທຸກເງື່ອນໄຂການຮ່ວມມືກັບສາກົນ ເພື່ອຈຸດປະສົງການພັດທະນາກິລາ-ກາຍະກຳຂອງລາວໄດ້ຂະຫຍາຍຕົວໄວ, ດ້ວຍການເພີ່ມທະວີຄວາມສາມັກຄີ, ມິດຕະພາບ, ການຮ່ວມກັບບັນດາປະເທດ ແລະ ເພື່ອນມິດຢູ່ໃນຂົງເຂດພາກພື້ນ ໃນໂລກຢ່າງກ້ວາງຂວາງ. ບັນດາວຽກງານກິລາ-ກາຍະກຳກາຍເປັນຂອງສັງຄົມ, ກິລາ-ກາຍະກຳ ແມ່ນພັນທະຂອງໝົດທຸກຄົນ ຂອງປະຊາຊົນບັນດາເຜົ່າເປັນຜູ້ຈັດຕັ້ງປະຕິບັດ, ເປັນຜູ້ຊົມເຊີຍ, ແລະ ຊົມເຊີຍໝາກຜົນຂອງການກິລາ-ກາຍະກຳທີ່ເຮັດໃຫ້ຂະບວນການ ກິລາ-ກາຍະກຳຂອງມວນຊົນ ຂະຫຍາຍຕົວຢ່າງກ້ວາງຂວາງເຂົ້າສູ່ທຸກຊັ້ນຄົນ, ທຸກເປົ້າໝາຍ ແລະ ທຸກຂົງເຂດວຽກງານ. ສ້າງຮູບຖານເສດຖະກິດ, ການບໍລິຫານ, ບໍລິການກິລາ-ກາຍະກຳເທື່ອລະກ້າວໃຫ້ເໝາະສົມກັບພື້ນຖານ ເສດຖະກິດກົນໄກການຕະຫຼາດໃນໄລຍະໃໝ່, ຕາມທິດສັງຄົມນິຍົມກ້າວໄປເຖິງກໍ່ສ້າງພື້ນຖານອຸດສາຫະກຳ ຊຶ່ງປະກອບມີການອອກແບບບັນດາໂຄງການກິລາ, ການຜະລິດ, ການຈໍລະຈອນສິນຄ້າ, ອຸປະກອນກິລາ ແລະ ທ່ອງທ່ຽວກິລາ ການບໍລິຫານໃນ 5 ປີທີ່ຜ່ານມາວຽກງານກິລາມວນຊົນສາມາດຕີລາຄາໄດ້ວ່າ: ໂດຍປະຕິບັດແຜນພັດທະນາກິລາ-ກາຍະກຳ ໃນປີ 1999-2020 ໂດຍສະເພາະແຜນການຈັດຕັ້ງປະຕິບັດແຜນການ 5 ປີຄັ້ງທີ 6 (2006-2010) ຂອງວຽກງານກິລາ-ກາຍະກຳເຫັນໄດ້ວ່າ:

- ຂະບວນການອອກກຳລັງກາຍ, ຫຼິ້ນກິລາເພື່ອສຸຂະພາບມີທັງກິລາພື້ນເມືອງ ແລະ ຈັດການແຂ່ງຂັນແຕ່ລະປະເພດກິລາມີບາດກ້າວຂະຫຍາຍຕົວດີຂຶ້ນກວ່າເກົ່າ ເຊິ່ງການຝຶກແອບຢ່າງເປັນຂະບວນການນອກຫຼັກສູດມີການຈັດຕັ້ງແລກປ່ຽນແຂ່ງຂັນເຊິ່ງກັນ ແລະ ກັນ ລະຫວ່າງໂຮງຮຽນ, ກົມກອງທ້ອງຖິ່ນ, ສຳນັກງານ, ການສະເຫຼີມສະຫຼອງວັນສຳຄັນປະຫັວດສາດຂອງຊາດ ແລະ ຂະແໜງການຢ່າງມີແຜນການ, ໄດ້ຈັດການແຂ່ງຂັນກິລານັກຮຽນທົ່ວປະເທດ ຄັ້ງທີ III ທີ່ແຂວງຫລວງພະບາງ, ງານກິລາແຫ່ງຊາດຄັ້ງທີ VIII ທີ່ແຂວງຈຳປາສັກ, ງານກິລາພື້ນເມືອງທົ່ວປະເທດຢູ່ແຂວງ ຜົ້ງສາລີ ແລະ ແຂວງ ຫົວພັນ.

- ນອກຈາກນັ້ນ ຍັງຟື້ນຟູສົ່ງເສີມກິລາໝາກແລ້, ກິລາສັດພື້ນເມືອງລາວ ຢ່າງເປັນທາງການ, ໄດ້ແຍກສະຫະພັນໝາກຂ່າງ-ໝ້າເກັກ ເປັນ 2 ສະຫະພັນທີ່ເປັນເອກະລາດ, ໄດ້ຍົກລະດັບໂຮງຮຽນສ້າງຄູພາລະສຶກສາຈາກຊັ້ນກາງເປັນຊັ້ນສູງ ແລະ ໄດ້ສ້າງຕັ້ງພະແນກສ້າງຄູພາລະສຶກສາສັງກັດຄະນະສຶກສາສາດຢູ່ມະຫາວິທະຍາໄລແຫ່ງຊາດ ບັນດາໜ້າວຽກທີ່ໄດ້ກ່າວມາຂ້າງເທິງນັ້ນແມ່ນປັດໃຈທີ່ສຳຄັນທີ່ໄດ້ປະກອບສ່ວນສ້າງຂະບວນການກິລາ ໂດຍສະເພາະແມ່ນການພັດທະນາຊັບພະຍາກອນມະນຸດ ຮັບໃຊ້ອັນຍາວນານ ຂອງພາລະກິດສ້າງສາລະບອບໃໝ່.

- ໄດ້ສ້າງຂະບວນການຫລິ້ນກິລາມວນຊົນ, ອອກກຳລັງກາຍເພື່ອສຸຂະພາບໃນໝູ່ມະຫາຊົນ ຢ່າງກ້ວາງຂວາງ, ທັງເຍົາວະຊົນ, ຊາວໜຸ່ມ ແລະ ອະວຸໂສ ດ້ວຍຫລາຍຮູບແບບ (ໂຄສະນາເຜີຍແຜ່ ທາງໂທລະພາບ, ໜັງສືພິມ, ຈັດພິມ ປຶ້ມຕຳລາແຜນລະບຽບການຕ່າງໆ).

- ຂະບວນການ ກິລາກາຍະກຳເຄື່ອນໄຫວ ສ້າງຂະບວນການໃຫ້ຟົດຟື້ນຕິດພັນກັບການຮັບໃຊ້ໜ້າທີ່ການເມືອງແຕ່ລະຂັ້ນ, ວັນສຳຄັນທາງປະຫວັດສາດ, ງານບຸນປະເພນີຂອງຊາດ, ວັນສ້າງຕັ້ງກິລາລາວ, ແລະ ວັນສ້າງຕັ້ງສາກົນ ອື່ນໆ ໃຫ້ດີກວ່າເກົ່າ.

- ສົມທົບກະຊວງສຶກສາ (ກົມພະລະສຶກສາ) ຄົ້ນຄ້ວາ, ຍົກລະດັບໂຮງຮຽນພະລະສຶກສາຊັ້ນກາງໃຫ້ກາຍເປັນວິທະຍາໄລກາຍະສຶກສາ ແລະ ກິລາ, ພ້ອມກັນນັ້ນກໍຄົ້ນຄ້ວາວິຊາກິລາກາຍະກຳເຂົ້າໃນຫລັກສູດການສິດສອນພາກບັງຄັບ, ຈັດຕັ້ງຝຶກແອບ ແລະ ແຂ່ງຂັນເປັນປະຈຳເດືອນ, ຄັດເລືອກເອົານັກກິລາທີ່ມີແວວ, ພອນສະ ຫວັນໃຫ້ເປັນນັກກິລາເຍົາວະຊົນແລະນັກກິລາລະດັບຊາດ.

- ສ້າງບຸກຄະລາກອນ, ພະນັກງານ, ຄູພາລະສຶກສາ ໃຫ້ໄດ້ຢ່າງກວ້າງຂວາງ ສະເລ່ຍຜູ້ໜຶ່ງຕໍ່ນັກກິລາ 500 ຄົນ.

- ຝຶກອົບຮົມ ແລະ ກໍ່ສ້າງຄູສາມັນ ຜູ້ທີ່ມີພອນສະຫວັນ ເພື່ອມາຊ່ວຍສິດສອນ ດ້ານວຽກງານກິລາກາຍະກຳ ໃຫ້ໂຮງຮຽນ ແຕ່ລະຊັ້ນຮຽນເຊັ່ນ: ປະຖົມ, ມັດທະຍົມຕອນຕົ້ນ, ມັດທະຍົມຕອນປາຍ.

- ໄດ້ສ້າງຂະບວນການກິລາ-ກາຍະກຳຢູ່ທ້ອງຖິ່ນເຊັ່ນ ເຄື່ອນໄຫວແຂ່ງຂັນຕິດພັນກັບການທ່ອງທ່ຽວ, ສົ່ງເສີມກິລາພື້ນເມືອງເປັນການເຜີຍແຜ່ຮີດຄອງປະເພນີອັນດີງາມຂອງຊາດ, ຂອງເຜົ່າຢູ່ທ້ອງຖິ່ນຂອງຕົນ.

- ສ້າງຂະບວນກິລາກາຍະກຳ ໃນຂອບເຂດທົ່ວປະເທດສົມທົບກັບກະຊວງ, ແຂວງ, ນະຄອນຫລວງ, ເຂດພິເສດ ເພື່ອໃຫ້ມີການຫລິ້ນກິລາ ເພື່ອຕ້ານຢາເສບຕິດ ແລະ ສິ່ງມຶນເມົາໃນສັງຄົມ.

- ປຸກລະດົມບັນດາພະນັກງານ ລັດຖະກອນ, ກຳມະກອນສັງກັດລັດ ແລະ ສັງກັດຢູ່ລັດວິສາຫະກິດ, ເຄື່ອນໄຫວອອກກຳລັງກາຍ ແລະ ຫລິ້ນກິລາ ນອກໂມງການ.

- ໄດ້ເປີດກອງປະຊຸມປະຈຳປີ 2007 ຢູ່ແຂວງໄຊຍະບູລີ ກ່ຽວກັບວຽກງານກິລາ-ກາຍະກຳ.

ນອກຈາກແຜນຍຸດທະສາດອັນຍາວນານແລ້ວ, ກົມກິລາມວນຊົນຍັງໄດ້ກະກຽມແຜນການເຄື່ອນໄຫວກິລາໃນໄລຍະທີ່ຈະມາເຖິງນີ້ເຊັ່ນ: ວຽກງານກອງປະຊຸມກິລາ-ກາຍະກຳ ທົ່ວປະເທດປະຈຳປີ 2006 ທີ່ແຂວງຫົວພັນ, ງານແຂ່ງຂັນກິລານັກຮຽນ ນັກສຶກສາ ທົ່ວປະເທດ ຄັ້ງທີ່ III ໃນປີ 2006 ທີ່ແຂວງຫລວງພະບາງ, ຈັດງານແຂ່ງຂັນກິລາສະເຫລີມສະຫລອງວັນສ້າງຕັ້ງກິລາລາວ ຄົບຮອບ 49 ປີ ທີ່ແຂວງ ວຽງຈັນ ປີ 2006. ແລະ ງານແຂ່ງຂັນກິລາ ໝາກຂ່າງ-ຍິງໜ້າເກັກ ທົ່ວປະເທດຄັ້ງທີ່ V ໃນປີ 2006 ທີ່ ແຂວງຜົ້ງສາລີ.

### 1.2.2. ວຽກງານກິລາສາຍສູງ.

ໂດຍສືບຕໍ່ຜັນຂະຫຍາຍແນວທາງນະໂຍບາຍຂອງພັກ-ລັດຖະບານ ແລະ ປະຕິບັດຕາມແຜນພັດທະນາກິລາກາຍະກຳຮອດປີ 2020 ຜ່ານມາການຈັດຕັ້ງປະຕິບັດວຽກງານຕົວຈິງ ຂອງກົມກິລາລະດັບສູງ, ໃນ 5 ປີ ຜ່ານມາ ນີ້ການເຄື່ອນໄຫວກິລາສາຍສູງຢູ່ພາຍໃນປະເທດ, ຕ່າງປະເທດ ໄດ້ເຮັດສຳເລັດວຽກງານຕ່າງໆຕາມແຜນການ ແລະ ມີບາງ ຂະບວນການ ພົ້ນເດັ່ນຄື:

-ໃນປີ 2006 ໄດ້ກະກຽມ ແລະ ສົ່ງນັກກິລາເຂົ້າຮ່ວມແຂ່ງຂັນກິລາເອຊຽນເກມຄັ້ງທີ 15 ຢູ່ ໂດຮາ ປະເທດກາຕາ ມີ 7 ປະເພດກິລາຄື: ມວຍວູຊູ (ຊານຊາວ), ເທຄວັນໂດ, ຢູໂດ, ກາຣາເຕໂດ, ມວຍສາກົນ, ແລ່ນ-ລານ, ລ່ອຍນ້ຳໄດ້ 1 ຫຼຽນເງິນຈາກມວຍວູຊູ ໄດ້ຢູ່ອັນດັບທີ 33 ໃນຈຳນວນ 45 ປະເທດ.

-ໃນປີ 2007 ໄດ້ກະກຽມ ແລະ ສົ່ງນັກກິລາເຂົ້າຮ່ວມແຂ່ງຂັນກິລາຊີເກມ ຄັ້ງທີ 24 ຢູ່ ນະຄອນລາດຊະສີມາປະເທດໄທ ຈຳນວນ 26 ປະເພດກິລາສາມາດຍາດໄດ້ຫຼຽນທັງໝົດ 45 ຫຼຽນຄື: 5 ຫຼຽນຄຳ, 7 ຫຼຽນເງິນ, 33 ຫຼຽນທອງ.

-ໃນປີ 2008 ໄດ້ສົ່ງຄະນະນັກກິລາເຂົ້າຮ່ວມແຂ່ງຂັນກິລາ ໂອແລມປິກລະດູຮ້ອນ ຄັ້ງທີ 29 ຢູ່ປັກກິ່ງ ສ.ປ ຈີນ ມີກິລາເຂົ້າຮ່ວມ 2 ປະເພດຄື: ແລ່ນ ແລະ ລອຍນ້ຳ.

-ໄດ້ຮັບຜິດຊອບວຽກງານເຕັກນິກ ຈັດການແຂ່ງຂັນກິລາແຫ່ງຊາດ ຄັ້ງທີ 8 ຢູ່ ແຂວງຈຳປາສັກ ແຕ່ວັນທີ 13-22/12/2008 ມີ 25 ປະເພດກິລາສຳເລັດໄປດ້ວຍດີ.

- ປີ 2009 ໄດ້ຮັບຜິດຊອບວຽກງານຝ່າຍເຕັກນິກ ຈັດການແຂ່ງຂັນສະພາບການແຂ່ງຂັນກິລາ 25 ປະເພດໄດ້ດຳເນີນໄປດ້ວຍດີ ມີບັນຍາກາດຟົດຟື້ນເປັນປະຫວັດສາດນັກກິລາລາວ ກະກຽມນັກກິລາເຂົ້າແຂ່ງຂັນ ຊີເກມຄັ້ງທີ 25 ທີ່ ສປປ ລາວ ເປັນເຈົ້າພາບມີ 25 ປະເພດກິລາ ແລະ ສາມາດຍາດໄດ້ຫຼຽນທັງໝົດ 110 ຫຼຽນ ຄື: ຫຼຽນຄຳ 33 ຫຼຽນ, ຫຼຽນເງິນ 25 ຫຼຽນ, ຫຼຽນທອງ 52 ຫຼຽນ, ໄດ້ອັນດັບທີ່ 7 ໃນຈຳນວນ 11 ປະເທດເຂົ້າຮ່ວມ ແລະ ສາມາດຍາດໄດ້ຫຼຽນຄຳລື່ນຄາດໝາຍຂອງແຜນການ 25 ຫຼຽນ ສູ້ຊິນໄດ້ຕົວຈິງ 33 ຫຼຽນ.

-ໄດ້ສົ່ງຄະນະນັກກິລາຕໍ່ສູ້ປ້ອງກັນຕົວເຂົ້າຮ່ວມແຂ່ງຂັນກິລາສີລະປະຕໍ່ສູ້ປ້ອງກັນຕົວ (ASIAN MARTIALARTS GAMES) ຄັ້ງທີ I ຢູ່ທີ່ ບາງກອກ ປະເທດໄທ ແຕ່ວັນທີ່ 1-9/08/2009 ມີຈຳນວນ 6 ປະເພດກິລາເຂົ້າຮ່ວມ ແລະ ສາມາດຍາດໄດ້ຫຼຽນທັງໝົດ 14 ຫຼຽນຄື: ຫຼຽນຄຳ 1 ຫຼຽນ, ຫຼຽນເງິນ 4 ຫຼຽນ, ຫຼຽນທອງ 9 ຫຼຽນ ໄດ້ຈັດຢູ່ອັນດັບທີ່ 18 ໃນຈຳນວນ 40 ປະເທດເຂົ້າຮ່ວມ.

- ກຳນົດແຜນຍຸດທະສາດສ້າງນັກກິລາທີມຊາດເພື່ອເຂົ້າແຂ່ງຂັນກິລາຊີເກມຄັ້ງທີ 25 ປີ 2009, ໂດຍປະສານສົມທົບກັບອົງການຈັດຕັ້ງຂອງລັດ, ສະຫະພັນກິລາປະເພດຕ່າງໆ, ຂຶ້ນແຜນການຝຶກອົບຮົມກໍ່ສ້າງ ແລະ ຍົກລະດັບຄູຝຶກ, ກຳມະການຕັດສິນ, ຝຶກແອບນັກກິລາລະດັບສູງ, ນັກກິລາພອນສະຫວັນ ແລະ ນັກກິລາສືບທອດ ເພື່ອກະກຽມໃຫ້ແກ່ທີມຊາດໃນປະຈຸບັນ ແລະ ອານາຄົດໂດຍການປະສານສົບທົບກັບສະຫະພັນກິລາແຫ່ງຊາດໃນການຈັດຕັ້ງປະຕິບັດ.

- ສ້າງແຜນການເຄື່ອນໄຫວກິລາລະດັບສູງ, ລະດັບຊາດຢູ່ພາຍໃນ ແລະ ຢູ່ຕ່າງປະເທດຄື: ການແຂ່ງຂັນປະຈຳປີຊິງແຊມຕ່າງໆ ຢູ່ພາຍໃນປະເທດຮັບຕ່າງປະເທດມາແຂ່ງຂັນທົດສອບ ແລະ ສົ່ງກິລາທີມຊາດ, ກະກຽມທີມຊາດ ໄປເຄື່ອນໄຫວແຂ່ງຂັນຢູ່ຕ່າງ ປະເທດເພື່ອພັດທະນາເຕັກນິກ, ຍຸດທະວິທີ, ຊອກຫາປະສົບປະການ ແລະ ສ້າງຜົນງານໃຫ້ປະເທດຊາດ.

- ຕິດຕາມງານແຂ່ງຂັນກິລາສະເຫຼີມສະຫຼອງວັນປະຫັວດສາດສຳຄັນຂອງຊາດດີເດັ່ນ ເພື່ອຄັດເລືອກນັກກິລາ ທີ່ສະຫະພັນກິລາແຫ່ງຊາດ, ສະຫະພັນກິລາຂັ້ນແຂວງຈັດຂຶ້ນຢູ່ສູນກາງ ແລະ ທ້ອງຖິ່ນ.

- ແຂ່ງຂັນຄັດເລືອກເອົານັກກິລາທີມຊາດ ເຂົ້າຮ່ວມແຂ່ງຂັນຊີເກມ, ເອຊຽນເກມ, ໂອແລມປິກເກມລະດັບໂລກ ແລະ ລະດັບນາໆຊາດ.

### 1.2.3. ວຽກງານພົວພັນຮ່ວມມືກິລາສາກົນ.

ໂດຍປະຕິບັດຕາມແນວທາງນະໂຍບາຍການພົວພັນຮ່ວມມື ກັບຕ່າງປະເທດຂອງພັກ-ລັດ ເຮົາໃນໄລຍະໃໝ່, ມີທັງຍຸດທະສາດ ແລະ ຍຸດໂທບາຍ ເພື່ອເພີ່ມມິດ, ລຸດຜ່ອນສັດຕູ ຄວາມເຄັ່ງຕຶງ ດ້ານໜຶ່ງກໍ່ເພື່ອຍາດແຍ່ງ ດຶງດູດການລົງທຶນ ຂອງຕ່າງປະເທດ ເພື່ອມາພັດທະນາປະເທດຊາດ ເວົ້າສະເພາະ ເພື່ອພັດທະນາກິລາຂອງປະເທດເຮົາ, ສະນັ້ນ ການພົວພັນຮ່ວມມືກິລາສາກົນເພື່ອນມິດຍຸດທະສາດ, ບັນດາປະເທດ ແລະ ອົງການຈັດຕັ້ງສາກົນ, ຮ່ວມຫຼາຍຝ່າຍຫຼາຍປະເທດ ໃນ 5 ປີ ຜ່ານມານີ້. ແມ່ນພວກເຮົາໄດ້ເຄື່ອນໄຫວຢ່າງຕັ້ງໜ້າປະຕິບັດການພົວພັນຮ່ວມມືກັບປະເທດເພື່ອນມິດອາຊຽນ, ສາກົນ ແລະ ຮ່ວມມືກັບ 4 ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານເຊັ່ນ: JOCA (ຍີ່ປຸ່ນ), JASA (ຍີ່ປຸ່ນ), Singgapore International Foundation (ສິງກະໂປ), SES (ເຢຍລະມັນ) ,ໄດ້ມີການເຊັນບົດບັນທຶກຄວາມເຂົ້າໃຈ ໃນການຮ່ວມມືສອງຝ່າຍທັງໝົດ 7 ສະບັບ, ໃນນັ້ນ 4 ສະບັບໃໝ່, ການຢ້ຽມຢາມຄະນະຜູ້ແທນລະດັບສູງ 16 ຄັ້ງ, ການຕ້ອນຮັບຄະນະຜູ້ແທນທັງໝົດ15 ຄັ້ງ, ຄະນະຜູ້ແທນຂັ້ນສູງ12 ແລະ ລະດັບວິຊາການ 3 ຄັ້ງ, ໄດ້ຮັບອາສາສະໝັກທັງໝົດ 27 ຄົນ, ໄດ້ຮັບຄູຝຶກທັງໝົດ 39 ຄົນ ໃນດ້ານການວຽກງານກິລາກາຍະກຳ.

ໃນ 5 ປີມານີ້ໄດ້ຮັບການຊ່ວຍເຫຼືອ ຈາກສາກົນ, ຈາກປະເທດ ສ.ສ ຫວຽດນາມ ກໍ່ສ້າງສຳນັກງານ, ຫໍພັກ, ຮ້ານອາຫານ, ສະໜາມຝຶກແອບໃນຮົ່ມ, ກາງແຈ້ງ ແລະ ອຸປະກອນຮັບໃຊ້ມີມູນຄ່າ 4 ລ້ານໂດລາ($), ຈາກປະເທດບຣູໄນດາລູສະລາມ ກໍ່ສ້າງຫໍພັກ ແລະ ເດີ່ນໃນຮົ່ມ ມີມູນຄ່າ 1,7 ລ້ານ ໂດລາ,ຈາກປະເທດ ສ.ປ.ຈີນ ກໍ່ສ້າງສະໜາມກິລາແຫ່ງຊາດ ມີມູນຄ່າ 100 ລ້ານໂດລາ, ຈາກລັດຖະບານໄທ ກໍ່ສ້າງເດີ່ນຮົ່ມ ບຶງຂະຫຍອງ ມີມູນຄ່າ 84 ລ້ານໄທບາດ, ຈາກລັດຖະບານຍີ່ປຸ່ນ ກໍ່ສ້າງສູນກິລາບູໂດ 601 ລ້ານເຢັນ, ຈາກບໍລິສັດບູຍອງ ສ.ເກົາຫລີ ກໍ່ສ້າງເດີນຮົ່ມກິລາບູຍອງດົງໂດກ ມີມູນຄ່າ 300,000 ໂດລາ. ໃນນັ້ນໄດ້ຮັບການຊ່ວຍເຫຼືອລ້າເປັນມູນຄ່າ 19,078,827.23 ໂດລາ, ໄດ້ຮັບການຊ່ວຍເຫຼືອທາງດ້ານອຸປະກອນກິລາ ເຊັ່ນ: ຍົກນ້ຳໜັກ, ເຄື່ອງອອກກຳລັງກາຍ, ເຄື່ອງຄອມພິວເຕີ, ອຸປະກອນກິລາກາລາເຕໂດ, ເທກວັນໂດ, ຢູໂດ ແລະ ອື່ນໆ ເຄື່ອງອື່ນຈໆຈຳນວນໜຶ່ງ. ສ່ວນບັນດາແຂວງຕ່າງໆ ກໍ່ໄດ້ເປັນເຈົ້າການເຄື່ອນໄຫວພົວພັນ, ສົ່ງຄະນະນັກກິລາເຂົ້າຮ່ວມການແຂ່ງຂັນກິລາລະດັບສາກົນເພື່ອການຮ່ວມມື, ແລກປ່ຽນດ້ານກິລາປະເພດຕ່າງໆ ໃຫ້ດີຂຶ້ນກວ່າເກົ່າ.

## 2. ວຽກງານຫ້ອງການຄະນະກຳມະການກິລາກາຍະກຳແຫ່ງຊາດ.

ວຽກງານຫ້ອງການຂອງຄະນະກຳມະການກິລາກາຍະກຳແຫ່ງຊາດ ກວມເອົາຫຼາຍພະແນກ, ຂະແໜງການເຊັ່ນ: ການເງິນ, ແຜນການສັງລວມ, ບໍລິຫານ, ຈັດຕັ້ງນະໂຍບາຍ, ການກໍ່ສ້າງພື້ນຖານວັດຖຸເຕັກນິກ, ຄຸ້ມຄອງ, ຕິດຕາມ, ສູນຝຶກກິລາແຫ່ງຊາດ, ສະໜາມກິລາແຫ່ງຊາດ, ສຳເນົາເອກະສານເຂົ້າ-ອອກ.

ຫ້ອງການເປັນເສນາທິການຊ່ວຍວຽກໃຫ້ຄະນະປະທານ ທັງເປັນຂົວຕໍ່ໃຫ້ແກ່ການປະສານງານລະຫວ່າງ ຄ ກ ຊ ກັບກະຊວງ, ອົງການຕ່າງໆ ຂັ້ນສູນກາງ ແລະ ທ້ອງຖິ່ນ. ເພື່ອສັງລວມການລາຍງານສ່ອງແສງຈາກສະພາບການຕ່າງໆ ໃນຂັ້ນສູນກາງ ແລະ ທ້ອງຖິ່ນ. ທັງເຮັດໜ້າທີ່ສັງລວມສະພາບການລາຍງານໃຫ້ຂັ້ນເທິງເປັນປົກກະຕິ, ທັນເວລາ, ຜ່ານມາ 5 ປີ ຫ້ອງການຄະນະກຳມະການ ກິລາ-

ກາຍະກຳແຫ່ງຊາດ ໄດ້ພະຍາຍາມບຸກບືນປັບປຸງດ້ານແບບແຜນວິທີເຮັດວຽກໃຫ້ດີຂື້ນກວ່າເກົ່າ ແລະ ສອດຄ່ອງກ່ວາເກົ່າ, ທັນເວລາກ່ວາເກົ່າເຊັ່ນ: ການເງິນໄດ້ອານຸມັດການເງິນຂັ້ນໜຶ່ງ ດ້ານງົບປະມານ ການເງິນ ການເບີກຈ່າຍເງິນເດືອນ, ເງິນນະໂຍບາຍ, ເງິນບໍລິຫານຕ່າງໆ, ການບໍລິຫານວຽກງານ ວ່ອງໄວຂຶ້ນຕື່ມອີກ-ການປະຕິບັດ ນະໂຍບາຍໃຫ້ທວ່ງທັນກັບເວລາຕໍ່ການຈັດຕັ້ງ, ບັນດາສະຫະພັນຕ່າງໆ, ມອບຫລຽນນາມມະຍົດ, ໃບກຽດຕິຄຸນ, ໃບຍ້ອງຍໍຢ່າງສົມກຽດ.

ໄດ້ມີການຈັດສຳມະນາຄວາມຮູ້ກ່ຽວກັບການເປັນເຈົ້າພາບຊີເກມ ຄັ້ງທີ 25, ປີ 2009, ການກະກຽມ ເອກະສານ, ໂຄງການສ້າງສະໜາມກິລາຕ່າງໆ ເພື່ອຂໍທຶນການຊ່ວຍເຫຼືອຈາກຕ່າງປະເທດ. ການສຳຫລວດ ເນື້ອທີດິນຫລັກ 16 ເສັ້ນທາງເລກທີ 13 ໃຕ້ ເພື່ອນຳໃຊ້ສ້າງເດີ່ນກິລາແຫ່ງຊາດ ແຫ່ງໃໝ່ ໃນຕໍ່ໜ້າໄດ້ສຳເລັດ, ໄດ້ມີຂໍ້ຕົກລົງມອບທີ່ດິນດັ່ງກ່າວໃຫ້ຄະນະກຳມະການກິລາແຫ່ງຊາດ ພ້ອມນີ້ກໍ່ໄດ້ເອົາໃຈໃສ່ ຊຸກຍູ້ຕິດຕາມ ການກໍ່ສ້າງສະໜາມກິລາຢູ່ ແຂວງຈຳປາສັກ ເພື່ອກຽມເປັນເຈົ້າພາບກິລາແຫ່ງຊາດ ຄັ້ງທີ VIII , ນອກຈາກນັ້ນກໍ່ໄດ້ລົງປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອລົງກວດກາບັນດາໂຄງການ ທີ່ສຳເລັດ ແລະ ໄດ້ປັບປຸງຊັບຊ້ອນຫ້ອງການ, ພະນັກງານລັດຖະກອນ.

- ປະສານກັບກະຊວງຖະແຫລງຂ່າວ ແລະ ວັດທະນາທຳ, ໂຄສະນາການກະກຽມ ເປັນເຈົ້າພາບ ຊີເກມຄັ້ງທີ 25 ໃນປີ 2009 ຂະແໜງ ສື່ສານມວນຊົນ, ວິທະຍຸ, ໂທລະພາບແຫ່ງຊາດ.

- ສືບຕໍ່ສຳຫລວດອອກແບບແຕ່ລະປະເພດກິລາ ກະກຽມໃຫ້ແກ່ການສ້າງສະໜາມກິລາແຫ່ງໃໝ່ ທັງຕິດພັນ ກັບການຖອດຖອນບົດຮຽນ ຈາກປະເທດໄກ້ຄຽງ ເພື່ອຮັບໃຊ້ຊີເກມຄັ້ງທີ 25, ປີ 2009.

- ສ້າງແຜນການປັບປຸງຫ້ອງການ, ເຄື່ອງມືຮັບໃຊ້ວຽກງານຢູ່ຫ້ອງການ ແຕ່ຂັ້ນສູນກາງ ລົງຮອດທ້ອງ ຖິ່ນທີ່ ຈຳເປັນ.

- ຕິດຕາມການອອກຫວຍກິລາ ເພື່ອຫລີກລ້ຽງບໍ່ໃຫ້ມີການອອກນອກລະບຽບຫຼັກການ.

- ຊຸກຍູ້, ຕິດຕາມການໂຄສະນາຂ່າວສານ ແລະ ໜັງສືພິມກິລາ, ໃຫ້ເຄື່ອນໄຫວດີກວ່າເກົ່າ, ພ້ອມ ທັງປັບປຸງຕາໜ່າງຂ່າວສານຢູ່ບັນດາແຂວງ, ກະຊວງໃຫ້ເຄື່ອນໄຫວ, ສິ່ງຂໍ້ມູນແຫລ່ງຂ່າວ ໃຫ້ຄະນະ ບັນນາທິການໜັງສືພິມ ກິລາຫລາຍກວ່າເກົ່າ, ທັງຮັບປະກັນກຸ້ມຕົນເອງຢ່າງມີປະສິທິຜົນ.

## 2.1. ວຽກງານສູນຝຶກກິລາແຫ່ງຊາດ.

ໃນ 5 ປີຜ່ານມາ ສູນຝຶກກິລາແຫ່ງຊາດໄດ້ປະຕິບັດໜ້າທີ່ຂອງຄະນະກຳມະການກິລາ-ກາຍະກຳ ແຫ່ງຊາດທີ່ໄດ້ມອບໝາຍໃຫ້, ໄດ້ຈັດຕັ້ງປັບປຸງກ່ຽວກັບໂຄງຮ່າງການຈັດຕັ້ງຢູ່ພາຍໃນສູນຝຶກກິລາແຫ່ງຊາດ ເພື່ອໃຫ້ມີຖານະທຽບເທົ່າກັບພະແນກຂອງກົມ, ມີຫົວໜ້າສູນ 1 ທ່ານ, ຂຶ້ນກັບຫ້ອງການ ຄະນະກຳມະການ ກິລາ-ກາຍະກຳແຫ່ງຊາດ ມີການຈັດຕັ້ງເປັນໜ່ວຍງານສະເພາະກິດຮັບໃຊ້ບັ້ນກະກຽມນັກກິລາ ເຂົ້າຮ່ວມ ແຂ່ງຂັນລະດັບສາກົນ.

ອີກດ້ານໜຶ່ງ ວຽກງານການກໍ່ສ້າງ ແມ່ນໄດ້ສຳເລັດການກໍ່ສ້າງສຳນັກງານ, ຫໍພັກ, ຮ້ານອາຫານ ແລະ ຮັບໃຊ້ງານມະຫາກຳກິລາ ຊີເກມ ຄັ້ງທີ 24, ປີ 2007 . ນອກຈາກນັ້ນ ຄະນະອຳນວຍການ ຍັງໄດ້ໄປຖອດຖອນວຽກງານການຄຸ້ມຄອງສູນຝຶກກິລາ ຢູ່ທີ່ ສ.ສ ຫວຽດນາມ, ໄດ້ເຊື້ອເຊີນຄະນະຜູ້ແທນ ສ.ສ ຫວຽດນາມ ມາຢ້ຽມຢາມຖອດຖອນບົດຮຽນໃຫ້ສູນຝຶກກິລາແຫ່ງຊາດ ກ່ຽວກັບວຽກງານບໍລິຫານ.

ວຽກງານມະຫາກຳກິລາຊີເກມ ຄັ້ງທີ 25, ປີ 2009 ທີ່ ສ ປປ ລາວໄດ້ຮັບກຽດເປັນເຈົ້າພາບ ສູນຝຶກກິລາແຫ່ງຊາດ ໄດ້ຖືກມອບໝາຍຈາກຂັ້ນເທິງຮັບເອົາ ແລະ ຄຸ້ມຄອງຄະນະນັກກິລາທີມຊາດ ແລະ ປະຕິບັດວຽກງານດັ່ງນີ້: ໄດ້ຮັບເອົາຄູຝຶກ ແລະ ນັກກິລາເຂົ້າຝຶກແອບ ຢູ່ສູນຝຶກກິລາແຫ່ງຊາດ ມີ 9 ປະເພດກິລາ, ມີນັກກິລາທັງໝົດ 224 ຄົນ, ຍິງ 82 ຄົນ, ຄູຝຶກ 42 ຄົນ ໃນນັ້ນມີຄູຝຶກ ຈາກຕ່າງປະເທດ 17 ຄົນ ລວມທັງໝົດ 266 ຄົນ.

## 2.2. ວຽກງານສະໜາມກິລາແຫ່ງຊາດ.

ວຽກງານສະໜາມກິລາແຫ່ງຊາດຫຼັກ 16 ໄດ້ປະຕິບັດຕາມໜ້າທີ່ຂອງຄະນະກຳມະການກິລາ-ກາຍະກຳແຫ່ງຊາດໄດ້ມອບໝາຍໃຫ້ ເປັນຕົ້ນແມ່ນວຽກງານການປັບປຸງກົງຈັກການຈັດຕັ້ງ, ໄດ້ຊັບຊ້ອນພະນັກງານ,ປັບປຸງສະຖານທີໃນຂອບເຂດສະໜາມກິລາແຫ່ງຊາດ

## 2.3. ວຽກງານຂ່າວສານ, ໜັງສືພິມ.

ໃນ 5 ປີຜ່ານມານີ້ ວຽກງານລາຍການຂ່າວສານ, ໜັງສືພິມ ມາຮອດປະຈຸບັນປັບມາເປັນລາຍວັນ ແລະ ສອດສີ, ຂ່າວໄດ້ມີການພັດທະນາດີກ່ວາເກົ່າ, ພວກເຮົາໄດ້ປັບປຸງການຈັດຕັ້ງ, ໄດ້ປັບປຸງບ່ອນເຮັດວຽກຂອງຂ່າວສານໜັງສືພິມ ກວດກາການເຄື່ອນໄຫວລາຍຮັບ-ການຕະຫຼາດ, ການບໍລິການ ແລະ ພ້ອມກັນນັ້ນຍັງໄດ້ປະກອບຈຳນວນພະນັກງານ ລັດຖະກອນເຂົ້າບັນຈຸໃສ່ແຕ່ລະໜ້າວຽກງານ ໃຫ້ມັນທວງທັນກັບຄວາມຕ້ອງການທຸກໆຄົນ ທີ່ບໍລິການໜັງສືພິມໃຫ້ທົ່ວເຖິງ.

## 3. ສາເຫດທີ່ພາໃຫ້ມີຈຸດດີ.

- ຍ້ອນຄະນະພັກ ອຳນາດການປົກຄອງທຸກໆຂັ້ນ ນັບແຕ່ສູນກາງລົງຮອດທ້ອງຖິ່ນ ໄດ້ເປັນເອກະພາບກັບແນວທາງມະຕິຄຳສັ່ງຂອງຂັ້ນເທິງ, ໄດ້ຮ່ຳຮຽນເອກະສານເຊື່ອມຊຶມຂອງພັກ ພ້ອມກັນຊຸກຍູ້ຈັດຕັ້ງ ປະຕິບັດໜ້າທີ່ວຽກງານຂອງຕົນຢ່າງຕັ້ງໜ້າ.
- ຍ້ອນມີແນວທາງນະໂຍບາຍຂອງພັກ-ລັດຖະບານ ວາງອອກທີ່ຖືກຕ້ອງໃນການພັດທະນາກິລາໃນໄລຍະໃໝ່.
- ຍ້ອນມີການຈັດຕັ້ງດີແຕ່ສູນກາງລົງຮອດເມືອງ ໄດ້ຕັ້ງໜ້າເຄື່ອນໄຫວຢ່າງເປັນເຈົ້າການ ໃນການສ້າງແຜນກຳນົດລະບົບພື້ນຖານກິລາ-ກາຍະກຳ ແລະ ກົນໄກ, ນະໂຍບາຍສົ່ງເສີມ, ສ້າງເງື່ອນໄຂໃຫ້ທົ່ວສັງຄົມໄດ້ເຂົ້າຮ່ວມການເຄືອນໄຫວ ແລະ ພັດທະນາກິລາ-ກາຍະກຳໃຫ້ດີຂື້ນກວ່າເກົ່າ.
- ຍ້ອນໄດ້ຮັບການຮ່ວມມື, ການສະໜັບສະໜູນ, ການໃຫ້ການອຸປະຖຳ, ການໃຫ້ຄວາມສະດວກຈາກທຸກພາກສ່ວນໃນສັງຄົມ ນັບທັງພາຍໃນ ແລະ ຕ່າງປະເທດ ເຊິ່ງຍາມໃດກໍ່ໄດ້ມີການຮ່ວມມືເພື່ອການພັດທະນາຂະບວນການກິລາ-ກາຍະກຳ ຂອງພວກເຮົາຕະລອດມາ.
- ຍ້ອນພະນັກງານຂັ້ນນຳ, ຜູ້ບໍລິຫານການກິລາ-ກາຍະກຳທຸກຂັ້ນ ນັບທັງພະນັກງານວິຊາການໄດ້ມີຄວາມຮັບຜິດຊອບສູງ, ເປັນເຈົ້າການໃນການຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ, ລະບົບກົດໝາຍ, ມະຕິຄຳສັ່ງຂອງລັດຖະບານ ກ່ຽວກັບວຽກງານກິລາ-ກາຍະກຳຂອງຊາດ ພະນັກງານສ່ວນຫຼາຍໄດ້ຮັບການຝຶກຝົນຫຼໍ່ຫຼອມ ແລະ ມີປະສົບການ ໃນດ້ານວຽກງານທີ່ຜ່ານມາ.

## 4. ດ້ານອ່ອນຄົງຄ້າງ.

ຄຽງຄູ່ກັບຜົນສໍາເລັດ ໃນໄລຍະ 5 ປີ ຜ່ານມານີ້ ພວກເຮົາກໍ່ຍັງບໍ່ປະສະຈາກດ້ານອ່ອນ, ຂໍ້ຄົງຄ້າງທີ່ຕ້ອງໄດ້ສືບຕໍ່ແກ້ໄຂເຊັ່ນ: ການປັບປຸງກົງຈັກການຈັດຕັ້ງຂັ້ນແຂວງ-ເມືອງ ຍັງເຮັດບໍ່ໄດ້ທົ່ວເຖິງ, ຫລາຍເມືອງຍັງບໍ່ທັນໄດ້ ຂະຫຍາຍການຈັດຕັ້ງໄປຮອດໄປເຖິງເທົ່າທີ່ຄວນ.

- ຄະນະພັກ, ອໍານາດການປົກຄອງທຸກຂັ້ນ ຕ້ອງເຊື່ອມຊືມ, ກໍາແໜ້ນແນວທາງນະໂຍບາຍຂອງການພັດທະນາກິລາກາຍະກໍາ ແມ່ນພາກສ່ວນໜຶ່ງທີ່ມີຄວາມສໍາຄັນໃນນະໂຍບາຍພັດທະນາເສດຖະກິດ-ສັງຄົມຂອງພັກ-ລັດ ເພື່ອບໍາລຸງ ແລະ ເສີມຂະຫຍາຍປັດໄຈຄົນ, ວຽກງານກິລາ ແມ່ນເພື່ອປະກອບສ່ວນຢ່າງຕັ້ງໜ້າຍົກສູງດ້ານສຸຂະພາບ, ກໍາລັງແຮງ, ການສຶກສາອົບຮົມ, ຄຸນສົມບັດ ແບບແຜນດໍາລົງຊີວິດທີ່ສົດໃສ ເພື່ອໃຫ້ການດໍາລົງຊີວິດຂອງຄົນສົມບູນດ້ານວັດທະນະທໍາ ຈິດໃຈຂອງປະຊາຊົນຍົກສູງຜະລິດຕະພັນອອກແຮງງານໃນສັງຄົມ ແລະ ກໍາລັງຕໍ່ສູ້ ໃນກໍາ ລັງ ປະກອບອາວຸດ.

- ການປະສານງານກັບທຸກພາກສ່ວນ ໃນບາງສະໜາມຍັງຊັກຊ້າ, ຍັງມີການປະສານງານ ກັນບໍ່ບໍ່ລະອຽດຂອງສະໜາມ, ສະຫະພັນກິລາມີການສະເໜີ ແລະ ມີການປ່ຽນແປງຫຼາຍຄັ້ງ ຍ້ອນວິຊາການຂອງສະໜາມ, ສະຫະພັນຕ່າງໆບໍ່ທັນມີບົດຮຽນທີ່ແນ່ນອນ ແລະ ບໍ່ສາມາດຢັ້ງຢືນເອົາອັນໃດແທ້.

- ການເປັນເສນາທິການ ໃຫ້ແກ່ຂັ້ນເທິງການນໍາຍັງຈໍາກັດ, ນັບທັງຄະນະກໍາມະການກິລາແຫ່ງຊາດ ແລະ ບັນດາແຂວງບໍ່ທັນກັບສະພາບການປ່ຽນແປງ, ລະດັບບົດຂຽນ, ສັງລວມ, ປະຕິບັດລະບອບສ່ອງແສງລາຍງານບໍ່ໄດ້

- ການຫັນເອົາແຜນຍຸດທະສາດ ພັດທະນາກິລາເຂົ້າສູ່ວຽກງານຕົວຈິງຂອງກົມ, ຂອງແຂວງເຮັດຢ່າງມີຈຸດສຸມ ແມ່ນເຮັດໄດ້ໜ້ອຍ.

- ຄະນະນໍາ, ນັກກິລາຂອງພວກເຮົາ ກໍ່ຍັງບໍ່ທັນໄດ້ເປັນເຈົ້າການຄົ້ນຄວ້າທັງໝົດ ດ້ານວິຊາການເພື່ອຈະສ້າງແຜນການໄລຍະສັ້ນ, ຍາວ ເພື່ອສະເໜີຕໍ່ຄະນະພັກຂອງຕົນ ເຮັດບໍທັນໄດ້ດີ, ຍັງເລັ່ງໃສ່ແຕ່ກິດຈະກໍາປະຈໍາວັນເປັນຫລັກ.

- ການປັບປຸງບັນດາສະພັນແຫ່ງຊາດຕ່າງໆ ເຖິງວ່າໄດ້ເຮັດແຕ່ກໍ່ຍັງຂາດການຊີ້ນໍາ ແລະ ສຶກສາອົບຮົມການເມືອງແນວຄິດ.

## 5. ບົດຮຽນທີ່ຖອດຖອນໄດ້.

- ນັກກິລາແຕ່ລະປະເພດທີ່ເຂົ້າມາຝຶກແອບຢູ່ສູນຝຶກກິລາແຫ່ງຊາດ ຕາມການຕົກລົງຂອງຂັ້ນເທິງນັ້ນ, ຄວນມີການແບ່ງຂັ້ນການຄຸ້ມຄອງໃຫ້ລະອຽດຈະແຈ້ງ ແລະ ຂາດຕົວ, ໂດຍສະເພາະແມ່ນທາງດ້ານງົບປະມານການໃຊ້ຈ່າຍຕ່າງໆ ຂອງນັກກິລາຄວນມອບໃຫ້ສູນຝຶກກິລາແຫ່ງຊາດເປັນເຈົ້າການ.

- ການສະໜອງອຸປະກອນ ແລະ ສະໜາມຮັບໃຊ້ການຝຶກແອບຂອງກິລາ ພາຍໃນ ແລະ ຕ່າງປະເທດ ຕ້ອງໄດ້ປະກອບໃຫ້ທັນເວລາ.

- ກ່ອນຈະນໍາເອົານັກກິລາເຂົ້າມາສູນ ຕ້ອງໄດ້ປະສານສົມທົບກັບທຸກໆ ພາກສ່ວນກ່ຽວຂ້ອງ ໂດຍສະເພາະແມ່ນການກວດກາສຸຂະພາບຮ່າງກາຍຂອງນັກກິລາເພື່ອຄວາມພຽບພ້ອມໃນການຝຶກແອບ.

- ຕ້ອງໄດ້ປະຕິບັດແຜນຍຸດທະສາດພັດທະນາກິລາໃຫ້ຖືກຈຸດສຸມ ແລະ ວຽກງານຕົວຈິງ ຂອງຄະນະກໍາມະການກິລາກາຍະກໍາແຫ່ງຊາດຮັບຜິດຊອບໃນຂົງເຂດວຽກງານ.

- ຫ້ອງການກິລາຂັ້ນແຂວງ, ເມືອງ, ນະຄອນຫລວງ, ຕ້ອງໄດ້ເປັນເຈົ້າການປຸກລະດົມ ກະຕຸກຊຸກຍູ້ວຽກງານ ໂຄສະນາໃຫ້ມະຫາຊົນທົ່ວປະເທດເຂົ້າໃຈຕໍ່ພາລະບົດບາດຄວາມສຳຄັນຂອງວຽກງານກິລາ-ກາຍະກຳໃຫ້ນັບມື້ໃຫ້ດີຂຶ້ນເລື້ອຍໆ.

- ວິຊາການຕ້ອງໄດ້ເພີ້ມທະວີຄວາມຮັບຜິດຊອບ, ຄວາມີນ້ຳໃຈຕໍ່ໜ້າທີ່ວຽກງານສູງ, ມີຄວາມຕັດສິນໃຈ, ມີຄວາມກະຕືລືລົ້ນ ຕໍ່ໜ້າທີ່ວິຊາສະເພາະຂອງຕົນ ມີຄວາມສາມັກຄີເປັນເອກະພາບ.

- ດ້ານວຽກງານກິລາກາຍະກຳ ແຕ່ລະປະເພດທີ່ມີການກະກຽມເຂົ້າສູນຝຶກແອບຢູ່ທີ່ສູນຝຶກກິລາແຫ່ງຊາດຕາມການຕົກລົງຂອງຂັ້ນເທິງ ຄວນໃຫ້ມີການແບ່ງຂັ້ນການຄຸ້ມຄອງໃຫ້ລະອຽດຈະແຈ້ງ ແລະຂາດຕົວ,ໂດຍສະເພາະແມ່ນທາງດ້ານງົບປະມານການໃຊ້ຈ່າຍຕ່າງໆ ຂອງນັກກິລາຄວນມອບໃຫ້ສູນຝຶກກິລາແຫ່ງຊາດ

# <u>ພາກທີ II</u>

## ແຜນການພັດທະນາກິລາກາຍະກຳແຫ່ງຊາດ
## 5 ປີຄັ້ງທີ່ VII (2011 - 2015)

### 1. ຈຸດປະສົງລະດັບຄາດໝາຍ :

- ເພື່ອສືບຕໍ່ປະຕິບັດ ມະຕິຂອງກອງປະຊຸມໃຫຍ່ ຄັ້ງທີ IX ຂອງພັກກ່ຽວກັບວຽກງານກິລາ-ກາຍະກຳແຫ່ງຊາດ ແລະ ສືບຕໍ່ປະຕິບັດແຜນພັດທະນເສດຖະກິດ-ສັງຄົມແຫ່ງລັດ ເທື່ອທີ່ 07 ກໍ່ຄືແຜນການກິລາ-ກາຍະກຳແຫ່ງຊາດຮອດປີ 2011-2020. ໃນຊຸມປີຕໍ່ໜ້າ ແລະ ແຕ່ນີ້ຮອດປີ 2015 ພວກເຮົາຕ້ອງໄດ້ສູ້ຊົນຈັດຕັ້ງປະຕິບັດບັນດາວຽກງານ ທີ່ໃຫຍ່ດັ່ງນີ້:

1.) ເອົາໃຈໃສ່ສຶກສາອົບຮົມການເມືອງ-ແນວຄິດໃຫ້ແກ່ພະນັກງານ, ຜູ້ບໍລິຫານກິລາກາຍະກຳ, ບຸກຄະລາກອນກິລາກາຍະກຳ ແລະ ນັກກິລາໃນຂະແໜງການກິລາກາຍະກຳ ແຕ່ສູນກາງ ລົງຮອດທ້ອງຖິ່ນໃຫ້ຮັບຮູ້ເພື່ອເຊື່ອມຊຶມແນວທາງນະໂຍບາຍຂອງພັກ, ໂດຍສະເພາະແມ່ນແນວທາງນະໂຍບາຍຂອງພັກ ກ່ຽວກັບວຽກງານກິລາກາຍະກຳແຫ່ງຊາດ ທີ່ໄດ້ກຳນົດໄວ້ ໃນມະຕິກອງປະຊຸມໃຫຍ່ ຄັ້ງທີ 8 ຂອງລະບຽບກົດໝາຍຂອງລັດຖະບານ ໃນນັ້ນແມ່ນກົດໝາຍ ກ່ຽວກັບກິລາກາຍະກຳແຫ່ງຊາດທີ່ໄດ້ຖືກຮັບຮອງຈາກກອງປະຊຸມເທື່ອທີ່ 4 ສະພາແຫ່ງຊາດ ຊຸດທີ່ 6 ຜ່ານມາ ເພື່ອພ້ອມກັນຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນດີກວ່າເກົ່າ.
2.) ເພື່ອສືບຕໍ່ຊຸກຍູ້ດັນຂະບວນການກິລາກາຍະກຳມວນຊົນ ເຂົ້າສູ່ທຸກຂົງເຂດວຽກງານຊຸມຊົນ ນັບແຕ່ຕົວເມືອງຈົນຮອດຊົນລະບົດ, ໂຮງຮຽນ, ສະຖາບັນການສຶກສາ, ໂຮງຈັກໂຮງງານ, ກະຊວງ ແລະກົມກອງເຮັດໃຫ້ກິລາ-ກາຍະກຳໄດ້ທັນເຂົ້າສູ່ຊີວິດ-ສັງຄົມ ຕົວຈິງປັກປັກຮັກສາສຸຂະພາບຂອງຜູ້ອອກແຮງງານ, ສ້າງບັນຍາກາດເບີກບານມ່ວນຊື່ນ, ປະກອບສ່ວນເຂົ້າໃນການ ປົກປັກຮັກສາ ແລະພັດທະນາປະເທດຊາດ ຂອງພວກເຮົາ ແຕ່ສູນກາງຈົນຮອດທ້ອງຖິ່ນ.
3.) ເອົາໃຈໃສ່ກໍ່ສ້າງນັກກິລາລຸ້ນສືບທອດ, ບຸກຄະລາກອນກິລາໃນຂອບເຂດທົ່ວປະເທດ ເພື່ອກຽມພ້ອມເຂົ້າຮ່ວມການແຂ່ງຂັນພາຍໃນ ແລະ ຕ່າງປະເທດ ຫຼື ຕ່າງປະເທດຈະມາຈັດການແຂ່ງຂັນຢູ່ປະເທດເຮົາ ເພື່ອປະກອບສ່ວນສ້າງຊື່ສຽງມາໃຫ້ປະເທດຊາດ ໂດຍສະເພາະ ແມ່ນການກະກຽມນັກກິລາເຂົ້າຮ່ວມແຂ່ງຂັນເອຊຽນເກມ ຄັ້ງທີ 16 ທີ່ມາເຖິງພວກເຮົາຕ້ອງຄັດເລືອກນັກກິລາເກັ່ງທີ່ມີພອນສະຫວັນໃນຂອບເຂດທົ່ວປະເທດ ແລ້ວເກັບຕົວເຂົ້າສູນຝຶກກິລາແຫ່ງຊາດ ເພື່ອການຝຶກແອບ ຢ່າງເປັນລະບົບ.
4.) ເພື່ອເປັນການສ້າງຂະບວນການ ຂໍ່ານັບຮັບຕ້ອນວັນສຳຄັນຂອງພັກ ແລະ ຂອງຊາດວັນໂອແລມປິກສາກົນໃຫ້ມີຂະບວນຟົດຟື້ນໃນປີ 2011 -2015.
5.) ສືບຕໍ່ຕັ້ງໜ້າກະກຽມນັກກິລາປະເພດຕ່າງໆ ເພື່ອຄັດເລືອກເຂົ້າສູນຝຶກຊ້ອມກະກຽມໃສ່ງານມະຫາກຳກິລາຊີເກມຄັ້ງທີ 26, ປີ 2011 ທີ່ປະເທດ ອິນໂດເນເຊຍຈະເປັນເຈົ້າພາບ.

## 2. ເນື້ອໃນວຽກງານໃນແຕ່ລະດ້ານປີ 2011-2015.

- ສືບຕໍ່ເອົາໃຈໃສ່ຍົກລະດັບຄວາມຮູ້ທາງດ້ານການເມືອງ ແຕ່ຂັ້ນສູນກາງລົງຮອດທ້ອງຖິ່ນຮາກຖານ ຕໍ່ແນວທາງປ່ຽນແປງໃໝ່, ຍຸດທະສາດການພັດທະນາກິລາກາຍະກຳຂອງພັກ ໂດຍສະເພາະທັດສະນະຂອງພັກຕໍ່ວຽກງານກິລາໃນໄລຍະໃໝ່ໃຫ້ດີກວ່າເກົ່າ.

- ສືບຕໍ່ບູລະນະປັບປຸງການຈັດຕັ້ງກິລາຂັ້ນຕ່າງໆ ແຕ່ສູນກາງຮອດທ້ອງຖິ່ນ ລວມເຖິງບັນດາສະຫະພັນກິລາປະເພດຕ່າງໆຂັ້ນສູນກາງ, ສະໂມສອນຕ່າງໆຢູ່ບັນດາແຂວງ, ການຈັດຕັ້ງສັງຄົມ ໃຫ້ມີຄວາມໜັກແໜ້ນທາງດ້ານການເມືອງແນວຄິດ ແລະ ການຈັດຕັ້ງຮູ້ເຄື່ອນໄຫວ ແລະ ຈັດຕັ້ງປະຕິບັດນະໂຍບາຍ ແລະ ແຜນການທີ່ວາງອອກໃຫ້ປະກົດຜົນສຳເລັດ.

-ສືບຕໍ່ຖືເອົາວຽກງານການເມືອງແນວຄິດຕິດພັນກັບການປັບປຸງການຈັດຕັ້ງ, ປັບປຸງການຈັດຕັ້ງຕິດພັນກັບນະໂຍບາຍຕິດພັນກັບລະບຽບກົດໝາຍ, ນິຕິກຳລະບອບລະບຽບການ ເພື່ອຍົກສູງຄຸນນະພາບການກິລາ ແລະ ຈິດໃຈ ຮັກຊາດ, ມູນເຊື້ອກິລາລາວ.

- ສືບຕໍ່ຍົກລະດັບແຕ່ລະປະເພດກິລາ ຕິດພັນກັບການສຶກສາອົບຮົມການເມືອງແນວຄິດຈິດໃຈຊາດ ຄວາມອົງອາດກ້າແກ່ນພາຍໃນ, ການເພິ່ງຕົນເອງເປັນຕົ້ນຕໍ.

## 2.1 ວຽກກໍ່ສ້າງພັກ-ພະນັກງານ, ອົງການຈັດຕັ້ງມະຫາຊົນ ແລະ ນະໂຍບາຍ.

- ການກໍ່ສ້າງພັກ-ພະນັກງານ ແມ່ນໄດ້ສຸມໃສ່ປັບປຸງໜ່ວຍພັກຄືນໃໝ່ ເພື່ອເຮັດໃຫ້ພາຍໃນໜ່ວຍພັກມີຄວາມສາມັກຄີ ໂດຍເອົາການສຶກສາອົບຮົມຄຸນສົມບັດສິນທຳປະຕິວັດ, ມາດຖານຜູ້ເປັນສາມາຊິກພັກ, ການເປັນແບບຢ່າງນຳໜ້າ, ຕໍ່ສູ້ພາຍໃນພັກ ແລະ ບັນດາມະຕິຕ່າງໆ (ສະໄໝທີ VII) ຂອງສູນກາງພັກ, ດຳເນີນຊີວິດການເມືອງໃນໝູ່ລັດຖະກອນ, ທັນເອົາພະນັກງານລົງສົມທົບ ກັບທ້ອງຖິ່ນ ຊ່ວຍໃຫ້ການຈັດຕັ້ງກິລ-ກາຍະກຳຢູ່ຮາກຖານ ໄດ້ເຄື່ອນໄຫວວຽກງານໄດ້ດີຂຶ້ນ, ທັງໝົດເຫຼົ່ານັ້ນ ໄດ້ເຮັດໃຫ້ລະບົບ ການເມືອງແນວຄິດຂອງພະນັກງານ-ລັດຖະກອນສາມາຊິກນັບທັງສູນກາງ ແລະ ທ້ອງຖິ່ນໄດ້ມີຄວາມສະຫງົບ ແລະເຄື່ອນໄຫວວຽກງານໄດ້ດີຕະລອດມາ ສາມາດເສີມຂະຫຍາຍໄດ້ບົດບາດຂອງກົມ, ຫ້ອງການກິລາ-ກາຍະກຳປະຈຳແຂວງ ແລະຫ້ອງການກິລາ-ກາຍະກຳປະຈຳເມືອງໃຫ້ມີພື້ນຖານ.

- ສືບຕໍ່ປະຕິບັດ ນະໂຍບາຍຕ່າງໆ ເຊັ່ນ: ເງິນນະໂຍບາຍ ປິ່ນປົວສຸຂະພາບ, ພັກຜ່ອນ, ບຳເນັດ, ບຳນານ, ການເລື່ອນຊັ້ນຂັ້ນເງິນເດືອນ, ການຍ້ອງຍໍລັດຖະກອນ, ຍ້ອງຍໍຕໍ່ນັກກິລາ, ຄູຝຶກ, ກຳມະການຕັດສິນ, ໄປທັດສະນະສຶກສາຖອດຖອນບົດຮຽນຢູ່ພາຍໃນ ແລະ ຕ່າງປະເທດໃຫ້ດີ, ບັນດາອົງການຈັດຕັ້ງ ແລະ ຜູ້ອຸປະຖຳໃຫ້ທັນໄລຍະເວລາທີ່ກຳນົດໄວ້.

-ສືບຕໍ່ການສຶກສາອົບຮົມການເມືອງແນວຄິດ ໄດ້ເຮັດໃຫ້ຕິດພັນກັບຂະບວນການຕົວຈິງ, ເພື່ອສ້າງພະນັກງານ ຊຶ່ງມັນໄດ້ສະແດງອອກຢູ່ໃນການມອບໝາຍໜ້າທີ່ວຽກໃຫ້ແທດເໝາະ ກັບສະພາບຕົວຈິງຄວາມຮູ້, ຄວາມສາມາດ ແລະ ຄວາມຮຽກຮ້ອງຕ້ອງການ ຂອງວຽກງານໃນໄລຍະໃໝ່ນີ້ເພື່ອເຮັດໃຫ້ວຽກງານກິລາ-ກາຍະກຳມີການຂະຫຍາຍອອກເລື້ອຍໆ.

- ສືບຕໍ່ຊີ້ນຳ, ຊຸກຍູ້ອົງການມະຫາຊົນ, ດຳເນີນກອງປະຊຸມໃຫ່ຍເຊັ່ນ: ຊາວໜຸ່ມ, ກຳມະບານ ແລະແມ່ຍິງ. ເພື່ອມີການສະຫຼຸບຕີລາຄາວຽກງານທີ່ໄດ້ຈັດຕັ້ງປະຕິບັດຕະຫລອດ.

## 2.2 ວຽກວິຊາສະເພາະ:

### 2.2.1 ວຽກກິລາມວນຊົນ:

- ປະສານສົມທົບກັບບັນດາກະຊວງ, ອົງການອ້ອມຂ້າງສູນກາງ, ອຳນາດການປົກຄອງທ້ອງຖິ່ນ ແລະ ບັນດາອົງການຈັດຕັ້ງມະຫາຊົນແຕ່ລະຂັ້ນ ເພື່ອໂຄສະນາຄຸນປະໂຫຍດ ຂອງການຫຼິ້ນກິລາ- ກາຍະກຳ ເຂົ້າສູ່ໃນທຸກຂົງເຂດວຽກງານ, ສຳນັກງານອົງການຂອງພັກ-ລັດ, ຄຸ້ມບ້ານໃນຕົວເມືອງ, ຊົນລະບົດ ຕະລອດຮອດສະຖາບັນການສຶກສາ, ກົມກອງທະຫານ, ໂຮງຈັກໂຮງງານ ທີ່ມີກຳມະກອນຫລວງຫຼາຍ ແລະ ອື່ນໆ. ເພື່ອໃຫ້ເກີດມີຂະບວນການອອກກຳລັງກາຍ ແລະ ກິລາກາຍະກຳມວນຊົນຢ່າງກວ້າງຂວາງ.

- ສຳລັບປີ 2011-2015 ນີ້ຕ້ອງປະສານງານກັບກະຊວງທະແຫລງຂ່າວ-ວັດທະນາທຳ ເພື່ອອອກ ລາຍການວິທະຍຸ, ໂທລະພາບກ່ຽວກັບການໂຄສະນາວຽກດີຄົນເດັ່ນໃນກິລາ, ຄອບຄົວກິລາ, ບ້ານ, ເມືອງ, ກົມກອງກິລາດີເດັ່ນ.

- ສຳລັບກິລາກາຍະກຳເພື່ອສຸຂະພາບ ກໍ່ຕ້ອງສ້າງເງື່ອນໄຂໃຫ້ໂອກາດແຕ່ລະເພດໄວ ໄດ້ເຂົ້າຮ່ວມ ແຂ່ງຂັນເຊັ່ນ: ກິລາເພດຍິງ, ກິລາຄົນພິການ, ກິລາຜູ້ອາຍຸສູງ, ແລະ ກິລາອື່ນໆ ຕາມຄວາມ ເໝາະສົມ ບົນພື້ນຖານການເຂົ້າຮ່ວມຂອງຄະນະນຳແຕ່ລະຂັ້ນ.

- ສຳລັບໂຮງຮຽນ, ສະຖາບັນການສຶກສາຊຸມຊົນ, ໂຮງຈັກໂຮງງານຕ່າງໆກໍ່ຕ້ອງຊຸກຍູ້ ໃຫ້ມີຂະບວນ ການກິລາເກີດຂຶ້ນ ແນ່ໃສ່ເຮັດໃຫ້ທຸກແຫ່ງຫົນຂອງປະເທດຊາດມີຂະບວນການກິລາເກີດຂຶ້ນ ເພື່ອເປັນການ ປະກອບສ່ວນສ້າງບັນຍາກາດ ອັນເບີກບານມ່ວນຊື່ນ, ຄວາມສາມັກຄີ ແລະ ຄວາມເປັນປຶກແຜນແໜ້ນໜາ ຂອງວົງຄະນະຍາດແຫ່ງຊາດ.

- ຫັນເອົາຂະບວນກິລາມວນຊົນ, ຕິດພັນກັບການຈັດຕັ້ງ, ການສະເຫຼີມສະຫຼອງວັນສຳຄັນຂອງພັກ ແລະ ຂອງຊາດ, ຂອງການຈັດຕັ້ງຂອງຕົນ ແລະ ວັນບຸນປະເພນີຂອງປະຊາຊົນບັນດາເຜົ່າຕາມຄວາມເໝາະ ສົມ.

- ສືບຕໍ່ໂຄງການເກັບກຳຂໍ້ມູນສະຖິຕິ ວຽກງານກິລາມວນຊົນຢູ່ຂັ້ນແຂວງ, ສຳມະນາການເກັບກຳຂໍ້ ມູນສະຖິຕິຂ່າວສານກິລາມວນຊົນ ແລະ ວິທີສະຫຼຸບ ແລະ ສ້າງແຜນການປະຈຳເດືອນ, ປະຈຳປີ ກ່ຽວກັບວຽກ ງານກິລາມວນຊົນ, ກະກຽມຈັດການແຂ່ງຂັນກິລາມະຫາວິທະຍາໄລ ອາຊຽນ ໃນປີ 2012.

### 2.2.2 ວຽກງານກົມກິລາສາຍສູງ:

### ກ. ການເຄື່ອນໄຫວຢູ່ພາຍໃນປະເທດ:

1.) ກຳນົດແຜນສ້າງນັກກິລາລຸ້ນສືບທອດ, ໂດຍສະເພາະເພື່ອເຂົ້າແຂ່ງຂັນກິລາຢູ່ພາຍໃນ ປະເທດ, ໄດ້ປະສານສົມທົບກັບອົງການຈັດຕັ້ງຂອງລັດ, ສະຫະພັນກິລາປະເພດຕ່າງໆ ໃນການຂຶ້ນແຜນການ ການຝຶກອົບລົມ ກໍ່ສ້າງ ແລະ ຍົກລະດັບຄູຝຶກ, ກຳມະການຕັດສິນ, ການຝຶກແອບນັກກິລາລະດັບສູງ, ນັກກິລາພອນສະຫວັນ ແລະ ນັກກິລາສືບທອດ ເພື່ອກະກຽມໃຫ້ແກ່ທີມຊາດໃນປະຈຸບັນ ແລະ ອານາຄົດ ໂດຍການປະສານສົບທົບກັບນັກກິລາມວນຊົນເພື່ອຈັດຕັ້ງປະຕິບັດ.

2.) ກະກຽມດ້ານເຕັກນິກວິຊາການ ໃຫ້ແກ່ການເຄື່ອນໄຫວແຂ່ງຂັນມະຫາກຳກິລາແຫ່ງຊາດຄັ້ງທີ IX ໃນປີ 2011 ຢູ່ ແຂວງຫລວງພະບາງເປັນເຈົ້າພາບ, ທັງຕິດພັນກັບການຍົກລະດັບຄູຝຶກ, ກຳມະການຕັດສິນ, ການຄົ້ນຄວ້າ ແລະ ນຳໃຊ້ວິທະຍາສາດ ການແພດ.

3.) ສືບຕໍ່ຕິດຕາມງານແຂ່ງຂັນກິລາຕ່າງໆ ໃນວັນປະຫັວດສາດສຳຄັນຂອງຊາດ ເພື່ອຄັດເລືອກນັກກິລາທີ່ທາງສະຫະພັນຈັດຂຶ້ນຢູ່ສູນກາງ ແລະ ທ້ອງຖິ່ນ ເພື່ອເຂົ້າສູນຝຶກກິລາແຫ່ງຊາດ.

4.) ໄດ້ສືບຕໍ່ແຂ່ງຂັນ ແລະ ຄັດເລືອກກິລາທີມຊາດເຂົ້າຮ່ວມແຂ່ງຂັນຊີເກມ, ເອຊຽນເກມ, ໂອແລມປິກເກມ ລະດັບ ໂລກ ແລະ ລະດັບນາໆຊາດ.

5.) ກະກຽມດ້ານເຕັກນິກວິຊາການ ໃຫ້ແກ່ການເຄືອນໄຫວການແຂ່ງຂັນມະຫາກຳກິລາແຫ່ງຊາດ ຄັ້ງທີ X, ໃນປີ 2014 ຢູ່ທີ ແຂວງ ອຸດົມໄຊ ຈະເປັນເຈົ້າພາບ.

## ຂ. ການເຄື່ອນໄຫວຢູ່ຕ່າງປະເທດ.

**1.)** ການກຳນົດແຜນຈຸດສຸມສ້າງ ແລະ ຝຶກແອບທີມຊາດ ເພື່ອກະກຽມເຂົ້າຣວ່ມແຂ່ງຂັນຊີເກມຄັ້ງທີ 26 ທີ່ປະເທດ ອິນໂດເນເຊຍ ທີ່ຈະມາເຖິງນີ້.

**2.)** ກຳນົດແຜນຝຶກແອບນັກກິລາ ເພື່ອສົ່ງຄະນະນັກກິລາເຂົ້າຮ່ວມເອຊຽນເກມ ຄັ້ງທີ16 ຢູ່ທີ່ ກວາງໂຈ ສ.ປ ຈີນ.

**3.)** ກະກຽມນັກກິລາເພື່ອເຂົ້າຮ່ວມແຂ່ງຂັນໂອແລມປິກຊາວໜຸ່ມ ຄັ້ງທີ I ຢູ່ ປະເທດ ສິງກະໂປ ມີກິລາແລ່ນ, ລອຍນ້ຳ, ຢູໂດ ແລະ ດອກປີກໄກ່.

**4.)** ກະກຽມນັກກິລາ ເພື່ອເຂົ້າຮ່ວມແຂ່ງຂັນກິລາ ເອຊຽນເກມ ຫາດຊາຍ ຄັ້ງທີ II ຢູ່ທີປະເທດ ໂອມານ( 2nd ASIAN BEACH GAMES ).

**5.)** ເຂົ້າຮ່ວມແຂ່ງຂັນກິລາສິລະປະຕໍ່ສູ້ປ້ອງກັນຕົວ(ASIAN MARTIALART), ເຂົ້າຮ່ວມແຂ່ງຂັນກິລາອິນດໍເກມ ຄັ້ງທີ່ IV ( 4th ASIAN INDOOR GAMES ).

**6.)** ໃນປີ 2012 ເຂົ້າຮ່ວມແຂ່ງຂັນກິລາ ໂອແລມປິກເກມ ລະດູຮ້ອນຄັ້ງທີ່ 30 ຢູປະເທດ ອັງກິດ.

**7.)** ເຂົ້າຮ່ວມແຂ່ງຂັນກິລາ ເອຊຽນເກມ ຫາດຊາຍ ຄັ້ງທີ III (2th ASIAN BEACH GAMES).

**8.)** ໃນປີ 2013 ເຂົ້າຮ່ວມແຂ່ງຂັນກິລາຊີເກມຄັ້ງທີ 27 ແລະ ແຂ່ງຂັນກິລາຊິງແຊ້ມນາໆຊາດ, ລະດັບຊາດ, ລະດັບຕ່າງໆ ຂອງບາງປະເພດກິລາທີ່ຈັດຂຶ້ນຢູ່ຕ່າງປະເທດ.

**9.)** ປີ 2014 ເຂົ້າຮ່ວມແຂ່ງຂັນກິລາເອຊຽນເກມຄັ້ງທີ17 ຢູ່ ອິນເຈີນ ສ. ເກົາຫຼີ,

**10.)** ປີ 2015 ເຂົ້າຮ່ວມແຂ່ງຂັນກິລາຊີເກມຄັ້ງທີ 28 ແລະ ກິລາຊິງແຊ້ມນາໆຊາດລະດັບຕ່າງໆ ຂອງບາງປະເພດກິລາ ທີ່ຈັດຂຶ້ນຢູ່ຕ່າງປະເທດ.

## 2.2.3 ວຽກງານພົວພັນກິລາສາກົນ.

1.) ສ້າງແຜນລະອຽດໃນຕໍ່ໜ້າ ທີ່ຜູ້ນຳກິລາຈະໄປຢ້ຽມຢາມຕ່າງປະເທດ ແລະ ຕ່າງປະເທດ ຈະມາຢ້ຽມຢາມລາວ ນັບທັງການເຄື່ອນໄຫວ ຂອງຄະນະໂອແລມປິກແຫ່ງຊາດລາວ ທີ່ຈະໄປເຄື່ອນໄຫວຢູ່ຕ່າງປະເທດ 07 ປະເທດ ຈຳນວນ 35 ຄັ້ງ ສຳລັບ 5 ປີໃນຕໍ່ໜ້າ.

2.) ສືບຕໍ່ຍົກສູງຄວາມຮັບຜິດຊອບການພົວພັນ ຮ່ວມມືລະຫວ່າງ 2 ຝ່າຍ ແລະ ຫຼາຍຝ່າຍໃຫ້ສູງຂຶ້ນກ່ວາເກົ່າ, ໃນການປະສານງານກັບກະຊວງການຕ່າງປະເທດ, ສະຖານທູດປະຈຳລາວ ໃຫ້ດີກວ່າເກົ່າ.

3.) ໃຫ້ຖືເອົາການພົວພັນຮ່ວມມືກັບອົງການຈັດຕັ້ງສາກົນ, ອົງການບໍ່ຂຶ້ນກັບລັດຖະບານ, ອົງການມູນນິທິ, ອົງການກິລາສາກົນຕ່າງໆ ເພື່ອຍາດແຍ່ງເອົາການສະໜັບສະໜູນ ແລະ ການຊ່ວຍເຫລືອຂອງບັນດາປະເທດໃຫ້ຫລາຍຂຶ້ນ.

4.) ກຳນົດແຜນການກະກຽມການຕ້ອນຮັບ ຄະນະຜູ້ແທນຄະນະນຳຂັ້ນສູງທີ່ຈະມາຢ້ຽມຢາມ ສປປລາວ 7 ປະເທດ ຈຳນວນ 35 ຄັ້ງ ສຳລັບແຜນການ 5 ປີ.

5.) ສືບຕໍ່ແຜນການຮ່ວມມືເຊັນສັນ MOU ກັບບັນດາປະເທດເພື່ອນມິດໃຫ້ໄດ້ 04 ປະເທດ ແລະ 1 ສະບັບແມ່ນແຜນການຮ່ວມມືປະຈຳປີກັບ ສສ ຫວຽດນາມ.

6.) ສືບຕໍ່ການປະສານງານໃຫ້ແກ່ການນຳ, ຄະນະກິລາເຄື່ອນໄຫວຢູ່ຕ່າງປະເທດ, ຜູ້ແທນກິລາຕ່າງປະເທດມາຢ້ຽມຢາມ, ແຂ່ງຂັນ, ນັບທັງຕິດຕາມບົດບັນທຶກສັນຍາຕ່າງໆ ທີ່ໄດ້ຕົກລົງ, ຫລືຊອກຮູ້ຂໍ້ມູນຂ່າວສານທີ່ຈຳເປັນ ຂອງປະເທດໃດໜຶ່ງທີ່ຈະພົວພັນ ໃນຕໍ່ໜ້າໃຫ້ດີຂຶ້ນ.

7.) ສືບຕໍ່ຕິດຕາມການຊ່ວຍເຫລືອ ຂອງອົງການ ຈັດຕັ້ງສາກົນ, ໂອແລມປິກສາກົນ, ສະຫລຸບສັງລວມ ຫລື ການປະຕິບັດໂຄງການໃຫ້ທັນເວລາໃນດ້ານວຽກງານກໍ່ສ້າງກິລາ-ກາຍະກຳແຫ່ງຊາດ ໃຫ້ດີກວ່າເກົ່າ.

## 2.2.4 ວຽກງານຫ້ອງການ ຂອງຄະນະກຳມະການກິລາ-ກາຍະກຳແຫ່ງຊາດ.

**1.)** ສືບຕໍ່ສຶກສາອົບຮົມ ດ້ານການເມືອງແນວຄິດ ໃຫ້ແກ່ພະນັກງານສາມາຊິກພັກ ພະນັກງານ-ລັດຖະກອນໃນທົ່ວຄະນະກຳມະການກິລາ-ກາຍະກຳແຫ່ງຊາດ ໃຫ້ຮັບຮູ້ແລະເຊື່ອມຊືມໃນແນວທາງນະໂຍບາຍຂອງພັກ-ລັດຖະບານ ໂດຍສະເພາະແມ່ນມະຕິຂອງກອງປະຊຸມໃຫ່ຍ ຄັ້ງທີ IX ຂອງພັກ ເວົ້າລວມເວົ້າສະເພາະແມ່ນບັນຫາທີ່ພົວພັນເຖິງວຽກງານ ການພັດທະນາກິລາ- ກາຍະກຳແຫ່ງຊາດ ແລະ ໄດ້ເຮັດໃຫ້ພະນັກງານມີຄວາມ ສະຫງົບ ມີການເຄື່ອນໄຫວຈັດຕັ້ງປະຕິບັດ ໜ້າທີ່ວຽກງານຕາມການມອບໝາຍ, ມີຄວາມສາມັກຄີເຮັດໃຫ້ ທົ່ວຄະນະກຳມະການກິລາ - ກາຍະກຳແຫ່ງຊາດ ເຄື່ອນໄຫວ ວຽກ ງານດ້ວຍບັນຍາກາດທີ່ດີເປັນປົກກະຕິຕະຫລອດມາ.

**2.)** ສືບຕໍ່ຕິດຕາມການຂຶ້ນແຜນ, ການສ້າງບຸກຄະລາກອນກິລາ, ນັກກິລາໂດຍສະເພາະ ແມ່ນບຸກຄະລາກອນທີ່ພວມປະຈຳການໃນປະຈຸບັນ ໃຫ້ໄດ້ໄປຍົກລະດັບຄວາມຮູ້, ຄວາມສາມາດທາງດ້ານວິຊາສະເພາະ ແລະ ຄັດເລືອກເອົາຜູ້ມີມາດຖານ, ມີວິຊາສະເພາະ ທີ່ແນ່ນອນຮັບເຂົ້າເປັນລັດຖະກອນ.

**3.)** ສືບຕໍ່ບູລະນະປັບປຸງແບບແຜນວິທີເຮັດວຽກ ຂອງຫ້ອງການ ຄ ກ ຊ ນັບທັງບັນດາແຂວງ, ເມືອງໃນການປະຕິ ບັດລະບອບລາຍງານ, ສ່ອງແສງປົກະຕິໃຫ້ດີກວ່າເກົ່າ.

**4.)** ສືບຕໍ່ຕິດຕາມການປະຕິບັດ ໂຄງການຮ່ວມມືດ້ານກິລາ-ກາຍະກຳລະຫວ່າງ ຄະນະກຳມະການກິລາ-ກາຍະກຳແຫ່ງຊາດລາວ ສາທາລະນະລັດ ປະຊາທິໄຕ ປະຊາຊົນລາວ ແລະ ກະຊວງ

ວັດທະນະທຳ, ກິລາແລະ ທ່ອງທ່ຽວແຫ່ງສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ບົນຈິດໃຈຄວາມສາມັກຄີ,ມິດຕະພາບແບບພິເສດລະຫວ່າງສອງພັກ-ລັດຖະບານ.

5.) ຄົ້ນຄວ້າສ້າງລະບຽບການທັນເອົາສູນຝຶກກິລາແຫ່ງຊາດ ເປັນຫົວໜ່ວຍສ້າງລາຍຮັບ ເຂົ້າງົບປະມານ ແລະ ສາມາດກຸ້ມຕົນເອງເທື່ອລະກ້າວ, ສ້າງແຜນ ແລະ ຄຸ້ມຄອງການຝຶກແອບກິລາລຸ້ນສືບທອດປະເພດປ້ອງກັນຕົວ ຈຳນວນ 30 ຄົນ ຢ່າງຕໍ່ເນື່ອງຕາມແຜນການອະນຸມັດຂອງຂັ້ນເທິງ.

## 2.2.5 ວຽກງານສູນຝຶກກິລາ ແຫ່ງຊາດ.

1.) ສືບຕໍ່ປັບປຸງພາລະບົດບາດ, ການຈັດຕັ້ງ, ການເຄືອນໄຫວຂອງສູນຝຶກກິລາແຫ່ງຊາດ (ສີເກີດ) ບັນຈຸ ແລະ ຊັບຊ້ອນພະນັກງານ ເຂົ້າໃສ່ຕຳແໜ່ງງານໃຫ້ເໝາະສົມ, ປະຕິບັດນະໂຍບາຍ ເລື່ອນຊັ້ນ, ເລື່ອນຂັ້ນ, ຍ້ອງຍໍພະນັກງານທີ່ມີຜົນງານ ແລະ ປະຕິບັດວິໄນຕໍ່ຜູ້ກະທຳຜິດ ຕາມສະພາບຕົວຈິງ.

2.) ສືບຕໍ່ກໍ່ສ້າງນັກກິລາລຸ້ນສືບທອດປະຈຳຢູ່ສູນຝຶກບາງປະເພດກິລາ ໃນເງື່ອນໄຂທີ່ພວກເຮົາສາມາດເຮັດໄດ້ໄປເທື່ອລະກ້າວ, ລົມທົບກັບກົມກິລາລະດັບສູງ ຂອງຄະນະກຳມະການກິລາ-ກາຍະກຳແຫ່ງຊາດ.

3.) ການບໍລິຫານ-ບໍລິການ, ຄຸ້ມຄອງຄະນະນັກກິລາທີມຊາດ ທີ່ເຂົ້າສູນຝຶກແອບກະກຽມ ເອຊຽນເກມຄັ້ງທີ 16, 17 ຊີເກມ ຄັ້ງທີ 26, 27, 28 ແລະ ໂອແລມປິກເກມ ຕາມການ ມອບໝາຍຂອງຂັ້ນເທິງໃຫ້ໄດ້ດີທີ່ສຸດ.

4.) ກຽມພ້ອມຕອບສະໜອງອຳນວຍຄວາມສະດວກ ໃຫ້ແກ່ກົມກອງທ້ອງຖິ່ນ, ບັນດາສະໂມສອນກິລາຕ່າງໆ ໃນການກະກຽມຝຶກແອບກິລາ ຂອງຕົນສົ່ງເຂົ້າຮ່ວມລາຍການແຂ່ງຂັນບັ້ນຕ່າງໆ ນັບທັງພາຍໃນ ແລະຕ່າງປະເທດ.

## 2.2.6 ວຽກງານສະໜາມກິລາ ແຫ່ງຊາດ.

1.) ສືບຕໍ່ປັບປຸງພາລະບົດບາດ,ການຈັດຕັ້ງ, ການເຄືອນໄຫວຂອງສະນາມກິລາແຫ່ງຊາດ ບັນຈຸ ແລະ ຊັບຊ້ອນພະນັກງານ ເຂົ້າໃສ່ຕຳແໜ່ງງານໃຫ້ເໝາະສົມ, ປະຕິບັດນະໂຍບາຍເລື່ອນຊັ້ນ, ເລື່ອນຂັ້ນ, ຍ້ອງຍໍພະນັກງານທີ່ມີຜົນງານ ແລະ ປະຕິບັດວິໄນຕໍ່ຜູ້ກະທຳຜິດຕາມສະພາບຕົວຈິງ.

2.) ສືບຕໍ່ກໍ່ສ້າງສ້ອມແປງສະໜາມກິລາແຫ່ງຊາດ ທີ່ຍັງບໍ່ທັນສຳເລັດ, ເພື່ອເຮັດສະໜາມກິລາແຫ່ງ ຊາດມີການຄຸ້ມຄອງຮັກສາສະໜາມ.

# 3. ບັນດາວິທີການມາດຕະການຈັດຕັ້ງປະຕິບັດ :

ເພື່ອບັນລຸເປົ້າໝາຍທີ່ກ່າວມາຂ້າງເທິງນັ້ນຄວນເອົາໃຈໃສ່ບາງມາດຕະການຄື:

1.) ຄະນະນຳ ຄະນະກຳມະການກິລາ-ກາຍະກຳແຫ່ງຊາດແຕ່ລະຂັ້ນຕ້ອງກຳນົດແໜ້ນ ເນື້ອໃນຈິດໃຈຂອງທິດທາງແຜນການໃນຊຸມປີຕໍ່ໃນໜ້າ ແລະ ວຽກງານຈຳນວນໜຶ່ງແຕ່ນີ້ຮອດປີ 2015 ໃຫ້ເລິກເຊິ່ງ, ພ້ອມທັງຜັນຂະຫຍາຍເປັນແຜນວຽກ, ແຜນງານ ແລະ ໂຄງການ ວຽກງານຕົນໃຫ້ລະອຽດທັງສອດຄ່ອງ ກັບສະພາບຄວາມເປັນຈິງ ຂອງກົມກອງຂອງຕົນ.

2.) ຕ້ອງເອົາໃຈໃສ່ກຳແໜ້ນ, ເຊື່ອມຊຶມທັດສະນະ ຂອງພັກ-ລັດຖະບານ ກ່ຽວກັບວຽກ ງານກິລາໃນໄລຍະໃໝ. ປຸກລະດົມມະຫາຊົນ ບັນດາພາກສ່ວນເສດຖະກິດຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ, ໃຫ້ເຂົ້າຮ່ວມສະນັບສະໜູນວຽກງານກິລາຫຼາຍກ່ວາເກົ່າ ເພື່ອສ້າງກຳລັງແຮງ ສັງລວມ ຮັບປະກັນໃຫ້ແກ່ ການພັດທະນາກິລາ-ກາຍະກຳໃນໄລຍະໃໝ່ນີ້.

3.) ຮູ້ນຳໃຊ້ກຳລັງແຮງບົ່ມຊ້ອນຂອງມະຫາຊົນ ຂອງບັນດາຂະແໜງ, ທ້ອງຖິ່ນ ແລະ ຮາກຖານ, ຂົນຂວາຍທຸກພາກສ່ວນເສດຖະກິດ, ການຈັດຕັ້ງຂອງສັງຄົມ, ອົງການຈັດຕັ້ງສາກົນທັງພາຍໃນ ແລະ ຕ່າງປະເທດ ໃຫ້ການພັດທະນາກິລາ-ກາຍະກຳກ້າວຂຶ້ນ ແລະ ຂະຫຍາຍຕົວຢ່າງຕໍ່ເນື່ອງ.

4.) ສືບຕໍ່ປັບປຸງກົງຈັກການຈັດຕັ້ງ, ຊັບຊ້ອນແບ່ງງານ, ແບ່ງຄວາມຮັບຜິດຊອບຢູ່ແຕ່ລະຂັ້ນ ໃຫ້ເໝາະສົມ ແລະ ສອດຄ່ອງກວ່າເກົ່າ, ພ້ອມທັງເພີ່ມທະວີບົດບາດການນຳພາ, ເຄື່ອງມືຮັບໃຊ້ວຽກງານທີ່ຈຳເປັນເຊັ່ນ: ຫ້ອງການບ່ອນເຮັດວຽກ, ການປະທັບ, ການບໍລິຫານວຽກທີ່ຈຳເປັນ ເພື່ອການພັດທະນາກິລາ ແຕ່ລະຂັ້ນ.

5.) ກຳນົດການນຳພາທາງດ້ານແນວຄິດ ແລະ ການຈັດຕັ້ງປະຕິບັດແຜນການ,ໂຄງການ ແລະ ວຽກງານຂອງຕົນໄດ້ກຳນົດໄວ້ ໃຫ້ໄດ້ຮັບການຈັດຕັ້ງປະຕິບັດເປັນຢ່າງດີ.

6.) ສືບຕໍ່ເອົາໃຈໃສ່ສຶກສາອົບຮົມການເມືອງແນວຄິດ ສ້າງໃຫ້ນັກກິລາມີຈິດໃຈຮັກຊາດ, ມີສະຕິລະບຽບວິໃນສູງ, ຮູ້ນຳ ໃຊ້ເຕັກນິກເຂົ້າໃສ່ການພັດທະນາກິລາ ເລີ່ມຈາກຮາກຖານເຊັ່ນ: ໂຮງຮຽນ, ຖັນແຖວຊາວໜຸ່ມ, ສຳນັກງານ, ໂຮງຈັກໂຮງງານເພື່ອຝຶກແອບ ແລະ ເລືອກເຟັ້ນຜູ້ມີພອນສະຫວັນ, ສ້າງນັກກິລາຜູ້ມີພອນສະຫວັນເທື່ອລະກ້າວ.

## ❋ <u>ວຽກງານກິລາກາຍະກຳໃນປີ 2006 - 2010 ທີ່ຍັງຄ້າງຄາ ແລະ ຫັນມາເປັນແຜນການສືບຕໍ່ໃນປີ 2011-2015 ດັ່ງນີ້:</u>

ວຽກງານ ກິລາກາຍະກຳມວນຊົນໃນ 5 ປີ ໃນຕໍ່ໜ້າ: ເຫັນວ່າຈຳນວນຄົນຕື່ນຕົວ ການອອກກຳລັງກາຍມີຈຳນວນເພີ່ມຂຶ້ນ, ໂດຍສະເພາະເຂດພູດອຍ, ການຈັດຕັ້ງສະໂມສອນກິລາ ບໍ່ທັນຂະຫຍາຍຕົວຢ່າງກວ້າງຂວາງ, ການຈັດຕັ້ງແຂ່ງຂັນ ບໍ່ທັນເປັນ ລະດັບປົກກະຕິຄື:

1.) ໃນປີ 2010 ການກະກຽມເຂົ້າຮ່ວມກິລາເອຊຽນເກມຄັ້ງທີ່ 16 ທີ່ປະເທດ ສ ປ ຈີນ ແລະ ກະກຽມເຂົ້າຮ່ວມກິລາຊີເກມຄັ້ງທີ່ 26 ທີ່ ປະເທດ ອິໂດເນເຊຍ, ກ້າວເຂົ້າສູ່ແຜນພັດທະນາເສດຖະກິດ-ສັງຄົມຄັ້ງທີ່ 7 ຂອງ ສປປ ລາວ, ພິເສດແມ່ນ ການກະກຽມສ້າງເງື່ອນໄຂໃຫ້ແກ່ງານມະຫາກຳກິລາແຫ່ງຊາດ ຄັ້ງທີ່ 9 ຢູ່ ແຂວງຫລວງພະບາງ ເປັນເຈົ້າພາບ ໃນປີ 2011.

2.) ສືບຕໍ່ວຽກງານການກໍ່ສ້າງກຳລັງກິລາຍັງມີຂອບເຂດຈຳກັດ, ລະດັບຍັງຕ່ຳທຽບໃສ່ປະເທດໃກ້ຄຽງ, ບໍ່ທັນໄດ້ມີແຜນພັດທະນາລະອຽດ, ໂຄງການກໍ່ສ້າງນັກກິລາຜູ້ສືບທອດເກືອບວ່າບໍ່ມີ, ມີຫຼາຍປະເພດກິລາບໍ່ທັນຂະຫຍາຍບໍ່ສາມາດ ເຊື່ອມໂຍງກັບເນື້ອໃນ ການແຂ່ງຂັນກິລາຊີເກມ.

3.) ສືບຕໍ່ການຈັດຕັ້ງກິລາບໍ່ທັນໄດ້ບູລະນະສົມບູນເປັນຕົ້ນກົນໄກການຈັດຕັ້ງຂັ້ນເມືອງ, ຂາດພະນັກງານຊີ້ນຳ ແລະ ຈັດຕັ້ງການເຄື່ອນໄຫວກິລາກາຍະກຳຢູ່ຮາກຖານ.

4.) ການຈັດຕັ້ງກິລາໃນສັງຄົມພຽງແຕ່ປັບປຸງຢູ່ສູນກາງ. ສຳລັບທ້ອງຖິ່ນຍັງບໍ່ທັນໄດ້ເອົາໃຈໃສ່ ເທົ່າທີ່ຄວນ, ເນື້ອໃນເຄື່ອນໄຫວກິລາ-ກາຍະກຳ ຍັງບໍ່ທັນສະໜອງກັບຄວາມຮຽກຮ້ອງຕ້ອງການ ຂອງທ້ອງຖິ່ນ ຕາມໜ້າທີ່ປະຈຸບັນ.

5.) ສືບຕໍ່ສ້າງແຜນການແຕ່ສູນກາງຮອດທ້ອງຖິ່ນບໍ່ທັນໄດ້ສ້າງເປັນລະບົບ ສະນັ້ນການຜັນຂະຫຍາຍແຜນພັດທະນາຢູ່ຮາກຖານ ຈຳກັດມີຜົນສະທ້ອນໃຫຍ່ຕໍ່ການເຄື່ອນໄຫວ ແລະ ຂະບວນການຂອງຮາກຖານ.

6.) ວຽກງານພັດທະນາກິລາ-ກາຍະກຳ ແຕ່ລະປະເພດ ບໍ່ທັນໄດ້ກຳນົດຢ່າງມີແຜນການເປັນຕົ້ນກິລາປາຍແຫຼມ, ການກຳນົດແຜນພັດທະນາລະບົບການກໍ່ສ້າງຝຶກອົບຮົມ, ໂຄງການກໍ່ສ້າງນັກກິລາບໍ່ທັນໄດ້ຜັນຂະຫຍາຍ ການສົ່ງເສີມເອົາປະເພດກິລາໃໝ່ເຂົ້າມາລາວບໍ່ທັນມີ ສະນັ້ນນັກກິລາຈະບໍ່ມີ ແລະ ຕອບສະໜອງໄດ້ຕາມຄວາມຕອ້ງການຂອງແຕ່ລະພາກສ່ວນ.

7.) ສືບຕໍ່ສ້າງແຜນງົບປະມານການເງິນ ແລະ ລະບອບອຸດໜູນນະໂຍບາຍ ບໍ່ທັນຕອບສະໜອງກັບຄວາມຮຽກຮ້ອງຕ້ອງການ ແລະ ການຂະຫຍາຍຕົວ ຂອງວຽກງານກິລາ-ກາຍະກຳ, ສືບຕໍ່ແນວທາງການປ່ຽນແປງໃຫ່ມຂອງພັກ-ລັດຖະບານ ໃນຂະແໜງກິລາ-ກາຍະກຳ ຕ້ອງຕັດສິນໃຈຜ່ານຜ່າຄວາມຫຍຸ້ງຍາກ ແລະ ແກ້ໄຂສິ່ງທີ່ຄົງຄ້າງ, ປະຕິບັດວຽກງານຢ່າງມີແຜນການ, ໂຄງການດຳເນີນງານ ແລະ ມີວິທີການຈັດຕັ້ງປະຕິບັດຕົວຈິງແນ່ໃສ່ ວຽກງານຈັດຕັ້ງ, ການກໍ່ສ້າງຂະຫຍາຍຂະບວນກິລາ-ກາຍະກຳມວນຊົນຢ່າງກວ້າງຂວາງ, ຕ້ອງກຳນົດແຜນພັດທະນາ ແລະ ຂໍ້ກຳນົດນັກກິລາລະດັບສູງສ້າງພື້ນຖານໃຫ້ແກ່ໄລຍະ ການຂະຫຍາຍຕົວ ເພີ້ມຂື້ນຢ່າງບໍ່ຢຸດຢັ້ງ.

- ໃນວຽກງານກໍ່ສ້າງລະບົບພະນັກງານ ແລະ ລະບົບນັກກິລາ, ລະບອບວິທີການເຮັດວຽກການສັງລວມ ແຜນການ, ການຄຸ້ມຄອງຂະແໜງການ ວຽກງານມະຫາກຳກິລາຊີເກມຄັ້ງທີ 25, ປີ 2009 ແລະການກະກຽມເຂົ້າຮ່ວມຊີເກມ ໃນຕໍ່ໜ້າ, ໃນໄລຍະຫ້າຜ່ານມາ ພວກເຮົາໄດ້ບັນລຸ ຄວາມເປັນເອກະພາບສູງກ່ຽວກັບກຳນົດຍຸດທະສາດມະຫາພາກຂອງຂະແໜງການກິລາ-ກາຍະກຳ. ການສ້າງຂະບວນກິລາ-ກາຍະກຳມວນຊົນຂອບເຂດທົ່ວປະເທດ, ພວກເຮົາໄດ້ມີການຈັດຕັ້ງປະຕິບັດ ມີໝາກຜົນໃນເບື້ອງຕົ້ນ ໃນໜ້າທີ່ພື້ນຖານ. ລັດຖະບານ ແລະ ຂະແໜງການອື່ນໆ ໄດ້ມີບາດກ້າວສ້າງເງື່ອນໄຂສະດວກ ໃຫ້ວຽກງານກິລາ-ກາຍະກຳ, ແຕ່ວ່າໃນວິທີຈັດຕັ້ງການກະທຳເພື່ອຮັບໃຊ້ຍຸດທະສາດຍາວນານ, ບັນຫາຫຼັກ ແມ່ນມັນສະໝອງ, ສະຕິປັນຍາ, ຄວາມສາມາດ, ຄຸນທາດ, ລະບຽບວິໃນ ຄວາມເຂັ້ມແຂງ ຂອງຖັນແຖວພະນັກງານທີ່ເຮັດ ວຽກງານກິລາ-ກາຍະກຳ, ພື້ນຖານວັດຖຸ ແລະ ງົບປະມານອາດຈະມີສ່ວນຈຳກັດ, ແຕ່ການສະໜອງແນວຄິດໄດ້ສົ່ງເສີມສູງ ຈະໄດ້ສ້າງພື້ນຖານວັດຖຸ ແລະ ກໍ່ແມ່ນພະລັງແຮງ ຕົ້ນຕໍກະທົບໃສ່ວຽກງານກິລາ-ກາຍະກຳ ຂອງຊາດ.

ສະນັ້ນ ປັດໄຈຕັດສິນໃຈໃຫ້ພາລະກິດກິລາ-ກາຍະກຳຂະຫຍາຍຕົວ ແມ່ນຖັນແຖວ ພະນັກງານແຕ່ລະຂັ້ນ, ແຕ່ລະປະເພດ ຊຶ່ງແມ່ນຂະແໜງການກິລາ-ກາຍະກຳ ມີຄວາມຮັບຜິດຊອບ ກໍ່ສ້າງອົບຮົມຄືນໃໝ່ ໃຫ້ມີພະນັກງານມີລະດັບວິຊາການ, ເຕັກນິກເກັ່ງ ໃຈບໍລິສຸດຕໍ່ປະເທດຊາດ ພວກເຮົາຕ້ອງໄດ້ກໍ່ສ້າງຖັນແຖວນັກກິລາທີ່ມີພອນສະຫວັນສາມາດ ເຂົ້າຮ່ວມເຄື່ອນໄຫວແຂ່ງຂັນກິລານຳບັນດາປະເທດໃນຂົງເຂດ, ທະວີບ ແລະ ສາກົນ ຫ່າງຈາກນີ້ 20 ກວ່າປີ ລະດັບກິລາບັນດາປະເທດໃນອາຊຽນ, ອາຊີມີຫຼາຍປະເທດ ທີ່ມີລະດັບເທົ່າທຽມກັນ ໃນທີ່ສຸດປະເທດເຮົາກໍ່ມີ ບົດຮຽນຄືການປະລາໄຊ ແລະ ຜົນສຳເລັດ

ຂອງບັນດາ ປະເທດດັ່ງກ່າວ ພວກເຮົາກໍ່ຕ້ອງຮັບຮູ້ໄດ້ວ່າ ອີງໃສ່ສະພາບການປ່ຽນແປງໃໝ່ຢູ່ພາຍໃນ ແລະ ການເປີດກວ້າງຮ່ວມມືສາກົນຕາມແນວທາງຂອງພັກ-ລັດຖະບານ ແມ່ນກາລະໂອກາດທີ່ດີອຳນວຍຄວາມສະດວກ, ໃຫ້ພວກເຮົາຕ້ອງໄດ້ກໍ່ສ້າງປັບປຸງຖັນແຖວພະນັກງານ, ນັກກິລາໃຫ້ມີຄຸນນະພາບໃໝ່, ພື້ນຖານໂຄງລ່າງວັດຖຸ, ງົບປະມານ, ວິທະຍາສາດເຕັກເນີກໄດ້ເລີ່ມເປີດກວ້າງ ຂະຫຍາຍຕົວ ນີ້ແມ່ນສິ່ງຈຳເປັນທີ່ພວກເຮົາຄວນເອົາໃຈໃສ່ເປັນຢ່າງດີ. ຍ້ອນພາຍໃຕ້ການຊີ້ນຳຂອງພັກ-ລັດຖະບານ ຈຶ່ງເຮັດວຽກງານມະຫາກຳກິລາຊີເກມ ຄັ້ງທີ 25, ປີ 2009 ສຳເລັດລົງດ້ວຍຜົນຈົບງາມ ແລະ ໄດ້ລື່ນຄາດໝາຍທີ່ວາງໄວ້.

❋ **<u>ໝາຍເຫດ:</u>**

1.) ສຳລັບໂຄງການບູລິມະສິດ ທີ່ຈະເຄື່ອນໄຫວຂອງ ຄະນະກຳມະການກິລາ-ກາຍະກຳແຫ່ງຊາດ ໃນປີ 2010-2011 ແລະ ຮັບຮອງຈາກລັດຖະບານ ນັ້ນຈະມີໂຄງການໃຫ່ຍ ເຊັ່ນ: ໂຄງການກໍ່ສ້າງສະໜາມກິລາແຂວງຫຼວງພະບາງ ເພື່ອກະກຽມງານມະຫາກຳກິລາແຫ່ງຊາດ ຄັ້ງທີ IX ໃນທ້າຍປີ 2011 ແລະ ໂຄງການກໍ່ສ້າງສ້ອມແປງໃນຣິມແຂວງຫຼວງພະບາງໃນປີ 2010-2011.

2.) ໂຄງການກໍ່ສ້າງສ້ອມແປງສະໜາມກິລາ ແຂວງບໍລິຄຳໄຊ ໃນປີ 2010-2011, ເພື່ອກະກຽມການແຂ່ງຂັນກິລາທີ່ແຂວງຈະເປັນເຈົ້າພາບໃນຕໍ່ໜ້າ.

3.) ໂຄງການກໍ່ສ້າງສຳນັກງານຂອງຄະນະກຳມະການກິລາ-ກາຍະກຳແຫ່ງຊາດແຫ່ງໃໝ່ໃນປີ 2010-2011, ເພື່ອກະກຽມການສັບຊ້ອນ ແລະ ປັບປຸງບ່ອນເຮັດວຽກໃຫ້ດີຂຶ້ນກວ່າເກົ່າໃນຕໍ່ໜ້າ.

4.) ໂຄງການກໍ່ສ້າງສະໜາມກິລາ ແຂວງສາລະວັນ ໃນປີ 2011-2014, ເພື່ອກະກຽມການແຂ່ງຂັນກິລາທີ່ແຂວງຈະເປັນເຈົ້າພາບໃນຕໍ່ໜ້າ.

5.) ໃນ ປີ 2010-2011 ໄດ້ສືບຕໍ່ໂຄງການສ້ອມແປງ ສະໜາມກິລາແຫ່ງຊາດ ເປັນປະຈຳເພື່ອກະກຽມເປັນເຈົ້າພາບການເປັນເຈົ້າພາບແຂ່ງຂັນກິລາປະເພດຕ່າງໆ.

6.) ສືບຕໍ່ຂຶ້ນແຜນກໍ່ສ້າງ, ສ້ອມແປງ, ປົກປັກຮັກສາພື້ນຖານໂຄງລ່າງອຸປະກອນຕ່າງໆໃຫ້ຢູ່ໃນສະພາບທີ່ດີ, ສົມທົບກັບໜ່ວຍຄຸ້ມຄອງໂຄງການຮ່ວມມືກໍ່ສ້າງສູນຝຶກ ລາວ-ຫວຽດນາມ ໄລຍະທີ II ຕາມການຕົກລົງເຫັນດີມອບໝາຍຈາກຂັ້ນເທິງ.

7.) ໂຄງການກໍ່ສ້າງສ້ອມແປງສະໜາມກິລາແຂວງອຸດົມໄຊ ໃນປີ 2010-2014, ເພື່ອກະກຽມການແຂ່ງຂັນງານມະຫາກຳກິລາແຫ່ງຊາດ ຄັ້ງທີ X ທີ່ແຂວງຈະເປັນເຈົ້າພາບໃນຕໍ່ໜ້າ.

8.) ໂຄງການກໍ່ສ້າງໜາມສະລອຍນ້ຳ ໃນປີ 2012-2013 ແລະ ໂຄງການກໍ່ສ້າງສະໜາມກິລາເດີນຣິມໃນປີ 2013-2014 ສ້ອມແປງສະໜາມກິລາແຂວງ ບໍລິຄຳໄຊ ໃນປີ 2010-2011, ເພື່ອກະກຽມການແຂ່ງຂັນກິລາທີ່ແຂວງຈະເປັນເຈົ້າພາບໃນຕໍ່ໜ້າ.

9.) ສ່ວນຄ່າໂຄງການຍ່ອຍໃນແຜນການພັດທະນາກິລາກາຍະກຳ ແຕ່ປີ 2011-2015 ແມ່ນທາງ ຄກຊ ຈະສ້າງມາຕ່າງຫາກ ພາຍຫຼັງແຜນການໂຄງການຖືກຮັບຮອງຈາກ ລັດຖະບານ ແຕ່ສ່ວນຕົວເລກໃຫ່ຍໆ ບົນພື້ນຖານຄິດໄລ່ ແມ່ນໄດ້ສັງລວມຢູ່ ຕາຕະລາງ ຊ້ອນທ້າຍ.

## ຕາຕະລາງຈັດການແຂ່ງຂັນຢູ່ພາຍໃນປະເທດ.

### ແຜນການຈັດການແຂ່ງຂັນກິລາພາຍໃປະເທດ ເລີ່ມແຕ່ສົກປີ 2010-2015

| ລ/ດ | ລາຍການແຂ່ງຂັນ | 2010 | 2011 | 2012 | 2013 | 2014 | 2015 |
|---|---|---|---|---|---|---|---|
| 1 | ມະຫາກຳກິລາແຫ່ງຊາດ | | 25 ປະເພດ | | | 25 ປະເພດ | |
| 2 | ກິລາກຳລັງປະກອບອາວຸດ | 9 ປະເພດ | 9 ປະເພດ | 9 ປະເພດ | 10 ປະເພດ | 11 ປະເພດ | 12 ປະເພດ |
| 3 | ກິລານັກຮຽນມັດທະຍົມ | | 20 ປະເພດ | | 21 ປະເພດ | | 22 ປະເພດ |
| 4 | ວັນສ້າງຕັ້ງກິລາລາວ | 11 ປະເພດ | 12 ປະເພດ | 13 ປະເພດ | 14 ປະເພດ | 15 ປະເພດ | 16 ປະເພດ |
| 5 | ກິລາພື້ນເມືອງ | 4 ປະເພດ | 6 ປະເພດ | 8 ປະເພດ | 9 ປະເພດ | 10 ປະເພດ | 11 ປະເພດ |
| 6 | ກິລາ 4 ແຂວງພາກໃຕ້ | 9 ປະເພດ | 9 ປະເພດ | 10 ປະເພດ | 11 ປະເພດ | 12 ປະເພດ | 13 ປະເພດ |
| 7 | ກິລາ 8 ແຂວງພາກເໜືອ | 9 ປະເພດ | 9 ປະເພດ | 10 ປະເພດ | 11 ປະເພດ | 12 ປະເພດ | 13 ປະເພດ |
| 8 | ກິລາມະຫາວິທະຍາໄລ ອາຊຽນ ຄັ້ງທີ 16 | | | 15 ປະເພດ | | | |

# ສະຖິຕິ ແລະ ການຄາດຄະເນ ກິລາມວນຊົນທີ່ອອກກຳລັງກາຍ ແຕ່ປີ(2011-2015).

| ລ/ດ | ຊື່ແຂວງ | 2011 | | 2012 | | 2013 | | 2014 | | 2015 | | ສະເລ່ຍ % | |
|---|---|---|---|---|---|---|---|---|---|---|---|---|---|
| | | ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ | ລວມ | % |
| 1 | ຜົ້ງສາລີ | 900 | 450 | 1,400 | 800 | 2,000 | 1,000 | 2,400 | 1,200 | 2,800 | 2,000 | 14,950 | 149.50 |
| 2 | ບໍ່ແກ້ວ | 1,300 | 500 | 1,900 | 900 | 2,500 | 1,500 | 3,100 | 1,600 | 3,500 | 1,900 | 18,700 | 187.00 |
| 3 | ຫົວພັນ | 700 | 190 | 900 | 260 | 1,200 | 600 | 1,700 | 800 | 2,100 | 1,000 | 9,450 | 94.50 |
| 4 | ອູດົມໄຊ | 1,550 | 720 | 1,800 | 900 | 2,050 | 1,200 | 2,500 | 1,600 | 2,950 | 1,950 | 17,220 | 172.20 |
| 5 | ຫລວງນ້ຳທາ | 1,750 | 820 | 2,100 | 1,100 | 2,550 | 1,300 | 2,750 | 1,600 | 3,300 | 1,950 | 19,220 | 192.20 |
| 6 | ຊຽງຂວາງ | 1,150 | 330 | 1,360 | 370 | 1,600 | 420 | 1,900 | 550 | 2,100 | 720 | 10,500 | 105.00 |
| 7 | ໄຊຍະບູລີ | 1,600 | 320 | 1,950 | 360 | 2,300 | 420 | 2,600 | 480 | 3,200 | 620 | 13,850 | 138.50 |
| 8 | ຫລວງພະບາງ | 6,300 | 1,600 | 1,800 | 2,900 | 9,300 | 3,600 | 12,700 | 4,600 | 16,600 | 8,100 | 67,500 | 675.00 |
| 9 | ວຽງຈັນ | 1,900 | 1,020 | 2,500 | 1,300 | 2,900 | 1,600 | 3,500 | 1,900 | 5,600 | 2,300 | 24,520 | 245.20 |
| 10 | ນະຄອນຫລວງ | 46,000 | 17,000 | 51,000 | 25,000 | 72,000 | 76,000 | 86,000 | 40,000 | 2,000 | 55,000 | 470,000 | 4,700.00 |
| 11 | ບໍລິຄຳໄຊ | 2,500 | 1,100 | 3,300 | 1,500 | 4,900 | 1,950 | 5,700 | 2,550 | 8,100 | 5,200 | 36,800 | 368.00 |
| 12 | ຄຳມ່ວນ | 3,300 | 1,100 | 4,600 | 1,500 | 7,300 | 1,950 | 8,200 | 2,600 | 11,100 | 5,200 | 46,850 | 468.50 |
| 13 | ສະຫັວນນະເຂດ | 16,150 | 11,150 | 17,150 | 14,650 | 23,650 | 17,650 | 30,150 | 2,400 | 35,150 | 25,150 | 193,250 | 1,932.00 |
| 14 | ສາລະວັນ | 5,700 | 1,550 | 6,300 | 2,300 | 7,100 | 2,700 | 7,900 | 3,300 | 11,100 | 5,500 | 53,450 | 534.50 |
| 15 | ອັດຕະປື | 5,200 | 1,100 | 5,900 | 1,350 | 6,550 | 1,950 | 7,300 | 2,350 | 7,900 | 3,600 | 43,200 | 432.00 |
| 16 | ຈຳປາສັກ | 15,100 | 11,150 | 16,150 | 14,150 | 18,350 | 16,650 | 22,700 | 18,150 | 38,150 | 22,150 | 192,700 | 1,927.00 |
| 17 | ເຊກອງ | 4,700 | 1,250 | 7,200 | 1,500 | 8,100 | 2,050 | 8,700 | 2,500 | 13,600 | 4,600 | 54,200 | 542.00 |
| | ລວມຍອດ | 115,800 | 51,350 | 127,310 | 70,840 | 174,350 | 132,540 | 209,800 | 88,180 | 169,250 | 146,940 | 1,286,360 | |



500,000
450,000
400,000
350,000
300,000
250,000
200,000
150,000
100,000
50,000
ຜົ້ງສາລີ
ບໍ່ແກ້ວ
ຫົວພັນ
ອຸດົມໄຊ
ຫລວງນ້ຳທາ
ຊຽງຂວາງ
ໄຊຍະບູລີ
ຫລວງພະບາງ
ວຽງຈັນ
ນະຄອນຫລວງ
ບໍລິຄຳໄຊ
ຄຳມ່ວນ
ສະຫັວນນະເຂດ
ສາລະວັນ
ອັດຕະປື
ຈຳປາສັກ
ເຊກອງ
1
2
3
4
5
6
7
8
9
10
11
12
13
14
15
16
17
2011 ຊາຍ
2011 ຍິງ
2012 ຊາຍ
2012 ຍິງ
2013 ຊາຍ
2013 ຍິງ
2014 ຊາຍ
2014 ຍິງ
2015 ຊາຍ
2015 ຍິງ
ສະເລ່ຍ % ລວມ
ສະເລ່ຍ % %

# ແຜນການກໍ່ສ້າງນັກກິລາ, ຄູຝຶກ ແລະ ກຳມະການຕັດສິນລະດັບຊາດ

## ແຕ່ປີ 2011-2015.

| ລ/ດ | ຊື່ແຂວງ | 2011 | | | 2012 | | | 2013 | | | 2014 | | | 2015 | | | ສະເລ່ຍ% | |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| | | ນ/ລ | ຄ/ຝ | ກ/ສ | ນ/ລ | ຄ/ຝ | ກ/ສ | | ນ/ລ | ກ/ສ | ນ/ລ | ຄ/ຝ | ກ/ສ | ນ/ລ | ຄ/ຝ | ກ/ສ | ລວມ | % |
| 1 | ຜົ້ງສາລີ | 80 | 8 | 4 | 85 | 11 | 6 | 97 | 13 | 4 | 102 | 9 | 6 | 115 | 10 | 6 | 556 | 5.56 |
| 2 | ບໍ່ແກ້ວ | 78 | 10 | 4 | 85 | 11 | 6 | 96 | 11 | 6 | 110 | 13 | 7 | 121 | 12 | 8 | 578 | 5.78 |
| 3 | ຫົວພັນ | 80 | 8 | 3 | 85 | 9 | 4 | 90 | 12 | 6 | 95 | 12 | 7 | 105 | 13 | 9 | 538 | 5.38 |
| 4 | ອຸດົມໄຊ | 150 | 12 | 6 | 157 | 13 | 8 | 160 | 15 | 10 | 165 | 16 | 13 | 172 | 16 | 14 | 927 | 9.27 |
| 5 | ຫລວງນ້ຳທາ | 220 | 15 | 8 | 225 | 15 | 8 | 231 | 17 | 9 | 235 | 18 | 11 | 242 | 20 | 12 | 1286 | 12.9 |
| 6 | ຊຽງຂວາງ | 75 | 8 | 4 | 89 | 10 | 5 | 95 | 10 | 7 | 150 | 12 | 8 | 220 | 15 | 13 | 721 | 7.21 |
| 7 | ໄຊຍະບູລີ | 200 | 12 | 8 | 203 | 12 | 8 | 212 | 14 | 10 | 220 | 15 | 11 | 240 | 17 | 13 | 1195 | 12 |
| 8 | ຫລວງພະບາງ | 350 | 24 | 14 | 365 | 27 | 16 | 370 | 29 | 16 | 386 | 35 | 20 | 450 | 40 | 22 | 2164 | 21.6 |
| 9 | ວຽງຈັນ | 200 | 16 | 10 | 210 | 18 | 11 | 225 | 19 | 13 | 240 | 22 | 15 | 333 | 23 | 17 | 1372 | 13.7 |
| 10 | ນະຄອນ ຫລວງວຽງຈັນ | 520 | 60 | 55 | 533 | 72 | 61 | 558 | 73 | 61 | 565 | 75 | 63 | 602 | 80 | 70 | 3448 | 34.5 |
| 11 | ບໍລິຄຳໄຊ | 280 | 28 | 18 | 296 | 30 | 20 | 315 | 30 | 20 | 333 | 32 | 22 | 462 | 33 | 23 | 1942 | 19.4 |
| 12 | ຄຳມ່ວນ | 340 | 20 | 16 | 345 | 20 | 16 | 350 | 22 | 18 | 360 | 23 | 19 | 420 | 25 | 21 | 2015 | 20.2 |
| 13 | ສະຫວັນ ນະເຂດ | 450 | 30 | 20 | 465 | 36 | 23 | 473 | 40 | 25 | 480 | 42 | 26 | 500 | 46 | 29 | 2685 | 26.9 |
| 14 | ສາລະວັນ | 185 | 15 | 8 | 190 | 15 | 9 | 205 | 17 | 11 | 220 | 20 | 13 | 250 | 21 | 13 | 1192 | 11.9 |
| 15 | ອັດຕະປື | 150 | 8 | 8 | 155 | 9 | 8 | 176 | 11 | 9 | 200 | 13 | 9 | 211 | 13 | 10 | 990 | 9.9 |
| 16 | ຈຳປະສັກ | 400 | 28 | 20 | 415 | 28 | 20 | 425 | 30 | 22 | 438 | 35 | 24 | 495 | 37 | 28 | 2445 | 24.5 |
| 17 | ເຊກອງ | 180 | 16 | 14 | 196 | 16 | 15 | 220 | 18 | 16 | 235 | 18 | 16 | 240 | 18 | 17 | 1235 | 12.4 |


4000
3500
3000
2500
2000
1500
1000
500
0
ລວມ
%
2011
2012
2013
2014
2015
ສະເລ່ຍ%
1 ຜົ້ງສາລີ
2 ບໍ່ແກ້ວ
3 ຫົວພັນ
4 ອຸດົມໄຊ
5 ຫລວງນ້ຳທາ
6 ຊຽງຂວາງ
7 ໄຊຍະບູລີ
8 ຫລວງພະບາງ
9 ວຽງຈັນ
10 ນະຄອນຫລວງ
11 ບໍລິຄຳໄຊ
12 ຄຳມ່ວນ
13 ສະຫັວນນະເຂດ
14 ສາລະວັນ
15 ອັດຕະປື
16 ຈຳປະສັກ
17 ເຊກອງ